630 ພຊ 329

ພາສາລາວ-ສີ່ສາມມວນຊົນ

ສຳລັບນັກສຶກສາ ປີທີ 3
ພາສາລາວ-ສີ່ສາມມວນຊົນ

ພາກວິຊາພາສາລາວ-ສີ່ສາມມວນຊົນ
ຄະນະອັກສອນສາດ

ວຽງຈັນ, 2004

ພາສາຄວາມຫມໍ່ໃຊ້ເຄຍຊັ້ງຂຸບ

(630 ພຊ 329)

ຮຽບຮຽງໂດຍ: ທອມມາລາ ເພັນສີຊະນະວົງ
ພູຄຳ ຂັນທະວົງໄຊ

ກວດແກ້ໂດຍ: ດວງຕາ ມະນີວົງ

ວຽງຈັນ,2004

ฮ้ = 5964404

ຄຳນຳ

ເອກະສານປະກອບການຮຽນ-ການສອນ "ພາສາລາວນຳໃຊ້ໂດຍສັງເຂບ" ເຫຼັ້ມນີ້ໄດ້ຖືກຮຽບຮຽງຂຶ້ນມາ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານການຮຽນ-ການສອນ ຕາມຫຼັກສູດ 2+4 ພາກວິຊາພາສາລາວ - ສື່ສານມວນຊົນ, ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດລາວ.

ເນື້ອໃນທີ່ບັນຈຸຢູ່ໃນເອກະສານປະກອບການຮຽນ-ການສອນເຫຼັ້ມນີ້ ປະກອບດ້ວຍ 3 ພາກ: ພາກທີໜຶ່ງ: ບາງຄວາມຮູ້ພື້ນຖານທີ່ພົວພັນກັບພາສາລາວນຳໃຊ້, ພາກທີສອງ: ຄວາມຮູ້ຕ່າງໆກ່ຽວກັບສຳນວນພາສາ ແລະ ພາກທີສາມ: ທັກສະພາສາ. ເນື້ອໃນທັງໝົດຂອງເອກະສານເຫຼັ້ມນີ້ມີເປົ້າໝາຍ ເພື່ອສິດສອນໃຫ້ນັກສຶກສາໄດ້ຮຽນຮູ້ທາງດ້ານທິດສະດີກ່ຽວກັບການນຳໃຊ້ພາສາລາວ ໂດຍສັງເຂບ; ໂດຍສະເພາະຢ່າງຍິ່ງ ແມ່ນການນຳໃຊ້ຄຳສັບ ແລະສຳນວນຕ່າງໆໃຫ້ຖືກຕ້ອງກັບແຕ່ລະກາລະເທສະ, ໃຫ້ຖືກຕ້ອງຕາມຍຸກສະໄໝ ແລະໃຫ້ຖືກຕ້ອງເໝາະສົມກັບແຕ່ລະຂົງເຂດວຽກງານ. ພ້ອມກັບນັ້ນ ກໍຈະໄດ້ຮຽນຮູ້ກ່ຽວກັບທັກສະທັງ 4 ຢ່າງຂອງພາສາອີກດ້ວຍ.

ຂ້າພະເຈົ້າເຫັນວ່າ ການຮຽບຮຽງເອກະສານສະບັບນີ້ ອາດຍັງມີຂໍ້ຂາດຕົກບົກພ່ອງໃນຫຼາຍດ້ານ, ແຕ່ກໍຫວັງຢ່າງຍິ່ງວ່າ ຈະໄດ້ຮັບຄວາມກະລຸນາຈາກບັນດາທ່ານຜູ້ຊົມໃຊ້ເອກະສານສະບັບນີ້ ເປັນຢ່າງດີ.

ພາກວິຊາພາສາລາວ - ສື່ສານມວນຊົນ, ວັນທີ 08, ທັນວາ 2004

ຜູ້ຮຽບຮຽງ

ອ. ຈ. ທອມມາລາ ເພັນສີຊະນະວົງ

ອ. ຈ. ພູຄຳ ຍັນທະວົງໄຊ

ໃນປະໂຫຍກທີ່ປະກອບດ້ວຍຈຳນວນຄຳສັບອັນເໝາະສົມ, ທີ່ຕັ້ງຂອງບັນດາຄຳສັບເຫຼົ່ານັ້ນໄດ້ມີພາລະບົດບາດໃຫ້ແກ່ການກຳເນີດໂຄງສ້າງປະໂຫຍກ, ໃຫ້ແກ່ຄວາມແນ່ນອນຂອງຄວາມໝາຍ ແລະ ໃຫ້ແກ່ຄຸນຄ່າສະທ້ອນໃຫ້ເກີດຄວາມຮູ້ສຶກທາງໃຈ. ກົງກັນຂ້າມ ເມື່ອສ້າງລະບົບທີ່ບໍ່ຕົກຕ່ອງເຖິງພາລະບົດບາດຂອງສັບ ຈະເປັນເຫດໃຫ້ຄຸນຄ່າຂອງລະບົບນັ້ນບໍ່ແຫດເຖິງຈຸດປະສົງທີ່ຢາກກ່າວເຖິງເຊິ່ງມັນອາດສະແດງເຖິງຄວາມຜິດພາດ, ເສດເຫຼືອ, ບໍ່ຄົບກ້ວນ, ບໍ່ແນ່ນອນ ແລະອື່ນໆ.

ເພາະສະນັ້ນ ການໃຊ້ສັບແຕ່ລະສັບຕ້ອງໄດ້ຄຳນຶງເຖິງລະບົບຂອງການສ້າງວັດຈະນາແຕ່ລະປະເພດ, ລະບົບໄວຍາກອນໃນດ້ານການປະກອບຄຳສັບເຂົ້າໃນໂຄງສ້າງປະໂຫຍກ, ການເລືອກເຟັ້ນຄຳສັບໃຊ້ໃຫ້ເໝາະສົມກັບແຕ່ລະລະບົບຈິນຕະນາການແຕ່ລະຢ່າງອີກດ້ວຍ.

3. ຄວາມຮູ້ກ່ຽວກັບເປົ້າໝາຍ - ຈຸດປະສົງທີ່ພົວພັນກັບພາສາລາວນຳໃຊ້

ການນຳໃຊ້ສັບພາສາກ້ຳປາສະຈາກຈຸດປະສົງໃດໜຶ່ງ ຈະຂາດຄຸນຄ່າສະທ້ອນດ້ານຄວາມໝາຍ ແລະ ຈິນຕະນະການ; ແຕ່ປາກົດການດັ່ງກ່າວຄົງມີໜ້ອຍທີ່ສຸດ. ດັ່ງນັ້ນກ້ຳມີການໃຊ້ສັບພາສາພົວພັນຊຶ່ງກັນແລະກັນໃນກາລະ - ເທສະໃດໜຶ່ງຈະຕ້ອງມີຈຸດປະສົງສະເໝີ.

ດັ່ງນັ້ນ, ເມື່ອມີຈຸດປະສົງແລ້ວ ຄົນເຮົາໄດ້ສ້າງລະບົບຈິນຕະນາການ ແລະ ສະແດງມັນອອກດ້ວຍລະບົບຂອງພາສາ. ເມື່ອມີລະບົບຂອງພາສາກໍ່ໝາຍຄວາມວ່າມີບັນດາມູນພາກທີ່ປະກອບຂອງມັນ ນັ້ນກໍຄືຄຳສັບ.

ໃນຈຸດປະສົງໃດໜຶ່ງປະກອບດ້ວຍເປົ້າໝາຍອັນມີຈຳນວນທີ່ເໝາະສົມກັບລະດັບຂອງຈຸດປະສົງ. ດັ່ງນັ້ນຈຶ່ງສາມາດເວົ້າໄດ້ວ່າມູນພາກໄດ້ຕັດສິນລະບົບ, ລະບົບຕັດສິນເປົ້າໝາຍ ແລະເປົ້າໝາຍຕັດສິນຈຸດປະສົງ. ກ້ຳໄລ່ລຽງຕາມທິດສະທ້ອນຄືນຈະເຫັນໄດ້ວ່າ ພາລະບົດບາດຂອງແຕ່ລະມູນພາກມີຜົນບັງຄັບໃຫ້ແກ່ຈຸດປະສົງ.

ບົດຂຽນແຕ່ລະປະເພດ ຫຼື ບົດປາໄສແຕ່ລະບົດ ລ້ວນແລ້ວແຕ່ແມ່ນການນຳໃຊ້ລະບົບຂອງພາສາຢ່າງສອດຄ່ອງກັບລະບົບຂອງຈິນຕະນາການ. ດັ່ງນັ້ນ ຄຸນຄ່າຂອງແຕ່ລະສັບ, ແຕ່ລະປະໂຫຍກ, ແຕ່ລະວັກ, ແຕ່ລະຕອນໄດ້ມີຜົນບັງຄັບໃຫ້ແກ່ຈຸດປະສົງ.

ຕົວຢ່າງ: "ແມ່ຍິງບາງຄົນຍັງມີຄວາມເຊື່ອກ໋ືແບບຜິດພາດຫຼາຍປະການ ເຊັ່ນວ່າ ກ້ຳປະໃຫ້ລູກດູດນົມຕົນເອງຫຼາຍເກີນໄປ ອາດພາໃຫ້ເສຍຮູບໂສມປະນົມພັນ ຫຼື ບໍ່ກ໋ຫົງເຊື່ອຄຳໂຄສະນາສິນຄ້າທີ່ວ່າ ນົມກະປ໋ອງ ແລະ ອາຫານເສີມສຳລັບເດັກທົດແທດນົມແມ່ໄດ້ດີ". (ອົງການອຸຍນີເຊັບປະຈຳລາວ, *ຄວາມຮູ້ເພື່ອຊີວິດ*, ໜ້າ 27 (ປີພິມ ບໍ່ມີ)

ເມື່ອວິໄຈ ແລະ ຄົ້ນຄວ້າເຖິງຈຸດປະສົງຂອງບົດຕົວຢ່າງດັ່ງກ່າວ ເຮົາສາມາດເຫັນໄດ້ວ່າ ບົດຕົວຢ່າງນີ້ ມີຈຸດປະສົງຢາກສຶກສາໃຫ້ຜູ້ຍິງລ້ຽງລູກດ້ວຍນົມແມ່ ແລະ ເຫັນຜົນຮ້າຍຂອງການລ້ຽງລູກດ້ວຍນົມກະປ໋ອງ; ໂດຍມີເປົ້າໝາຍຄື

- ເພື່ອເປັນການປະຢັດ ແລະ ສະດວກ.
- ເພື່ອໃຫ້ເດັກແຂງແຮງ ແລະ ເຕີບໂຕໄວທາງດ້ານຮ່າງກາຍ ແລະ ມັນສະໝອງ
- ເພື່ອໃຫ້ເດັກມີພູມຕ້ານທານໄດ້ດີ.

4. ສາຍພົວພັນຂອງປັນດາຄວາມຮູ້ອື່ນໆກັບພາສາລາວນຳໃຊ້

ການກຳເນີດ ແລະ ຂະຫຍາຍຕົວຂອງວິຊາພາສາລາວນຳໃຊ້ໄດ້ມາຈາກການປະສົມປະສານຂອງຄວາມຮູ້ອື່ນໆຢ່າງກວ້າງຂວາງ ເຊັ່ນ

- ຄວາມຮູ້ດ້ານວັດຖຸນິຍົມສັດຈະວິພາກເຊິ່ງເປັນພື້ນຖານໃຫ້ແກ່ທຸກໆຄວາມຮູ້, ລວມທັງວິຊາພາສາລາວນຳໃຊ້; ເປັນກົດເກນເພື່ອໄຈ້ແຍກ, ວິເຄາະ, ຢັ້ງຢືນໃຫ້ແກ່ຄວາມຖືກຕ້ອງ, ໃຫ້ແກ່ການຮັບຮູ້ເຫດ ແລະຜົນຂອງທຸກສິ່ງຢ່າງ; ເປັນຫຼັກຖານຢັ້ງຢືນເຖິງຄວາມເປັນເອກະພາບລະຫວ່າງຈິນຕະນາການ ແລະ ພາສາ; ເຖິງຄວາມສອດຄ່ອງລະຫວ່າງໂຄງສ້າງ ແລະ ຄວາມໝາຍຂອງບັນຫາໃດໜຶ່ງກັບໂຄງສ້າງຂອງພາສາ.

- ຄວາມຮູ້ດ້ານຈິດຕະສາດໄດ້ເປັນເງື່ອນໄຂໃຫ້ແກ່ການເລືອກເຟັ້ນສັບພາສາ ເພື່ອນຳໃຊ້ໃຫ້ເໝາະສົມກັບແຕ່ລະຂົງເຂດ, ແຕ່ລະຊະນິດ ແລະ ແຕ່ລະລະດັບຂອງບົດ. ການຮັບຮູ້ທາງດ້ານກາລະ - ເທສະຂອງສັງຄົມກໍເປັນເງື່ອນໄຂສຳຄັນອີກປະການໜຶ່ງໃຫ້ແກ່ການເລືອກເຟັ້ນ ແລະ ນຳໃຊ້ສັບພາສາໄດ້ຢ່າງຖືກຕ້ອງຢູ່ໃນສັງຄົມ.

- ຄວາມຮູ້ດ້ານທິດສະດີພາສາມີອິນສະທ້ອນຢ່າງເດັ່ນຊັດ ແລະ ແທດເຖິງທີ່ສຸດສຳລັບການນຳໃຊ້ສັບພາສາ; ເປັນເງື່ອນໄຂໃຫ້ແກ່ການຮັບຮູ້ສັນຍານພາສາ, ຄວາມໝາຍຂອງສັບ, ຮັບຮູ້ມະໂນພາບຕົ້ນຕໍ ແລະ ມະໂນພາບທຽມຂອງສັບ, ພ້ອມທັງຮັບຮູ້ກົດເກນຂອງການປຽບທຽບຂອງສັບພາສາໄດ້ດີ.

- ຄວາມຮູ້ທາງດ້ານວັດທະນະທຳສັງຄົມກໍເປັນເງື່ອນໄຂສຳຄັນບໍ່ໜ້ອຍ ເຊິ່ງເຮັດໃຫ້ພາສາທີ່ຖືກນຳໃຊ້ສາມາດສະທ້ອນວາດແລະສືບ, ສາມາດສະທ້ອນໃຫ້ເຫັນເຖິງຈຸດປະສົງຂອງບົດໄດ້ຢ່າງຊັດເຈນ; ສະທ້ອນຄຸນຄ່າຂອງລັກສະນະຊາດ, ຈຸດພິເສດຕ່າງໆດ້ານນິດໄສ, ຄວາມມັກ, ທັດສະນະສະຫງວນຄວາມງາມ, ແບບແຜນຊີວິດສັງຄົມ ແລະ ອື່ນໆໄດ້ຢ່າງກວ້ວຂວາງ.

ນອກຈາກນີ້, ຄວາມຮູ້ຂອງທຸກໆວິຊາທີ່ນອນຢູ່ໃນຂົງເຂດພາສາສາດ ແລະ ຂົງເຂດວິຊາການອື່ນໆກໍລ້ວນແຕ່ເປັນເງື່ອນໄຂເພີ່ມເຕີມໃຫ້ແກ່ການກຳນົດໂຄງສ້າງ ແລະ ແບບວິທີຂອງການເວົ້າແລະຂຽນເຊັ່ນດຽວກັນ; ເປັນເງື່ອນໄຂອັນອຸດົມສົມບູນໃຫ້ແກ່ການກຳເນີດຂອງຈິນຕະນາການ ແລະ ຂອງການນຳໃຊ້ສັບພາສາເພື່ອສະແດງອອກໄດ້ຢ່າງເໝາະສົມ ແລະ ຊັດເຈນ. ພ້ອມກັນນີ້ຍັງເປັນເງື່ອນໄຂສະທ້ອນໃຫ້ແກ່ການປະດິດສ້າງ, ພິກໄຫວການກຳນົດວິທີເວົ້າ ແລະ ຂຽນໄດ້ຢ່າງຈະແຈ້ງ, ກະທັດຮັດ, ໜ້າປະທັບໃຈ, ແຝງມະໂນພາບ ທັງມີເນື້ອໃນທີ່ຮັບໃຊ້ຈຸດປະສົງທີ່ຕ້ອງການຢາກສະແດງອອກ. ທັງໝົດນີ້ໄດ້ກາຍເປັນຈຸດລວມດ້ານຄວາມປະສົງຂອງມວນມະນຸດ; ທັງເປັນເປົ້າໝາຍຂອງວິທະຍາສາດການນຳໃຊ້ສັບພາສາໃຫ້ເປັນພາສາທີ່ມີຄຸນຄ່າສະທ້ອນຄວາມສີວິໄລຂອງສັງຄົມ ແລະ ເພີ່ມຄວາມເຕີບໂຕໃຫ້ແກ່ມັນສະໜອງຂອງຄົນໃນສັງຄົມອີກດ້ວຍ.

5. ສຽງ - ສຽງວິທະຍາທີ່ພົວພັນກັບພາສາລາວນຳໃຊ້

ສຽງມີບົດບາດສຳຄັນຕົ້ນຕໍສຳລັບພາສາ ແລະ ສັນຍານພາສາ. ສຳລັບສຽງທີ່ໄດ້ຄົ້ນຄວ້າໃນວິຊາພາສາລາວນຳໃຊ້ນີ້ແມ່ນສຽງພາສາ ແລະ ຄວາມໝາຍອາລົມຈິດ (ຄຸນຄ່າສະທ້ອນອາລົມຈິດຂອງສຽງ). ດັ່ງນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ຈະແມ່ນວັດຈະນາທີ່ກຳເນີດຈາກກ່ໍລະນີໃດກ່ຕາມ ດ້ານພື້ນຖານທີ່ສຳຄັນຢ່າງໜຶ່ງຂອງມັນແມ່ນສຽງ. ສຽງມີບົດບາດສອງຢ່າງ:

ບົດບາດຂອງສຽງມີ 2 ຢ່າງຄື
- ສຽງບົ່ງບອກຄວາມແຕກຕ່າງ ແລະ ຄວາມໝາຍ
- ສຽງບົ່ງບອກຄວາມໝາຍທັນ ອາລົມຈິດ

1. ສຽງບົ່ງບອກມະໂນພາບ ແລະ ຄວາມໝາຍ
2. ສຽງບົ່ງບອກຄວາມໝາຍດ້ານອາລົມຈິດ

5. 1 ສຽງບົ່ງບອກມະໂນພາບ ແລະ ຄວາມໝາຍ

ສັນຍານພາສາທີ່ເປັນສຽງສົ່ງຈາກບຸກຄົນໃດໜຶ່ງໄປສູ່ເຂດຮັບຮູ້ຂອງຄົນອີກຄົນໜຶ່ງ ເຊິ່ງສຽງນັ້ນ ໄດ້ສະທ້ອນມະໂນພາບ ແລະ ຄວາມໝາຍຂອງສິ່ງດັ່ງກ່າວກືກປາກົດອອກ, ແຕ່ສຽງດັ່ງກ່າວບໍ່ໄດ້ສະທ້ອນເຖິງລະດັບອາລົມຈິດຂອງຄົນຕໍ່ສິ່ງນັ້ນກວ່າມະໂນພາບ ແລະ ຄວາມໝາຍຂອງມັນ, ນັ້ນຮຽກວ່າ ສຽງຕົວຈິງຂອງສັນຍານພາສາ.

ຕົວຢ່າງ: ສຽງຂອງຄຳສັບ: ໂຕະ, ປຶ້ມ, ແມວ, ວິທະຍຸ, ຂ້ອຍ...

5. 2 ສຽງບົ່ງບອກຄວາມໝາຍດ້ານອາລົມຈິດ

ໃນທີ່ນີ້ໄດ້ສັງຮວມເອົາບັນດາສຽງທີ່ກຳນົດເປັນສັນຍານພາສາ (ສຽງທີ່ກຳນົດຄວາມໝາຍ ແລະມະໂນພາບໃດໜຶ່ງ) ແລະ ສຽງເສລີແຕ່ໃຫ້ມະໂນພາບສະທ້ອນເຖິງຄວາມຮູ້ສຶກຂອງຄົນ.

ບົນພື້ນຖານໜາກຜົນການຄົ້ນຄວ້າຕົວສຽງວິທະຍາໄດ້ພົ້ສູດວ່າ: ບັນດາສຽງທີ່ກຳນົດຄວາມໝາຍສະເພາະ ເຊິ່ງຮຽກວ່າສັນຍານພາສາທີ່ເປັນສຽງຂອງຄຳສັບ ແລະ ສຽງອື່ນໆ ກໍລ້ວນແຕ່ມີບົດບາດສະທ້ອນເຖິງຄວາມຮູ້ສຶກຂອງຄົນ.

ບັນດາສຽງທີ່ກຳນົດເປັນສຽງຄຳສັບ ຫຼື ສຽງອື່ນໆກໍລ້ວນແຕ່ມີພື້ນຖານ, ມີຕົ້ນເຫດ ແລະ ມີສຽງທຽບຖານຂອງມັນ. ສະນັ້ນ ຄຸນຄ່າສະທ້ອນອາລົມຈິດຂອງສຽງພາສາ ກໍມີຄຸນຄ່າດ້ານຄວາມໝາຍບົ່ງບອກ, ຄຸນຄ່າທຽບຖານ, ຄຸນຄ່າປຽບທຽບໄປຄຽງຄູ່ກັນ. ດັ່ງນັ້ນ ການກຳນົດສຽງເວົ້າ ຫຼື ສຽງດົນຕີອື່ນໆ ກໍລ້ວນແຕ່ມີຄວາມໝາຍດ້ານອາລົມຈິດ.

ຕົວຢ່າງ: ສຽງຂອງຄຳສັບ: ກິນ, ໄປ, ເອົາ...

ສຽງຂອງຄຳສັບແຕ່ລະຄຳ ຫາກອອກສຽງໃນລະດັບທີ່ແຕກຕ່າງກັນ ກໍຈະສະທ້ອນຄຸນຄ່າດ້ານອາລົມຈິດແຕກຕ່າງກັນ. ທຳນອງສຽງ, ສຽງດົນຕີ, ສຽງຂັບ, ສຽງລຳ, ສຽງເພງ... ທັງໝົດນີ້ລ້ວນແຕ່ແມ່ນໜາກຜົນຂອງການປະສົມຮວມຂອງຄຸນຄ່າຄວາມໝາຍອາລົມຈິດ, ຊຶ່ງບັນດາຄຸນຄ່າຄວາມໝາຍປະສົມນັ້ນ ມີຄວາມສອດຄ່ອງ ແລະ ກົມກຽວຢ່າງເປັນລະບົບ; ມີພື້ນຖານ, ມີເຫດຜົນຕົ້ນຕໍ, ມີສຽງທຽບຖານ ແລະ ມີສຽງປຽບທຽບຢ່າງຄົບຖ້ວນ; ແລ້ວມັນຈະສະທ້ອນຄຸນຄ່າ ດ້ານອາລົມຈິດອອກມາຊຶ່ງຮຽກວ່າ: ນ່ວນ, ອອນຊອນ, ອີ່ມເອີບ... ກົງກັນຂ້າມກໍຈະມີຄຸນຄ່າສະທ້ອນອາລົມທີ່ເຄັຽຮຽກວ່າ: ສະດຸ້ງ, ສົນລະວົນ, ໜຸດໜິດ, ສະຫຍົດສະຫຍອງ... ແລະ ຈົນນຳໄປເຖິງຄວາມເບື່ອໜ່າຍຕ່າງໆໄດ້.

ຕົວຢ່າງ: ບົດເພງ " ດວງຈຳປາ " ໂດຍ: ທ່ານອຸຕະມະ ຈຸນລະມະນີ

+ ໂອ້ດວງຈຳປາ
ມອງເຫັນຫົວໃຈ
ເຫີນສວນດອກໄມ້
ເວລ້ຳຫ້ວມເໜົ້ງ

ເວລ້ຳຊົມນ້ອງ
ເຮົ້ານຶກຂຶ້ນໄດ້
ບໍ່ດຳປູກໄວ້
ເຈົ້ຳຊວຍບັນເທົ້ຳ

ນຶກເຫັນຜັນຊ່ອງ
ໃນກົ້ນເຈົ້ຳຫອົມ
ຕັ້ງແຕ່ໃດມ້ຳ
ເຮົ້ຳຫ້ຳຍໂສກ

ເຈົ້າດວງຈຳປາ
+ ກິ່ນເຈົ້າສຳຄັນ
ແພງໄວ້ເຊີຍຊົມ
ເມື່ອດົມກິ່ນເຈົ້າ
ເຈົ້າເປັນດອກໄມ້
ເຈົ້າດວງຈຳປາ
+ ໂອດວງຈຳ
ຊາວລາວເພິ່ງໃຈ
ເມື່ອໃດ້ພັດພາກ
ເຮົາຈະເອົາເຈົ້າ
ເຈົ້າດວງຈຳປາ

ຄູ່ຄຽງເຮົາມາ
ຕິດພັນຫົວໃຈ
ຍາມເຮົາເອົາດົມ
ປານພົບເພື່ອນເກົ່າ
ທີ່ງາມວິໄລ
ມາລາຂວັນຮັກ
ບຸບຜາເມືອງລາວ
ເກີດຢູ່ພາຍໃນ
ໜີໄປໄກຈາກ
ເປັນເພື່ອນຮ່ວມເຫງົ້າ
ມາລາງາມຍິ່ງ

ແຕ່ຍາມນ້ອຍເອີ່ຍ
ເປັນໜ້າຮັກໃຄ່
ໂອຈຳປາຫອມ
ທີ່ພາກຈາກໄປ
ຕັ້ງແຕ່ໃດມາ
ຂອງຮຽມນີ້ເອີ່ຍ
ງາມດັ່ງດວງດາວ
ແດນດິນລ້ານຊ້າງ
ບ້ານເກີດເມືອງນອນ
ເທົ່າສິ້ນຊີວາ
ມີ່ງເມືອງລາວເອີ່ຍ

- ສຽງຂອງຄຳສັບແຕ່ລະຄຳມີບົດບາດສະທ້ອນຄວາມໝາຍ ແລະ ມະໂນພາບເຂົ້າກັນຢ່າງເປັນລະບົບ, ເປັນຫົນໃຫ້ມີຄຸນຄ່າສະທ້ອນເຖິງລະດັບອາລົມຈິດ.
- ທຳນອງສຽງມີບົດບາດສະທ້ອນຮູບພາບ, ຈັງຫວະ, ບັ້ນ ແລະ ຕອນ. ທັງສອງຢ່າງນີ້ ສະທ້ອນຄຸນຄ່າຮ່ວມກັນ ແລ້ວມີບົດບາດພາໃຫ້ເກີດຄວາມຮູ້ສຶກຕາມແບບສະອອນ, ອອນຊອນ, ຊື່ນຊົມ ແລະອື່ນໆ

5. 3 ຄຸນຄ່າສະທ້ອນອາລົມຈິດຂອງສຽງທົ່ວໄປ ແລະ ສຽງພາສາ

ສຽງທົ່ວໄປ ແລະ ສຽງພາສາລ້ວນແຕ່ມີຄຸນຄ່າສະທ້ອນເຖິງຄວາມຮູ້ສຶກຂອງຄົນເຮົາ. ໃນນັ້ນ ສຽງພາສາແມ່ນປະກົດການສະລິລະສາດ, ແມ່ນສຽງທີ່ກຳເນີດຈາກການເຄື່ອນໄຫວ ຂອງອະໄວຍະວະຜະລິດສຽງຂອງຄົນເຮົາ. ດັ່ງນັ້ນ ມັນຈຶ່ງມີບົດບາດຢ່າງທຳມະຊາດ ແລະ ສັງຄົມໄປຄຽງຄູ່ກັນ. ສ່ວນສຽງທົ່ວໄປມີບົດບາດແບບທຳມະຊາດຫຼາຍກວ່າ.

ຄຳຖາມ:

1. ລະບົບມີບົດບາດສຳຄັນຕໍ່ພາສາລາວນຳໃຊ້ແນວໃດ?
2. ຄຳສັບມີບົດບາດສຳຄັນຕໍ່ລະບົບຂອງພາສາແນວໃດ?
3. ຈົ່ງໃຫ້ຂໍ້ສັງເກດຕໍ່ທັດສະນະທີ່ວ່າການໃຊ້ສັບພາສາຂອງຄົນເຮົາຍ່ອມມີຈຸດປະສົງສະເໝີ.

ພາກທີ II: ຄວາມຮູ້ຕ່າງໆກ່ຽວກັບສຳນວນພາສາ

1. ນິຍາມຂອງສຳນວນພາສາ

1. 1 ນິຍາມ

ຄຳສັບ"style" ໃນພາສາອື່ນໆເຊັ່ນພາສາເຊັກໂກ, ພາສາຝຣັ່ງ ແລະ ພາສາອັງກິດ ກຶ່ງນຳໃຊ້ເຂົ້າໃນຫຼາຍຂະແໜງການທີ່ແຕກຕ່າງກັນ ໃນການເຄື່ອນໄຫວວຽກງານຕ່າງໆ ຂອງມວນມະນຸດ ເຊັ່ນ living style, wearing style, learning - teaching style, writing style, hairstyle, musical style, style of running, style of product...

ຄຳສັບ "style" ໃນພາສາອັງກິດກຶ່ງແປມາເປັນຫລາຍຄຳສັບທີ່ແຕກຕ່າງກັນ ທັງທາງດ້ານຮູບ ແລະ ສຽງຂອງຄຳສັບໃນພາສາລາວ ໂດຍອີງຕາມຄວາມໝາຍຂອງພວກມັນ ຄື ຊະນິດ, ຮູບແບບ, ລັກສະນະ, ທ່າທາງ, ສຳນວນ, ໂວຫານ, ທຳນອງ, ທ່ວງທຳນອງ, ວິທີການ, ແບບຢ່າງ, ລີລາ ... ເພາະສະນັ້ນ, ໃນພາສາລາວ ເມື່ອເວົ້າເຖິງການດຳລົງຊີວິດ, ມັກໃຊ້ຄຳວ່າ "ແບບແຜນການດຳລົງຊີ ວິດ/ວາດດຳລົງຊີວິດ"; ການນຸ່ງ ຖື "ແບບແຜນການນຸ່ງ ຖື"; ການຮຽນ-ການສອນ "ແບບວິທີ ການຮຽນ-ການສອນ"; ການຂຽນ "ແບບວິທີການຂຽນ"; ຜົມ "ຊົງຜົມ"; ດົນຕີ "ທຳນອງດົນຕີ"; ແລ່ນ "ຊະນິດ/ ແບບຂອງການແລ່ນ"; ຜະລິດຕະພັນ "ແບບຂອງຜະລິດຕະພັນ". ດັ່ງທີ່ເຫັນຈາກຕົວຢ່າງຂ້າງເທິງນີ້, ບັນດາຄຳສັບເຫລົ່ານີ້ກຶ່ງເຂົ້າໃຈ ຢູ່ໃນລັກສະນະສະເພາະທີ່ແນ່ນອນສຳລັບຂະແໜງການວຽກງານຕ່າງໆໃດໜຶ່ງຢ່າງຈະແຈ້ງ. ເພາະສະນັ້ນ, ບັນດາຄຳສັບເຫລົ່ານີ້ ຈຶ່ງກຶ່ງນຳໃຊ້ເຂົ້າໃນຫລາຍຂະແໜງການວຽກງານ ທີ່ແຕກຕ່າງກັນທັງທາງດ້ານຄວາມໝາຍ ແລະ ດ້ານມະໂນພາບ. ສຳລັບຄຳສັບ "ສຳນວນ" ໃນພາສາລາວກຶ່ງນຳໃຊ້ໃນຂອບເຂດ ແລະ ຄວາມໝາຍ ທີ່ພົວພັນເຖິງພາສາເທົ່ານັ້ນ ເຊັ່ນ ສຳນວນພາສາ, ສຳນວນສິລະປະ, ສຳນວນວິຊາການ ແລະອື່ນໆ.

ສຳນວນພາສາ ແມ່ນການເລືອກເຟັ້ນພ້ອມທັງການຈັດລຽງບັນດາພາຫະນະຕ່າງໆ ຂອງພາສາໃນເວລານຳໃຊ້ ແລະ ວິທີການສະແດງອອກຂອງພວກມັນໃນໂຄງສ້າງຕ່າງໆ.

ເມື່ອເວົ້າເຖິງຜົນງານນດ້ານວັນນະຄະດີ, ຄຳສັບ "ສຳນວນວັນນະຄ່ະດີ" ຈະກຶ່ງນຳໃຊ້ໃນວິຊາສະເພາະດັ່ງກ່າວອີກຂະແໜງໜຶ່ງ. ດ້ວຍເຫດນີ້, ການເລືອກເຟັ້ນສັບສຳນວນຂອງພາສາເພື່ອນຳໃຊ້ເຂົ້າໃນຂະແໜງການວຽກງານຕ່າງໆໃຫ້ກຶ່ກຕ້ອງຈຶ່ງເປັນສິ່ງສຳຄັນ ແລະ ຈຳເປັນສຳລັບຜູ້ໃຊ້ພາສາ, ທັງນີ້ກໍເພື່ອເຮັດໃຫ້ສັບສຳນວນທີ່ກຶ່ນຳໃຊ້ນັ້ນແທດເໝາະກັບຄວາມໝາຍ ແລະ ມະໂນພາບຕົວຈິງຂອງສິ່ງທີ່ຢາກກ່າວເຖິງ.

ສັນທະສິນສາດ "stylistics" ແມ່ນການສຶກສາກ່ຽວກັບສຳນວນຂອງພາສາ. ມັນແມ່ນໜຶ່ງໃນບັນດາກົດເກນວິທະຍາສາດກ່ຽວກັບພາສາ. ມັນຄົ້ນຄວ້າເຖິງທາດແທ້ຂອງສຳນວນພາສາ; ເຈາະເລິກເຖິງມາດຖານ ແລະລະດັບຂອງພາສາ; ແກ້ໄຂການມີສ່ວນຮ່ວມຂອງບັນດາຜູ້ສ້າງສຳນວນພາສາໃນເວລາພວກເຂົານຳໃຊ້ມັນ; ຈັດແບ່ງສຳນວນອອກເປັນຫຼາຍຊະນິດ ແລະຫຼາຍແບບ; ເອົາໃຈໃສ່ດ້ານໂຄງສ້າງໃນການສະແດງອອກຂອງພາສາ ທັງຢູ່ໃນຂັ້ນຕອນຂອງຄຳສັບແລະຢູ່ໃນຂັ້ນຕອນຂອງບັນດາປະໂຫຍກຕ່າງໆ; ສະແດງໃຫ້ເຫັນຮູບແບບການຈັດສັບລະດັບຂອງສຳນວນຕ່າງໆ ຕະຫຼອດເຖິງການນຳໃຊ້ບັນ

ດາພາທະນະຕ່າງໆຂອງພາສາ; ກຳນົດຂອບເຂດຂອງສຳນວນ ແລະ ບົ່ມພື້ນການຈຸດພິເສດ ທີ່ແນ່ນອນໃດໜຶ່ງ, ມັນຈະກຳນົດວິທີການສະແດງອອກ ແລະ ຮູບແບບຂອງສຳນວນ.

ຄຳຖາມ:

1. ຈົ່ງເວົ້າເຖິງແບບວິທີໃນການໃຊ້ສັບ ສຳນວນພາສາ ໃນຂົງເຂດວຽກງານສະຖາປັດຕະຍະກຳຂອງ ລາວ (ບ້ານເຮືອນ, ວັດວາອາຣາມ, ອາຄານໂຮງຮຽນ, ໂຮງໝໍ ຫຼື ສະຖານທີ່ພັກຜ່ອນໄສຕ່າງໆ).
2. ຈົ່ງເວົ້າເຖິງການພົວພັນລະຫວ່າງແບບແຜນການດຳລົງຊີວິດ, ການພັກຜ່ອນໄສ ແລະ ການນຸ່ງຖື ກັບການນຳໃຊ້ສັບ ສຳນວນພາສາຂອງຄົນລາວ.
3. ຈົ່ງພິສູດຈາກນິຍາມທີ່ວ່າ ການສຶກສາກ່ຽວກັບສຳນວນພາສາແມ່ນຂໍ້ກຳນົດກົດລະບຽບໜຶ່ງທີ່ກ່ຽວ ກັບວິທະຍາສາດການນຳໃຊ້ພາສາ.

24 / VII

ຫ້າມຈຳໜ່າຍ

1. 2 ภาบวิใจ

ນິຍາມກ່ຽວກັບສຳນວບພາສາທີ່ໄດ້ສະເໜີຜ່ານມາ ກວມເອົາພາກ່ສ່ວນຄວາມໝາຍ ແລະ ສາຍພົວພັນກ່ຽວກັບສັບພາສາຄື ພາຫະນະພາສາ, ภาบเลือกเฟ้นพาหะนะพาสา, ภาบจัดลຽງ ພາຫະນະພາສາ, ภาบสะแดงออกของพาสา และ ໂຄງສ້າງໃນภาบสะแดงออกของพาสา.

1. 2 1 ພາຫະນະພາສາພວກເຮົາສາມາດເຂົ້າໃຈໄດ້ຢ່າງກ້ວ້າງຂວ້າງຄື ອັກຂະຫຼະ, ວັດຈະນາ, ໄວຍາ ากอบ, สับทะสิบ และอື່ນໆ. ໃນເວລາສ້າງໃຫ້ພາສາມີภาบสะแดงออก ຜູ້ສ້າງຈະຕ້ອງໄດ້ໃຊ້ພາຫະ ນະຈากทุกละดับของโคงสร้างพาสา.

ติวย่าง: 1. ความก้าหาบของเจ้ากุกใจล้อยหลาย.
2. เจ้ามีความก้าหาบ และ มันกุกใจล้อยหลาย.
3. มันกุกใจล้อยหลายที่เจ้ามีความก้าหาบ.

ພวกเຮົาสามาถวิใจติวย่างทั้งสามประโยกนี้ได้ຄື

- ประโยกที่1 แม่นประโยกด่ຽว.
- ประโยกที 2 แม่นประโยกประสมที่มีความสะเหมีพาบกัน.
- ประโยกที 3 แม่นประโยกประสมที่มีประโยกต้นต่ และ สำรอง.

1. 2 2 ภาบเลือกเฟ้นพาหะนะพาสาแม่นสิ่งที่สำคันที่สุดยู่ในนิยามของสำนวบพาสา ที่ได้ นำสะเหมีผ่านมา. พวกเຮົาสามาดเข้าใจมันได้ด้วย 2 วิทีคือ

1. วิวัดทะนาภาบ เซ่ิงแม่นขะบวบภาบของภาบเลือกเฟ้น.
2. ผินสำเล็ดของวิวัดทะนาภาบ เซ่ิงแม่นผินสำเล็ดของขะบวบภาบเลือกเฟ้น.

1. ภาบเลือกเฟ้นพาหะนะพาสาด้วยวิทีวิวัดทะนาภาบ แม่นส่วนหนึ่งของภาบนำใช้สับพา สาเข้าในวรกางานติวจิง. ในที่นี้จะได้สึกสากำ่ยวกับภาบสร้างให้พาสามีภาบสะแดงออกคือ แนวใด. มันพะยายามเร็ดให้ผู้นำใช้สับพาสามีความสะดวกขึ้นในภาบนำใช้พาสายู่ในวรก างานต่างๆของพวกเขาด้วยหลายรูบหลายสีที่แตกต่างกัน; เร็ดให้จุดยืนของความกุกต้องใน ภาบเลือกเฟ้นพาหะนะพาสาจะแจ้ง และ ชัดเจนขึ้นสำลับภาบสะแดงออกที่เป็นรูบปะทำ ใดหนึ่ง. บินพื้นกาบความรู้ทางด้านทิดสะดีจากขะแหงภาบนำใช้สำนวบพาสา ของผู้ นำใช้ เช่น ครูอาจานอาดจะสอบสำนวบ และ ฝึกความล้ำเลียติวจิงกำ่ยวกับภาบนำใช้ สำนวบ เซ่ ำ่มันจะช่วยให้ครูมีความรู้ขึ้นติ่ม ทางด้านทิดสะดีกำ่ยวกับแบบวิทีในภาบขึ้นห้อง สอบ กำ่คือในภาบนำใช้สำนวบพาสาในเวลาขึ้นห้องสอบ.

2. ภาบเลือกเฟ้นพาหะนะพาสา ซึ่งแม่นผินสำเล็ดของขะบวบภาบเลือกเฟ้น แม่นวิที ทั้ง ซึ่งให้ความสินใจกำ่ยวกับทิดสะดีภาบนำใช้สับพาสา. มันวิใจภาบสะแดงออกของพาสา และ ติลาดาความเหมาะสมในภาบนำใช้บันดาพาหะนะติวจิงต่างๆกำ่ยวกับพาสา. บินพื้น กาบภาบติลาดาภาบวิใจนี้ จะช่วยให้ภาบจัดลຽงพาหะนะต่างๆของพาสาเข้าสู่ละบบที่แน่

ນອນ. ມາດຕະຖານຂອງການຈັດລຽງນີ້ແມ່ນທິດທາງຕົ້ນຕໍຂອງການນຳໃຊ້ສັບພາສາ. ສ່ວນທິດທາງອື່ນ ກ່ຽວກັບພາສາຊຸ່ນຄວາມເໝາະສົມກ່ຽວກັບຊະນິດຂອງຄຳສັບ ກັບແຕ່ລະກໍລະນີ ຂອງໂຄງສ້າງປະໂຫຍກ ຫຼືອື່ນໆ ມີໜ້າທີ່ພຽງແຕ່ໃນຖານະເປັນພາກສ່ວນຊ່ວຍເຫລືອທີ່ສຳຮອງເທົ່ານັ້ນ.

ຄວາມໝາຍຂອງຄຳສັບ "ຜ່ານຂະບວນການເລືອກເຟັ້ນ" ກວມເອົາຄວາມອາດສາມາດທັງໝົດທີ່ມີການເລືອກເຟັ້ນຈາກທຸກສິ່ງທຸກຢ່າງ ເພື່ອຄັດຈ້ອນເອົາຄຳສັບທີ່ເໝາະສົມອອກມານຳໃຊ້ ໃຫ້ຖືກຕ້ອງ. ໃນພາສາລາວຜູ້ນຳໃຊ້ສັບພາສາມີຄວາມອາດສາມາດເລືອກເຟັ້ນສັບສຳນວນໃຊ້ໄດ້ຢ່າງອຸດົມສົມບູນ, ບໍ່ວ່າຈະແມ່ນການເລືອກເຟັ້ນພາຫະນະພາສາດ້ານການອຽນ ຫລື ດ້ານການເວົ້າ, ຊຶ່ງຜູ້ເວົ້າ ຫລື ຜູ້ຂຽນ ບາງທີອາດຈະບໍ່ຄຳນຶງເຖິງບັນຫາດັ່ງກ່າວ.

ຕົວຢ່າງ: ບາງສຳນວນຈາກປະໂຫຍກທີ່ຜູ້ຂັບລົດໂດຍສານໃຊ້ໃນເວລາຕ້ອງການໃຫ້ຜູ້ໂດຍສານຂຶ້ນລົດ.

- ກະລຸນາຂຶ້ນລົດເດີ !
- ຂຶ້ນລົດເດີ !
- ຂຶ້ນລົດແມ !
- ດົງໂດກເດີ !

ສາຍເຫດທີ່ພາໃຫ້ພວກເຮົາເວົ້າເຖິງການເລືອກເຟັ້ນ ເພາະວ່າ ບໍ່ມີຈັກເທື່ອທີ່ພວກເຮົາຈະນຳໃຊ້ພາຫະນະທັງໝົດຂອງພາສາໃນເວລາດຽວກັນ. ໝາຍຄວາມວ່າ ຈາກຄວາມອຸດົມສົມບູນ ແລະ ຫຼວງຫຼາຍຂອງບັນດາພາຫະນະພາສາ ພວກເຮົາຈະເລືອກເຟັ້ນເອົາບາງຢ່າງເທົ່ານັ້ນ ເພື່ອມານຳໃຊ້ໃນແຕ່ລະກໍລະນີ. ຢູ່ໃນການນຳໃຊ້ປະໂຫຍກທີ່ງ່າຍດາຍ ຫລື ຢູ່ໃນການສົນທະນາໃນຊີວິດປະຈຳວັນຂອງຄົນເຮົາ ຊ້ຳພັດມີການເລືອກເຟັ້ນພາຫະນະພາສາຢ່າງບໍ່ໄດ້ຕັ້ງໃຈ, ຈົນໃນທີ່ສຸດມັນໄດ້ເກີດມີການປ່ຽນແປງໄປຢ່າງອັດຕະໂນມັດ ຊຶ່ງໃນກໍລະນີນີ້ແມ່ນເວົ້າເຖິງ ພຽງແຕ່ການນຳໃຊ້ບັນດາພາຫະນະພາສາທີ່ສຳຄັນ ແລະ ຈຳເປັນເທົ່ານັ້ນ. ສ່ວນຜູ້ນຳໃຊ້ສັບພາສາໃນຫຼາຍອົງເຂດອື່ນໆ ຄວນມີການພິຈາລະນາຕຶກຕອງເຖິງຄວາມອາດສາມາດໃນການເລືອກເຟັ້ນ, ເພາະວ່າ ມັນມີຫຼາຍເງື່ອນໄຂສະພາບແວດລ້ອມ. ໃນບັນດາເງື່ອນໄຂສະພາບແວດລ້ອມຕ່າງໆເຫລົ່ານັ້ນ, ແຕ່ລະຄົນຕ້ອງການສະແດງບົດຂອງຕົນອອກມາດ້ວຍວິທີການຢ່າງໃດຢ່າງໜຶ່ງຊຶ່ງນັບທັງເງື່ອນໄຂທັງໝົດ; ໃນນີ້ບົດຂອງພວກເຂົາບາງທີອາດຈະຖືກຮັບເອົາ ຫລື ບາງທີອາດຈະຖືກປະຕິເສດ ໂດຍອີງຕາມຄວາມອາດສາມາດໃນການສະແດງອອກ. ສະພາບແວດລ້ອມ ແລະ ເງື່ອນໄຂທັງໝົດທີ່ສົ່ງຜົນສະທ້ອນ ໃນເວລາເລືອກເຟັ້ນພາຫະນະພາສາເພື່ອສ້າງເປັນບົດເອີ້ນວ່າ ສິ່ງກະຕຸກຊຸກຍູ້ເຮັດໃຫ້ສັບພາສາກຳເນີດເກີດຂຶ້ນ ຊຶ່ງຄວາມສຳຄັນຂອງພວກມັນຕໍ່ບັນຫາດັ່ງກ່າວຈະໄດ້ອະທິບາຍໃນພາກຕໍ່ໄປ.

1. 2 3 ການຈັດລຽງບັນດາພາຫະນະຕ່າງໆຂອງພາສາແມ່ນແບບວິທີໃນການແຈກຢາຍພາກສ່ວນປະກອບພື້ນຖານຂອງໂຄງສ້າງພາສາຊຸ່ນ ບັນດາຄຳສັບ ແລະ ສຳນວນ ຫລື ຢູ່ໃນຈຸດທີ່ສູງກວ່ານັ້ນ ຊຸ່ນ ປະໂຫຍກ, ປະໂຫຍກປະສົມຫລືບົດ. ການຈັດລຽງບັນດາພາຫະນະພາສາ ເປັນໄປໂດຍບັງເອີນໃນບາງສະພາບການຂອງການສະແດງອອກຕົວຈິງ; ເຊິ່ງຜູ້ເວົ້າ ຫລື ຜູ້ຂຽນ ບາງເທື່ອບໍ່ໄດ້ຄຳນຶງເຖິງບັນຫາດັ່ງກ່າວໃນເວລາເວົ້າ ຫລື ຂຽນ.

ຕົວຢ່າງ: ຢູ່ໃນການສົນທະນາທີ່ທຳມະດາ ມັກມີປະໂຫຍກທີ່ຜູ້ເວົ້າບໍ່ບັນຈຸບາງພາກສ່ວນເຊັ້ນ ນຳ ແລະ ໃນທີ່ນີ້ມັນເປັນໄປຢ່າງອັດຕະໂນມັດ, ບໍ່ພຽງແຕ່ການເລືອກເຟັ້ນບັນດາພາຫະນະພາສາ, ແຕ່ຍັງນັບທັງການຈັດລຽງຂອງພວກມັນອີກດ້ວຍ. ແຕ່ຢູ່ໃນບາງການສະແດງອອກອື່ນໆ ຊ້ຳພັດກົງກັນ

ຂ້ອມກັບບັນຫາດັ່ງກ່າວ, ໂດຍເກີດມີຄວາມຈຳເປັນທີ່ຕ້ອງໄດ້ຜ່ານການຊັ່ງຊາ ພິຈາລະນາກ່ຽວກັບ ການຈັດລຽງບັນດາພາຫະນະພາສາໃຫ້ຢູ່ໃນແຖວໜ້າຢ່າງເໜັ້ນໄດ້ຊັດເຈນ.
ຕົວຢ່າງ:

ນອກຈາກຂໍ້ກຳນົດກົດລະບຽບຕ່າງໆກ່ຽວກັບຈັງຫວະ ຫຼື ການສຳຜັດຂອງບົດກາບກອນ ແລ້ວ, ບັນດານັກກະວີຍັງຢູ່ໃຕ້ອຳນາດຂອງການຈັດລຽງບັນດາພາຫະນະຕ່າງໆຂອງພາສາອີກດ້ວຍ.

ບາງເທື່ອ ບັນດາສະພາບແວດລ້ອມອ້ອມຂ້າງອື່ນໆ ກໍສິ່ງຜົນກະທົບຕໍ່ການຈັດລຽງບັນດາພາ ຫະນະຕ່າງໆຂອງພາສາເໝືອນກັນ ຊຶ່ງບໍ່ພຽງແຕ່ການສະແດງອອກດ້ານສິລະປະເທົ່ານັ້ນ; ທັງນີ້ກໍ ເນື່ອງມາຈາກບັນດາເງື່ອນໄຂສະພາບແວດລ້ອມອ້ອມຂ້າງດັ່ງກ່າວ.

ຕົວຢ່າງ: ຄວາມພະຍາຍາມຢາກເນັ້ນໜັກບາງຄວາມໝາຍ ດ້ວຍການສັບປ່ຽນລຳດັບຂອງ ບັນດາຄຳ ສັບໃນປະໂຫຍກ ຫຼືໃຫ້ຄວາມລະມັດລະວັງກ່ຽວກັບມັນ ເພື່ອເຮັດໃຫ້ມັນປາກົດເປັນຈິງໃນ ປັດຈຸບັນຢ່າງ ກະທັດຮັດ. ສິ່ງພິເສດຢ່າງໜຶ່ງໃນການຈັດລຽງບັນດາພາຫະນະພາສາ ແມ່ນສິ່ງເສດເຫຼືອ ຂອງມາດຕະ ຖານກ່ຽວກັບສຳນວນທີ່ມັກມີຢູ່ນຳຜູ້ນຳໃຊ້ບາງກຸ່ມ. ດ້ວຍແບບວິທີທີ່ພິເສດໃດໜຶ່ງ ບາງ ເທື່ອບັນດາພາ ຫະນະພາສາໄດ້ຖືກຈັດລຽງໃຫ້ເປັນບຽບຮຽບຮ້ອຍ ເພື່ອໃຫ້ເນື້ອໃນໃຈຄວາມທີ່ກ່າວ ອອກມາ ຕິດອົກຕິດ ໃຈ ຫຼື ປາກົດອອກມາຢ່າງໂດດເດັ່ນ. ສຳລັບ ການເນັ້ນໜັກພາກສ່ວນເນື້ອໃນ ໃຈຄວາມທີ່ແນ່ນອນໃດ ໜຶ່ງເພື່ອຄວາມຈື່ຈຳທີ່ງ່າຍດາຍ, ມັນຈະຖືກອະນຸຍາດໃຫ້ຫຼຳຄືນບາງພາຫະ ນະພາສາ. ຄວາມບໍ່ຄ່ອງ ແຄ້ວດ້ານສຳນວນມັກເກີດຂຶ້ນເລື້ອຍໆໃນເວລານຳໃຊ້ ແລະ ກໍ່ວ່າເປັນ ຄວາມຂາດຕົກບົກຜ່ອງກ່ຽວ ກັບສຳນວນຂອງຜູ້ນຳໃຊ້ສັບພາສາ. ດັ່ງນັ້ນຈຶ່ງເກີດມີການຫຼຳຄືນ, ແກ້ ຄືນ, ຈົນກະທັ້ງມີການແກ້ຂໍ້ ຄວາມຕ່າງໆຄືນຂອງບັນດາຜູ້ຂຽນບົດທັງຫຼາຍ.

1.2.4 ການສະແດງອອກຂອງພາສາ ແມ່ນການສ້າງຮູບແບບຂອງພາສາໃຫ້ມີເນື້ອໃນທີ່ແນ່ນອນໃດ ໜຶ່ງດ້ວຍຜູ້ເວົ້າ ຫລື ຜູ້ຂຽນຕົວຈິງ ໂດຍຕັ້ງເປົ້າໝາຍໃສ່ຜູ້ຟັງ ຫຼື ຜູ້ອ່ານທີ່ແນ່ນອນໃດໜຶ່ງ; ຊຶ່ງອາດ ສາມາດສ້າງໃຫ້ມີເນື້ອໃນໄດ້ທັງໃນແບບກະທັດຮັດ ທີ່ປະກອບດ້ວຍໜຶ່ງປະໂຫຍກ ແລະ ທັງໃນແບບທີ່ ກວ້າງຂວາງ. ພວກເຮົາສາມາດສະແດງບົດອອກດ້ວຍແບບວິທີທີ່ງ່າຍດາຍແຕ່ກໍສາມາດເຂົ້າໃຈໄດ້.

ຕົວຢ່າງ:

"ຄຳແດງ, ໂທລະສັບ!" ອັນນີ້ສະແດງໃຫ້ຮູ້ວ່າຄຳແດງຕ້ອງໄປຮັບໂທລະສັບ ເພາະວ່າ ມີຜູ້ໂທ ລະສັບມາຫາລາວ; ຊຶ່ງນີ້ກໍຄືກັນກັບບົດປາກະກາ, ບົດລາຍງານ, ບົດເລື່ອງ ແລະ ບົດອື່ນໆ ຊຶ່ງ ອາດຈະຍາວ ຫຼື ສັ້ນກໍໄດ້ໂດຍຂຶ້ນກັບເນື້ອໃນຂອງມັນ. ການສະແດງອອກຂອງພາສາກໍມີຈຸດປະສົງທີ່ ແນ່ນອນໃດໜຶ່ງຂອງມັນເອງ, ມີໜ້າທີ່ສະເພາະຂອງມັນເອງ ຊຶ່ງຄືກັນກັບການເຄື່ອນໄຫວອະໄວຍະວະ ແຕ່ລະຢ່າງຂອງມວນມະນຸດ. ເພາະສະນັ້ນ ຈຸດສຳຄັນຕົ້ນຕໍໃນທີ່ນີ້ ແມ່ນໜ້າທີ່ທີ່ກຳນົດການນຳ ໃຊ້ບັນດາພາຫະນະຕ່າງໆຂອງພາສາທີ່ປະກອບສ່ວນເຂົ້າໃນການສະແດງອອກຂອງພວກມັນ. ລັກສະ ນະເດັ່ນໃນການສະແດງອອກຂອງພາສາແມ່ນຄວາມສົມບູນແບບທາງດ້ານຮູບແບບ ແລະຄວາມ ໝາຍ; ຄວາມຄົບກ້ວນ ແລະຄວາມເປັນເອກະລາດທາງດ້ານເນື້ອໃນ.

ຄຽງຄູ່ກັບສັບວິຊາການທີ່ວ່າ "ການສະແດງອອກຂອງພາສາ", ໃນປັດຈຸບັນປາກົດມີຄຳ ສັບທີ່ເອີ້ນຢ່າງອື່ນອີກຄື "ຫົວໜ່ວຍພື້ນຖານໃນການສື່ສານ" ຊຶ່ງຄ້າຍຄືກັບ "ພາຫະນະສື່ສານ" ແລະ

ມັນກຶກຣັບຮູ້ຄືກັບການສື່ຂ່າວທຳມະດາ, ການປາກະກະຖາ, ຫົວຂໍ້ຂ່າວ, ການກອນ, ບົດນິພົນ, ບົດລະຄອນ ແລະອື່ນໆ. ບາງເທື່ອມັກນຳໃຊ້ທັງໃນຄຳສັບທີ່ວ່າ "ປົດ" ຢູ່ໃນຫຼາຍຄວາມໝາຍພິເສດ ທີ່ແຕກຕ່າງກັນ. ຢູ່ໃນປຶ້ມແບບຮຽນຫົວນີ້ ນຳໃຊ້ຊື່ເອີ້ນນີ້ທັງຢູ່ໃນແງ່ຄວາມໝາຍດ້ານຜົນສຳເລັດຂອງກິດຈະກຳການຂຽນ ແລະ ເວົ້າແຕ່ລະຢ່າງ, ຊຶ່ງບໍ່ໄດ້ໝາຍເຖິງພຽງແຕ່ສິ່ງທີ່ຂຽນອອກ ຫຼື ພິມອອກເທົ່ານັ້ນ. ພວກເຮົາສາມາດເຂົ້າໃຈພາກສ່ວນຕ່າງໆຂອງປົດໄດ້ກໍຍ້ອນການສຳພັນ, ຍ້ອນຂໍ້ກຳນົດກົດລະບຽບຕ່າງໆໃນການສຳພັນກັນ ທີ່ພວກເຮົາສາມາດນຳເອົາມາພິຈາລະນາ ເພື່ອໃຫ້ພວກເຮົາສາມາດຕັດສິນໃຈນຳໃຊ້ບາງສຳນວນຈາກສິ່ງທີ່ມີຢູ່ຂອງບັນດາພາຫະນະພາສາ. ເວລາສັງເກດຕີລາຄາສຳນວນທີ່ໃຊ້ໄດ້ຂອງພາຫະນະພາສາພວກເຮົານຳເອົາທັງສາຍພົວພັນນອກພາສາມາພິຈາລະນາ; ຊຶ່ງພວກມັນແມ່ນສະຖານະການ ຫຼື ສະພາບແວດລ້ອມຕ່າງໆທີ່ມີອິດທິພົນພິເສດໃຫຍ່ຫຼວງຕໍ່ການເລືອກເຟັ້ນບັນດາພາຫະນະພາສາຂອງຜູ້ນຳໃຊ້.

1. 2 5 ໂຄງສ້າງການສະແດງອອກ ຂອງພາສາເປັນໄປໄດ້ໂດຍຜູ້ນຳໃຊ້ໄດ້ເລືອກເຟັ້ນເອົາບັນດາຊື່ເອີ້ນທີ່ເໝາະສົມກັບພາກສ່ວນຂອງຄວາມເປັນຈິງຕ່າງໆ ດ້ວຍການເລັ່ງໃສ່ໜ້າທີ່ຂອງການສະແດງອອກ ແລະ ສະພາບແວດລ້ອມອ້ອມຂ້າງອື່ນໆ. ຫຼັງຈາກນັ້ນຈຶ່ງສະແດງພາສາອອກ ເຖິງບັນຫາທີ່ຢາກກ່າວເຖິງ. ຂອບເຂດຂອງໂຄງສ້າງໄລຍະນີ້ແມ່ນເປັນໄປຄືກັນກັບກິດຈະກຳຂອງການເອີ້ນ. ສ່ວນກິດຈະກຳຮ່ວມສຳພັນອື່ນໆ ກໍເປັນໄປພ້ອມກັນກັບມັນຊຸ່ນກັນ. ໃນທີ່ນີ້ໝາຍຄວາມວ່າ ນຳເອົາບັນດາຊື່ເອີ້ນຕ່າງໆມານຳໃຊ້ໃນຫລັກການພົວພັນທີ່ແນ່ນອນໃດໜຶ່ງ. ອີງຕາມຄວາມສອດຄ່ອງກັບຂໍ້ກຳນົດດ້ານຫຼັກໄວຍາກອນ ບັນດາຊື່ເອີ້ນແຕ່ລະຈຳພວກຖືກນຳໃຊ້ ໃນຮູບແບບທີ່ເໝາະສົມ ແລະ ຖືກກຳນົດທີ່ຕັ້ງຂອງພວກມັນຢ່າງແນ່ນອນຢູ່ໃນປະໂຫຍກ./

ໂຄງສ້າງຂອງການແຕ່ງເລື່ອງ ແມ່ນເປັນໄປໃນລະດັບຂອງຫົວຂໍ້ (ໃນທີ່ນີ້ໄດ້ເນັ້ນໜັກ ເຖິງການເລືອກເຟັ້ນ ແລະ ແຈກຢາຍບັນດາອົງປະກອບຂອງເນື້ອໃນ) ແລະ ໃນລະດັບຂອງປົດ (ໃນທີ່ນີ້ໄດ້ເນັ້ນໜັກເຖິງການແບ່ງພາກສ່ວນຕ່າງໆຂອງປົດໃສ່ແຕ່ລະຕອນ, ໃສ່ແຕ່ລະພາກ, ໃສ່ແຕ່ລະຄຳເວົ້າຂອງນັກແຕ່ງ, ໃສ່ແຕ່ລະຄຳເວົ້າຂອງຕົວລະຄອນ ແລະອື່ນໆ) ຊຶ່ງບັນຫາດັ່ງກ່າວນີ້ມັນກ່ຽວພັນເຖິງພາກສ່ວນເອກະລາດຕ່າງໆ ເພື່ອປະກອບເຂົ້າໃຫ້ເປັນປົດ.

ຄຳຖາມ:

1. ຈົ່ງພິສູດຄວາມແຕກຕ່າງລະຫວ່າງສອງພາຫະນະພາສາຕໍ່ໄປນີ້; ຄວາມແຕກຕ່າງນີ້ຢູ່ໃນລະດັບອັກຂະຫຼະ, ວັດຈະນາ, ໄວຍາກອນ ຫຼື ສັນທະສິນ ?
- - ເຊີນທ່ານປະທານຂຶ້ນມາໃຫ້ຄຳຄິດຄຳເຫັນ.
  - ເຊີນທ່ານປະທານອອກມາໃຫ້ຄຳຄິດຄຳເຫັນ.
- - ກ່ຽວກັບຄຳຮ້ອງທີ່ມາເຖິງຫຼັງການກຳນົດທີ່ດີນບານ ຈະບໍ່ຖືກນຳມາພິຈາລະນາອີກ.
  - ກ່ຽວກັບຄຳຮ້ອງທີ່ມາເຖິງຊ້າ, ມັນຖືກລະບຸໄວ້ຢ່າງຈະແຈ້ງແລ້ວວ່າ ພວກເຮົາຈະບໍ່ພິຈາລະນາມັນ.
2. ຈົ່ງບອກແຈ້ງວ່າຢູ່ໃນໂອກາດ ແລະ ຢູ່ໃນກັນແກວໃດເພີ່ນໃຊ້ປະໂຫຍກແນວນີ້. ຈົ່ງພິຈາລະນາວ່າເປັນຫຍັງຜູ້ນຳໃຊ້ຈຶ່ງເລືອກເອົາພາຫະນະພາສານີ້. ຈົ່ງເດົາເບິ່ງວ່າໃຜເປັນຜູ້ເວົ້າປະໂຫຍກນີ້ ແລະ ເວົ້າກັບໃຜ?

- ໝາກໄມ້ຢູ່ໃນຕູ້ເຢັນຂ້ອຍກິນ <u>ເບີດ / ເໝີດ</u> ແລ້ວ. (ໝົດ)
- ເຈົ້າບໍ່ຕ້ອງ <u>ຄຶດ</u> ຫຼາຍ. (ຄິດ)
- <u>ຊ່ອຍ</u> ຂ້ອຍແດ. (ຊ່ວຍ)

3. ຈົ່ງຕັດສິນຄວາມເໝາະສົມໃນການເລືອກເຟັ້ນບັນດາພາຫະນະພາສາ ໃນຕົວຢ່າງຕໍ່ໄປນີ້ຈາກບົດວຽກບ້ານກ່ຽວກັບສຳນວນຂອງນັກສຶກສາ.

"..... ຂ້ອຍມັກທີ່ສຸດແມ່ນລະດູຮ້ອນ ແຕ່ວ່າບໍ່ຮ້ອນຫຼາຍເກີນໄປ."

2. ສຳນວນບຸກຄົນ, ລະຫວ່າງບຸກຄົນຕໍ່ບຸກຄົນ ແລະ ກົດໝາຍຂອງສຳນວນ

2. 1 ສຳນວນບຸກຄົນ ແລະ ລະຫວ່າງບຸກຄົນຕໍ່ບຸກຄົນ

/ ການສະແດງພາສາອອກຂອງແຕ່ລະຄົນ ບັນຈຸດ້ວຍຫຼາຍພາກສ່ວນທີ່ສະທ້ອນຄວາມອາດສາມາດ, ຄວາມມັກ ຫຼື ເອກະລັກສະເພາະເພື່ອສະແດງການສື່ສານອອກ. ບັນດາພາກສ່ວນຕ່າງໆເຫຼົ່ານີ້ບໍ່ແມ່ນວ່າຈະບໍ່ມີການປ່ຽນແປງ; ໂດຍສະເພາະຢ່າງຍິ່ງແລ້ວ ມັນຂຶ້ນກັບການປ່ຽນແປງການຂະຫຍາຍຕົວຂອງມວນມະນຸດ./ ຄົນເຮົາເຂົ້າຮ່ວມໃນສະຖານະການທີ່ແນ່ນອນດ້ວຍການສະແດງບົດພາສາຂອງຕົນອອກ ແລະ ຕໍ່ຈາກນັ້ນກໍພັດທະນາລັກສະນະພິເສດສ່ວນຕົວຂຶ້ນ. ດ້ານພາຫະນະພາສາຂອງເຂົາເຈົ້າຈະພັດທະນາດ້ວຍຫຼາຍວິທີ ຄື ຫາກຄົນເຮົາເຂົ້າໃກ້ກັບສະຖານະການຫຼາຍເທົ່າໃດຍິ່ງເຮັດໃຫ້ບົດພາສາຂອງເຂົາຖືກນຳໃຊ້ຫຼາຍເທົ່ານັ້ນ. ບາງເທື່ອສະຖານະການຄືແນວນີ້ ຖືກຫຼໍ່ຫຼອມໂດຍບັງເອີນ ແລະ ອີກເທື່ອໃໝ່ ຄົນເຮົາຈະສ້າງມັນຂຶ້ນມາເອງໂດຍບໍ່ໄດ້ຕັ້ງໃຈ. ໃນການມີສ່ວນຮ່ວມດ້ານພາສາຂອງຄົນເຮົາ, ບາງຈຸດພິເສດສະເພາະຂອງບົດພາສາອາດຫຼ້າຫຼັງລົງ, ບາງຢ່າງ ໃນທີ່ສຸດອາດຈະຖືກກຳຈັດອອກຢ່າງເຈດຕະນາ. ກົງກັນຂ້າມບາງຢ່າງອື່ນໆຊ້ຳພັດມີລັກສະນະໝັ້ນຄົງ,

/ ບາງຢ່າງຜູ້ນຳໃຊ້ພາສາມີການພັດທະນາ ແລະ ອະນຸລັກຮັກສາໄວ້ຢ່າງເຈດຕະນາ. ໃນທີ່ນີ້ມັນຈະຖືກປະຕິບັດເຖິງແບບວິທີການສະແດງອອກຢ່າງແນບນຽນຂຶ້ນໄປເລື້ອຍໆ ຊຶ່ງນັ້ນແມ່ນ ຈຸດພິເສດຂອງມັນ ແລະ ຈະຖືກປະຕິບັດໃຫ້ເຂົ້າກັບສຳນວນສະເພາະຂອງແຕ່ລະບຸກຄົນ./

ລັກສະນະພິເສດກ່ຽວກັບສຳນວນສ່ວນຕົວຂອງຄົນເຮົາ <u>ສາມາດສະແດງໃຫ້ເຫັນດ້ວຍການວິໄຈ ການໃຊ້ສຳນວນຕ່າງໆຢູ່ໃນຈິດໜາຍ, ໃນບົດສົນທະນາ, ໃນການສື່ສານ</u> ຊຶ່ງລວມທັງການສົນທະນາທົ່ວໄປກ່ຽວກັບບັນດາວັດຖຸສິ່ງຂອງທີ່ທຳມະດາທົ່ວໆໄປ. ລັກສະນະສ່ວນຕົວຂອງສຳນວນ ສ່ວນຫລາຍແມ່ນຢູ່ນຳບັນດາບຸກຄົນທີ່ສະແດງບົດພາສາອອກເລື້ອຍໆ ແລະ ຢູ່ໃນຂົງເຂດທີ່ແນ່ນອນໃດໜຶ່ງຊຶ່ງມີຄວາມໝາຍທີ່ຊັດເຈນຕະຫລອດເວລາ; ຊຶ່ງວິທະຍາສາດການນຳໃຊ້ສັບພາສາຮັບຮູ້ສິ່ງຕົວຈິງດັ່ງກ່າວດີ. ດັ່ງນັ້ນ ມັນຈຶ່ງພະຍາຍາມສ່ອງແສງເຖິງຈຸດສຳຄັນສ່ວນບຸກຄົນທາງດ້ານສຳນວນ. ເອກະລັກສ່ວນຕົວທາງດ້ານສຳນວນສ່ວນຫລາຍແມ່ນຢູ່ນຳບັນດານັກປະພັນ, ນັກກະວີ ແລະ ນັກຂຽນອື່ນໆ ຊຶ່ງເຂົາເຈົ້າອາດສາມາດສະແດງສຳນວນອອກໃຫ້ເຫັນໄດ້ດີໃນຜົນງານຕ່າງໆຂອງເຂົາເຈົ້າ.

/ ກ່ຽວກັບສຳນວນສ່ວນບຸກຄົນ ພວກເຮົາສາມາດເວົ້າເຖິງທັງໃນກໍລະນີທີ່ຜູ້ໃຊ້ພາສາສະແດງອອກໂດຍບໍ່ແມ່ນນັກປະພັນ ຫຼື ນັກກະວີ. ສາມາດເວົ້າເຖິງທັງໃນການສະແດງພາສາອອກຢູ່ໃນບົດສົນທະນາທີ່ທຳມະດາ, ສັ້ນ, ກະທັດຮັດ ຊຶ່ງບໍ່ແມ່ນຜົນງານດ້ານວັນນະຄະດີ./

ກຸ່ມຄົນທີ່ດຳລົງຊີວິດທີ່ຢູ່ໃນຍຸກສະໄໝດຽວກັນ ມີການສະແດງພາສາອອກດ້ວຍຫລາຍຈຸດທີ່ຄືກັນ; ຊຶ່ງພວກເຮົາສາມາດສັງເກດເຫັນໄດ້ໃນບົດສົນທະນາທີ່ທຳມະດາ, ໃນການຄົບຄ້າແລກປ່ຽນທີ່ເປັນຈິດໜາຍ, ໃນຂະແໜງວັນນະຄະດີ ແລະ ສິລະປະກຳ, ໃນບົດແນະນຳວິທີການໃຊ້ເຄື່ອງຈັກຕ່າງໆ, ໃນການແຈ້ງຂ່າວຕາມປ້າຍໂຄສະນາຕ່າງໆ, ໃນບົດປະກາດໂຄສະນາຂາຍເຄື່ອງຕາມຮ້ານຄ້າຕ່າງໆ ແລະ ອື່ນໆອີກ. ໃນກໍລະນີຕ່າງໆເຫຼົ່ານີ້ແມ່ນພວກເຮົາຄົ້ນຄວ້າເຖິງການສະແດງອອກຂອງສຳນວນພາສາຮ່ວມສະໄໝ ແລະ ເວົ້າເຖິງສຳນວນພາສາທີ່ນິຍົມໃຊ້ໃນຍຸກສະໄໝດັ່ງກ່າວ/ ຢູ່ໃນຫລາຍກໍລະນີອື່ນໆ ພວກເຮົາສາມາດຊອກຫາຈຸດລວມດ້ານສຳນວນຢູ່ນຳບັນດານັກຂຽນ ທີ່ໄດ້ປະກອບສ່ວນເຂົ້າໃນທິດທາງຜົນງານດ້ານສິລະປະກຳທີ່ແນ່ນອນໃດໜຶ່ງ. ໃນກໍລະນີ້ແມ່ນເວົ້າເຖິງສຳນວນຂອງທິດທາງຜົນງານດ້ານສິລະປະກຳ ຫຼື ເວົ້າເຖິງສຳນວນວັນນະຄະດີຢູ່ຕາມໂຮງຮຽນຕ່າງໆ.

ຕົວຢ່າງ:

- ສຳນວນການຂຽນເລື່ອງຂອງລັດທິເພີ່ນຈິດ.
- ສຳນວນການຂຽນເລື່ອງຂອງລັດທິສັດຈະທັດ.

2. 2 ກົດເກນຂອງສຳນວນ

ດ້ວຍການວິໃຈບັນດາລັກສະນະຂອງສຳນວນສາກົນສ່ວນບຸກຄົນ ພ່ວກເຮົາສາມາດຮັບຮູ້ໄດ້ວ່າ ການນຳໃຊ້ບັນດາພາຫະນະພາສາຢູ່ໃນຂົງເຂດທີ່ແນ່ນອນໃດໜຶ່ງ ເປັນໄປຕາມທ່າອ່ຽງທີ່ຊັດເຈນ ແລະ ຕາມກົດເກນທີ່ຂຶ້ນກັບອິດທິພົນຂອງຍຸກສະໄໝ, ພ້ອມທັງອິດທິພົນຂອງບັນດາຜູ້ສ້າງສຳນວນຕ່າງໆ. ຜົນບວກຂອງຄວາມຊຶນເຄີຍ, ທ່າອ່ຽງ ແລະ ກົດເກນດັ່ງກ່າວ ເອີ້ນວ່າ ກົດເກນຂອງສຳນວນ. ແຕ່ລະການສະແດງອອກຂອງພາສາໃນກໍລະນີນີ້ ສະທ້ອນໃຫ້ເຫັນກົດເກນຂອງພາສາ ແລະ ກົດເກນຂອງສຳນ້ວນ. ບັນດາກົດເກນຕ່າງໆເຫຼົ່ານີ້ແມ່ນຫລັກໄວຍາກອນ, ຫຼັກການຝັນສຽ(ໃນເວລາເວົ້າ), ຫຼັກການຂຽນ (ໃນເວລາຂຽນ) ແລະ ຫລັກການນຳໃຊ້ສຳນວນຕ່າງໆ. ທັງໝົດເຫລົ່ານີ້ ມີອິດທິພົນ ຄືກັບກັບຫຼັກການທີ່ຊັດເຈນ ຂອງລັກສະນະລວມທົ່ວໄປໃນພາກປະຕິບັດຕົວຈິງ. ເຖິງແມ່ນວ່າໃນເວລາຕີລາຄາຄຸນະພາບຂອງການສະແດງອອກຂອງພາສາໃນປັດຈຸບັນ ພວກເຮົາສາມາດມອງຂ້າມອິທິພົນຂອງຍຸກສະໄໝ, ແຕ່ພວກເຮົາບໍ່ສາມາດມອງຂ້າມສະພາບແວດລ້ອມ, ສະຖານະການ ແລະ ເງື່ອນໄຂຕົວຈິງ ທີ່ທ້ອນໃຫ້ບົດກຳນິດເກີດຂຶ້ນ, ພ້ອມທັງບັນດາຜູ້ສ້າງສຳນວນທີ່ມີອິດທິພົນຕໍ່ການສະແດງອອກຂອງພາສາດັ່ງກ່າວ.

ຕົວຢ່າງ: ຢູ່ໃນໂຮງຮຽນ, ການລົມກັນຂອງບັນດານັກຮຽນໃນເວລາເລີກຫຼິ້ນແຕກຕ່າງກັບການເວົ້າຂອງເຂົາເຈົ້າເວລາຢູ່ໃນໂມງຮຽນ. ການສະແດງບົດພາສາອອກຂອງພວກເຂົານອກໂມງຮຽນບອກເຖິງກົດເກນຂອງສຳນວນການສົນທະນາທີ່ທຳມະດາຂອງນັກຮຽນ, ຊຶ່ງໜ້ອຍທີ່ສຸດຈະແມ່ນກົດເກນດ້ານໄວຍາກອນຂອງພາສາ. ໃນເວລາຂຶ້ນຫ້ອງຮຽນຂອງບັນດານັກຮຽນ, ພວກເຂົາພະຍາຍາມເຂົ້າໃກ້ກົດເກນດ້ານໄວຍາກອນທີ່ສຸດ; ແຕ່ວ່າບໍ່ສາມາດເຮັດໃຫ້ປາກົດເປັນຈິງໄດ້ໃນທຸກໆກໍລະນີ. ແມ້ກະທັ້ງດ້ວຍການປ່ຽນແປງກົດເກນສຳນວນທີ່ມີການບັງຄັບບັນຊາການສົນທະນາຂອງບັນດານັກຮຽນດັ່ງກ່າວ, ເພາະວ່າມັນແມ່ນສຳນວນຂອງປົດພາສາເວົ້າ. ບົນເສັ້ນທາງພວກເຮົາສາມາດພົບເຫັນບາງຄຳຖາມທີ່ເຮັດໃຫ້ພວກເຮົາຕົກສະເງີ ເຊັ່ນ **"ກະລຸນາ ! ແຕ່ປີ້ຫາຄືວລົດເມ ໄປ ປາບໃດ?"** ຄຳເວົ້າ ແລະຮູບແບບທັງໝົດຂອງການສື່ສານນີ້ແມ່ນຖືກຕ້ອງຕາມມາດຕະຖານ ແລະ ຫຼັກການດ້ານໄວຍາກອນ ໄດ້ຖືກອະນຸລັກຮັກສາໄວ້ໄດ້ດີ. ນີ້ແມ່ນໜຶ່ງໃນບັນດາສຳນວນທີ່ຖືກນຳໃຊ້ທີ່ສະແດງໃຫ້ເຫັນວ່າ ສຳນວນຂອງຄຳຖາມສະແດງໃຫ້ຜູ້ຟັງຮັບຮູ້ວ່າສຳນວນພາສາແມ່ນຂອງຜູ້ເວົ້າ, ບໍ່ແມ່ນຂອງຜູ້ຟັງ. ການນຳໃຊ້ສຳນວນແນວນີ້ ສຳລັບຄຳຖາມປະເພດນີ້ ຢູ່ໃນສະພາບແວດລ້ອມແນວນີ້ ມັນສະແດງເຖິງການຮັກສາກົດເກນຂອງສຳນວາພາສາພຽງແຕ່ທາງດ້ານຫລັກໄວຍາກອນ ; ສ່ວນຄວາມເປັນຈິງ ໃນການນຳໃຊ້ສຳນວນໃນພາສາລາວສຳລັບຄຳຖາມປະເພດນີ້ ຢູ່ໃນສະພາບແວດລ້ອມແນວນີ້ແມ່ນບໍ່ຖືກຕ້ອງ; ເພາະວ່າການນຳໃຊ້ສຳນວນພາສາເພື່ອໃຫ້ບັນລຸເປົ້າໝາຍຈຳເປັນຕ້ອງໄດ້ຄຳນຶງເຖິງຫລາຍປັດໄຈ ເຊັ່ນ ກາລະ, ເທສະ, ສະພາບແວດລ້ອມຕົວຈິງຂອງການນຳໃຊ້ໃນສັງຄົມ; ແລະສິ່ງທີ່ຂາດບໍ່ໄດ້ກໍຄື ຜູ້ຟັງ. ເພາະສະນັ້ນ ສຳນວນພາສາທີ່ຄວນໃຊ້ຖາມແມ່ນ **"ຂໍໂທດ! ແຕ່ປີ້ຫາຄືວລົດເມໄປປາບໃດ ? "** ຫລື **"ປ້າ/ລຸງ/ນ້ອງ/ເອື້ອຍ! ແຕ່ປີ້ຫາຄືວລົດເມໄປປາບໃດ ?"**

ສ່ວນຄຳສັບ "ປ້າ/ລຸງ/ນ້ອງ/ເອື້ອຍ" ນັ້ນ, ກໍແລ້ວແຕ່ຜູ້ກ່າມຈະເລືອກໃຊ້ ໂດຍອີງຕາມຄວາມເປັນຈິງທາງດ້ານອາຍຸກະສຽນ ຫລື ສາຍພົວພັນ ອື່ນໆລະຫວ່າງຜູ້ກ່າມ ແລະ ຜູ້ຖືກກ່າມ.

ຈາກບັນຫາດັ່ງກ່າວມານີ້ພວກເຮົາສາມາດເຫັນໄດ້ວ່າ ບາງເທື່ອກົດເກນຂອງພາສາຖືກນຳໃຊ້ ແຕ່ກົດເກນຂອງສຳນວນພັດບໍ່ຖືກອະນຸລັກຮັກສາ. ດັ່ງນັ້ນການເບິ່ງໜັງສືພິມ ຫຼື ຕຳລາຮຽນຕ່າງໆ ແບບຜິວເຜີນ ພວກເຮົາຈະເຫັນວ່າ ພວກມັນຖືກອະນຸລັກຮັກສາທັງສອງກົດເກນໄປພ້ອມໆກັນ. ປັດຈຸບັນ ຢູ່ໃນຍົງເຂດວັນນະຄະດີ ກົດເກນຂອງສຳນວນຖືກບັງຄັບໃຫ້ຢູ່ເໜືອກົດເກນຂອງພາສາ ແລະ ເປີດໂອກາດໃຫ້ນັກຂຽນໄດ້ນຳໃຊ້ບັນດາພາຫະນະພາສາທີ່ບໍ່ໄດ້ມາດຕະຖານ ເພື່ອອ້າງອີງເຖິງເຫດຜົນໃນກໍລະນີຕ່າງໆ ເຊັ່ນ ໃນເວລາໃຫ້ທັດສະນະນິໄສແກ່ຕົວລະຄອນ ຫຼື ສະພາບແວດລ້ອມຕ່າງໆ.

ກົດເກນຂອງສຳນວນແຕກຕ່າງກັບກົດເກນຂອງພາສາຢູ່ບ່ອນວ່າ ກົດເກນຂອງສຳນວນ ຖືກເຮັດໃຫ້ຍືນຍົງຄົງຕົວໜ້ອຍທີ່ສຸດ; ກົດເກນຂອງສຳນວນມີຄວາມພະຍາຍາມທາງດ້ານການປ່ຽນແປງທິດທາງສູງກວ່າກົດເກນຂອງພາສາ. ແທ້ຈິງແລ້ວ, ເອກະລັກຂອງກົດເກນສຳນວນ ກ້າສົມທຽບໃສ່ກົດເກນອື່ນໆ ມັນຖືກສັ່ງການຢ່າງເຈດຕະນາ ຍ້ອນຄວາມເປັນເອກະລັກສະເພາະຂອງການສະແດງພາສາອອກໃນສັງຄົມໃດໜຶ່ງ. ແບບວິທີຂອງການສະແດງອອກ ທີ່ບໍ່ທຳມະດາຮຽກຮ້ອງເຖິງ ຄວາມລະມັດລະວັງສູງ ແລະ ມີໂອກາດເກີດຜົນສະສ້ອນ ດ້ານສຳນວນທີ່ສາມາດນຳໄປເຖິງປະສິດ ທິຜົນທີ່ເຂັ້ມຂຸ້ນກວ່າແບບວິທີຂອງການສະແດງອອກ ທີ່ນຳໄປເຖິງການເຮັດໃຫ້ເກີດມີຄວາມຕະຫຼົກເຮອຣາ ໃນການສະແດງອອກຂອງກົດເກນສຳນວນສົນທະນາທີ່ທຳມະດາ.

ຕົວຢ່າງ: ການປ່ຽນແປງສຳນວນນຳໃຊ້ຢູ່ໃນຍົງເຂດສຳນວນວິຊາການ. ກ້າຜູ້ນຳໃຊ້ຢາກໃຫ້ການສະແດງບົດອອກແຕກຕ່າງຈາກກົດເກນເດີມ ຈະຕ້ອງໄດ້ປ່ຽນແປງມັນຢ່າງເຈດຕະນາ ດ້ວຍຫຼາຍເຫດຜົນ ທີ່ແຕກຕ່າງກັນເຊັ່ນໃນສອງປະໂຫຍກຕໍ່ໄປນີ້:

- ຂ້ອຍບໍ່ມີຄະແນນຈາກວິຊາໄວຍາກອນ ແລະ ມັນສ້າງຄວາມວິຕົກກັງວົນໃຫ້ແກ່ຂ້ອຍຫຼາຍ.
- ຂາດຄະແນນຈາກວິຊາໄວຍາກອນ ແລະ ມັນເຮັດໃຫ້ຂ້ອຍຕ້ອງໄດ້ເອົາໃຈໃສ່ຕື່ມ.

ຄວາມອາດສາມາດໃນການປ່ຽນແປງກົດເກນຂອງສຳນວນຊ່ວຍໃຫ້ພາຫະນະພາສາ ທີ່ຜູ້ເວົ້າ ຫ.ລື ຜູ້ຂຽນຢາກນຳໃຊ້ຢ່າງບໍ່ມີເງື່ອນໄຂໃນການສື່ສານ ບໍ່ສາມາດກະຕວງໄວ້ລ່ວງໜ້າ ຫຼືຄິດໄລ່ສິ່ງເສດເຫຼືອຕ່າງໆໄດ້. ຄວາມບໍ່ອາດສາມາດຄິດໄລ່ໃນການສື່ສານກໍລະນີນີ້ ເຮັດໃຫ້ເກີດຄວາມກົດດັນທີ່ແນ່ນອນໃດໜຶ່ງຢູ່ພາຍໃນຂອງການສື່ສານເອງ. ການສ້າງຄວາມກົດດັນແບບນີ້ແມ່ນຄວາມຮຽກຮ້ອງຕ້ອງການດ້ານໜ້າທີ່ຂອງການສື່ສານເນື້ອໃນຈາກຜູ້ສົ່ງໄປຫາຜູ້ຮັບ.

ກົດເກນຂອງສຳນວນສາມາດແບ່ງອອກເປັນສອງຢ່າງຄື

1. ກົດເກນຂອງສຳນວນແບບທົ່ວໄປ ແມ່ນ ຄົນທົ່ວໄປ ນຳໃຊ້ ໃນ ການ ສື່ ສານ ໃນ ຊີວິດ ປະຈຳ ວັນ

ຕົວຢ່າງ: ໃນແຕ່ລະຍົງເຂດການນຳໃຊ້ພາຫະນະພາສາມີສັນຍາລັກທີ່ມີລັກສະນະສະເພາະ ສຳລັບຍົງເຂດນັ້ນ. ບັນດາພາຫະນະພາສາທີ່ເປັນກາງຈະຖືກປັບປຸງຈົນກະທັ້ງໃຫ້ເຂົ້າກັບລະດັບທີ່ແນ່ນອນຊຶ່ງມີທັງຢູ່ໃນບົດວິຊາການ ແລະ ບັນດາຕົວຢ່າງຕ່າງໆທີ່ຖືກນຳໃຊ້ໃນດ້ານວິຊາການ.

2. ภົດເຫມາະຂອງສຳນວນແບບພິເສດ ລັກສະເພາະຂອງເຂດຫົວຂໍ້ເລື່ອງ

ຕົວຢ່າງ: ບັນດາພາຫະນະພາສາທີ່ແນ່ນອນ ຫລື ສະເພາະເຈາະຈົງ ກຶ່ງກຳຈັດອອກຈາກບາງຂົງເຂດ ຂອງສຳນວນ. ຢູ່ໃນພາສາເວົ້າບໍ່ຄ່ອຍນຳໃຊ້ບັນດາພາຫະນະພາສາທາງການ ຫຼື ຫຼ້າສະໄໝ, ນອກ ຈາກກໍລະນີທີ່ເວົ້າເຖິງວິຊາການດ້ານໃດໜຶ່ງ; ຢູ່ໃນຂົງເຂດວິຊາການບໍ່ມີສະຖານທີ່ສຳລັບພາຫະນະພາ ສາທີ່ມີລັກສະນະເນັ້ນໜັກທາງດ້ານອາລົມຈິດ ແລະອື່ນໆ.

<u>ຄຳຖາມ:</u>

1. ຈົ່ງອ່ານບັນດາປຶ້ມວັນນະຄະດີຕ່າງໆ ຂອງລາວ. ຫຼັງຈາກນັ້ນຈົ່ງສັງເກດເບິ່ງວ່າປຶ້ມວັນນະຄະດີ ເລື່ອງໃດ, ຂອງນັກປະພັນຜູ້ໃດ ເຫັນວ່າປາກົດມີອິດທິພົນຂອງຍຸກສະໄໝ ຫລື ແມ່ນສຳນວນສ່ວນ ຕົວຂອງນັກປະພັນ?

2. ຈົ່ງຂຽນກ່ຽວກັບເຫດການຈາກຄ້າຍພັກແລ້ງຂອງເຍົາວະຊົນ ຫຼື ກິດຈະກຳອັນໃດອັນໜຶ່ງ ທີ່ບັນດາ ນັກສຶກສາໄດ້ຮ່ວມກັນເຮັດ.
   - ຄືການເລົ່າເລື່ອງກ່ຽວກັບໝູ່ເພື່ອນ.
   - ຄືບົດລາຍງານໃຫ້ໃຜຜູ້ໜຶ່ງຮັບຮູ້.

   ຈົ່ງສັງເກດຢູ່ໃນການສື່ສານທັງສອງຢ່າງນີ້ແຕກຕ່າງກັນຢູ່ບ່ອນໃດ?

3. ຈົ່ງອ່ານຂໍ້ກຳນົດກົດລະບຽບຕ່າງໆກ່ຽວກັບການຮັບເງິນອຸດໜູນຢູ່ມະຫາວິທະຍາໄລ ຫຼື ຂໍ້ກຳນົດ ທົ່ວໄປຢູ່ໃນກົດຈະລາຈອນ ຫລື ພາກສ່ວນໃດກໍໄດ້.
- ຈົ່ງອະທິບາຍເປັນຫຍັງຢູ່ໃນການສື່ສານປະເພດນີ້ຈຶ່ງບໍ່ສາມາດນຳໃຊ້ສຳນວນສ່ວນຕົວໄດ້?

3. ພາສາລາວນຳໃຊ້ແມ່ນວິທະຍາສາດຂະແໜງໜຶ່ງ

ພາສາລາວນຳໃຊ້ແມ່ນວິທະຍາສາດຂະແໜງໜຶ່ງ ຊຶ່ງສຸມໃສ່ການຄົ້ນຄວ້າດ້ານສຳນວນພາສາ ຈາກທຸກໆການພົວພັນດັ່ງທີ່ໄດ້ລະບຸໄວ້ໃນພາກທີ່ຜ່ານມາ. ເນື້ອໃນຂອງວິຊາພາສາລາວນຳໃຊ້ສາມາດ ເຂົ້າໃຈຢ່າງກວ້າງຂວາງ; ໂດຍເຂົ້າໃຈສຳນວນຄືຫຼັກການລວມສູນຂອງໂຄງສ້າງການສື່ສານ, ຄືຈຸດ ລວມອັນໜຶ່ງໃນການສື່ສານ. ການສື່ສານກໍ່ວ່າແມ່ນຜົນສຳເລັດດ້ານອິດທິພົນຂອງຜູ້ສ້າງສຳນວນທີ່ ຖືກນຳໃຊ້ໃນເວລາສື່ສານກັນ ແລະ ບາງເທື່ອອາດກວມເອົາທັງການເລືອກເຟັ້ນພາຫະນະພາສາທີ່ສຳ ເລັດຮູບເຂົ້າໃນໂຄງສ້າງການສື່ສານ ເພື່ອກຽມພ້ອມຮັບໃຊ້ ຫລືນຳໄປສູ່ການດັດແປງບັນດາພາຫະນະ ຕ່າງໆຂອງພາສາ ເພື່ອຈຸດປະສົງຂອງການສື່ສານຕ່ໍໆໄປ ຫຼື ຊຸກຍູ້ໃຫ້ຜູ້ສົ່ງການສື່ສານສ້າງບັນດາພາ ຫະນະພາສາໃໝ່ຂຶ້ນ. ລັກສະນະສຳນວນພາສາກວມເອົາບ່ພຽງແຕ່ແບບວິທີການນຳໃຊ້ບັນດາພາຫະ ນະຕ່າງໆຂອງພາສາ, ແຕ່ຍັງແມ່ນປັດໃຈອື່ນໆທີ່ຖືກເຂົ້າຮ່ວມຢູ່ໃນໂຄງສ້າງຂອງການສື່ສານ. ສ່ວນ ອັນອື່ນໆ ກໍ່ວ່າແມ່ນພາຫະນະການປ່ຽນແປງຂອງພາສາ (ຈັງຫວະຂອງການເວົ້າ, ການເນັ້ນສຽງອັກ ຂະຫຼະ, ແບບຂອງຕົວໜັງສື, ສັນຍາລັກຂອງມັນ ແລະອື່ນໆ), ຫົວຂໍ້ຕ່າງໆ (ຕົວຢ່າງ: ສາຍເຫດຂອງ ຄວາມສົນໃຈສາມາດມີອິດທິພົນຕໍ່ເນື້ອໃນ ແລະ ແບບຂອງບັດອວຍພອນທີ່ພວກເຮົາຂຽນອວຍພອນໃຫ້ ແຕ່ລະຄົນໃນວັນປີໃໝ່), ກ່ຽວກັບບົດຕ່າງໆ (ຕົວຢ່າງ: ສະຖານະການຕ່າງໆທີ່ເກີດຂຶ້ນໃນປັດຈຸບັນ), ໂຄງປະກອບຂອງພາສາ (ຕົວຢ່າງ: ການຫຼຳຄົນ, ການເພີ່ມເຕີມ, ການເວົ້າໂຍກ, ການປ່ຽນຄວາມ ໝາຍ ແລະ ອື່ນໆ). ຈຸດພິເສດຂອງບັນດາພາຫະນະຕ່າງໆຂອງພາສາ, ຊຶ່ງນອກຈາກມັນມີໂຄງສ້າງ ການສື່ສານຄືກັນກັບຈຸດລວມອັນໜຶ່ງແລ້ວ, ບາງເທື່ອ ມັນຍັງຖືກກຳນົດຄືກັນກັບຮູບແບບຂອງບົດຫັດ ແຕ່ງ, ຄືກັນກັບໂຄງຮ່າງຂອງບົດຫັດແຕ່ງ, ຄືກັນກັບໂຄງຮ່າງຂອງສຳນວນ.

√ພາສາລາວນຳໃຊ້ແມ່ນຂະແໜງວິທະຍາສາດກ່ຽວກັບພາສາ, ພາສາສາດ. ຂະແໜງການຄົ້ນ ຄວ້າຂອງມັນແມ່ນການສະແດງອອກຂອງພາສາທຸກປະເພດ ຊຶ່ງປະກອບມີແບບຂອງການສົນທະນາ ທີ່ທຳມະດາ, ບັນດາບົດຕ່າງໆຢູ່ໃນໜັງສືພິມ, ການສະແດງອອກຂອງພາສາຢູ່ໃນວິທະຍຸກະຈາຍສຽງ ແລະ ຢູ່ໃນໂທລະພາບຈາກຂ່າວກ່ຽວກັບດິນຟ້າອາກາດຕະຫລອດເຖິງບັນດາການຫຼິ້ນ, ການສະແດງ ທີ່ມີການກະຈາຍສຽງອອກອາກາດ. ບັນດາບົດຂອງປຶ້ມແບບຮຽນ ແລະ ປຶ້ມວິຊາການຕ່າງໆ, ບັນດາ ບົດສົນທະນາ ແລະ ບົດປາໄສຕ່າງໆ, ບົດປາໄສທີ່ນຳມາໃຊ້ໃນທີ່ປະຊຸມ ແລະ ໃນເຫດສະການງານສະ ຫຼອງຕ່າງໆ, ບົດການກອນຕ່າງໆ, ບົດນິພົນ, ບົດລະຄອນ ແລະ ບົດອື່ນໆ.

ໂດຍອີງຕາມຂະແໜງການຄົ້ນຄວ້າ, ວິທີການ ແລະ ການຫັນທິດ, ພາສາລາວນຳໃຊ້ຖືກຈັດ ແບ່ງໜ້າທີ່ອອກເປັນດັ່ງນີ້.

ກ. ພາສາລາວນຳໃຊ້ແມ່ນສຸມໃສ່ການກະຈາຍສຳນວນ ແລະ ນຳໃຊ້ບັນດາພາຫະນະຕ່າງ ຂອງພາ ສາໃນລະດັບບົດໃນຂອບເຂດພາສາແຫ່ງຊາດຂອງຕົນ.

ຂ. ພາສາລາວນຳໃຊ້ແມ່ນປາກົດການຂອງສຳນວນທີ່ມີການສົມທຽບຄວາມດຸ່ນດ່ຽງ ໂດຍສະເພາະ ແມ່ນໃນອົງເຂດຂອງພາສາຕະກຸນດຽວກັນ ແລະ ພາສາຕ່າງຕະກຸນ.

ຄ. ປະຫວັດຂອງພາສາລາວນຳໃຊ້ສົນໃຈວິວັດທະນາການຂອງລະບົບສຳນວນ ແລະ ມາດຕະການຂອງ ສຳນວນຢູ່ໃນຂອບເຂດຂອງພາສາທີ່ກຳລັງໃຊ້ຢູ່.

๑. ພາສາລາວນຳໃຊ້ໃນປັດຈຸບັນຄົ້ນຄວ້າປາກົດການຂອງສຳນວນຢູ່ໃນຍຸກສະໄໝຂ້າມຜ່ານ.
๒. ພາສາລາວນຳໃຊ້ໂດຍທົ່ວໄປສຸມໃສ່ຫາດແທ້ຂອງຊະນິດ ແລະ ປາກົດການກ່ຽວກັບສຳນວນ, ສຸມໃສ່ການພົວພັນຂອງວິທະຍາສາດການນຳໃຊ້ພາສາກັບຂະແໜງການວິທະຍາສາດດ້ານອື່ນໆ.
ຕົວຢ່າງ: ກັບສັນທະສິນສາດຂອງວິທະຍາສາດດ້ານວັນນະຄະດີ, ກັບພາສາສາດດ້ານສັງຄົມ, ກັບພາສາສາດດ້ານຈິດຕະສາດ ແລະ ກັບພາສາສາດດ້ານຂະແໜງການອື່ນໆ.

ບັນດາພາທະນະຕ່າງໆຂອງພາສາທີ່ກຶກນຳໃຊ້ໃນຫຼາຍຮູບແບບທີ່ແຕກຕ່າງກັນໃນການສະແດງອອກຂອງພາສາແມ່ນຂະແໜງໜຶ່ງຈາກຂະແໜງວິທະຍາສາດອື່ນໆກ່ຽວກັບພາສາ. ພວກເຮົາສາມາດເຫັນສຽງອັກຂະຫຼະຂອງຄຳສັບຢູ່ໃນຄວາມແຕກຕ່າງດ້ານອັກຂະຫຼະໃນບັນດາກຸ່ມຄຳສັບຕ່າງໆ.
ຕົວຢ່າງ: ກະ<u>ภู</u>ม - ຕະ<u>ภู</u>ม
ปะ<u>เพ</u>ณี - ปะ<u>เอ</u>ณี

ພາສາລາວນຳໃຊ້ສຳຫຼວດເບິ່ງວ່າ ວິທີການສະແດງອອກທີ່ແຕກຕ່າງກັນດ້ານອັກຂະຫຼະນີ້ ກຶກນຳໃຊ້ເຂົ້າໃນການຈຳແນກຄວາມແຕກຕ່າງດ້ານສຳນວນຫຼືບໍ່. ສິ່ງທີ່ເປັນຄູ່ກັນຢູ່ໃນຮູບແບບຂອງບັນດາຄຳສັບ ຕົວຢ່າງ: ຄຶດ-ຄິດ, ເຊິ່ງ-ຊຶ່ງ, ຊ່ວຍ-ຊ່ອຍ; ວິທະຍາສາດການນຳໃຊ້ພາສາສົນໃຈ ກ້າວ່າ ໃນທີ່ນີ້ ການນຳໃຊ້ໜຶ່ງໃນສອງຮູບແບບນີ້ ນຳໄປເຖິງຄວາມແຕກຕ່າງດ້ານສຳນວນ ຢູ່ໃນກໍລະນີທີ່ແນ່ນອນໃດໜຶ່ງ. <u>ດ້ານວະກະຍະສຳພັນສຶກສາວ່າ</u> ພາກສ່ວນຂອງປະໂຫຍກສາມາດກຶກສະແດງອອກດ້ວຍປະໂຫຍກຕົ້ນຕໍພຽງປະໂຫຍກດຽວ ຫລື ປະໂຫຍກຕົ້ນຕໍກັບປະໂຫຍກສຳຮອງ. ພາສາລາວນຳໃຊ້ພະຍາຍາມໃຫ້ຄຳຕອບແກ່ຄຳຖາມທີ່ວ່າ ລະຫວ່າງບັນດາປະໂຫຍກດັ່ງກ່າວມີຄວາມແຕກ ຕ່າງກັນບາງຢ່າງທາງດ້ານສຳນວນ ຫຼື ບໍ່.

ຕົວຢ່າງ:
- ຝົນໄດ້ເລີ່ມຕົກຫຼັງຈາກການມາຮອດຂອງພວກເຮົາ.
- ໃນທັນທີທັນໃດທີ່ພວກເຮົາມາຮອດ ຝົນໄດ້ເລີ່ມຕົກ.
- ພໍ່ແຕ່ພວກເຮົາມາຮອດ ຝົນໄດ້ເລີ່ມຕົກ.
- ບ້ອຍວ່າພວກເຮົາມາຮອດ ຝົນໄດ້ເລີ່ມຕົກ.

ຢູ່ໃນການສຳພັນນີ້ຍັງສາມາດສັງເກດເຫັນໄດ້ອີກວ່າ ຢູ່ໃນຮູບແບບການສະແດງອອກໃດ ມັກປາກົດມີປະໂຫຍກດ່ຽວ ແລະ ຢູ່ໃນຮູບແບບການສະແດງອອກໃດ ມັກປາກົດມີປະໂຫຍກປະສົມຫຼາຍກວ່າ. ວິທະຍາສາດການນຳໃຊ້ພາສາໃນປັດຈຸບັນ ຍັງບໍ່ທັນພຸມໃຈເຕັມສ່ວນ ຕໍ່ການສຳຫຼວດໃນແຕ່ລະດ້ານ; ເພາະເຫັນວ່າຍັງມີອັນຂາດຕົກບົກຜ່ອງ ແລະ ຈະຕ້ອງໄດ້ສຶກສາຕໍ່ໄປເລື້ອຍໆ ຊຶ່ງຕົ້ນຕໍແມ່ນຢູ່ໃນບັນດາລະບົບຂອງພາສາ. ພ້ອມກັບນີ້ຍັງໄດ້ຄົ້ນຄວ້າເຖິງລະບົບຂອງບັນດາພາທະນະພາສາເວົ້າ ແລະ ພາທະນະທາງດ້ານວັດຈະນາຂອງພາສາຈາກທິດທາງດ້ານການນຳໃຊ້ພາສາ. ການຄົ້ນຄວ້າກ່ຽວກັບການນຳໃຊ້ພາສາບໍ່ສາມາດສຳເລັດດ້ວຍວິທີທີ່ງ່າຍດາຍພຽງແຕ່ປະໂຫຍກດຽວ; ແຕ່ວ່າຈະຕ້ອງໄດ້ສຸມໃສ່ຕະຫລອດເຖິງສິ່ງລວມທັງໝົດທີ່ຢູ່ເໜືອກວ່າປະໂຫຍກເຊັ່ນ ປົດ. ພ້ອມກັບນັ້ນ ຍັງຈະຕ້ອງໄດ້ສຶກສາທິດທາງຄວາມກ້າວໜ້າທີ່ລ້ຽງເລິກກ່ຽວກັບຫົວຂໍ້ຢູ່ໃນຮູບແບບທີ່ແນ່ນອນ ໃນການສະແດງອອກຂອງພາສາ ແລະ ແບບວິທີທີ່ຄວນນຳໃຊ້ໃນເວລາຈັດລຽງພາກສ່ວນປະກອບຂອງເນື້ອໃນຢູ່ໃນການສະແດງອອກທີ່ແຕກຕ່າງກັນ.

ຄຳຖາມ:

- ຈົ່ງສັງເກດສອງຕົວຢ່າງຕໍ່ໄປນີ້ວ່າ ເປັນຫຍັງຈຶ່ງປາກົດມີສຳນວນຕ່າງໆຄືແນວນີ້:

1. ໃນໂອກາດນີ້ ວັນນະສິນ ຂອບອົກຂອບໃຈ ມາຍັງເພື່ອນຮ່ວມງານທັງຫຼາຍ ກ່ອນອື່ນໝົດ ຂໍສົ່ງພອນໄຊແກ່ທ່ານຜູ້ນຳພັກ, ລັດ ຂອງພວກເຮົາ ຈົ່ງມີສຸຂະພາບແຂງແຮງ, ອາຍຸວັນນະຫັ້ນຍືນ ຄົງຢູ່ນຳປະເທດຊາດ, ອວຍພອນມາຍັງເພື່ອນຮ່ວມງານຜູ້ໄດ້ປະກອບສ່ວນບົດລົງພິມໃນວັນນະສິນ ແລະ ທັງຜູ້ພວມຈະປະກອບສ່ວນ ຈົ່ງປະສົບແຕ່ຄວາມສຸກກາຍສະບາຍໃຈ ສຳເລັດຄວາມມຸ່ງມາດ ປາດຖະໜາອັນສູງສົ່ງຂອງຕົນ ທີ່ແນໃສ່ປະກອບສ່ວນເຂົ້າໃນພາລະກິດການປ່ຽນແປງໃໝ່ຂອງພັກ ເທົ້ານ.

ຄະນະ ບ. ກ.

(ວັນນະສິນ, *ທັກທາຍປາໄສ*, ເມສາ, 1997, ໜ້າ 2)

2 ໂອກາດນີ້ພວກເຮົາຄະນະຮັບຜິດຊອບ ພ້ອມດ້ວຍອ້າຍເອື້ອຍນ້ອງພະນັກງານວິຊາການ ພາຍໃນກອງບັນນາທິການວາລະສານວັນນະສິນ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງມາຍັງພັກ-ລັດ ກໍຄືຄະນະນຳກະຊວງກະແຫຼງຂ່າວ ແລະ ວັດທະນະທຳທີ່ໄດ້ໃຫ້ການຊີ້ນຳຢ່າງໃກ້ຊິດຕະຫຼອດມາ, ຂອບໃຈນັກປະພັນ, ນັກກະວີ, ນັກຄົ້ນຄວ້າສິລະປະວັນນະຄະດີ ແລະ ນັກເຄື່ອນໄຫວວັດທະນະທຳ, ຂອບໃຈບັນດາຜູ້ອ່ານທີ່ໄດ້ໃຫ້ການສະໜັບສະໜູນວາລະສານຂອງພວກເຮົາຢ່າງເປັນປະຈຳ ແລະ ອົບອຸ່ນຕະຫຼອດມາ.

ຂອບໃຈ

ບກ

(ວັນນະສິນ, *ທັກທາຍປາໄສ*, ພະຈິກ, 1998, ໜ້າ 2)

4. ຈຸດປະສົງ, ວັດຖຸປະສົງ, ແລະ ວິທີການຄົ້ນຄວ້າ ແລະ ວິໄຈກ່ຽວກັບສຳນວນ

4.1 ຈຸດປະສົງຂອງການຄົ້ນຄວ້າກ່ຽວກັບສຳນວນ

ການຄົ້ນຄວ້າກ່ຽວກັບສຳນວນ ແລະການວິໄຈ ສາມາດກ່ຽວພັນເຖິງການສະແດງອອກທີ່ແນ່ນອນຢ່າງໃດຢ່າງໜຶ່ງ ຫຼື ການສະແດງອອກຂອງ(ແບບວິທີທີ່ຄືກັນ. ບາງຄັ້ງເວົ້າເຖິງການຄົ້ນຄວ້າການສະແດງອອກຂອງບັນດານັກປະພັນທີ່ຄືກັນ, ຢູ່ໃນບາງກໍລະນີແມ່ນເວົ້າເຖິງການສຶກສາການສະແດງອອກຂອງປົດຫັດແຕ່ງທີ່ຄືກັນ.. ໃນບາງໂອກາດອື່ນໆພັດເວົ້າເຖິງການຄົ້ນຄວ້າການສະແດງອອກທາງດ້ານປົດກາບກອບຂອງໂຮງຮຽນ ຫຼື ຍຸກສະໄໝທີ່ແນ່ນອນໃດໜຶ່ງ.

ຈຸດປະສົງຂອງການຄົ້ນຄວ້າສາມາດມີການສົມທຽບຢ່າງກວ້າງຂວາງ, ສາມາດມີການຊັ່ງຊາຕີລາຄາປາກົດການກ່ຽວກັບສຳນວນທີ່ຄືກັນຢູ່ນຳບັນດານັກປະພັນທີ່ຕ່າງກັນ, ຢູ່ໃນຍຸກສະໄໝທີ່ແຕກຕ່າງກັນແລະອື່ນໆ. ມັນບໍ່ອະນຸຍາດໃຫ້ມອງຂ້າມເຖິງສິ່ງທີ່ວ່າສຳນວນປ່ຽນແປງໄປເລື້ອຍໆຕາມວິວັດທະນາການຂອງເວລາ. ຢູ່ໃນທີ່ນີ້ອາດຈະສຸມໃສ່ຈຸດພິເສດຂອງສຳນວນໜັງສືພິມໃນສະໄໝການຟື້ນຟູຊາດ (ສະໄໝຫລັງການສະຖາປະນາ1975) ແລະ ໃນປັດຈຸບັນ; ຄົ້ນຄວ້າກ່ຽວກັບສຳນວນການຫຼິ້ນ, ການສະແດງທີ່ເກົ່າແກ ທີ່ສົ່ງຜ່ານທາງວິທະຍຸກະຈາຍສຽງ, ໂທລະພາບ ແລະອື່ນໆ.

ການຄົ້ນຄວ້າສາມາດສ່ອງແສງເຖິງລະບົບທັງໝົດຂອງບັນດາພາຫະນະພາສາ ຫຼື ພຽງແຕ່ບາງຂົງເຂດກໍໄດ້. ໃນການນຳໃຊ້ພາສາ ສາມາດກວດສອບບັນດາປົດລະຄອນໃນປັດຈຸບັນ, ແຕ່ວ່າໃນການຄົ້ນຄວ້າຈະຕ້ອງໜູນໃຊ້ ແລະ ເອົາໃຈໃສ່ແບບຂອງຄຳກຳ. ພາກສ່ວນຂອງພາສາລາວທົ່ວໄປຈະຊ່ວຍໃຫ້ເຫັນແຈ້ງຄວາມແຕກຕ່າງດ້ານສຳນວນ ໃນການສະແດງພາສາອອກ ຂອງນັກຂຽນປົດລະຄອນແຕ່ລະຄົນ ແລະ ຜູ້ອື່ນໆ. ໃນບາງໂອກາດອາດຈະກວດກາເບິ່ງວຽກບ້ານ ຫຼື ປົດຝຶກຫັດກ່ຽວກັບສຳນວນຂອງນັກສຶກສາຢູ່ໃນທົ່ວທຸກຂົງເຂດ ຫຼື ອາດຈະກຳນົດຈຸດປະສົງຂອງການຄົ້ນຄວ້າໃຫ້ຮັບປະກັນສະເພາະໃນຂົງເຂດໃດໜຶ່ງກໍໄດ້. ຄ້າຍຄືກັນນີ້ ສາມາດຄົ້ນຄວ້າກ່ຽວກັບຈຸດພິເສດດ້ານສຳນວນຂອງປົດສົນທະນາທີ່ທຳມະດາໃນສະໄໝປັດຈຸບັນ; ຫຼືກຳນົດເອົາຂອບເຂດຄຳເວົ້າທີ່ມີການພົວພັນເຖິງສັນຍາລັກກ່ຽວກັບສຳນວນສ່ວນຕົວຂອງເພື່ອນບາງຄົນ ຫຼືຜູ້ເວົ້າທົ່ວໄປທີ່ພວກເຮົາພົບເຫັນໃນແຕ່ລະວັນ.

4. 2 ວັດຖຸປະສົງຂອງການວິໄຈກ່ຽວກັບສຳນວນ

ວັດຖຸປະສົງຂອງການວິໄຈກ່ຽວກັບສຳນວນ ສາມາດເປັນການສະແດງອອກທີ່ສົມບູນທາງດ້ານເນື້ອໃນໃຈຄວາມທີ່ກວ້າງຂວາງອັນໃດກໍໄດ້. ສາມາດເວົ້າກ່ຽວກັບການແນະນຳວິທີນຳໃຊ້ເຄື່ອງຫຼິ້ນທີ່ອັດຕະໂນມັດໃດໜຶ່ງ ຫຼືກ່ຽວກັບປົດຂຽນດ້ານສຳນວນຂອງນັກສຶກສາ ໂດຍສາມາດກຳນົດເອົາສຳນວນສ່ວນຕົວຂອງເຂົາໃນການສະແດງພາສາອອກຢ່າງໃດກໍໄດ້. ຄຳເຫັນນີ້ ມີການນຳໃຊ້ໂດຍທົ່ວໄປຊຶ່ງການວິໄຈກ່ຽວກັບສຳນວນສາມາດເປັນໄປໄດ້ ທັງປະໂຫຍກທີ່ກືກສະແດງອອກດ້ວຍໜຶ່ງຄຳສັບເຊັ່ນ **"ເຊີນ!"**. ຊຶ່ງແມ່ນອາຈານເວົ້າກັບນັກສຶກສາທີ່ມາເຂົ້າຫ້ອງຊ້າ ແລະ ຂໍອະນຸຍາດຈາກອາຈານເພື່ອເຂົ້າຫ້ອງ; ແລະ ສຳນວນສ່ວນຕົວອື່ນໆຂອງເຂົາ ທີ່ສາມາດສະແດງອອກດ້ວຍປະໂຫຍກອື່ນໆ ທີ່ມີຄວາມໝາຍຄືກັນກັບທີ່ອາຈານເຄີຍໃຊ້ກັບນັກສຶກສາ.

ຕົວຢ່າງ: ເຂົ້າມາໄດ້, ເຂົ້າມາໂລດ, ເຊີນຕາມສະບາຍ, ເຊີນເຂົ້າມາ ແລະ ອື່ນໆ. ໃນການສົມທຽບໃສ່ໜ້າຍໆປະໂຫຍກໃນທີ່ນີ້ ຄວາມນິຍົມໃຊ້ແຕ່ລະປະໂຫຍກ ແມ່ນແຕກຕ່າງກັນ, ມັນຂຶ້ນກັບບັນຫາທີ່ວ່າ

ອາລົມຂອງອາຈານໃນຂະນະນັ້ນເປັນແນວໃດ ແລະ ຄວາມຊຶນເຄີຍຂອງເຂົາກັງກັບປະໂຫຍກໃດຫຼາຍກວ່າ. ແຕ່ຄວາມເປັນຈິງດັ່ງກ່າວນັ້ນ ດ້ານທິດສະດີຂອງການນຳໃຊ້ພາສາບໍ່ສົນໃຈຫຼາຍພໍເທົ່າໃດ; ແຕ ພັດມີຈຸດຢືນຢູ່ບ່ອນທີ່ວ່າ ການສະແດງອອກທີ່ມີເນື້ອໃນກະທັດຮັດທີ່ສຸດ ສາມາດໃຫ້ລາຍລະອຽດແກ່ ການວິໃຈ ແລະ ສາມາດອະທິບາຍຄຸນລັກສະນະຕ່າງໆຂອງມັນໄດ້.

4. 3 ວິທີການຄົ້ນຄວ້າ ແລະ ວິໃຈກ່ຽວກັບສຳນວນ

ວິທີການຄົ້ນຄວ້າ ແລະວິໃຈກ່ຽວກັບສຳນວນ ພວກເຮົາສາມາດແບ່ງອອກເປັນສອງວິທີ ຄື ວິທີປະເພນີ ແລະ ວິທີທັນສະໄໝ.

1. ວິທີປະເພນີ

ວິທີປະເພນີນຳໃຊ້ໄດ້ດີພໍເສດໃນການຄົ້ນຄວ້າການສະແດງອອກດ້ານສິລະປະ ທີ່ຖືກເຂົ້າໃຈວ່າ ຄວາມຮັກຄືອຳນາດຂອງທຸກສິ່ງຢ່າງ. ຕໍ່ຄວາມເຂົ້າໃຈຄືແນວນີ້ ນັກຄົ້ນຄວ້າສະແດງປະສົບປະການ ແລະຄວາມສົນໃຈດ້ານວິໄສທັດຂອງຕົນເອງອອກມາໃຫ້ເຫັນ ຈົນກະທັ້ງຄວາມໃນດ້ານຄວາມອາດສາ ມາດ ຊຶ່ງເໝືອນກັນກັບໃນກໍລະນີທີ່ ພາສາຄຶກການເລືອກເຟັ້ນທີ່ມີໄວ້ສຳລັບການສະແດງອອກຕໍ່ໆໄປ.. ໃນເງື່ອນໄຂນີ້ ໄດ້ຄົ້ນພົບຄຸນຄ່າຂອງສຳນວນຂອງການສະແດງອອກວ່າແມ່ນການຮັບຮູ້ທີ່ມີຈິດສຳນຶກ, ມັນກວດສອບໜ້າທີ່ຂອງບັນດາພາຫະນະພາສາທີ່ຖືກຄັດເລືອກ, ພ້ອມທັງຄວາມເໝາະສົມ ແລະ ຄວາມດຸ່ນດ່ຽງຂອງພວກມັນ. ວິທີທາງເພື່ອເຂົ້າເຖິງລະດັບທີ່ແນ່ນອນດ້ານວິໄສທັດທີ່ອາດເປັນໄປໄດ້ ຂອງຕົນ, ຜູ້ນຳໃຊ້ຈະຕ້ອງໄດ້ເຄົ້າລົບລັກສະນະຂອງສຳນວນ, ວັດຈະນານຸກົມ ແລະໄວຍາກອນ.. ບາງເທື່ອບັນດາຄູອາຈານຖືກແນະນຳໃຫ້ຮູ້ພຽງແຕ່ຄືກັນກັບຢູ່ໃນວັດຈະນານຸກົມ, ແລະເຖິງແມ່ນວ່າ ບໍ່ໄດ້ນຳເອົາການຄົ້ນຄວ້າຕົວຈິງກ່ຽວກັບສຳນວນຂຶ້ນມາວິໃຈ, ແຕ່ຫາກ ພຽງແຕ່ ແປງບົດຂຽນກ່ຽວ ກັບສຳນວນຂອງນັກສຶກສາ ກໍຖືວ່າ ໃນຂະນະນັ້ນໄດ້ນຳເອົາການວິໃຈທີ່ສັ້ນໆ ຂອງການສະແດງອອກ ດ້ານສຳນວນຂອງນັກສຶກສາຂຶ້ນມາວິໃຈແລ້ວ.

ຖ້າວ່າແມ່ນຂະແໜງການຄົ້ນຄວ້າຜົນງານດ້ານສິລະປະ ນັກຄົ້ນຄວ້າຈະຕ້ອງໄດ້ສຸມໃສ່ທັງອຳ ນາດແຫ່ງຄວາມຮັກຂອງຕົນເອງ, ຖ້າວ່າຄົ້ນຄວ້າບົດທີ່ເກີດຂຶ້ນໃນອະດີດ ຈຳຕ້ອງຮູ້ທັງກົດເກນກ່ຽວ ກັບບັນຫາຂອງຍຸກສະໄໝອີກດ້ວຍ; ເພື່ອຕີລາຄາຄວາມແຕກຕ່າງຈາກເດີມດ້ວຍເງື່ອນໄຂສະເພາະ ໃຜຂອງມັນ ຈຳຕ້ອງໄດ້ຮັບຮູ້ແມ້ກະທັ້ງ ກົດເກນແຫ່ງຄວາມຮັກ ແລະກົດເກນການນຳໃຊ້ສຳນວນ ຕ່າງໆຂອງຍຸກສະໄໝ.

ໃນກໍລະນີທີ່ນັກຄົ້ນຄວ້າໄດ້ຄົ້ນຄວ້າການສະແດງອອກຂອງວິຊາການດ້ານໃດໜຶ່ງ ຈະຕ້ອງມີ ຄວາມກະຈ່າງແຈ້ງຕາມການສະແດງອອກທີ່ເໝາະສົມກັບປະກົມປັດໃຈໃນຄວາມຊັດເຈນ, ໃນຄວາມ ໝາຍດຽວ, ໃນຄວາມກະຈ່າງແຈ້ງ ແລະ ໃນຄວາມເຂົ້າໃຈການສື່ສານສະເພາະບັນຫານັ້ນໆ.. ຖ້າສຸມ ການຄົ້ນຄວ້າໃສ່ການສະແດງອອກທາງໜັງສືພິມ ບໍ່ສາມາດມຽງຂ້າມປະສິດທິຜົນທີ່ຄ້າຍຄື ກັນຂອງ ມັນທັງສອງດ້ານ ເຊັ່ນ ລະຫວ່າງຕໍ່ຜູ້ຟັງ ແລະ ຕໍ່ຜູ້ອ່ານໄດ້.

ເປັນທີ່ແນ່ນອນແລ້ວວ່າ ໃນການນຳໃຊ້ວິທີປະເພນີນີ້ ນັກວິທະຍາສາດຕ້ອງເປັນຜູ້ຕີລາຄາ ທີ່ມີ ຄວາມຊຳນິຊຳນານໃນການສະແດງອອກທີ່ຜ່ານການຄົ້ນຄວ້າມາແລ້ວ; ແຕ່ບໍ່ໝາຍຄວາມວ່າ ທັດສະ ນະນີ້ເຂົາຖືກສະກັດກັ້ນ. ກົງກັນຂ້າມບັນດາຄຳຄິດຄຳເຫັນຕ່າງໆຂອງເຂົາ ຈະເປັນຫຼັກ ການອ້າງອີງ ທີ່ສຳຄັນໃຫ້ແກ່ບົດຕົວຢ່າງ, ມັນຈັດການການບັນທຶກກ່ຽວກັບຄວາມກ້ຽວຂອງປາກົດການ ທີ່ໄດ້ຕິດຕາມ

ແລ້ວນຳມາພິຈາລະນາກັບການສະແດງອອກອື່ນໆ ທີ່ຢູ່ໃນລັກສະນະດຽວກັນ ເພື່ອຕີລາຄາຄວາມສຳເລັດຄັ້ງສຸດທ້າຍ ຂອງເຂົ້າໃສ່ຜົນງານຂອງນັກວິທະຍາສາດຫຼາຍໆຄົນ ທີ່ໄດ້ປະສົບຄວາມສຳເລັດໃນດ້ານນີ້.

[vi] [thi:] [than] [sa] [mai].

2. ວິທີທັນສະໄໝ

ວິທີທັນສະໄໝນຳມາໃຊ້ ເພື່ອກວດສອບບັນດາພາກສ່ວນປະກອບຂອງສຳນວນ ໃນການທົດລອງທີ່ງ່າຍດາຍ; ຊຶ່ງຂຶ້ນກັບການປ່ຽນແທນ (ປ່ຽນແທນສຳນວນ, ປ່ຽນແທນຮູບແບບ) ຂອງບັນດາພາທະນະພາສາທີ່ຖືກນຳໃຊ້ຢູ່ ດ້ວຍພາທະນະອື່ນໆ ທີ່ພະຍາຍາມປັບປຸງຄຸນຄ່າສຳນວນຂອງພາທະນະພາສາໃຫ້ດີຂຶ້ນກວ່າເກົ່າ; ແຕ່ຍັງຄົງຮັກສາເນື້ອໃນໃຈຄວາມເດີມ. ການປ່ຽນແທນສຳນວນ ແລະຮູບແບບນີ້ ບາງເທື່ອຖືກເວົ້າເຖິງວິທີຂອງການປ່ຽນແທນຮູບແບບ ແລະ ບາງເທື່ອຖືກໃຫ້ໂອກາດຕໍ່ຄວາມເປັນຈິງທີ່ວ່າ ພາທະນະພາສາທີ່ແນ່ນອນ ເຮັດໃຫ້ສຳນວນສະແດງອອກ ທີ່ຖືກປ່ຽນແທນຈະແຈ້ງກວ່າເກົ່າ ແລະແທດເໝາະກວ່າເກົ່າ.

ຕົວຢ່າງ: ສຳນວນເດີມ "ຕາຍ" ແລະ ສຳນວນ "ປະລິນິບພານ, ນິບພານ, ມໍລະນະພາບ, ເຖິງແກ່ອະສັນຍະກຳ, ເຖິງແກ່ກຳ, ມໍລະນະກຳ, ລ່ວງລັບ, ເສຍ, ເສຍຊີວິດ, ເສຍສະຫຼະ, ເສຍສະຫຼະຊີວິດ, ຢຽດ, ເສັດ, ມັບ, ແຈບ..." ແມ່ນສຳນວນທີ່ສາມາດເອົາມາປ່ຽນແທນ ໂດຍອີງຕາມເນື້ອໃນຂອງແຕ່ລະປະໂຫຍກ ຫຼືບົດ.

ວິທີປ່ຽນສຳນວນແມ່ນອາດຈະໝູນໃຊ້ໄດ້ດີ ໃນກໍລະນີທີ່ເວົ້າເຖິງການອະທິບາຍຄຸນຄ່າດ້ານສຳນວນຂອງພາທະນະພາສາທີ່ແນ່ນອນໃນບົດສົນທະນາທີ່ສັ້ນໆໃດໜຶ່ງ. ໂດຍສະເພາະຢູ່ໃນການສະແດງອອກທີ່ທຳມະດາດ້ວຍການເຮັດໃຫ້ສິ່ງທີ່ຖືກສະແດງອອກນັ້ນເຂົ້າອົກເຂົ້າໃຈໄດ້ດີກວ່າເກົ່າ. ຢູ່ໃນໂຮງຮຽນ ອາດນຳໃຊ້ວິທີວິໄຈສຳນວນນີ້ ແບບພິເສດ, ໂດຍຜູ້ສອນເປັນຜູ້ນຳພານັກສຶກສາເພື່ອໃຫ້ເຂົາເຈົ້າທົດລອງສະແດງສຳນວນໃດໜຶ່ງອອກດ້ວຍຕົວຂອງເຂົາເຈົ້າເອງ ຊຶ່ງເຂົາເຈົ້າສາມາດເລືອກເຟັ້ນບັນດາພາທະນະພາສາໄດ້ຕາມໃຈ; ຫຼື ອາດຈະນຳພາເຂົາເຈົ້າວິໄຈສຳນວນໃນຕອນໜຶ່ງ, ບົດໜຶ່ງ ຫຼື ເລື່ອງໜຶ່ງໃນບົດທີ່ກ່ຽວກັບງານດ້ານວັນນະຄະດີ. ໃນກໍລະນີນີ້ ກ້າລັກສະນະສະເພາະຂອງສຳນວນໃດໜຶ່ງຖືກກຳນົດໄວ້ໃນທ່ວຕາໜ່າງຂອງຄວາມເປັນຈິງໃນດ້ານໃດດ້ານໜຶ່ງ, ປາກົດການນຳໃຊ້ວິທີການປ່ຽນແທນນີ້ເຫັນວ່າບໍ່ເໝາະສົມ.

ການອ້າງອີງສະກິຕິ ໃສ່ທີ່ມາຕາມຕົວເລກທີ່ແນ່ນອນໃນການຊອກຫາສາເຫດ ຂອງການປ່ຽນແທນແມ່ນຄວາມສຳຄັນທີ່ຄວນຮັບຮູ້ ຊຶ່ງອາດເປັນໄປໄດ້ໃນການສ້າງຄຸນະພາບ ຂອງສຳນວນການສະແດງອອກຕໍ່ໆໄປ.

ຕົວຢ່າງ: ອາດຈະສຳຫຼວດເບິ່ງວ່າ ຄຳສັບຖືກຫຼ້ຳຄືນເລື້ອຍໆບໍ ໃນການສະແດງອອກຕໍ່ໆໄປ.. ສຳຫຼວດເບິ່ງຈຳນວນທັງໝົດຂອງບັນດາຄຳສັບທີ່ຖືກນຳໃຊ້ ແລະ ຄຽງຄູ່ກັນນັ້ນກໍສຳຫຼວດຈຳນວນຄຳສັບທີ່ແຕກຕ່າງກັນໄປພ້ອມ. ສາຍພົວພັນລະຫວ່າງຄວາມຖີ່ຂອງຄຳສັບ ທີ່ນຳໃຊ້ທັງໝົດ ແລະ ຄວາມຖີ່ຂອງການນຳໃຊ້ຄຳສັບທີ່ແຕກຕ່າງກັນເອີ້ນວ່າ ຕົວເລກຂອງການຫຼ້ຳຄືນ. ຕົວເລກນີ້ຈະເປັນສິ່ງຊີ້ໃຫ້ເຫັນເຖິງລະດັບທີ່ແນ່ນອນໃດໜຶ່ງດ້ານຄວາມອຸດົມສົມບູນຂອງວັດຈະນານຸກົມ ຊຶ່ງແມ່ນໜຶ່ງໃນບັນດາປັດໄຈທີ່ສຳຄັນຊຶ່ງຮູ້ກວ່າ: ຈຸດເດັ່ນຂອງສຳນວນ. ສຳລັບໂຄງສ້າງຂອງບົດ ແມ່ນການເຂົ້າຮ່ວມທີ່ສຳຄັນຂອງບັນດາປະເພດຄຳເວົ້າ.

ຕົວຢ່າງ: ປະເພດຄຳຕໍ່; ຊຶ່ງການເຂົ້າຮ່ວມຂອງພວກມັນກຶກສະແດງອອກດ້ວຍການປ່ຽນພັນຂອງບັນດາ ຄຳສັບຈຳພວກຄຳນາມ, ຄຳຄຸນນາມ, ຄຳກຳມະ, ຄຳກຳມະວິເສດ ແລະ ຄຳອຸທານ.

ສະກຶຕິຂອງການຄົ້ນຄວ້າ ແນ່ນອນວ່າກຶກຢູ່ໃຕ້ອຳນາດ ທັງທີ່ມາອື່ນໆ ຊຶ່ງນອກຈາກບັນດາ ປະເພດຄຳສັບທີ່ສະໄດ້ເໜີມາ. ດັ່ງນັ້ນ ສາມາດຕີລາຄາຄວາມເໝາະສົມຂອງບັນດາຄຳສັບທີ່ກຶກນຳ ໃຊ້ ສຳລັບລະດັບຂອງສຳນວນທີ່ແນ່ນອນໃດໜຶ່ງໄດ້ທັງດ້ວຍການວັດແທກຄວາມຍາວຂອງຄຳສັບ. ດ້ວຍວິ ທີດຽວກັນນີ້ ກໍອາດສາມາດວັດແທກຄວາມຍາວຂອງປະໂຫຍກ, ບົດ ແລະ ອື່ນໆໄດ້ອີກດ້ວຍ.. ດ້ວຍ ເຫດຜົນທີ່ໄດ້ສະເໜີມາ ພວກເຮົາສາມາດນຳໃຊ້ຄຳສັບໄດ້ຢ່າງຮອບຄອບ ແລະ ມີປະສິດທິຜົນ.

ບັນດາຜູ້ໃຊ້ສຳນວນມີສະຕິດີຕໍ່ອຸປະສັກຂອງພວກເຂົາ ຊຶ່ງພວກເຂົາອາ ,ຈະຜ່ານຜ່າມັນໄປໄດ້ ໂດຍດີກ້າຫາກພວກເຂົາມີຄວາມພະຍາຍາມ. ໜາກຜົນຂອງການຄົ້ນຄວ້າທີ່ໄດ້ນຳສະເໜີມາ ໄດ້ນຳ ຄຸນຄ່າອັນສູງສົ່ງມາສູ່ການຄົ້ນຄວ້າດ້ານສຳນວນ ເຖິງແມ່ນວ່າພາກສ່ວນຂອງຜົນສຳເລັດຂອງວິທີນີ້ ໄດ້ກຶກເວົ້າເຖິງໜ້ອຍທີ່ສຸດກໍຕາມ.

ວິທີທາງດ້ານສະກຶຕິ ຈະນຳເອົາໜາກຜົນຄວາມສຳເລັດອັນໃຫຍ່ຫຼວງທີ່ສຸດ ມາສູ່ນັກຄົ້ນຄວ້າ ກ້າຫາກວ່າພວກເຂົາຮູ້ຈັກສົມທົບວິທີທາງນີ້ກັບທຸກເຫດຜົນອື່ນໆຢ່າງຄົບກ້ວນ ແລະ ຕີລາຄາວິທີ ທາງນີ້ຄືກັນກັບເບື້ອງຫຼັງຂອງຄວາມສຳເລັດຂອງບົດ ແລະ ນຳໃຊ້ມັນຄືກັນກັບສັນຍານທີ່ສາມາດ ວັດແທກເສັ້ນທາງໄປສູ່ການວິໄຈໃນຄັ້ງຕໍ່ໆໄປ.

<u>ຄຳຖາມ</u>:

1. ຈົ່ງນຳເອົາບົດປະພັນວັນນະຄະດີລາວເລື່ອງໃດເລື່ອງໜຶ່ງມາວິໄຈດ້ານປະລິມານຂອງສຳນວນ.

5. ປັນດາຜູ້ສ້າງສຳນວນ

ຜູ້ສ້າງສຳນວນແມ່ນ ຜູ້ເຮັດຕົວຈິງ ທີ່ມີອິດທິພົນໃນການເລືອກເຟັ້ນ ບັນດາພາຫະນະພາສາ ດ້ວຍທຸກວິທີທາງ ໃນການເກີດຂຶ້ນຂອງການສະແດງອອກດ້ານພາສາ ທີ່ມີການພົວພັນຊຶ່ງກັນແລະ ກັນ. ຜູ້ເຮັດຕົວຈິງນີ້ບໍ່ສາມາດຄົງຕົວຢູ່ຜູ້ດຽວໄດ້; ຕາມທຳມະດາແລ້ວ ອິດທິພົນຂອງເຂົາກໍ່ກຳນົດໃຊ້ ໃນທົ່ວບັນດາຄະນະຜູ້ສ້າງສຳນວນຕົວຈິງ. ບັນດາຜູ້ສ້າງສຳນວນທີ່ມີຄວາມສຳພັນຢ່າງແໜ້ນແຟ້ນ ກັບບົດການສະແດງອອກ, ຮຽກວ່າບັນດາຜູ້ສ້າງສຳນວນແບບອັດຕະວິໄສ. ສ່ວນບັນດາຜູ້ສ້າງສຳນວນ ທີ່ບໍ່ມີຄວາມສຳພັນຢ່າງແໜ້ນແຟ້ນກັບບົດ ຮຽກວ່າບັນດາຜູ້ສ້າງສຳນວນແບບພາວະວິໄສ.

5.1 ບັນດາຜູ້ສ້າງສຳນວນແບບອັດຕະວິໄສ

ລະບົບຄ່ຽງພາສາທີ່ໄດ້ມາດຕະການ ແມ່ນປະກົມປັດໄຈທີ່ສອດຄ່ອງກັບຕົວຈິງຂອງການສະແດງ ອອກທີ່ດີ. ຄວາມຮູ້ດ້ານພາສາ ແລະ ຄວາມອາດສາມາດໃນການສະແດງອອກຂອງຜູ້ສ້າງສຳນວນ ແບບອັດຕະວິໄສແມ່ນສຳຄັນທີ່ສຸດ. ມັນຈະບໍ່ສິ້ນສຸດພຽງແຕ່ການຮັບຮູ້ດ້ານຫຼັກໄວຍາກອນເທົ່ານັ້ນ, ແຕ່ຍັງບໍ່ສາມາດປາສະຈາກຄວາມຮູ້ດ້ານປະມວນວັດຈະນາ, ຈົນກະທັ້ງການສົ່ງເກດວ່າ ເມື່ອໃດພາ ຫະນະພາສາໃດຖືກໝູນໃຊ້ໄດ້ຢ່າງເໝາະສົມ ແລະ ເມື່ອໃດຈະມີການໝູນໃຊ້ປະກົມປັດໄຈຂອງພາສາ ຢ່າງມີປະສິດທິຜົນ. ຄວາມຮັບຮູ້ທີ່ດີດ້ານລະບົບພາສາຢູ່ໃນທຸກລະດັບຂອງມັນຈະຊ່ວຍໃຫ້ຜູ້ນຳໃຊ້ສາ ມາດກຳຈັດກະທັ້ງຄວາມລົ້ງເຄີຍໝູນໃຊ້ພາຫະນະພາສາແບບທົ່ວໆໄປ ຫຼື ພາສາທ້ອງຖິ່ນໃນສະຖາ ນະການທີ່ບໍ່ເໝາະສົມອອກ.

ຄວາມຮູ້ດ້ານວັດຖຸຕົວຈິງທີ່ຜູ້ນຳໃຊ້ພາສາສະແດງອອກ ແມ່ນຄຳຖາມຂອງຄວາມເປັນຈິງດ້ານ ການສື່ສານ, ແຕ່ວ່າມັນຮັບປະກັນຄຸນະພາບຂອງການສະແດງອອກດ້ານສຳນວນທີ່ດີ ແລະ ແມ່ນ ສິ່ງທີ່ສຳຄັນທີ່ສຸດອີກດ້ານໜຶ່ງ. ພຽງແຕ່ກ່ຽວກັບຂົງເຂດທີ່ຜູ້ເວົ້າ ຫຼື ຜູ້ຂຽນຮູ້ຈັກດີ, ກໍ່ສາມາດສະແດງ ບົດພາສາອອກມາໄດ້ຢ່າງເຂົ້າໃຈ, ຊັດເຈນ, ຈະແຈ້ງ ແລະ ສຽບແຫຼມ. ດັ່ງໃນຕົວຢ່າງຂອງ ບັນດາ ນັກປະພັນທີ່ບຸກເບີກເສັ້ນທາງເຂົ້າສູ່ເປົ້າໝາຍທີ່ຕ້ອງການຂຽນເຖິງ ເຊິ່ງພວກເຂົາອາດ ດຳລົງຊີວິດ ຢ່າງໜ້ອຍ ໃນສະໄໝໃດສະໄໝໜຶ່ງໃນສະພາບແວດລ້ອມທີ່ພວກເຂົາເລືອກເອົາເປັນຈຸດລິເລີ່ມ ສຳລັບ ຜົນງານຂອງພວກເຂົາ. ສຳລັບຄູອາຈານແມ່ນຜູ້ທີ່ມີຄວາມຮູ້ດ້ານພາສາ ແລະ ຄວາມ ອາດສາມາດ ໃນການສະແດງອອກຂອງພວກເຂົາ, ປະກອບກັບຄວາມຮູ້ດ້ານວັດຖຸຕົວຈິງ ເພື່ອສົນທະນາກ່ຽວກັບບັນ ຫາຕ່າງໆໂດຍພື້ນຖານປະສິດທິຜົນທີ່ແນ່ນອນ. ຄວາມພ້ອມໃນການສະແດງອອກແມ່ນພອນ ສະຫວັນທີ່ແຕ່ລະຄົນມີຢູ່ໃນລະດັບທີ່ແນ່ນອນໃດໜຶ່ງ.

ການອ່ານມີຄວາມໝາຍສຳຄັນ ແລະ ມີອິດທິພົນໃຫຍ່ຫຼວງຕໍ່ຜູ້ສ້າງສຳນວນແບບອັດຕະວິໄສ. ການອ່ານຊ່ວຍຂະຫຍາຍປະມວນວັດຈະນາ, ມີຄຸນຄ່າສູງ; ການອ່ານຊ່ວຍໃຫ້ຂະຫຍາຍຄວາມອາດສາ ມາດໃນການປັບປຸງສຳນວນໃຫ້ດີຂຶ້ນ ເພາະວ່າໂຄງສ້າງປະໂຫຍກ ກັບ ການສື່ສານຄວາມສຳນຶກ ດ້ານພາສາຂອງຄົນເຮົາມີການປ່ຽນແປງໄປຢ່າງບໍ່ຢຸດຢັ້ງ.

ສະພາບຈິດໃຈ ຫຼື ອາລົມໃນຊົ່ວວູບເຮັດໜ້າທີ່ແນ່ນອນຕໍ່ຜູ້ສ້າງສຳນວນແບບອັດຕະວິໄສ ໂດຍສະ ເພາະ ໃນຂະນະທີ່ຜູ້ເວົ້າສະແດງບົດອອກດ້ວຍການເວົ້າໂດຍທີ່ບໍ່ໄດ້ກະກຽມ.

ອົງປະກອບດ້ານສັງຄົມ, ອາຊີບ, ສະພາບແວດລ້ອມ ທີ່ຜູ້ເວົ້າ ຫຼື ຜູ້ຂຽນສັງກັດຢູ່ ນັບທັງອາຍຸ ກະສຽນຂອງເຂົາມີອິດທິພົນຕໍ່ແບບວິທີທີ່ກຶ່ງສະແດງອອກ. ທາດແທ້ທາງດ້ານນິໄສ ແລະ ທ່າອ່ຽງສ່ວນ

ຕົວຂອງຜູ້ສະແດງປົດອອກມີອິດທິພົນຢ່າງໃຫຍ່ຫຼວງຕໍ່ຜູ້ສ້າງສຳນວນແບບອັດຕະວິໄສ. ຢູ່ໃນຂົງເຂດແວດລ້ອມອ້ອມຕົວພວກເຮົາ, ພວກເຮົາທຸກຄົນມີຄວາມເປັນສ່ວນຕົວ ຊຶ່ງມັນມີທ່າອ່ຽງເພື່ອສ້າງໃຫ້ສິ່ງຕ່າງໆມີຊີວິດຊີວາຂຶ້ນມາໃນປົດກາບສະແດງອອກດ້ານພາສາຂອງແຕ່ລະຄົນ ແລະ ພວກເຮົາທັງໝົດຮັບຮູ້ດີເຖິງບັນຫາທີ່ວ່າ ເຮັດແນວໃດໃຫ້ແຕ່ລະຄົນເວົ້າເຖິງບັນຫາດຽວກັນ ດ້ວຍວິທີການທີ່ແຕກຕ່າງກັນຢ່າງເຫັນໄດ້ຊັດເຈນ. ຄວາມໂນ້ມນ້າວດ້ານຄວາມໝາຍ, ຄວາມໄຝ່ຝັນ, ຄວາມເຂັ້ມຂອງຄວາມຮູ້ສຶກ ແລະ ອື່ນໆກໍແມ່ນປັດໄຈທີ່ສຳຄັນສຳລັບຜູ້ສ້າງສຳນວນແບບອັດຕະວິໄສ.

ຄຳຖາມ:

1. ຈົ່ງນຳໃຊ້ໂອກາດທີ່ເໝາະສົມ ແລະ ມ່ວນຊື່ນຕາມໃຈມັກ. ຫຼັງຈາກນັ້ນຈົ່ງບັນທຶກການເລົ່າຄືນເຫດການດັ່ງກ່າວຂອງນັກສຶກສາຫຼາຍໆຄົນທີ່ໄດ້ເຂົ້າຮ່ວມໃນໂອກາດດັ່ງກ່າວໃສ່ເທັບໄວ້ (ບໍ່ໃຫ້ເວົ້າເຖິງເຫດການທີ່ຮູ້ຈັກຈາກການຟັງມາ) ຫຼັງຈາກນັ້ນຈົ່ງຂຽນບັນທຶກໄວ້. ແລ້ວຈົ່ງນຳເອົາບົດຂຽນ ດັ່ງກ່າວມາວິໄຈໃຫ້ຈະແຈ້ງ ດ້ານອິດທິພົນຄວາມອາດສາມາດດ້ານອຸປະນິໄສຂອງຜູ້ສ້າງສຳນວນແບບອັດຕະວິໄສ, ທ່າອ່ຽງ ແລະ ຄວາມມັກແນວໃດ, ແລະ ຫຼັງຈາກນັ້ນຈົ່ງສົມທຽບຄຳສັ່ງເກດ ຂອງຕົນເອງ ຕໍ່ນັກສຶກສາຈາກທິດທາງດັ່ງກ່າວ ກັບບັນຫາທີ່ນັກສຶກສາປະກົດອອກໃຫ້ຄູອາຈານຂອງ ຕົນເຫັນ.
2. ຈົ່ງອ່ານວາລະສານທີ່ມີຊື່ສຽງຂອງລາວໃນສະໄໝໃໝ່ (ວັນນະສິນ). ຈົ່ງພິສູດວ່າບັນດາຜູ້ສ້າງສຳນວນແບບອັດຕະວິໄສຜູ້ໃດເຂົ້າຮ່ວມໃນວາລະສານດັ່ງກ່າວ.

5. 2 ບັນດາຜູ້ສ້າງສຳນວນແບບພາວະວິໄສ

ໜ້າທີ່ການສະແດງອອກຂອງຜູ້ສ້າງສຳນວນແບບພາວະວິໄສ ແມ່ນສຳຄັນທີ່ສຸດ; ມັນແມ່ນ ຄວາມເປັນສ່ວນຕົວຂອງການສະແດງອອກແຕ່ລະຢ່າງດ້ານພາສາ. ມັນກຶກຕັດສິນກະທັ້ງວິທີການແຕ່ ລະຢ່າງ, ບັນດາພາຫະນະການສະແດງອອກ ແລະ ອົງປະກອບອື່ນໆຂອງການສະແດງອອກ (ຈິນຕະ ນາການດ້ານເນື້ອໃນ ແລະ ການປະດິດແຕ່ງ). ມັນກຶກນຳໃຊ້ຄືກັນກັບເຈດຕະນາຊຶ່ງການນຳ ໃຊ້ພາ ຫະນະການສະແດງອອກທີ່ແນ່ນອນໃນຂົງເຂດສື່ສານຄວາມເຂົ້າໃຈກັນ ແມ່ນຢູ່ໃຕ້ອຳນາດຂອງ ການ ສ້າງສຳນວນແບບພາວະວິໄສ. ຮູບແບບຂອງຄຳສັບ, ຄຳສັບ ຫຼື ປະໂຫຍກ ສາມາດມີໜ້າທີ່ ທີ່ແນ່ ນອນໃດໜຶ່ງ. ຕົວຢ່າງໃນເວລາຜູ້ເວົ້າເວົ້າອັນໃດອັນໜຶ່ງອອກມາ. ໜ້າທີ່ການສະແດງອອກຂອງ ເຂົາແມ່ນເຊັ່ນ ສ້າງຄວາມພູມໃຈ, ຮຽກຮ້ອງຄວາມສົນໃຈຈາກຜູ້ຟັງກ່ຽວກັບເຫດການທີ່ເຂົາເວົ້າເຖິງ ແລະ ເຂົາໄດ້ກາຍເປັນສື່ກາງໃຫ້ທັງບັນຫາສ່ວນຕົວຂອງຕົວເຂົາເອງອີກດ້ວຍ. ເຂົາພະຍາຍາມເວົ້າ ຢ່າງຈູງໃຈ ຊຶ່ງມັນສະແດງອອກໃນການເລືອກເຟັ້ນຄຳສັບ ແລະ ໃນການສັບປ່ຽນແບບຂອງປະໂຫຍກ.. ໃນນັ້ນອາດຈະມີທັງການເວົ້າແບບທາງອ້ອມ ແລະ ແບບທາງກົງໄປພ້ອມໆກັນ. ເຂົາອາດຈະເວົ້າ ຢູ່ໃນກາລະອະດີດ, ແຕ່ວ່າຢູ່ໃນຊ່ວງທີ່ເຫດການຂອງເລື່ອງເດັ່ນ ເຂົາອາດຈະໃຊ້ຄຳກຳມະເປັນຮູບແບບ ປັດຈຸບັນນະການ, ຊຶ່ງຈຸດປະສົງແມ່ນເພື່ອດຶງດູດຄວາມສົນໃຈຈາກຜູ້ຟັງ. ດັ່ງນັ້ນ ການສະແດງອອກ ຂອງເຂົາໃນຕອນນີ້ ຕ້ອງໃຫ້ເໝາະສົມກັບຄວາມເປັນຈິງ ໂດຍການປ່ຽນກາລະຂອງຄຳກຳມະ (ຕົວສຳແດງ).

ໜ້າທີ່ການສະແດງອອກຂອງຜູ້ສ້າງສຳນວນແບບພາວະວິໄສໃນປັດຈຸບັນ ກືວ່າສຳຄັນຫຼາຍທີ່ສຸດ ແລະ ມັນໄດ້ກາຍເປັນມາດຕະຖານອັນໜຶ່ງ. ໂດຍອີງຕາມມາດຕະການດັ່ງກ່າວຈຶ່ງສາມາດແຍກໜ້າ ທີ່ຕ່າງໆຂອງສຳນວນອອກເປັນຫຼາຍໆດ້ານ.

ບັນດາຜູ້ສ້າງສຳນວນແບບພາວະວິໄສອື່ນໆແມ່ນສ້າງເປັນຄູ່ ຊຶ່ງມັນຈະພົວພັນເຊິ່ງກັນແລະກັນ ຕາມແບບກົງກັນຂ້າມທີ່ແນ່ນອນໃດໜຶ່ງ.

ຕົວຢ່າງ: ສະພາບແວດລ້ອມທີ່ປາກົດຕົວໃນການສະແດງອອກແມ່ນແບບສ່ວນຕົວ ຫຼື ແບບສ່ວນ ລວມ, ການສະແດງອອກແມ່ນໃນນາມສ່ວນຕົວທີ່ໄດ້ກະກຽມ ແລະ ບໍ່ໄດ້ກະກຽມ, ສະມາຄົມຂອງຜູ້ຮັບ ສື່ສານແມ່ນວົງແຄບ ຫຼື ວົງກວ້າງ, ແບບວິທີການປະຕິສຳພັນ ແມ່ນແບບທາງກົງ ຫຼື ທາງອ້ອມ, ຮູບແບບແມ່ນການເວົ້າ ຫຼື ການຂຽນ,

ຕາມປົກກະຕິແລ້ວ ຈະກ້າວໄປເຖິງການຮວມຕົວຂອງບັນດາຜູ້ສ້າງສຳນວນແບບພາວະວິໄສທີ່ ແນ່ນອນໃດໜຶ່ງ ກ້າວ່າຮູບການສະແດງອອກຂອງພວກເຂົາດ້ວຍການເວົ້າ ຫຼື ການຂຽນມີລັກສະນະ ຄ້າຍຄືກັນ. ການສະແດງອອກດ້ວຍການເວົ້າສ່ວນຫຼາຍຈະເປັນໄປຢູ່ໃນສະພາບແວດລ້ອມແບບສ່ວນ ຕົວ ທີ່ບໍ່ໄດ້ກຶກກະກຽມໄວ້ກ່ອນ, ສະມາຄົມຜູ້ຟັງແມ່ນຢູ່ໃນວົງແຄບ ແລະ ຜູ້ເວົ້າມີການພົວພັນໂດຍກົງ ກັບຜູ້ຟັງ. ການສະແດງອອກດ້ວຍການຂຽນສ່ວນຫຼາຍແມ່ນກຶກກຳນົດສຳລັບສັງຄົມທົ່ວໄປ, ຕາມປົກ ກະຕິແມ່ນໄດ້ກຶກກະກຽມໄວ້ລ່ວງໜ້າ, ໂດຍລືດໄລ່ໃສ່ສະມາຄົມຜູ້ອ່ານທີ່ກ້ວ້າງຂວາງ ແລະ ຜູ້ຂຽນມີ ການສະແດງການພົວພັນກັບຜູ້ອ່ານອອກມາພຽງແຕ່ໃນແບບທາງອ້ອມເທົ່ານັ້ນ. ເຖິງແມ່ນວ່າໃນ ທີ່ນີ້ໂດຍປົກກະຕິ ຈະກ້າວໄປເຖິງການຮວມຕົວທີ່ແນ່ນອນຂອງບັນດາຜູ້ສ້າງສຳນວນແບບພາວະວິໄສກໍ ຕາມ, ແຕ່ມັນຍັງຮຽກຮ້ອງໃຫ້ອຸທິດຄວາມເອົາໃຈໃສ່ຢ່າງເປັນຂັ້ນຕອນ ແລະ ສະແດງຈຸດພິເສດອອກ

ມາວ່າສ່ວນໃດຈາກຈຳນວນທັງໝົດທີ່ກ່າວມານັ້ນ ມີອິດທິພົນຕໍ່ການເລືອກເຟັ້ນບັນດາພາຫະນະພາສາສຳລັບການສະແດງອອກທີ່ແນ່ນອນໃດໜຶ່ງ.

ສະພາບແວດລ້ອມສ່ວນຕົວ ແລະ ສ່ວນລວມມີອິດທິພົນຕໍ່ຄວາມເປັນຈິງຂອງການສະແດງອອກດ້ານພາສາ, ໂດຍສະເພາະບັນຍາກາດຄວາມເປັນຈິງແບບສ່ວນຕົວ.

ຕົວຢ່າງ: ຢູ່ໃນສະພາບແວດລ້ອມສ່ວນຕົວຂອງຄອບຄົວ ສະມາຊິກແຕ່ລະຄົນຈະສະແດງບົດພາສາອາຕົນອອກມາຢ່າງມີອິດສະຫຼະ ໂດຍທົ່ວໄປຈະບໍ່ນຳໃຊ້ວິທີການການສະແດງອອກຂອງພາສາທີ່ໄດ້ມາດຕະການ, ຊຶ່ງພວກເຂົາຈະນຳໃຊ້ທັງຄຳສັບ ແລະ ຮູບແບບທີ່ບໍ່ໄດ້ມາດຕະການເຂົ້າໃສ່ໃນບົດຂອງພວກເຂົາ; ບາງຄັ້ງຄາວຈະນຳໃຊ້ທັງບັນດາຄຳສັບພື້ນບ້ານ ຫຼື ແບບສຳອຍ. ຖ້າວ່າມີຄວາມກົດດັນທີ່ແນ່ນອນໃດໜຶ່ງລະຫວ່າງສະມາຊິກແຕ່ລະຄົນໃນຄອບຄົວ ມັນກໍຈະຖືກສະແດງ ອອກທັງໃນການສະແດງອອກດ້ານພາສາຂອງພວກເຂົາເຊັ່ນກັນ. ຫຼັງຈາກນັ້ນມັນຈະຄົງຕົວຢູ່ຢ່າງສະໜ່ຳສະເໝີກວ່າເກົ່າ, ບັນດາຄຳສັບພື້ນບ້ານກໍຈະຄ່ອຍໆເຊື່ອມສູນໄປ ແລະ ສຳນວນສຳອຍ ກໍຈະບໍ່ປາກົດອອກມາໃຫ້ເຫັນເລື້ອຍໆ. ການສະແດງອອກແບບສ່ວນລວມກໍມີບັນຍາກາດທີ່ແຕກຕ່າງກັນຊຶ່ງບັນດາຄູອາຈານທີ່ສອນຢູ່ຕາມຫ້ອງຮຽນຕ່າງໆຮັບຮູ້ບັນຫາດັ່ງກ່າວນີ້ໄດ້ດີ. ເປັນຕົ້ນວ່າພວກ ເຂົາກຶ່ງກົດດັນໃຫ້ນຳເອົາສິ່ງດຽວກັນ ມາສອນໃຫ້ກຸ່ມຂອງນັກສຶກສາທີ່ແຕກຕ່າງກັນດ້ານສະພາບແວດລ້ອມສ່ວນຕົວ ຊຶ່ງບັນຫາດັ່ງກ່າວນີ້ເປັນເລື່ອງທຳມະດາຢູ່ໃນສັງຄົມ.

ແນ່ນອນແລ້ວວ່າ ຢູ່ໃນການສະແດງອອກຕໍ່ສັງຄົມ ຜູ້ເວົ້າຈະຕ້ອງໄດ້ລະມັດລະວັງດ້ວຍການສະແດງສຳນວນທີ່ໄດ້ມາດຕະການອອກ. ໃນທີ່ນີ້ຜູ້ເວົ້າອາດຈະເພີ່ມຫຼາຍໜ້ວຍການດ້ານປະສົບການຈາກສະຖານທີ່ທຳງານທີ່ແຕກຕ່າງກັນເຂົ້າໃສ່ໃນບົດເວົ້າຂອງເຂົາ ກ່ຽວກັບບັນຫາສ່ວນຕົວບັນດາສະມາຊິກຂອງໜ່ວຍງານໃດໜຶ່ງອາດຈະໂອ້ລົມກັນຢ່າງເປັນກັນເອງ; ບົດພາສາຂອງພວກເຂົາສ່ວນຫລາຍ ຈະເປັນໄປຄືກັນກັບການສົນທະນາທີ່ທຳມະດາ; ມັນອາດຈະບັນຈຸສຳນວນວິຊາການ, ແຕ່ວ່າບາງເທື່ອ ກໍ ອາດຈະມີທັງສຳນວນພາສາສະເພາະຂອງກຸ່ມຄົນໃດໜຶ່ງ ຊຶ່ງໃນນີ້ ຈະເຊື່ອມເຂົ້າກັບທັງພາກສ່ວນ ອັກ ຂະຫຼະ ແລະ ຮູບແບບທີ່ບໍ່ໄດ້ມາດຕະການ. ເມື່ອມີໃຜຜູ້ໜຶ່ງໃນສະມາຊິກຂອງກຸ່ມດັ່ງກ່າວນຳເອົາ ບັນຫາໃດໜຶ່ງຂຶ້ນມາສະເໜີຕໍ່ທີ່ປະຊຸມສ່ວນລວມ, ການສະແດງບົດພາສາຂອງເຂົາອອກແມ່ນຈະສົມບູນກວ່າເກົ່າ, ບັນດາພາຫະນະພາສາທີ່ບໍ່ໄດ້ມາດຕະການຈະຄົງຕົວຢູ່ໃນລະດັບທີ່ນ້ອຍກວ່າເກົ່າ ແລະ ໂດຍປົກກະຕິເຂົາຈະບໍ່ໃຊ້ສຳນວນພາສາຕະຫຼາດໃນເວລານີ້.

ພວກເຮົາສາມາດຍົກໃຫ້ເຫັນບາງຕົວຢ່າງ ເຊັ່ນຢູ່ໃນການປະກອບຄຳເຫັນຕໍ່ບົດສົນທະນາໃນທີ່ປະຊຸມສ່ວນໃຫຍ່ຜູ້ເວົ້າຈະນຳໃຊ້ຮູບແບບການສົນທະນາດ້ວຍພາສາທີ່ໄດ້ມາດຕະການ. ສະພາບແວດລ້ອມໃນຮູບແບບແນວນີ້ແມ່ນຮຽກຮ້ອງການສະແດງອອກດ້ານພາສາທີ່ໄດ້ມາດຕະການ, ຜູ້ເວົ້າຈະນຳໃຊ້ພາສາທີ່ໄດ້ມາດຕະການ ພ້ອມດ້ວຍຄວາມແນ່ນອນທີ່ຊັດເຈນໃນການສະແດງອອກທາງການ ຫຼື ໃນພິທີການຕ່າງໆ.

ການສະແດງບົດພາສາອອກແບບສ່ວນຕົວດ້ວຍການເວົ້າ ສາມາດສະແດງອອກມາພ້ອມກັບການສະແດງກິລິຍາທ່າທາງຕ່າງໆ, ສຳນວນເອາະເຊາະ ຫຼື ວາດການເຄື່ອນໄຫວຕ່າງ; ແຕ່ການສະແດງບົດພາສາອອກສູ່ສັງຄົມດ້ວຍການເວົ້າ ບັນດາພາຫະນະດັ່ງກ່າວນີ້ແມ່ນຖືກນຳມາໃຊ້ໃນລະດັບທີ່ນ້ອຍກວ່າ. ຄວາມໝາຍສະເພາະໃນການສະແດງບົດພາສາອອກແບບສ່ວນຕົວເອີ້ນວ່າ ສະຖານະການຂອງການສະແດງອອກ. ດ້ວຍເຫດນີ້ພວກເຮົາຈຶ່ງສາມາດເຂົ້າໃຈຄວາມສອດຄ່ອງ ແລະ ກົມກຽວ

ທີ່ແໜ້ນແຟ້ນຂອງການສະແດງອອກກັບສະຖານະການ ຊຶ່ງຜູ້ເຂົ້າຮ່ວມການສະແດງອອກ ບໍ່ພຽງ ແຕ່ເປັນຜູ້ເວົ້າໃນບົດພາສາເທົ່ານັ້ນ, ແຕ່ໂດຍທົ່ວໄປແລ້ວເຂົາຍັງເປັນຜູ້ທີ່ຮູ້ຈັກບັນຫາຕ່າງໆທີ່ເຂົານຳ ມາເວົ້າໄດ້ດີສົມຄວນ. ສະຖານະການຂອງການສະແດງອອກສາມາດສົ່ງຜົນສະທ້ອນຕໍ່ຜູ້ຮັບສື່ສານໄດ້ ຫຼາຍຢ່າງ ຄື ຜູ້ຮັບສື່ສານອາດຈະເຂົ້າໃຈໄດ້ດີ, ເຂົ້າໃຈໄດ້ໜ້ອຍໜຶ່ງ ຫຼື ອາດຈະບໍ່ເຂົ້າໃຈຈັກດີ້ເລີຍ.

ສິ່ງທີ່ໄດ້ກະກຽມ ແລະ ບໍ່ໄດ້ກະກຽມຂອງການສະແດງບົດພາສາອອກຂອງຜູ້ສ້າງສຳນວນແບບ ພາວະວິໄສຊຶ່ງສ່ວນຫຼາຍພົວພັນເຊິ່ງກັນແລະກັນເປັນຄູ່ຄືດັ່ງທີ່ໄດ້ສະເໜີຜ່ານມາ. ການສະແດງບົດພາ ສາອອກແບບສ່ວນຕົວ ສ່ວນຫຼາຍແມ່ນການສະແດງອອກທີ່ບໍ່ໄດ້ກະກຽມໄວ້ກ່ອນ ແລະ ມັກຈະເປັນໄປ ເອງໂດຍອັດຕະໂນມັດ. ໂຄງສ້າງປະໂຫຍກຂອງບົດພາສາທີ່ຖືກສະແດງອອກໂດຍບໍ່ໄດ້ກະກຽມແມ່ນ ມີ ໜ້ອຍ, ສ່ວນຫຼາຍຈະນຳໃຊ້ອົງປະກອບດ້ານພາສາເວົ້າ ແລະ ອົງປະກອບຂອງສຳ ນວນທົ່ວໄປ, ການສະແດງບົດພາສາຊະນິດນີ້ອອກ ມັກບັນຈຸພາຫະນະດ້ານວັດຈະນາບວກກັບລັກສະນະສະເພາະ ດ້ານອາລົມຈິດ. ຕາມຄວາມເປັນຈິງທີ່ແນ່ນອນຜູ້ຮັບສື່ສານຂອງບົດພາສາທີ່ຖືກສະແດງອອກ ຈະນຳ ເອົາຄວາມເຂົ້າໃຈທີ່ແນ່ນອນໃດໜຶ່ງມາພິຈາລະນາ ຊຶ່ງຜູ້ເວົ້າສ່ວນໃຫຍ່ຈະຊອກຫາສຳນວນທີ່ເໝາະ ສົມ ຫຼື ຮູບແບບການສະແດງອອກທີ່ຈະແຈ້ງເທົ່າທີ່ຄວາມສາມາດທີ່ເຂົາມີມານຳໃຊ້ໃນໄລຍະການສະ ແດງບົດພາສາຂອງເຂົາອອກ. ການສະແດງບົດພາສາທີ່ໄດ້ກະກຽມອອກຕາມທຳມະດາມັກເກີດຂຶ້ນຄື ກັນກັບບົດຂຽນ. ການສະແດງບົດພາສາຊະນິດນີ້ອອກ ມັນໃຫ້ໂອກາດແກ່ນັກປະພັນ ເພື່ອກະກຽມ ໃຫ້ແນ່ນອນຢູ່ໃນບົດຂຽນຂອງເຂົາ ຊຶ່ງລວມທັງບັນຫາການນຳໃຊ້ສຳນວນຕ່າງໆ. ໃນທີ່ສຸດການປັບປຸງ ບົດຂຽນດັ່ງກ່າວ ຈະກ້າວຂຶ້ນໄປເຖິງການນຳສະເໜີບົດທີ່ມີຄວາມເດັ່ນຊັດທາງດ້ານ ການນຳໃຊ້ສຳ ນວນ ແລະ ປະໂຫຍກ ພ້ອມທັງມີຄວາມກະທັດຮັດ, ຄົບກ້ວນ ແລະ ສົມບູນທາງດ້ານເນື້ອໃນຊຶ່ງເປັນ ທີ່ ເຂົ້າໃຈໄດ້ງ່າຍກວ່າ. ໂດຍປົກກະຕິ ຜົນສຸດທ້າຍຈະແມ່ນການສະແດງບົດພາສາອອກທີ່ຖືວ່າໄດ້ປົດ ປ່ອຍອອກຈາກບັນດາພາຫະນະພາສາ ທີ່ບໍ່ໄດ້ມາດຕະຖານທັງປວງ.

ສະມາຄົມຜູ້ຮັບສື່ສານກໍເໝືອນກັນ ຈະປາກົດຕົວຄືຜູ້ສ້າງສຳນວນແບບພາວະວິໄສຊຶ່ງໃນສ່ວນ ຕົວຂອງຕົວເຂົາເອງບັນຈຸດ້ວຍສອງຂວັ້ນທີ່ກົງກັນຂ້າມກັນ. ຜູ້ຮັບສື່ສານຂອງການສະແດງບົດພາສາ ອອກຜູ້ໜຶ່ງໆແມ່ນນອນຢູ່ໃນກໍລະນີເປັນຕົວສຳຮອງ ຊຶ່ງພວກເຂົາເຫຼົ່ານີ້ຕາມທຳມະດາປາກົດຢູ່ໃນຈິດ ໜາຍສ່ວນຕົວ, ໃນບົດໂອ້ລົມກັນລະຫວ່າງໝູ່ເພື່ອນສອງຄົນ. ສ່ວນໃຫຍ່ການສະແດງບົດພາສາອອກ ຢູ່ໃນກໍລະນີນີ້ແມ່ນຖືກຈັດຢູ່ໃນສະມາຄົມຂອງຜູ້ຮັບສື່ສານທີ່ຢູ່ໃນວົງແຄບ. ຕົວຢ່າງຢູ່ໃນຈິດໜາຍສ່ວນ ຕົວທີ່ເລັ່ງໃສ່ບັນດາຜູ້ຮັບສື່ສານຊຶ່ງເປັນສະມາຊິກຂອງຄອບຄົວ ຫຼື ການສະແດງບົດພາສາໃດໜຶ່ງອອກ ໃນກຸ່ມນ້ອຍໆທີ່ບັນຈຸດ້ວຍໝູ່ເພື່ອນຈາກສະຖານທີ່ທຳງານໃດໜຶ່ງ ແລະ ອື່ນໆ. ລັກສະນະຂອງກຸ່ມ ປະເພດນີ້ຕາມທຳມະດາມີຄຸນລັກສະນະຮ່ວມຕະກຸນກັນ, ບັນດາສະມາຊິກຂອງກຸ່ມມີຄວາມສົນໃຈຄ້ອນ ຂ້າງຄືກັນ ແລະ ສົນໃຈການແກ້ໄຂບັນຫາທີ່ຄ້າຍຄືກັນ. ການສະແດງບົດພາສາຂອງແຕ່ລະບຸກຄົນ ອອກຕໍ່ກັບສະມາຄົມຜູ້ຮັບສື່ສານທີ່ຈຳກັດຂອບເຂດແນວນີ້ຈະຄົງຕົວຢູ່ຢ່າງພິເສດ ແລະ ເປັນຈິງກວ່າ. ຕາມທຳມະດາການສະແດງບົດພາສາອອກແບບສ່ວນຕົວແນວນີ້ ຈະບໍ່ໄດ້ຖືກກະກຽມໄວ້ລ່ວງໜ້າ, ແລະ ຈະອີງໃສ່ສະຖານະການທີ່ຈະເກີດຂຶ້ນໃນຕໍ່ໜ້າເປັນຫຼັກ. ສະມາຄົມຜູ້ຮັບສື່ສານທີ່ກວ້າງຂວາງກວ່າ, ຈະ ເປັນແຮງຊຸກດັນໃຫ້ເຫັນໄດ້ຊັດເຈນເຖິງຈຸດຢືນຂອງຜູ້ຂຽນບົດ, ປະສົບການກ່ຽວກັບການຂຽນຂອງ ເຂົາ, ອາຍຸກະສຽນ, ຄວາມຮູ້ ແລະ ບັນຫາອື່ນໆໄດ້ດີ. ຢູ່ໃນກໍນີການສະແດງບົດພາສາອອກ ດ້ວຍການຂຽນ, ຜູ້ຂຽນຈະຕ້ອງໄດ້ຊັ່ງຊາຕີລາຄາບົດຂຽນຂອງຕົນເອງໃຫ້ກີ່ກ້ວນເທົ່າທີ່ຄວນກ່ອນ

ຈຶ່ງສາມາດອະນຸ ຍາດໃຫ້ອອກສູ່ສາຍຕາຂອງສັງຄົມໄດ້. ໃນກໍລະນີການສະແດງບົດພາສາອອກດ້ວຍ ການເວົ້າແມ່ນ ຈຳຕ້ອງໄດ້ຮັບຮູ້ສະຖານະການໃຫ້ທ່ວງທັນເວລາ, ກະຕວງສິ່ງຕ່າງໆໃຫ້ແນ່ນອນ ແລະ ປັບປຸງບົດເວົ້າ ຂອງຕົນໃຫ້ແທດຕົງກັບສິ່ງທີ່ຢາກສະແດງອອກ. ບັນຫາດັ່ງກ່າວນີ້ ຈະປາກົດໃຫ້ເຫັນ ຢູ່ໃນການເອົາໃຈໃສ່ຢ່າງເຂັ້ມງວດ ທີ່ຈະຕ້ອງໄດ້ປະຕິບັດໃນແງ່ຂອງການແຕ່ງເລື່ອງ, ໃນການວິວັດ ສຳນວນຂອງການສະແດງບົດພາສາອອກ ແລະກະທັ້ງໃນການເລືອກເຟັ້ນບັນດາວັດຈະນາທີ່ຍອດຍິ່ງ ກວ່າມານຳໃຊ້.

ຄວາມສຳພັນລະຫວ່າງຜູ້ຂຽນບົດ ແລະ ຜູ້ຮັບສື່ສານຂອງເຂົາບາງເທື່ອແມ່ນທາງກົງ ຫຼື ທາງ ອ້ອມ. ການສຳພັນແບບທາງກົງໂດຍປົກກະຕິແມ່ນການສະແດງບົດພາສາອອກດ້ວຍການເວົ້າ, ສ່ວນ ການສຳພັນແບບທາງອ້ອມແມ່ນການສະແດງບົດພາສາອອກດ້ວຍການຂຽນ. ແຕ່ວ່າຢູ່ໃນບາງ ການ ສະແດງບົດພາສາອອກດ້ວຍການເວົ້າ, ຜູ້ເວົ້າສາມາດມີການສຳພັນກັບຜູ້ຮັບສື່ສານຂອງເຂົາ ພຽງ ແຕ່ທາງອ້ອມເທົ່ານັ້ນ. ຕົວຢ່າງຢູ່ໃນບົດປາກະກາຜ່ານທາງວິທະຍຸກະຈາຍສຽງ ຫຼື ໃນການ ສະແດງບົດພາສາອອກດ້ວຍການເວົ້າຜ່ານທາງໂທລະພາບ. ການສຳພັນແບບທາງກົງ ສ່ວນຫຼາຍ ແມ່ນການສະແດງໃຫ້ເຫັນເຖິງການສະແດງບົດພາສາອອກແບບສ່ວນຕົວດ້ວຍການເວົ້າ. ໃນກໍລະນີ ນີ້ແມ່ນເວົ້າເຖິງການເວົ້າທີ່ທຳມະດາທົ່ວໄປ ຊຶ່ງຜູ້ເວົ້າຈະຕ້ອງໄດ້ມີການເນັ້ນໜັກໃນການ ສັງຫາ ຄວາມສຳພັນກັບຜູ້ຟັງໃນດ້ານໃດດ້ານໜຶ່ງມາສະແດງອອກ; ຈະບໍ່ມີການເວົ້າ ໂດຍປາສະຈາກມຸມ ມອງຕໍ່ຜູ້ທີ່ເຂົາເວົ້ານຳ; ແຕ່ວ່າຈະຕ້ອງໄດ້ຕິດຕາມປະຕິກິລິຍາຂອງບັນດາຜູ້ຮັບສື່ສານຕໍ່ບົດຂອງຕົນເອງ ສະເໝີ. ໃນສ່ວນຕົວແລ້ວ ຕາມທຳມະດາຜູ້ເວົ້າຈະຕ້ອງຮູ້ສຶກສະເໝີວ່າ ຜູ້ຟັງເຂົ້າໃຈບົດເວົ້າຂອງຕົນ ຫຼືບໍ່. ກ້າວ່າ ມີຈຸດສົງໄສກ່ຽວກັບບັນຫາໃດໜຶ່ງ ກໍສາມາດເລືອກຈັງຫວະຂ້າມຜ່ານ, ສາມາດກັບຄືນ ມາຫາບາງເນື້ອໃນຂອງສ່ວນປະກອບໃນບົດສະແດງອອກຂອງຕົນເອງໄດ້ຢ່າງລະອຽດອ່ອນ, ສາມາດ ຫຼຳຄືນໂດຍໃຊ້ຄຳເວົ້າອື່ນເລີຍກໍໄດ້ ເພື່ອໃຫ້ມີປະໂຫຍດທີ່ສາມາດສະແດງອອກໃຫ້ເຫັນເຖິງການເນັ້ນ ໜັກ.

ໃນການສະແດງບົດພາສາແບບສ່ວນຕົວອອກດ້ວຍການເວົ້າ ມີຄວາມໝາຍທີ່ແນ່ນອນຄືກັນ ກັບສຳນວນການຜິວພັນທີ່ເກົ່າແກ່ສຳລັບຮັກສາການຜູກມັດຄວາມສຳພັນ. ນອກຈາກຄຳອຸທານບາງ ຈຳພວກ ຄື ສຳນວນ: ເດ ! ເຂົ້າໃຈ !, ຟັງ ! ເບິ່ງແມ ! ແລະອື່ນໆ, ໃນການສຳພັນແບບທາງກົງຈະນຳ ເອົາຫຼາຍພາຫະນະອື່ນໆອອກມານຳໃຊ້ ເຊັ່ນ

- ການເລືອກເຟັ້ນເອົາຄຳສັບ, ສຳນວນ ຫຼື ປະໂຫຍກທີ່ເໝາະສົມກວ່າມາປ່ຽນແທນ.
- ການນຳໃຊ້ວາດສຳອຍຂອງໃບໜ້າ, ວາດການເຄື່ອນໄຫວ, ກິລິຍາທ່າທາງ ແລະອື່ນໆ.

ໃນການປະຕິສຳພັນແບບທາງອ້ອມ, ຄູ່ຂອງຜູ້ສົ່ງສື່ສານບໍ່ຮຽກຮ້ອງບັນດາພາຫະນະຈຳພວກນີ້ ໂດຍກົງ, ແຕ່ຜູ້ຮັບສື່ສານສາມາດຮັບຮອງວ່າ ເຂົາໄດ້ຕິດຕາມການສົ່ງສື່ສານຕະຫຼອດ, ຊຶ່ງພວກເຮົາສາ ມາດຢັ້ງຢືນກ່ຽວກັບບັນຫານີ້ ດ້ວຍການຮັດທິດລອງທີ່ງ່າຍດາຍຄື ກ້າມີໃຜຜູ້ໜຶ່ງໂທລະສັບມາຫາ, ເຮົາຮັບສາຍ, ແຕ່ວ່າບໍ່ແຕະຕ້ອງເຖິງການສື່ສານຂອງຜູ້ເວົ້າໃນທາງກົງກັບຂ້າມຂອງເຄື່ອງມືການສື່ ສານຂອງຕົນເອງ, ເຮົາພຽງແຕ່ຟັງເຂົາເວົ້າແບບງ່ຽບໆ. ໃນນີ້ສາມາດຮັບຮອງໄດ້ຢ່າງຊັດເຈນວ່າ ຫຼັງ ຈາກ 4 ຫຼື 5 ປະໂຫຍກ, ຜູ້ເວົ້າຈະລົບກວນການສື່ສານຂອງຕົວເຂົາເອງດ້ວຍຄຳຖາມໃນແບບ <u>ມີໃຜ ຢູ່ຫັ້ນບໍ?</u> <u>ເຂົ້າໃຈບໍ?</u> <u>ເຈົ້າຟັງຂ້ອຍຢູ່ບໍ?</u> <u>ເຈົ້າໄດ້ຍິນຂ້ອຍບໍ?</u> ຄຳຖາມແບບນີ້ຈະກືກຖາມອອກມາ ແລະ

ໃນທີ່ນີ້ຜູ້ຮັບອາດຈະຖາມຄືນອອກມາວ່າ: ເຈົ້າໂທມາຫາໃຜ ຫຼື ຢາກລົມກັບໃຜ ຊຶ່ງການສື່ສານໃນຂັ້ນຕອນຕໍ່ມາຂອງເຂົາຈະສະແດງອອກ. ໃນການສະແດງບົດສ່ວນຕົວທີ່ຫຳມະດາອອກຜູ້ເວົ້າ ບາງຈຳພວກມັກຈະນຳເອົາສຳນວນພົວພັນທີ່ເປັນສ່ວນເກີນ ມາສະແດງອອກທັງທາງໃນເວທີ ທີ່ເປັນທາງການ; ຊຶ່ງໂດຍປົກກະຕິແລ້ວນີ້ບໍ່ແມ່ນໜ້າທີ່ ແລະ ຕາມທຳມະດາກໍບໍ່ເໝາະສົມອີກດ້ວຍ.

ຮູບແບບຂອງການຂຽນ ແລະ ການເວົ້າ ໃນການສະແດງບົດພາສາອອກ, ປາກົດຕົວຄືຜູ້ສ້າງສຳນວນແບບພາວະວິໄສ ຊຶ່ງມີຄວາມສຳຄັນທີ່ສຳຮອງ. ສຳລັບບົດຂຽນອາດສາມາດຄົ້ນຄິດຢ່າງເລິກເຊິ່ງ ແລະ ກະກຽມຢ່າງຄັກແນ່. ພ້ອມກັບນັ້ນກໍສາມາດນຳເອົາບັນດາພື້ນຖານຕົວຈິງໃນການຂຽນ ບົດອອກມານຳໃຊ້ ໂດຍຫຼີກເໜັ້ນໄດ້ວ່າ ຜູ້ຮັບບົດຕົວຈິງກໍຈະມີເວລາພຽງພໍໃນການທຳຄວາມເຂົ້າໃຈກັບບົດເພື່ອໃຫ້ເຂົ້າໃຈໄດ້ດີເຖິງເນື້ອໃນຂອງມັນໃນເວລາເຂົາອ່ານ. ດັ່ງນັ້ນ, ໃນການສະແດງບົດພາສາອອກດ້ວຍການຂຽນ, ຜູ້ຂຽນສາມາດນຳໃຊ້ປະໂຫຍກທີ່ຍາວກວ່າ ຫຼື ປະໂຫຍກປະສົມ, ສາມາດນຳ ໃຊ້ໂຄງສ້າງປະໂຫຍກທີ່ສັບສົນກວ່າ ແລະ ສາມາດນຳໃຊ້ສຳນວນວາດແຕ້ມທີ່ຫຼູຫຼາກວ່າ.

ແບບພື້ນຖານ ແລະ ການສຳພັນກັນຂອງບົດເວົ້າ ທຳມະດາແມ່ນບໍ່ໄດ້ກຽມກະກຽມໄວ້ກ່ອນ.. ມັນປາກົດເປັນຈິງໃນການພົວພັນເຊິ່ງກັນແລະກັນແບບທົ່ວໄປຂອງຄົນເຮົາ, ມີລັກສະນະສ່ວນຕົວ ແລະ ມີຈຳນວນຜູ້ຟັງໜ້ອຍ, ທຸກໆເທື່ອແມ່ນຈະເປັນໄປຕາມສະຖານະການທີ່ກຶກຫຼ້າຄືນເລື້ອຍໆ, ສະຖານະການທີ່ກຶກຫຼ້າຄືນຈະນຳເອົາການນຳໃຊ້ການສື່ສານທີ່ມີຢູ່ ມາສະແດງອອກດ້ວຍແບບສະທ້ອນໄປກັບ.. ຢູ່ໃນແບບອື່ນໆຂອງບົດເວົ້າ, ຜູ້ເວົ້າສາມາດຕອບໂຕ້ກັບບົດເວົ້າຂອງຜູ້ອື່ນໆ ແລະ ສາມາດສ້າງບົດຂອງຕົນໃຫ້ສອດຄ່ອງກັບການເກີດຂຶ້ນຂອງບົດເວົ້າຂອງຜູ້ອື່ນໆເຫຼົ່ານັ້ນດ້ວຍຕົວເຂົາເອງ. ຢູ່ໃນຮູບແບບຂອງການສົນທະນາ, ຜູ້ເວົ້າຈະຕ້ອງໄດ້ເລືອກເຟັ້ນເອົາພາກສ່ວນຂອງປະໂຫຍກຈາກບົດຂອງຄູ່ສົນທະນາຂອງເຂົາ, ສະຖານະການຈະຕ້ອງໃຫ້ໂອກາດເຂົາ ເພື່ອສະແດງເນື້ອໃນຂອງການສົນທະນາອອກມາດ້ວຍຫຼາຍຮູບການທີ່ສາມາດເຂົ້າໃຈໄດ້ຢ່າງຈະແຈ້ງ. ບັນຫາຄຳສັບທີ່ມີຄວາມກ່ຽວ ແລະ ບັນດາປະໂຫຍກທີ່ຕື່ມອາລົມຈິດລົງໃສ່ຈະສົ່ງຜົນສະທ້ອນໃຫ້ບົດສົນທະນາມີຊີວິດຊີວາແບບທຳມະຊາດ. ບາງຄວາມຈຳເປັນທີ່ຈະຕ້ອງໄດ້ຕອບໂຕ້ໃນທັນທີທັນໃດ ຈະນຳໄປເຖິງບັນຫາທີ່ຜູ້ເວົ້າໄດ້ອຸທິດຄວາມເອົາໃຈໃສ່ໜ້ອຍ ໃນດ້ານການເລືອກເຟັ້ນສຳນວນພາສາເພື່ອນຳໃຊ້ເຂົ້າໃນບົດຂອງຕົນ. ດັ່ງນັ້ນ ພື້ນຖານຂອງບົດແມ່ນພາສາທີ່ບໍ່ໄດ້ມາດຕະຖານ; ມີຫຼາຍພາກສ່ວນເກີດມາຈາກສຳນວນພາສາທົ່ວໄປ, ຈາກຄຳເວົ້າຂອງໝູ່ບ້ານ ຫຼືຕົວເມືອງ, ຫຼືບາງເທື່ອເກີດມາຈາກສຳນວນພາສາທ້ອງຖິ່ນ. ມີຫຼາຍສິ່ງຫຼາຍຢ່າງໃນຂະນະການສື່ສານແບບນີ້ ຄົງຕົວຢູ່ຢ່າງບໍ່ແນ່ນອນ,ບັນດາພາຫະນະນອກພາສາໄດ້ກຶກຄັດເລືອກເອົາມານຳໃຊ້ຕາມແບບພາລະກິດຂອງຄຳສັບ, ເຊັ່ນ ການເຄື່ອນໄຫວຂອງມື, ກິລິຍາທ່າທາງ, ການເອາະເຊາະຂອງໃບໜ້າ ແລະອື່ນໆ.

ບາງບົດເວົ້າ ບາງເທື່ອຊ້ຳພັດບໍ່ໄດ້ກຶກກະກຽມ ແມ່ນແຕ່ບົດທີ່ກຶກກຳນົດໃຫ້ເປັນບົດທີ່ຈະຕ້ອງນຳອອກສູ່ສັງຄົມ ເຊັ່ນ ບົດສົນທະນາໃນທີ່ປະຊຸມ, ບົດສົນທະນາໃນການສຳມະນາ ແລະໃນກອງປະຊຸມຕ່າງໆ. ໃນການສ້າງການສື່ສານນີ້ ແນ່ນອນວ່າຈະຕ້ອງມີຜົນກະທົບຈາກສະພາບແວດລ້ອມ, ມີຄວາມກົດດັນຈາກລະບຽບການຕ່າງໆທາງສັງຄົມ, ລວມທັງສິ່ງຕ່າງໆທັງໝົດຂອງຊຸດການສະແດງອອກນີ້ດ້ວຍ. ທັງໝົດນີ້ສິ່ງຜົນສະທ້ອນໃຫ້ຜູ້ເວົ້າໄດ້ພະຍາຍາມອຸທິດຄວາມເອົາໃຈໃສ່ທີ່ຍິ່ງໃຫຍ່ ໃຫ້ແກ່ບົດເວົ້າຂອງຕົວເຂົາເອງ. ໃນຄວາມພະຍາຍາມນີ້ ແນ່ນອນມັນຮຽກຮ້ອງເຖິງຄວາມສາມາດຈາກຫຼາຍດ້ານຂອງຜູ້ເວົ້າ ເຊັ່ນ ບາງເທື່ອຜູ້ເວົ້າຜ່ອນການເວົ້າຂອງເຂົາໃຫ້ຊ້າລົງ; ແຕ່ບາງບ່ອນຊ້ຳພັດຕື່ມສຳນວນ

ຕ່າງໆ ເຊັ່ນ "ກະລຸນາ, ເຊື່ອບໍ່ວ່າ, ໃນທີ່ນີ້, ຄວາມຈິງ, ຕໍ່ໄປ, ບາງຢ່າງ..." ລົງໃສ່ໃນບົດເວົ້າຂອງເຂົາຢ່າງວ່ອງໄວແລະຫຼຽນໄຫຼ. ເພື່ອສ້າງໃຫ້ຜູ້ຟັງມີຄວາມສົນໃຈ, ຜູ້ເວົ້າມັກຊອກຫາສຳນວນທີ່ເໝາະສົມທີ່ສຸດມາໃສ່ໃນບົດເວົ້າຂອງເຂົາ. ແຕ່ວ່າກ່ຽວກັບບັນຫານີ້ຜູ້ເວົ້າຈະບໍ່ບັນ ລຸຜົນສຳເລັດສະເໝີໄປ ແລະ ບາງເທື່ອຜູ້ເວົ້າຈະຮູ້ສຶກວ່າສິ່ງທີ່ເຂົາໄດ້ເລືອກເອົາມາຕື່ມໃສ່ໃຫ້ເໝາະສົມນັ້ນ ປາກົດວ່າ ຍັງມີໜ້ອຍທີ່ສຸດ.

ການສະແດງບົດເວົ້າບາງປະເພດ ສາມາດເຮັດໃຫ້ປາກົດເປັນຈິງໄດ້ດ້ວຍຮູບແບບການເວົ້າປາກເປົ່າ, ແຕ່ວ່າບາງສ່ວນ ຫຼື ທັງໝົດຂອງບົດຈະຖືກກະກຽມໄວ້ລ່ວງໜ້າ ເຊັ່ນ ບົດປາກະກາ, ບົດປາໄສ, ບົດລາຍງານ ຫຼື ບົດອອກຄຳຄິດຄຳເຫັນໃນເຫດສະການຕ່າງໆໃດໜຶ່ງ. ຂະໜາດຂອງການກະກຽມທີ່ຜູ້ເວົ້າໄດ້ກະກຽມມາກ່ອນມີຄວາມແຕກຕ່າງກັນ, ພ້ອມກັນນັ້ນ ການນຳໃຊ້ຫຼັກໄວຍາກອນໃນບົດແຕ່ລະຢ່າງກໍແຕກຕ່າງກັນ.

ບົດເວົ້າທີ່ໄດ້ກະກຽມສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ, ກຶກບັນຈຸລັກສະນະພິເສດຕ່າງໆຫຼາຍຢ່າງ; ມັນມີໂອກາດໄດ້ກະກຽມການກ່າວຕໍ່ຜູ້ຟັງຢ່າງເໝາະສົມທັງໃນເວລາເລີ່ມຕົ້ນ ແລະ ຕະຫຼອດເວລາຂອງການສະແດງບົດເວົ້າອອກ.

ສ່ວນໃຫຍ່ຂອງການສື່ສານຂອງພວກເຮົາມີຮູບແບບການສົນທະນາ ຊຶ່ງໃນນັ້ນບົດຂອງຜູ້ເວົ້າຈະປາກົດອອກມາພ້ອມກັນກັບບົດຂອງຄູ່ສົນທະນາຂອງເຂົາ. ດັ່ງນັ້ນ ຜູ້ເວົ້າຈະຕ້ອງໄດ້ຄິດໄລ່ ແລະ ປັບປຸງພາລະກິດການເວົ້າຂອງເຂົາໃຫ້ເຂົ້າກັບລະດັບທີ່ແນ່ນອນຂອງການສົນທະນາແຕ່ລະປະເພດ.

ການຄົ້ນຄວ້າກ່ຽວກັບສຳນວນໃນປັດຈຸບັນເຮັດໃຫ້ບັນດາຜູ້ສ້າງສຳນວນກຶກເພີ່ມຂຶ້ນ ແລະ ມີອິດທິພົນອັນໃຫຍ່ຫຼວງຕໍ່ທິດທາງດ້ານການຮັບປະກັນການຂະຫຍາຍຕົວຂອງສຳນວນສື່ສານ. ມັນແມ່ນຄວາມພະຍາຍາມເພື່ອໃຫ້ໄດ້ຫຼາຍຂໍ້ມູນມານຳໃຊ້ດ້ວຍໄລຍະເວລາທີ່ສັ້ນທີ່ສຸດ, ມັນແມ່ນຄວາມສັບສົນຂອງການພົວພັນທາງສັງຄົມ ແລະ ວຽກງານ, ມັນແມ່ນຄວາມຮຽກຮ້ອງຕ້ອງການເພື່ອສະສົມປະສິດທິຜົນຂອງຂະບວນການຄວາມເຂົ້າໃຈ ຈຳນວນທີ່ກວ້າງຂວາງຂອງບັນດາພາຫະນະນອກພາສາ (ເຕັກນິກທາງວິທະຍຸກະຈາຍສຽງ ແລະ ໂທລະພາບ).

ຄຳຖາມ:

1.ຈົ່ງກຳນົດເບິ່ງວ່າຜູ້ສ້າງສຳນວນແບບໃດສິ່ງຜົນສະທ້ອນຕໍ່ການນຳໃຊ້ສຳນວນຂອງບົດຕົວຢ່າງລຸ່ມນີ້:

"ຕ້ອງການຂາຍເຮືອນ ແລະ ດິນ ຊຶ່ງເປັນເຮືອນວິນລາຊັ້ນເຄິ່ງ ພ້ອມກັບດິນຈຳນວນເຄິ່ງໄລ່, ມີບ່ອນມ້ຽນລົດ ແລະ ເດີ່ນບ້ານທີ່ສະອາດງາມຕາ. ແຄມທາງເລກທີ13ໃຕ້ ຫ່າງຈາກຕົວເມືອງວຽງຈັນປະມານ 8km. ໂທ: 020 5682 373"

6. ຂົງເຂດ, ລະດັບ ແລະ ຊະນິດຂອງສຳນວນ

6.1 ຂົງເຂດຂອງສຳນວນ

ບັນດາບົດທີ່ໄດ້ກຶກກຳນົດດ້ວຍຈຸດພິເສດລວມຂ້ອນຂ້າງຄືກັນ ໄດ້ສ້າງບັນດາຂົງເຂດຕ່າງໆຂອງສຳນວນຂຶ້ນມາ.

ຄວາມແຕກຕ່າງເລັກໆນ້ອຍໆທີ່ໄດ້ປາກົດຕົວຢູ່ໃນບົດຂອງຂົງເຂດສຳນວນແນວດຽວກັນ ແມ່ນກຶກສ້າງຂຶ້ນດ້ວຍບັນດາຜູ້ສ້າງສຳນວນແບບອັດຕະວິໄສ. ບັນດາຜູ້ສ້າງສຳນວນແບບອັດຕະວິໄສ ໄດ້ສ້າງບັນດາຂົງເຂດຂອງສຳນວນຈຳນວນໜຶ່ງຂຶ້ນມາ ຄື

1. ຂົງເຂດຂອງສຳນວນບົດເວົ້າ ແລະ ບົດຂຽນ
2. ຂົງເຂດຂອງສຳນວນບົດຕໍ່ສາທາລະນະ ແລະ ບົດສ່ວນຕົວ
3. ຂົງເຂດຂອງສຳນວນບົດທີ່ໄດ້ກະກຽມ ແລະ ບົດທີ່ບໍ່ໄດ້ກະກຽມ
4. ຂົງເຂດຂອງສຳນວນບົດທີ່ມີການສຳຜັນແບບທາງກົງ ແລະ ແບບທາງອ້ອມ
5. ຂົງເຂດຂອງສຳນວນບົດດ່ຽວ ແລະ ບົດຄູ່

ຄວາມສອດຄ່ອງດ້ານຈຸດພິເສດຂອງສຳນວນໃນບົດພາສາ ແມ່ນກຶກສ້າງຂຶ້ນດ້ວຍບັນດາຜູ້ສ້າງສຳນວນແບບພາວະວິໄສ. ອີງຕາມບັນຫາດັ່ງກ່າວນີ້ ບັນດາຜູ້ສ້າງສຳນວນແບບພາວະວິໄສໄດ້ສ້າງບັນດາຂົງເຂດຂອງສຳນວນຈຳນວນໜຶ່ງຂຶ້ນມາ ຄື

1. ຂົງເຂດຂອງສຳນວນສິລະປະ
2. ຂົງເຂດຂອງສຳນວນເສີນທະນາ
3. ຂົງເຂດຂອງສຳນວນວິຊາການ
4. ຂົງເຂດຂອງສຳນວນໂຄສະນາ

ໜ້າທີ່ຂອງບົດແມ່ນຜູ້ສ້າງສຳນວນແບບພາວະວິໄສ ຊຶ່ງປາກົດຕົວຄືມາດຕະຖານພື້ນຖານສຳລັບການຈຳແນກຄວາມແຕກຕ່າງຂອງພາຫະນະສື່ສານຕ່າງໆ; ມັນເປີດໂອກາດໃຫ້ສະມາຊິກທີ່ແນ່ນອນກວ່າ ແລະ ຊັດເຈນກວ່າຂອງບັນດາພາຫະນະສື່ສານເຂົ້າຮ່ວມໃນຂົງເຂດສຳນວນ, ໂດຍສະເພາະໃນຂົງເຂດຂອງສຳນວນສິລະປະ, ຂົງເຂດຂອງສຳນວນສິນທະນາ, ຂົງເຂດຂອງສຳນວນວິຊາການ ແລະ ຂົງເຂດຂອງສຳນວນໂຄສະນາ.

ບາງເທື່ອບັນດາຂົງເຂດສຳນວນພື້ນຖານຕ່າງໆເຫຼົ່ານີ້ ຍັງສາມາດແຍກອອກເປັນຫຼາຍຂົງເຂດສຳນວນທີ່ສຳຮອງອື່ນໆອີກ, ເຊັ່ນ ຂົງເຂດຂອງສຳນວນສິນທະນາສາມາດແບ່ງອອກເປັນຂົງເຂດຂອງສຳນວນສິນທະນາລະຫວ່າງສອງຄົນ ຫຼື ຫຼາຍຄົນ ຊຶ່ງຈຸດເດັ່ນພິເສດຂອງມັນແມ່ນການສັບປ່ຽນຜູ້ເວົ້າ. ຈາກຂົງເຂດຂອງສຳນວນວິຊາການ ສາມາດແບ່ງອອກເປັນຫຼາຍຂົງເຂດຂອງສຳນວນຍ່ອຍໆດ້ານວິທະຍາສາດ ຊຶ່ງຈຸດເດັ່ນພິເສດຂອງມັນແມ່ນການສື່ສານຜົນສຳເລັດດ້ານວິທະຍາສາດຢູ່ໃນລະດັບທີ່ດີ. ນອກນັ້ນ, ຈາກຂົງເຂດຂອງສຳນວນວິຊາການ ຍັງສາມາດແບ່ງອອກເປັນຂົງເຂດຂອງສຳນວນວິຊາການດ້ານພາກປະຕິບັດຕົວຈິງ, ຂົງເຂດຂອງສຳນວນວິຊາການທີ່ມີຄ່ານິຍົມສູງ ແລະ

ຂົງເຂດຂອງສຳນວນວິຊາການໃນດ້ານການບໍລິຫານ. ຈາກຂົງເຂດຂອງສຳນວນໂຄສະນາສາມາດແບ່ງອອກເປັນຂົງເຂດຂອງສຳນວນໂຄສະນາດ້ວຍການເວົ້າແລະໂຄສະນາດ້ວຍການຂຽນ(ການພິມ).

ເພາະສະນັ້ນ ໃນທີ່ນີ້ຈຶ່ງເກີດມີຫຼາຍພາຫະນະສື່ສານທີ່ມີລັກສະນະປົນເປກັນ; ຊຶ່ງພວກເຮົາສາມາດເວົ້າໄດ້ວ່າ ການປະສົມປະສານຂອງຈຸດຢືນທັ້ງໆສາມາດແມ່ນອັນໃດກໍໄດ້ ແລ້ວແຕ່ຄວາມເໝາະສົມຂອງແຕ່ລະຢ່າງກັບຂົງເຂດຂອງສຳນວນຕ່າງໆ.

ຕົວຢ່າງ: ການໂອ້ລົມລະຫວ່າງໝູ່ເພື່ອນດ້ວຍກັນໂດຍນຳເອົາຮູບແບບໃນພື້ນຖານການສົນທະນາມາໃຊ້ຊຶ່ງມັນຈະຖືກຈັດເຂົ້າໃນຂົງເຂດຂອງສຳນວນບົດເວົ້າ, ສ່ວນຕົວ, ບໍ່ໄດ້ກະກຽມ ແລະ ພ້ອມດ້ວຍ ມີການສຳພັນແບບຫາງກົງຂອງຜູ້ເຂົ້າຮ່ວມການສົນທະນາ.

ຄຳຖາມ:

1. ຈົ່ງນຳເອົາບົດໃດບົດໜຶ່ງມາສະເໜີ ແລະ ບອກໃຫ້ຮູ້ພ້ອມວ່າ ບົດນັ້ນໄດ້ຖືກຈັດເຂົ້າຢູ່ໃນຂົງເຂດຂອງສຳນວນໃດ? ເພາະເຫດໃດ?
2. ໂດຍອີງຕາມທັງຜູ້ສ້າງສຳນວນແບບອັດຕະວິໄສ ແລະ ພາວະວິໄສ ເພິ່ນແບ່ງຂົງເຂດຂອງສຳນວນອອກເປັນຈັກຂົງເຂດ? ຄືຂົງເຂດໃດແດ່?

6. 2 ລະດັບຂອງສຳນວນ .

ລະດັບຂອງສຳນວນແມ່ນຈຸດລວມຂອງບັນດາພາຫະນະພາສາ ທີ່ກຶກນຳໃຊ້ເຂົ້າໃນບົດພາສາ ຊຶ່ງນອນຢູ່ໃນຂົງເຂດຂອງສຳນວນທີ່ແນ່ນອນໃດໜຶ່ງ ແລະ ກຶກສຳນຶກວ່າມັນຄືສິ່ງສະເພາະໃດໜຶ່ງ.. ເຂົ້າຮ່ວມກັບບັນດາພາຫະນະຊະນິດນີ້ ມີພາຫະນະດ້ານອັກຂະຫຼະ, ດ້ານຮູບແບບ, ດ້ານການສ້າງ ສຳນວນ, ດ້ານວາກະຍະສຳພັນ ແລະ ດ້ານວັດຈະນາ. ອີງຕາມໃຈຄວາມສະເພາະຂອງແຕ່ລະລະດັບ ຂອງສຳນວນ, ບັນດາພາຫະນະພາສາທັງໝົດທີ່ກຶກນຳໃຊ້ໃນບົດພາສາຕົວຈິງ ຊ້ຳພັດບໍ່ສິ້ນສຸດ; ຊຶ່ງບາງ ເທື່ອພວກມັນອາດກຶກນຳໃຊ້ໃນບົດແນວໃດກໍໄດ້ ແລະ ໃນຂົງເຂດໃດກໍໄດ້ ໂດຍແລ້ວແຕ່ຄວາມເໝາະ ສົມ,

ຕົວຢ່າງ:

- ເພື່ອເປັນການສະດວກໃນການດູແລຮັກສາບ່ອນລ້ຽງປາ ຄວນຈະເລືອກເອົາໄຮ່ນາທີ່ໃກ້ກັບບ້ານ ຫຼື ໃກ້ກັບກຽງນາຂອງທ່ານເອງ. (ຈາກຂົງເຂດຂອງສຳນວນວິຊາການກ່ຽວກັບການລ້ຽງປາໃສ່ນາເຂົ້າ)
- ພວກເຮົາຈະລໍເຈົ້າຢູ່ທີ່ປະຕູໂຂງມະຫາວິທະຍາໄລແຫ່ງຊາດ ດ້ານທິດຕາເວັນອອກ ເວລາ8ໂມງ.. (ຈາກຈົດໝາຍສ່ວນຕົວ - ຂົງເຂດສ່ວນຕົວ)
- ຢູ່ເທິງພູອາດຈະມີຫິມະຕົກໃນຕອນກາງຄືນ. (ຈາກຂ່າວພະຍາກອນອາກາດ)
- ສາຍລົມແຮງທີ່ອຸບັດຂຶ້ນຢ່າງກະທັນຫັນ ໄດ້ອູ້ມເອົາໂງ່ນເມກດຳເປັນເງົາໆ ເລື່ອນລອຍຈາກ ທິດຕາເວັນອອກສຽງໃຕ້ມາສູ່ສາຍພູຫຼວງຢ່າງໄວວາ, ທັງແຝດສຽງຮ້ອງສະນັ່ນເມືອງນັນປານຟ້າຊຸ ຂວ້ຳດິນຊຸປັ້ນຊົ່ວພິບຕາດຽວ, ມອງຟ້າສີຄາມທີ່ເຕັມໄປດ້ວຍກ້ອນເມກດຳບັງເລື່ອມເຂົ້າຈົນລັບໄປຈາກ ເວຫາ. (ຈາກເລື່ອງຝົນສັ່ງຟ້າ ໂດຍ: ທະນູໄຊ).
- ຢ່າເວົ້າດັງຫຼາຍ ຫ້ອງນັ້ນມີປະຊຸມ ! (ຈາກບົດໂອ້ລົມສົນທະນາກັບ)

ດັ່ງນັ້ນສາມາດສະຫລຸບໄດ້ວ່າ:

1. ແຕ່ລະຂົງເຂດສຳນວນຂອງບັນດາພາຫະນະພາສາມີລະດັບສຳນວນ ແລະ ເປົ້າໝາຍ ເປັນຂອງຕົນເອງ.
2. ບົດພາສາແມ່ນກຶກສ້າງຂຶ້ນດ້ວຍບັນດາພາຫະນະພາສາທີ່ມີລະດັບສຳນວນປານກາງ ແລະ ມີເປົ້າໝາຍ.

ຂໍ້ສະຫລຸບນີ້ ສະໜອງຄວາມເປັນຈິງໃນຈຸດທີ່ເວົ້າກ່ຽວກັບການຈັດແບ່ງບັນດາພາຫະນະພາສາ ຈາກຈຸດຢືນດ້ານລະບົບ. ສ່ວນດ້ານອື່ນໆ ຄວາມເປັນຈິງຊ້ຳພັດກຶກປາກົດຕົວໃຫ້ຜູ້ຮັບບົດຕົວຈິງຮັບຮູ້ວ່າ ນ້ຳວ່າ ລະດັບສຳນວນຂອງບັນດາພາຫະນະພາສາຕອບສະໜອງການນຳໃຊ້ໃນບົດຕົວຈິງຂອງຄວາມ ເໝາະສົມຂອງບົດນັ້ນກັບຂົງເຂດຂອງສຳນວນທີ່ໃຫ້, ບັນດາພາຫະນະພາສາໃນລະດັບສຳນວນນັ້ນສິ່ງ ຜົນສະທ້ອນເຖິງຜູ້ຮັບບົດໂດຍບໍ່ໄດ້ຄາດໝາຍໄວ້ໃນດ້ານການນຳໃຊ້ສຳນວນ.

ຕົວຢ່າງ: ບັນດາຫົວຂໍ້ວິຊາການ ໃນບັນດາບົດຂອງຂົງເຂດສຳນວນວິຊາການທີ່ໄດ້ຕັ້ງເປົ້າໝາຍໄວ້ ກ່ອນ ຫຼື ກຳລັງລໍ້ກ້ຳຢູ່. ບາງເທື່ອໃນກໍລະນີແນວນີ້ ອາດເວົ້າເຖິງການພະຍາກອນການປາກົດຕົວ ຂອງຄຳສັບ.

ຈາກຈຸດຢືນດ້ານຄວາມເໝາະສົມກັບລະດັບຂອງສຳນວນ ສາມາດຈັດແບ່ງບັນດາພາຫະນະ ພາສາໃສ່ແຕ່ລະລະດັບຄຳຕອບດ້ວຍແຕ່ລະຂົງເຂດສຳນວນ ແລະ ຕໍ່ໄປຈຶ່ງສາມາດຈັດໃສ່ແຕ່ລະລະດັບ ຂອງສຳນວນ ຄື ລະດັບສຳນວນທົ່ວໄປ, ລະດັບສຳນວນສົນທະນາ, ລະດັບສຳນວນວິຊາການ,

ລະດັບສຳນວນໂຄສະນາ, ລະດັບສຳນວນສິລະປະ ແລະ ລະດັບສຳນວນທາງການ, ເຊິ່ງຈະໄດ້ອະທິບາຍແຈ້ງໃນຂໍ້ຕໍ່ໄປ (8. 3).

<u>ຄຳຖາມ:</u>

1. ຈົ່ງຊອກຫາບັນດາພາຫະນະພາສາ ທີ່ນອນຢູ່ໃນຂົງເຂດ ແລະ ລະດັບຂອງສຳນວນສິລະປະ ຢູ່ໃນປຶ້ມວັນນະຄະດີເລື່ອງຕ່າງໆຂອງລາວເຮົາ.

2. ຈົ່ງບອກໃຫ້ຮູ້ວ່າ ບັນດາຄຳສັບທີ່ຂີດກ້ອງໄວ້ໃນບົດກະວີຕໍ່ໄປນີ້ ແມ່ນນອນຢູ່ໃນຂົງເຂດ ແລະ ລະດັບສຳນວນໃດ ?

- ຈົ່ງອະທິບາຍວ່າການນຳໃຊ້ສຳນວນແນວນີ້ໃນບົດກາບກອນຄາດວ່າມັນມີໜ້າທີ່ແນວໃດ ?

+ ຫອມໃດໃນໂລກນີ້	ບໍ່ປຸນປຽບຈຳປາ ດອກນາ
ຫອມທົ່ວທົ່ງ<u>ເວຫາ</u>	<u>ເມກຂະລາ ແຕນດ້າວ</u>
ຫອມ<u>ມີ</u> ເບົາບາງໄດ້	ພໍພຽງ <u>ຍາມຍິບ</u>
ຫອມ<u>ກິບ</u>ດວງ<u>ລື່ນ</u>ອົ້ມ	ຍາມລົມຕ້ອງກິ່ນມາ...

(ໂດຍ: ພ. ພວງສະບາ, *ຫອມກິ່ນຈຳປາ*)

+ ວັດ<u>ກຸ</u>ສິ່ງຂອງ	<u>ຂອງ</u>ລວມ<u>ຂອ</u>ງ<u>ລັ</u>ດ
ຊ່ວຍ<u>ກັ</u>ນ<u>ປະ</u>ຢັດ	ຊ່ວຍຊາດຮັກສາ
ຮູ້ແຜ່ງຮູ້ໃຊ້	<u>ບໍ່</u>ໃຊ່ໄດ້ລ້າ
ຮູ້ແຜ່ງ<u>ຄຸ</u>ນ<u>ຄ</u>ຳ	ຄຸນຊາດມອບໝາຍ ທ່ານເອີ້ຍ

(ຈາກ: ໂທລະພາບແໜ່ງຊາດລາວ)

3. ຈົ່ງຊອກຫາອົງປະກອບຂອງສຳນວນສິລະປະ ແລະ ສຳນວນໂອ້ລົມທຳມະດາຢູ່ໃນບົດກອນຕໍ່ໄປນີ້ ພ້ອມທັງ ບອກໜ້າທີ່ຂອງພວກມັນພ້ອມ.

+ ດຽວນີ້ຂອງເຄື່ອງໃຊ້	ລາຄາໂພດແພງຫຼາຍ
ລາຄາຂາຍຄວ່ຳມ<u>ກິ</u>ບ	ກໍ<u>ເ</u>ພີ່ມ<u>ເ</u>ຕີມ<u>ເ</u>ຕັ້ງໜ້າ
ເຂົ້າວ່າເງິນລາວ "ເຟີ້"	ລາຄາ<u>ເ</u>ຝີ<u>ຈົ</u>ງ<u>ແ</u>ປງ<u>ໃ</u>ໝ່
ແພງ<u>ຣ</u>ອດ<u>ແ</u>ໜງ<u>ທ</u>ໍ່ໄມ້	ຫອຍ<u>ກຸ</u>ງ<u>ໄ</u>ກ່<u>ບ</u>ຳ
+ ລົດ "ເທ<u>ນ</u>ໍ" <u>ແ</u>ຮ່ງ<u>ບ</u>ໍ່<u>ເ</u>ວ້ົ	ລາຄາ<u>ເ</u>ກົ່ າ<u>ກ</u>ໍ່ຍັງ<u>ສ</u>ູງ
<u>ເ</u>ຮັດ<u>ໃ</u>ຫ້ລຸງ<u>ທ</u>ອງ<u>ສ</u>ຳ	<u>ເ</u>ມື່ອ<u>ຍ</u>ະ<u>ອ</u>ຳ<u>ໂ</u>ອຍ<u>ເ</u>ອ້ົ
ສ<u>າ</u>ວ<u>ຄ</u>ຳ<u>ເ</u>ຜົ<u>າ</u>ຫ<u>ຼ</u>ານ<u>ຫ</u>ຼ້ ຳ	ວິ<u>ນ</u>ເທ<u>ນ</u>ຳ<u>ຊ</u>ື້ "ເທ<u>ນ</u>ໍ"
<u>ແ</u>ຕ່ວ່ານ<u>ຳ</u>ທິ່ງ<u>ນ</u>້ອຍ	ຂ<u>ຍ</u>ຍ<u>ເ</u>ອົ້ າ<u>ກ</u>ໍ່<u>ບ</u>ໍ່<u>ໄ</u>ຫວ
+ ປ້ ຳ<u>ສ</u>ຍ<u>ໃ</u>ຈ<u>ຈ</u>ິ່ ມ<u>ຈ</u>ໍ້ ອຍ	ສ<u>ຽ</u>ງ<u>ອ</u>ໍ່ ອຍ<u>ໆ</u>ໂ<u>ອ</u>ຍ<u>ອ</u>ຸ<u>ກ</u>
ທຸ<u>ກ</u>ຄ<u>ອ</u>ບ<u>ລ</u>າ<u>ຄ</u>ຳ<u>ປ</u>ູນ	ສ<u>ຽ</u>ດ<u>ພ</u>ູ<u>ແ</u>ພ<u>ງ</u>ລ<u>ົ</u>ວ
<u>ບ</u>ໍ່ ວ<u>ຄ</u>ຳ<u>ປ</u>ົ<u>ວ</u>ຄ<u>ຳ</u>ງ<u>ໂ</u>ອ້	ໂ<u>ອ</u>ນ<u>ລ</u>ຳ<u>ບ</u>າ<u>ກ</u>

ຍາກຄອບເບຍຄອບເຫຼົ້າ
+ ກະວີພາຍບອກນ້ອງ
ຄັນຊິເອົາຕາມໃຈ
ຂໍໃຫ້ແອວບາງນ້ອງ
ຄັນຈຳເປັນກໍ່ໃຫ້
+ ເພິ່ນຜູ້ເປັນແມ່ປ້າ
ຄັນອັນໃດພໍແປງ
ບໍ່ຄວນໄຂ່ງຶ້ງຊື້
ຢອມເງິນເອົາຈ່າຍຊື້
+ ສ່ວນວ່າທາງຝ່າຍກ້າ
ທີ່ມັກເອົາເບຍເປັນ
ແອວອ່ອນນຳວົງເຫຼົ້າ
ກໍ່ຕ້ອງລອງໄລ່ໃຫ້
+ ຢ່າໄດ້ເມົາມ່ວນເລື້ອຍ
ໄດ້ປົດໂມງຈຳແໜວນ
ກິນຫຼາຍເກີນເງິນແລ້ວ
ຫາວ່າເງິນກີບ "ເຟີ້"
ໂຕລະເມີຊ້ຳບໍ່ເວ້ົາ

ເຂົ້າຂຶ້ນຄ່າຂາຍ
ນາງຊື່ຄຳເພົາ
ແມ່ນບໍ່ໄຫວພໍ່ລຸງແຫລ້ວ
ລອງຕອງຕວງໄລ່
ຫາຊື້ສ່ຳເງິນ
ນາມວ່າສາຍໃຈ
ປູກກິນເອງໄດ້
ເສຍເງິນໄປເປົ່າ
ຂອງໃຊ້ສິ່ງຄວນ
ຊາຍໜຸ່ມຊຸມສາວ
ເພື່ອນແພງພາຢ້ອນ
ຍາມເມົາເຕັ້ນດ່ອງໆ
ມັນກ້ຳກຶ່ງກະເປົ໋າ
ຍາມຈ່າຍລືມຫຼົ້ງ
ແລ່ນຫາເງິນໃຊ້
ວ່າເງິນລາວບໍ່ມີຄ່າ

ຫາກຸ້ມໂທດໃສ່ເງິນ.

(ໂດຍ: ຍົ້ມແຍມ, *ກະວີຊາວບ້ານ*, ວັນນະສິນ, ຫັນວາ 1997, ໜ້າ 35)

6. 3 ຊະນິດຂອງສຳນວນ = ๑๓๗

ຊະນິດຂອງສຳນວນແມ່ນສ້າງຂຶ້ນໂດຍອີງຕາມປະເພນີທີ່ແນ່ນອນໃດໜຶ່ງ ທີ່ກຶກນຳໃຊ້ໃນບັນດາ ອົງເຂດຂອງສຳນວນຕ່ຳໆໄປ. ປະເພນີເຫຼົ່ານີ້ແມ່ນຂຶ້ນກັບບັນດາຜູ້ສ້າງສຳນວນ ແລະ ປ່ຽນແປງໄປຕາມ ການເວລາ. ມັນກຳນົດການເລືອກເຟັ້ນບັນດາພາຫະນະພາສາຢູ່ໃນການສື່ສານໃນຂັ້ນຕ່ຳໆໄປຂອງອົງ ເຂດສຳນວນ. ບາງປະເພນີມີການນຳໃຊ້ຕາມຫຼັກການ ແລະ ກົດເກນທີ່ແນ່ນອນ.ໃນທີ່ນີ້ພວກເຮົາ ສາມາດເວົ້າໄດ້ວ່າ ຊະນິດຂອງສຳນວນ ແມ່ນກຶກສ້າງຂຶ້ນດ້ວຍຈຸດລວມຂອງກົດເກນສຳນວນທີ່ໃຊ້ໃນ ອົງເຂດຂອງສຳນວນຕ່ຳໆໄປ. ພ້ອມທັງຈຳແນກບັນດາຄວາມແຕກຕ່າງ ຂອງພວກມັນ.

ຕົວຢ່າງ: ຊະນິດຂອງສຳນວນສິນທະນາ, ຊະນິດຂອງສຳນວນໂຄສະນາ, ຊະນິດຂອງສຳ ນວນ ສິລະປະ, ຊະນິດຂອງສຳນວນວິຊາການ ແລະອື່ນໆ.

<u>ຄຳຖາມ:</u>

1. ອົງເຂດ ແລະ ຊະນິດ ຂອງສຳນວນມີການພົວພັນຊຶ່ງກັນແລະກັນແນວໃດ?

24 / VII

ຫ້າມຈຳໜ່າຍ

7. ໜ້າທີ່ຕ່າງຂອງສຳນວນ ແລະ ວິທີການສະແດງອອກຂອງພວກມັນ

ການເລືອກເຟັ້ນບັນດາພາຫະນະພາສາ ເພື່ອເຮັດໜ້າທີ່ໃຫ້ເໝາະສົມກັບບໍລິບົດ ແມ່ນຈຳເປັນຕ້ອງ ໄດ້ນຳໃຊ້ຢູ່ໃນກໍລະນີຕົວຈິງທັງໝົດທົ່ວໂຄງສ້າງຂອງບໍລິ. ໂດຍອີງຕາມບັນຫາດັ່ງກ່າວ ບັນດາພາຫະ ນະພາສາຈະຖືກນຳໃຊ້ໃຫ້ກ່ຽວຂ້ອງສຳພັນຢ່າງຮັດກຸມກັບໜ້າທີ່ຂອງບໍລິ, ຈາກນັ້ນແມ່ນອີງຕາມວິທີ ການໃດໜຶ່ງທີ່ຖືກນຳໃຊ້ຫຼາຍກວ່າ ແລະ ສຸດທ້າຍແມ່ນອີງຕາມໜ້າທີ່ດ້ານການສະທ້ອນຄວາມງາມ ຂອງພາສາ. ໃນທີ່ສຸດ ຢູ່ໃນບັນດາບໍລິພາສາ ຈະຖືກຈັດສຳນວນຕ່າງໆເຂົ້າໃສ່ຢ່າງແຕກຕ່າງກັນ.

7. 1 ໜ້າທີ່ຂອງສຳນວນສົນທະນາ

ໜ້າທີ່ຂອງສຳນວນສົນທະນານີ້ຖືກຮຽກອີກຢ່າງອື່ນວ່າ ສຳນວນທຳຄວາມເຂົ້າໃຈແບບທົ່ວໆ ໄປ. ຄວາມໝາຍຂອງຄຳວ່າ"ທົ່ວໆໄປ" ສະແດງເຖິງສະພາບແວດລ້ອມ ທີ່ບັນດາບໍລິຂອງສຳນວນ ຊະນິດນີ້ເກີດຂຶ້ນ. ມັນແມ່ນບັນດາບໍລິ ທີ່ຖືກນຳໃຊ້ໃນການທຳຄວາມເຂົ້າໃຈທົ່ວໆໄປໃນແຕ່ລະວັນ ພາຍໃນຄອບຄົວ, ໃນການສົນທະນາໃນທີ່ທຳງານ, ຕາມກະໜົນຫົນທາງ, ໃນເວລານັ່ງຢູ່ໃນຮິ່ມໄມ້ ກັບໝູ່ເພື່ອນ ແລະອື່ນໆ.

ກ່ຽວກັບການສົນທະນານີ້ ມັນມີຢູ່ໃນລະດັບທີ່ຫຼວງຫຼາຍກວ່າບໍລິຂຽນອື່ນໆ. ແມ່ນແຕ່ຢູ່ໃນການ ແລກປ່ຽນຄຳຄິດຄຳເຫັນແບບສ່ວນຕົວ, ຢູ່ໃນການຈົດບັນທຶກ ຫລື ຈາລຶກທີ່ບໍ່ແນ່ນອນໃດໜຶ່ງຂອງ ສັງຄົມ ລ້ວນແຕ່ມີໜ້າທີ່ຂອງສຳນວນສົນທະນາ, ແມ່ນກະທັ້ງຮູບແບບຂອງການຂຽນຕ່າງໆ. ບັນດາ ບໍລິສ່ວນໃຫຍ່ຈະບໍ່ໄດ້ກະກຽມໄວ້ກ່ອນ, ເປັນແບບສ່ວນບຸກຄົນ, ເປັນແບບບໍລິສົນທະນາ, ສາຍ ພົວພັນ ກັບຜູ້ຟັງ ຫຼື ຄູ່ສົນທະນາແມ່ນຫາງກົງ, ສະມາຄົມຂອງຜູ້ເຂົ້າຮ່ວມຕາມປົກກະຕິ ແມ່ນຢູ່ໃນວົງແຄບ.

ບັນດາບໍລິຂອງໜ້າທີ່ສຳນວນສົນທະນາ ຖືກປາກົດຕົວທັງໃນຮູບແບບພາສາສົນທະນາຂອງ ພາ ສາ ທີ່ໄດ້ມາດຕະຖານ ແລະ ບໍ່ໄດ້ມາດຕະຖານ; ຊຶ່ງມັນຈະເກີດຂຶ້ນເລື້ອຍໆ ແລະ ເປັນພາສາສົນ ທະນາທີ່ທຳມະດາ. ດ້ວຍເຫດນີ້ ໂດຍທົ່ວໄປແລ້ວ ມັນຈະເປັນສຳນວນນາງ(ທ້ອງຖິ່ນ (interdialect). ສຳນວນທົ່ວໄປ ຫຼື ພາສາປາກເວົ້າຂອງບັນດາຕົວເມືອງຕ່າງໆ. ທຸກວັນນີ້ ເຫັນວ່າພາສາທ້ອງ ຖິ່ນຖືກ ນຳໃຊ້ໜ້ອຍ ແລະ ຢູ່ຕາມເຂດຊົນນະບົດບາງບ່ອນ ພຽງແຕ່ຄົນຮຸ່ນອາ ວຸໂສເທົ່ານັ້ນຍັງໃຊ້ມັນຢູ່. ຄວາມແຕກຕ່າງດ້ານຮຸ່ນຄົນ ສາມາດມີຜົນກະທົບຕໍ່ການນຳໃຊ້ພາສາ ໂດຍທົ່ວໄປຊຶ່ງນັບ ທັງພາສາ ສົນທະນາຂອງຕົວເມືອງຕ່າງໆ. ຄົນຮຸ່ນໃໝ່ມັກນຳເອົາບາງຈຸດ ທີ່ພົບເຫັນໂດຍສ່ວນຕົວເຂົ້າມານຳ ໃຊ້ໃນຮູບແບບຂອງສຳນວນສົນທະນານີ້.

ບັນດາບໍລິຂອງໜ້າທີ່ສຳນວນສົນທະນານີ້ ສາມາດຄົ້ງຕົວຢູ່ທັງໃນຮູບລັກສະນະການວິວັດສຳ ນວນຢ່າງມີເຈດຕະນາ; ຊຶ່ງຈະປາກົດເຫັນຢູ່ໃນບໍລິເລື່ອງຕ່າງໆຂອງວັນນະຄະດີສະໄໝປັດຈຸບັນ, ໃນຮູບ ເງົາ, ໃນບໍລະຄອນ, ໃນການຫຼິ້ນການສະແດງຕ່າງໆຢູ່ເທິງເວທີ, ຈາກວິທະຍຸກະຈາຍສຽງ ແລະ ຈາກໂທລະພາບ. ທັງໝົດນີ້ແມ່ນໝາຍເຖິງການວິວັດສຳນວນດ້ານສິລະປະ. ບາງເທື່ອຢູ່ໃນບໍລິສົນ ທະ ນາແບບນີ້, ມັກນຳໃຊ້ທັງພາກສ່ວນສຳນວນພາສາປາກເວົ້າ ແລະ ການຝັນສຽງ ທີ່ບໍ່ໄດ້ມາດຕະຖານ.

ບັນດາບໍລິຂອງໜ້າທີ່ສຳນວນສົນທະນາ ສ່ວນຫຼາຍຜູ້ສົນທະນາຈະພະຍາຍາມໃຊ້ພາສາ ທີ່ໄດ້ ມາດຕະຖານໃຫ້ຫຼາຍທີ່ສຸດຢູ່ໃນຮູບແບບການສົນທະນາຂອງເຂົາ. ສ່ວນບັນດາພາຫະນະ ທີ່ບໍ່ໄດ້ມາດ ຕະຖານແບບໃດແບບໜຶ່ງ ຈະປາກົດອອກມາໃຫ້ເຫັນໃນບໍລິສົນທະນາຕົວຈິງໃນລະດັບທີ່ແຕກຕ່າງກັນ.

ຄຳຖາມ:

1. ຈົ່ງສຶກສາເບິ່ງການນຳໃຊ້ສຳນວນສຸພາສິດໃນບົດຂຽນຂອງນັກປະພັນຄົນໃດຄົນໜຶ່ງໃນວັນນະຄະດີປັດຈຸບັນຂອງລາວເຮົາ.
2. ຈົ່ງອັດເອົາການສົນທະນາຂອງບັນດານັກສຶກສາໃສ່ກະແຊັດ ແລະ ຈົ່ງທົດລອງວິໄຈກ່ຽວກັບລັກສະນະສຳນວນຂອງບົດທີ່ໄດ້ບັນທຶກໄວ້ນັ້ນ. ຈົ່ງສັງເບິ່ງສຳນວນສົນທະນາ ແລະ ສຳນວນການຜັນສຽງຂອງນັກສຶກສາແຕ່ລະຄົນ.
3. ຈົ່ງສົມມຸດວ່າທ່ານຈົດໝາຍສ່ວນຕົວສະບັບນີ້ຈາກຈຸດຢືນດ້ານສຳນວນ. ຈົ່ງສັງເກດ ແລະ ຊອກຫາສຳນວນສຸພາສິດ:

ສະຫວັນນະເຂດ 10.11.98

ຈ່ອຍທີ່ຄິດເກົ່າ.

ກ່ອນອື່ນໝົດເຮົາຂໍຂໍໂທດ່ເຈີ້ນທີ່ໂຕຝາກໄປໃຫ້ຊີ້ເຮົາໄດ້ຮັບມັນເປັນທີ່ຮຽບຮ້ອຍແລ້ວ.. ພ້ອມກັນນັ້ນ ກໍ່ຂອຝາກກ່ຳໄປເກົ່າດ້ວຍຄວາມປອດໄພ. ຂຣ໌ໃຈຫຼາຍໆ.

ຊ່ວງປີເຮົ່ານ່ ຄ່ອຍສະບາຍດີປານໃດ ໂດຍສະເພາະແມ່ນມືຂອງເຮົ່ານັ້ນແຫ່ະ ໂຕຄ່ຳຮູ້ດີມັນມັກ ເຈັ້ນໂນ ລະດູໜາວຂອງທຸກໆປີ. ແຕ່ດຽວປີມັນຍ້ອນຍ້ຳໄດຍືນມານດ່ແລ້ວ. ໄລຍະປີອາກາດໜາວ ເພາະສະນັ້ນ ເຮົ່າຈິ່ງນ່ສູ້ໄປໄສ. ບາງເທື່ອເຮົ່າອາດຈະໄດ້ມາຊ່ວງຕົ້ນໃນມ່ໆປີ ເພາະວ່ານ່ມືຂອງເຮົ່າ ເປັນເຈັ້ນ ແລະ ບາງ ທີອາດຈະໄດ້ເອົ່າເພິ່ນມາເຍ້ຳເຮົ່ານ່ໜ່ໍ ທ້ວຊ່ວງຕົ້ນປີ. ໂຕເດ? ເປັນແນວໃດ? ໂຕ ສະບາຍດີບ່? ຄອບຄົວຂອງ ໂຕເດ? ສະບາຍດີກັນໝົດທຸກຄົນບ່? ຝາກຄວາມຄິດຮອດ ຄິດເກົ່າຫາໝົດທຸກຄົນເດ ແລະ ຫວ້ຳວ່າຈະໄດ້ພົບ ໂຕໃນໄວໆນ້ ປີ.

ດ້ວຍຄວາມຄິດເກົ່າ;
ເພ່ືອນຂອງ ໂຕ
ນະນີຈັນ

ວ່ານ.

7. 2 ໜ້າທີ່ຂອງສຳນວນວິຊາການ

ໂດຍອີງຕາມແຕ່ລະໜ້າທີ່ ທີ່ຖືກສ້າງຂຶ້ນດ້ວຍບັນດາພາຫະນະການສື່ສານຕົວຈິງ, ໜ້າທີ່ຂອງສຳນວນວິຊາການຖືກແບ່ງອອກເປັນສຳນວນດ້ານທິດສະດີ, ສຳນວນດ້ານພາກປະຕິບັດຕົວຈິງ ແລະ ສຳນວນທີ່ສ້າງໃຫ້ປວງຊົນນິຍົມຊົມຊອບ.

7. 2.1 ສຳນວນດ້ານທິດສະດີ (ດ້ານວິທະຍາສາດ ແລະ ດ້ານການສຶກສາ)

ແມ່ນບັນດາສຳນວນທີ່ໃຊ້ໃນບັນດາປຶ້ມວິທະຍາສາດ, ໃນບົດຮຽນ, ໃນການສຶກສາ, ໃນປຶ້ມແບບຮຽນຂອງໂຮງຮຽນຕ່າງໆ ແລະອື່ນໆ. ຈຸດປະສົງຂອງພາຫະນະການສື່ສານທັງໝົດເຫຼົ່ານີ້ ແມ່ນແນໃສ່ຂະຫຍາຍ ແລະ ເຜີຍແຜ່ຂະແໜງການວິທະຍາສາດໃນດ້ານທິດສະດີ. ຄວາມຮຽກຮ້ອງຕ້ອງການພື້ນຖານໃນການປັບປຸງສຳນວນໃນບັນດາບົດໃນຂົງເຂດນີ້ ແມ່ນຄວາມຊັດເຈນ ໂດຍມີເປົ້າໝາຍທີ່ແນ່ນອນໃດໜຶ່ງ ແລະ ຄວາມເຕັມປ່ຽມຂອງການສະແດງອອກ. ຄຸນນະພາບຂອງສຳນວນໃນດ້ານນີ້ ຈະປາກົດຜົນເປັນຈິງໃນບົດຮຽນທີ່ມີການຮຽນຢ່າງເຜິງຄິດຜິຈາລະນາທີ່ກ້ວນ, ມີການປັບປຸງໂຄງສ້າງປະໂຫຍກຢ່າງຄັກແນ່ ແລະມີການນຳໃຊ້ປະມວນຄຳສັບວິທະຍາສາດທີ່ຖືກຕ້ອງ ແລະຊັດເຈນ.

7. 2. 2 ສຳນວນດ້ານພາກປະຕິບັດຕົວຈິງ (ໃນວຽກງານຕົວຈິງ)

ແມ່ນສຳນວນຂອງບັນດາພາຫະນະການສື່ສານ ທີ່ນຳເອົາການປະຕິບັດຂັ້ນຕອນສຸດທ້າຍຈາກດ້ານທິດສະດີຂອງກົດໝາຍວິທະຍາສາດ ດ້ວຍການສຳພັນທາງດ້ານໜ້າທີ່ທາງພາກປະຕິບັດຕົວຈິງ ເຂົ້າສູ່ການຝຶກຫັດ, ເຂົ້າສູ່ການແກ້ໄຂບັນຫາຕົວຈິງທີ່ສຳພັນກັບວຽກງານ ແລະ ການບໍລິຫານ (ຕົວຢ່າງໃນວຽກງານທາງລັດຖະການ,ໃນວຽກງານການຄ້າຂາຍ ແລະອື່ນໆ). ປັດໄຈພື້ນຖານໃນການປັບປຸງສຳນວນຂອງບົດຂະນິດນີ້ແມ່ນຄວາມຊັດເຈນ, ວັດຖຸຕົວຈິງ, ການເບິ່ງບັນຫາ ໂດຍສັງເຂບ ແລະ ຄວາມເປັນຈິງທີ່ແນ່ນອນຂອງການສະແດງອອກ ທີ່ອາດເປັນໄປໄດ້ ໃນແຕ່ລະກໍລະນີຂອງບົດທີ່ກ່ຽວກັບວຽກງານບໍລິຫານ ແລະ ບັນດາເນື້ອໃນຕ່າງໆຂອງການສື່ສານ. ໃນການສື່ສານປະເພດນີ້ສ່ວນຫຼາຍແມ່ນນຳໃຊ້ບັນດາສັບວິຊາການ.

7. 2. 3 ສຳນວນທີ່ສ້າງໃຫ້ປວງຊົນນິຍົມຊົມຊອບ (ສຳນວນວິຊາການທີ່ນິຍົມຊົມຊອບ)

ແມ່ນສຳນວນຂອງການສື່ສານ ຊຶ່ງຈຸດປະສົງຫຼັກແມ່ນສ້າງຄວາມນິຍົມຊົມຊອບໃຫ້ແກ່ປວງຊົນ ແລະເຜີຍແຜ່ຜົນສຳເລັດຂອງຄວາມຮູ້ດ້ານວິທະຍາສາດໃນລະດັບທີ່ກວ້າງຂວາງຂອງສັງຄົມ. ວິທີການຂອງບົດຂະນິດນີ້ແມ່ນມີຄວາມຊັດເຈນຂອງການບັນຍັດໜ້ອຍ, ຫົວຂໍ້ຕ່າງໆຢູ່ໃນບົດແມ່ນຖືກອະທິບາຍ ຫຼື ຖືກລອກແບບເອົາມາ, ການສື່ສານມີການເຮັດໃຫ້ເຂັ້ມຂຸ້ນຂຶ້ນທາງດ້ານຄວາມເໝາະສົມໃນການສະແດງອອກ, ມັນພະຍາຍາມເຮັດໃຫ້ຜູ້ຮັບບົດເຂົ້າໃຈບົດວິຊາການງ່າຍຂຶ້ນ ຫຼື ຢ່າງໜ້ອຍກໍໃຫ້ໄດ້ຄວາມສົນໃຈກ່ຽວກັບຂອດບັນຫາວິຊາການຫຼາຍຂຶ້ນກວ່າເກົ່າ. ຈາກສາເຫດດັ່ງກ່າວມານັ້ນເຫັນໄດ້ວ່າຢູ່ໃນບົດປະເພດນີ້ມີການເລືອກເຟັ້ນການນຳໃຊ້ ແລະ ກຳຈັດບັນດາພາກສ່ວນ ສຳນວນວິຊາການທີ່ບໍ່ເໝາະສົມເພື່ອເຮັດໃຫ້ບົດມີຊີວິດຊີວາຂຶ້ນ.

ບັນດາບົດທີ່ມີໜ້າທີ່ດ້ານສຳນວນວິຊາການມີຮູບແບບດ້ານການຂຽນຢ່າງເຄັ່ງຄັດ, ໂດຍສະເພາະແມ່ນບົດທີ່ກ່ຽວກັບບັນດາວິທະຍາສາດຕ່າງໆ. ບັນດາພາຫະນະສື່ສານດ້ານການເວົ້າຂອງສຳນວນນີ້ ແມ່ນຕ້ອງຊີ້ໃຫ້ເຫັນວ່າ ມັນຄືບົດເວົ້າທີ່ສຳຮອງ ຫຼື ຕາມທຳມະດາບົດຈະຖືກກະກຽມ ເປັນຢ່າງດີດ້ວຍຮູບການຂຽນ. ບົດເວົ້າຈຳນວນຫຼາຍຖືກປາກົດຢູ່ໃນຂົງເຂດສຳນວນວິຊາການດ້ານພາກປະຕິບັດຕົວຈິງ. ຊຶ່ງມັນຄືກັນກັບຢູ່ໃນຂົງເຂດຂອງສຳນວນວິຊາການ ທີ່ສ້າງໃຫ້ປວງຊົນນິຍົມຊົມຊອບ; ແຕ່ວ່າຢູ່ໃນສອງຢ່າງນີ້ພັດຖືກຜູກມັດດ້ວຍບົດຂຽນ; ສ່ວນໃນກໍລະນີຂອງບົດເວົ້າຈະເປັນບົດເວົ້າທີ່ສຳຮອງ. ໃນຂົງເຂດບໍລິຫານແມ່ນການຂຽນ ແລະ ການພິມເປັນບັນຫາສຳຄັນຕົ້ນຕໍ ຂອງການສື່ສານ. ສິ່ງທີ່ປາກົດໃຫ້ເຫັນເລື້ອຍໆແມ່ນການປະກະກາກ່ຽວກັບວິທະຍາສາດ ແລະ ການໂຕ້ວາທີທີ່ພິເສດໃດໜຶ່ງ ຊຶ່ງບົດຈະຖືກນຳໃຊ້ດ້ວຍການເວົ້າໂດຍກົງ ໂດຍທີ່ບໍ່ໄດ້ກະກຽມໄວ້ລ່ວງໜ້າກ່ອນ. ຮູບແບບຂອງບົດເວົ້ານີ້ຈະປາກົດຂຶ້ນເລື້ອຍໆຄືກັນກັບໃນຂົງເຂດສຳນວນພາກປະຕິບັດຕົວຈິງດ້ານວິຊາການ.

ຮູບແບບຂອງໜ້າທີ່ສຳນວນວິຊາການແມ່ນບົດກ່ຽວທີ່ຮັດກຸມ, ໃນກໍລະນີຂອງບົດທີ່ສ້າງໃຫ້ປວງຊົນນິຍົມຊົມຊອບທີ່ຖືກນຳໃຊ້ໃນຮູບແບບການສົນທະນາ ແມ່ນບົດຂອງການໂອ້ລົມກັບໃນທີ່ທຳງານ ຫຼື ການສົນທະນາດ້ານວິຊາການໃດໜຶ່ງຜ່ານທາງໂທລະພາບ.

ສຳລັບບັນຫາຂອງບັນດາບົດທີ່ມີລັກສະນະສັງຄົມ ແລະ ເລັ່ງເປົ້າໝາຍໃສ່ສະມາຄົມຂອງ ຜູ້ຮັບສື່ສານທີ່ແຄບ ຫຼື ກວ້າງຂວາງແມ່ນມີຄວາມແຕກຕ່າງກັນ. ຢູ່ໃນກໍລະນີຂອງບົດວິທະຍາສາດ ແມ່ນມີຈຳນວນຜູ້ຮັບສື່ສານໜ້ອຍທີ່ສຸດ. ມີຈຳນວນຜູ້ຮັບສື່ສານຫຼາຍກວ່າແມ່ນຢູ່ໃນບົດຂອງສຳນວນພາກປະຕິບັດຕົວຈິງດ້ານວິຊາການ ແລະ ມີສະມາຄົມຜູ້ຮັບສື່ສານທີ່ກວ້າງຂວາງທີ່ສຸດແມ່ນຢູ່ໃນບົດທີ່ສ້າງໃຫ້ປວງຊົນນິຍົມຊົມຊອບ.

ມູນການພາສາຂອງບົດວິຊາການດ້ານການຂຽນແມ່ນພາສາທີ່ໄດ້ມາດຕະຖານ. ພາກສ່ວນທີ່ບໍ່ໄດ້ມາດຕະຖານຈະບໍ່ຖືກນຳໃຊ້; ພາຫະນະສຳນວນພາສາເວົ້າ ແລະ ຈຳພວກທີ່ກ່ຽວກັບອາຊີບໃດໜຶ່ງ ຫຼື ສຳນວນພາສາສະເພາະຂອງກຸ່ມຄົນໃດໜຶ່ງແມ່ນຈະປາກົດອອກໜ້ອຍທີ່ສຸດ. ພາສາທີ່ຖືກມາດຕະຖານແມ່ນມູນການທັງໝົດຂອງບົດເວົ້າດ້ານວິຊາການ.

ໃນປັດຈຸບັນ ຈຸດພິເສດຂອງບັນດາບົດດ້ານໜ້າທີ່ສຳນວນວິຊາການມີຢູ່ໃນບາງຂະແໜງການວຽກງານ, ເຊັ່ນ ຢູ່ໃນວິທະຍາສາດສັງຄົມໄດ້ນຳເອົາສຳນວນບາງຊາດເຂົ້າມານຳໃຊ້ແທນສຳນວນເດີມທີ່ມາແຕ່ດົນນານ.

- *ຄວາມສົວໄລທາງສັງຄົມ* ໃຊ້ແທນ *ຄວາມຈະເລີນທາງສັງຄົມ*
- *ບານສະແກັດ* ໃຊ້ແທນ *ບານບ້ວງ*

ຄຳຖາມ:

1. ຈົ່ງຊອກອ່ານບົດວິຊາການໃດໜຶ່ງໃຫ້ໄດ້ຜູ້ລະໜຶ່ງບົດ.
2. ຈົ່ງຊອກຫາສັນຍາລັກພື້ນຖານຂອງສຳນວນວິຊາການໃນປຶ້ມແບບຮຽນໃດໜຶ່ງ.

7. 3 ໜ້າທີ່ຂອງສຳນວນໂຄສະນາ

ບົດພາສາທີ່ຂຶ້ນກັບຂົງເຂດໜ້າທີ່ຂອງສຳນວນໂຄສະນາແບ່ງອອກເປັນສອງຢ່າງຄື ການໂຄສະນາດ້ວຍການຂຽນ ແລະ ການໂຄສະນາດ້ວຍການເວົ້າ. ໃນບົດການໂຄສະນາດ້ວຍການຂຽນລວມມີ: ການສື່ຂ່າວ ແລະ ບົດຂ່າວຕ່າງໆໃນໜ້າໜັງສືພິມ ແລະ ໃນບັນດາວາລະສານທີ່ບໍ່ໄດ້ກ່ຽວກັບວິຊາການໃດໜຶ່ງ. ສິ່ງທີ່ກ່ຶກເວົ້າເຖິງເລື້ອຍໆແມ່ນກ່ຽວກັບສຳນວນໂຄສະນາດ້ວຍຮູບການຂຽນທີ່ກ່ຽວກັບໜັງສືພິມ ຊຶ່ງເວົ້າເຖິງສຳນວນຂອງນັກໜັງສືພິມ ແລະ ນັກຂ່າວຕ່າງໆ. ໃນບົດການໂຄສະນາດ້ວຍການເວົ້າແມ່ນການສື່ຂ່າວ ແລະ ການປະຊາສຳພັນທີ່ຜູ້ຟັງໄດ້ຮັບດ້ວຍການສື່ສານທາງວິທະຍຸກະຈາຍສຽງ ແລະ ທາງໂທລະພາບ, ຈາກນັ້ນແມ່ນໃນບົດເວົ້າເພື່ອໂຄສະນາບັນຫາຕ່າງໆຊຶ່ງມີຫຼາຍຮູບແບບທີ່ແຕກຕ່າງກັນ.

ຈຸດພິເສດຕົ້ນຕໍຂອງບົດເວົ້າທີ່ເນັ້ນໜັກ ບາງເທື່ອກ່ຶກຈັດໃສ່ທັງໃຈຄວາມອື່ນໆຂອງໜ້າທີ່ສຳນວນໂຄສະນາຊຶ່ງຕໍ່ໄປແບ່ງອອກເປັນ: ສຳນວນໜັງສືພິມ, ວາລະສານ ແລະ ການໂຄສະນາທີ່ລົງເລິກບາງປະເດັນກ່ຽວກັບສັງຄົມ ແລະ ມັນແມ່ນສຳນວນບົດເວົ້າທີ່ເນັ້ນໜັກ. ຕົວຢ່າງ ບົດຂ່າວທາງວິທະຍຸກະຈາຍສຽງທີ່ເວົ້າເຖິງການຂັບຂະຫຍາຍເນື້ອໃນກອງປະຊຸມໃຫຍ່ຄັ້ງທີ 7 ຂອງອົງຄະນະພັກປະຊາຊົນປະຕິວັດລາວ ເວລາ 7:30 ຕອນເຊົ້າ.

ໃນທັດສະນະທີ່ຈຳກັດຈຳນວນໜຶ່ງ ບາງເທື່ອໜ້າທີ່ສຳນວນໂຄສະນາກ່ຶກຈຳກັດພຽງແຕ່ໃຫ້ຢູ່ໃນການສື່ສານທີ່ມີໃຈຄວາມເຮັດໜ້າທີ່ຊວນເຊື່ອ, ຍາດແຍ່ງ ແລະ ປຸກລະດົມເທົ່ານັ້ນ. ພາຫະນະສື່ສານທີ່ມີລັກສະນະປະຊາສຳພັນແມ່ນກ່ຶກຈັດເຂົ້າໃສ່ໃນຂົງເຂດສຳນວນການສື່ຂ່າວຢ່າງຂາດຂັ້ນ.

ບົດໂຄສະນາທຸກປະເພດແມ່ນເປັນທາງການ ແລະ ເລັ່ງໃສ່ສະມາຄົມຜູ້ຟັງ ຫຼື ຜູ້ອ່ານທີ່ກ້ວ້າງຂວ້າງ. ດ້ວຍຈຸດພິເສດລວມຂອງບັນດາບົດໂຄສະນາດ້ານການເວົ້າ ແລະ ການຂຽນ, ໜ້າທີ່ຂອງມັນແມ່ນສິ່ງຜົນສະທ້ອນ (ຊວນເຊື່ອ, ຍາດແຍ່ງ ແລະ ປຸກລະດົມ); ແລະ ພ້ອມກັນນັ້ນກໍມີໜ້າທີ່ປະຊາສຳພັນໄປພ້ອມໆກັນ. ພິເສດມັນກ່ຶກປາກົດຕົວຢ່າງຈະແຈ້ງຢູ່ຮູບແບບການໂຄສະນາບາງຢ່າງເຊັ່ນ ຢູ່ໃນຫົວຂໍ້ຕ່າງໆຂອງໜັງສືພິມ ຫຼື ວາລະສານຕ່າງໆ. ຢູ່ໃນບົດສັງລວມບັນຫາຕ່າງໆ ຫຼື ຢູ່ໃນບົດໃດໜຶ່ງຂອງບົດວັນນະຄະດີ. ສ່ວນຮູບແບບຊະນິດອື່ນເຊັ່ນ ບົດຂ່າວທີ່ມີອຳນາດເໜືອກວ່າການສຶກສາອົບຮົມທົ່ວໄປ; ແນ່ນອນບັນດາພາຫະນະພາສາທັງໝົດທີ່ພວກເຮົາພົບເຫັນຢູ່ໃນໜ້າໜັງສືພິມ ຫຼື ໜ້າຈໍໂທລະພາບ, ພວກເຮົາບໍ່ສາມາດຈັດພວກມັນເຂົ້າໃສ່ຂົງເຂດໜ້າສະນວນໂຄສະນາໄດ້ທັງໝົດ.

ຮູບແບບພາຍນອກ ແລະ ໂຄງສ້າງພາຍໃນຂອງບັນດາບົດທີ່ມີໜ້າທີ່ຂອງສຳນວນໂຄສະນາແມ່ນສຽບແໜຼມທີ່ສຸດ. ໃນທີ່ນີ້ ອາດຈະສຳນຶກເຖິງການສື່ຂ່າວທີ່ມີຄວາມແຕກຕ່າງກັນຢ່າງຂາດຂັ້ນ. ເຊັ່ນ ຂ່າວພະຍາກອນອາກາດ, ປ້າຍໂຄສະນາແຈ້ງການລາຍການຮູບເງົາ, ບົດສຳພາດ ທ່ານລັດຖະມົນຕີກະຊວງການຕ່າງປະເທດຜ່ານທາງໂທລະພາບ, ບົດຂ່າວທາງວິທະຍຸກະຈາຍສຽງແຫ່ງຊາດ, ນາທີໂຄສະນາຢູ່ລາຍການໂທລະພາບ, ບົດຂ່າວທາງໂທລະພາບ, ບົດຂ່າວການ ແຂ່ງ ຂັນກິລາ ຈາກວິທະຍຸກະຈາຍສຽງ ຫຼື ໂທລະພາບ, ຕາຕະລາງແຈ້ງການກ່ຽວກັບສະພາບຄວາມສຳເລັດຂອງ ວຽກງານພິມຈຳໜ່າຍໃນແຕ່ລະວັນ ແລະອື່ນໆ.

ຄວາມຈຳເປັນສຳລັບສຳນວນໂຄສະນາແມ່ນຄວາມກະທັດຮັດ, ຂັ້ນຕອນຂອງການດຳເນີນງານ, ການຮຽບຮຽງ ແລະ ການເຮັດໃຫ້ຜູ້ຮັບສື່ສານເຂົ້າໃຈໄດ້ດີ. ສິ່ງທີ່ມີປະສິດທິຜົນໜ້ອຍຄືໃນບັນດາປ້າຍໂຄສະນາທີ່ບັນຈຸຂໍ້ຄວາມຫຼາຍໂພດ; ບັນດາບົດຂ່າວຢູ່ໜ້າໜັງສືພິມທີ່ເຂົ້າໃຈຍາກ, ຜູ້ອ່ານ

ອາດຈະບໍ່ຢາກອ່ານໃຫ້ຈົບ. ດັ່ງນັ້ນ, ການຮຽບຮຽງໜັງສືພິມໃຫ້ຮັບປະກັນຕ້ອງໄດ້ນຳໃຊ້ຫຼາຍວິທີ ທີ່ແຕກຕ່າງກັນ; ພ້ອມທັງແບບຕ່າງໆຂອງຕົວໜັງສື; ຈັບກະທັ້ງສະຖານທີ່ຕ່າງໆທີ່ຈະໃສ່ຂ່າວທີ່ຖືກພິມ. ຄວາມອາດສາມາດນຳໃຊ້ບາງບັນດາພາຫະນະທີ່ມີຄວາມກ້ຶສູງ, ເຊັ່ນ ຄຳສັບ ແລະ ສຳນວນທີ່ສ້າງຄວາມສະດວກໃຫ້ແກ່ນັກຂຽນທາງດ້ານຄວາມວ່ອງໄວ ແລະ ທາງດ້ານການປະຕິບັດງານ ທີ່ຄ່ອງແຄ່ວໃນການສ້າງບົດ; ອຳນວຍຄວາມສະດວກໃຫ້ຜູ້ອ່ານເຂົ້າໃຈໄດ້ງ່າຍ, ແມ່ນແຕ່ບົດທີ່ມີການສ້າງຂຶ້ນມາຢ່າງກະທັນຫັນ. ມູນການຂອງບັນດາບົດທີ່ມີໜ້າທີ່ສຳນວນໂຄສະນາແມ່ນພາສາທີ່ຖືກມາດຕະຖານ. ບັນພາຫະນະພາສາທີ່ບໍ່ຖືກມາດຕະຖານປາກົດຕົວບາງເວລາພຽງແຕ່ຢູ່ໃນບັນດາບົດເວົ້າທີ່ບໍ່ໄດ້ກະກຽມ ເຊັ່ນ ບົດໃຫ້ຂ່າວ ຫຼື ບົດສຳພາດ. ບັນດາພາຫະນະພາສາທີ່ບໍ່ຖືກມາດຕະຖານດ້ານວັດຈະນາມັກຈະມີໜ້າທີ່ໃນແງ່ຕິລາຄາຢູ່ໃນບົດເວົ້າ ແລະ ບົດຂຽນ. ໜ້າທີ່ຄືແນວນີ້ແມ່ນມີເປົ້າໝາຍສຳລັບບາງບົດຂ່າວຈາກສະໜາມແຂ່ງຂັນກິລາ ແລະ ສະຖານທີ່ທຳງານ; ຊຶ່ງອາດຈະໃຫ້ທັດສະນະດ້ວຍການນຳໃຊ້ບັນດາພາຫະນະພາສາທີ່ກ່ຽວກັບອາຊີບໃດໜຶ່ງ ຫຼື ດ້ວຍສຳນວນພາສາສະເພາະກຸ່ມຄົນໃດໜຶ່ງ.

ບັນດາພາຫະນະພາສາດ້ານວັດຈະນາມີຄວາມສຳຄັນຍິ່ງໃຫຍ່ ກວ່າບັນດາພາຫະນະພາສາດ້ານໄວຍາກອນສຳລັບບັນດາບົດທີ່ມີໜ້າທີ່ສຳນວນໂຄສະນາ. ເພາະສະນັ້ນ ຈຶ່ງຄວນອຸທິດຄວາມເອົາໃຈໃສ່ໃຫ້ຫຼາຍເປັນພິເສດ ຊຶ່ງລວມມີ:

- ບັນດາພາຫະນະພາສາດ້ານການເວົ້າທີ່ຖືກນຳໃຊ້ສະເພາະຢູ່ໃນບົດເວົ້າເທົ່ານັ້ນ.
- ບັນດາພາຫະນະພາສາທີ່ຂ້ອນຂ້າງເປັນທາງການຊຶ່ງການນຳໃຊ້ຂອງພວກມັນຖືກຈຳກັດພຽງແຕ່ຢູ່ໃນຂົງເຂດໂຄສະນາ.
- ການນຳໃຊ້ສຳນວນຂອງຄຳເຊື່ອມ: - ບົດວິຈານ<u>ຈາກ</u>ທິດສະດີມາກ-ເລນິນ.
  - <u>ໃນ</u>ເງື່ອນໄຂຂອງການປະຕິວັດວິທະຍາສາດເຕັກນິກ.
  - ມັນມີອິດທິພົນ<u>ຕໍ່</u>ການນຳໃຊ້ຄຳສັບ.

ຈາກບັນດາພາຫະນະດ້ານໄວຍາກອນມີການນຳໃຊ້ແຕ່ລະຢ່າງດ້ວຍການສົມທຽບ. ຈຸດພິເສດຕ່າງໆດ້ານໄວຍາກອນທີ່ສະແດງອອກໃນຫົວຂໍ້ໜັງສືພິມ ບັນຈຸແບບວິທີທີ່ພິເສດໃນການສະແດງອອກດັ່ງນີ້:

- ປະໂຫຍກດ່ຽວທີ່ມີຄວາມຮັດກຸມດ້ານເນື້ອໃນ: " ສັບພະວິຊາເອົາຊະນະປ່າໄມ້ 2 ຕໍ່ 0"
- ສາຍພົວພັນວາກະຍະສຳພັນແບບຕົ້ນຕໍ-ສຳຮອງ: " ວິວັດທະນາການໃໝ່ຂອງດົນຕີລາວ"
- ປະໂຫຍກທີ່ປາກົດຕົວບາງພາກສ່ວນ ແລະ ບາງພາກສ່ວນບໍ່ປາກົດຕົວ: "50ປີທີ່ມີຄຸນງາມຄວາມດີ". ໃນປະໂຫຍກນີ້ ກ້າວ່າພວກເຮົາບໍ່ອ່ານເນື້ອໄນຂອງບົດ, ພວກເຮົາຈະບໍ່ສາມາດຮູ້ໄດ້ວ່າໃຜມີຄຸນງາມຄວາມດີ. ແຕ່ເມື່ອອ່ານເນື້ອໃນຂອງບົດແລ້ວຈຶ່ງສາມາດຮູ້ໄດ້ວ່າ "ກອງທັບ" ມີຄຸນງາມຄວາມດີ, ແຕ່ຄຳວ່າ"ກອງທັບ" ແມ່ນບໍ່ສະແດງອອກຢູ່ໃນຫົວຂໍ້ໜັງສືພິມບົດນີ້.
- ໂຄງສ້າງທີ່ຮຽກຮ້ອງຄວາມສົນໃຈດ້ວຍຄຳກຳມະ:
  - <u>ປະກາດຫາ</u>ຂອງຕົກເຮ່ຍ
  - <u>ສະເຫີມສະຫອງ</u>ວັນສ້າງຕັ້ງກອງທັບຄົບຮອບ50ປີທີ່ແຂວງຄຳມ່ວນ

- ຊື້ໜຶ່ງແຖມສອງ
- ໄຂຊຸດອົມຣົມໄລຍະສັ້ນໃຫ້ກຳລັງປ້ອງກັນຊາດ
- ຈັດກອງປະຊຸມກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມແຂວງສະຫວັນະເຂດ

ສ່ວນຈຸດພິເສດອື່ນໆທີ່ຊີ້ໃຫ້ເຫັນສຳນວນຂອງຫົວຂໍ້ໜັງສືພິມແມ່ນການຜູກພັນກັບຕົວຈິງ ແລະ ຂະບວນການຮັບຮູ້ຄວາມເປັນຈິງ ຫຼື ສະຖານະການທີ່ແນ່ນອນຂອງຜູ້ຂຽນ.
ຕົວຢ່າງ: - ຈຸດຈົບຈາກເຄື່ອງບິນຕົກທີ່ແຂວງຊຽງຂວາງ.
- ການພົບປະກັບສິລະປິນແຫ່ງຊາດ ບົວເງິນ ຊາພູວົງ./

ມູມມອງດ້ານໜ້າທີ່ຂອງສຳນວນທີ່ຖືກນຳມາສະເໜີໃນທີ່ນີ້ເປັນພຽງແຕ່ແບບສັງເຂບ ແຈະ ພື້ນຖານເທົ່ານັ້ນ. ແຕ່ຄວາມອຸດົມສົມບູນຂອງຊີວິດໃນປັດຈຸບັນມັນສົ່ງຜົນສະທ້ອນໃຫ້ສ້າງສຳນວນຂຶ້ນມາ ນຳໃຊ້ໄດ້ຢ່າງກວ້າງຂວາງເປັນກ້າວໆ ແລະ ຄວນຈະຖືກຄົ້ນຄວ້າສຳນວນສະເພາະຫຼາຍຢ່າງຕໍ່ໆໄປ ອີກ. ໂດຍຕົ້ນຕໍແລ້ວຈະມີການຄົ້ນຄວ້າທີ່ເລິກເຊິ່ງກວ່າກ່ຽວກັບສຳນວນ, ຊຶ່ງເຂົ້າໄປເຖິງຂົງເຂດຂອງ ມັນມີບັນດາບົດທີ່ມີເປົ້າໝາຍດ້ານປະເພນີທີ່ດິນນານຂອງບັນຫາໃດໜຶ່ງ; ເຊັ່ນ ສຳນວນດ້ານການທະ ຫານ, ຂອງບົດເລື່ອງໃດໜຶ່ງ ແລະອື່ນໆ.

ຕາມທຳມະດາບັນດາບົດອ່ານຕົວຈິງມີໜ້າທີ່ດ້ານສຳນວນປະມານ 2 ຫາ 3 ໜ້າທີ່ ຊຶ່ງບົດ ປະເພດນີ້ມີ: ບົດວັນນະຄະດີທີ່ມີອົງປະກອບຂອງສຳນວນໂຄສະນາ ແລະ ສິລະປະ; ບົດປະຊາສຳພັນ ທີ່ບັນຈຸທັງບັນດາພາຫະພາສາດ້ານວິຊາການ ແລະ ດ້ານການໂຄສະນາ. ສ່ວນຢູ່ໃນບົດຂ່າວກຶກ ເຈືອຈາບດ້ວຍພາກສ່ວນຂອງສຳນວນພາສາເວົ້າ, ສຳນວນສິລະປະ, ສຳນວນໂຄສະນາ ແລະ ສຳ ນວນດ້ານວິຊາການ; ສ່ວນຢູ່ໃນບົດເລື່ອງສັ້ນສ່ວນຫຼາຍບັນຈຸດ້ວຍສຳນວນວິຊາການ, ສຳນວນສິລະປ໊ະ ແລະ ສຳນວນໂຄສະນາ.

ຢູ່ໃນບັນດາບົດທີ່ມີໜ້າທີ່ຂອງສຳນວນຫຼາຍດ້ານ ພວກເຮົາຄວນໃຫ້ຄວາມລະມັດລະວັງຕໍ່ໜ້າທີ່ ຂອງສຳນວນທີ່ພົ້ນເດັ່ນໃນບາງເວລາ ຫຼື ໃນບາງຕົວຢ່າງເຖິງຄວາມນິຍົມໃຊ້ຄຳສັບ ຫຼື ສຳນວນ ນັ້ນໆໃນແຕ່ລະກາລະເທລະຄືແນວໃດ.
ຕົວຢ່າງ:

- *ຄົນ ແລະ ມະນຸດ*

- ຄົນ: ໃຊ້ທົ່ວໄປ.
- ມະນຸດ (ຊັບພະຍາກອນມະນຸດ): ໃຊ້ໃນຂົງເຂດວິຊາການ, ຂົງເຂດໂຄສະນາ ແລະ ຂົງເຂດສິລະປະ

- *ຄຳສັບ ແລະ ວັດຈະນາ*

- ຄຳສັບ: ໃຊ້ທົ່ວໄປ.
- ວັດຈະນາ: ໃຊ້ໃນຂົງເຂດວິຊາການ.

ຄຳຖາມ:

1. ຈົ່ງໃຫ້ທັດສະນະຕໍ່ບົດກອນຕໍ່ໄປນີ້ວ່າມັນມີໜ້າທີ່ສຳນວນໂຄສະນາບໍ? ແລະ ຖ້າມີ, ມັນມີໜ້າທີ່ສຳນວນໂຄສະນາຄືແນວໃດ? ນອກຈາກສຳນວນໂຄສະນາແລ້ວ ມັນມີໜ້າທີ່ສຳນວນແນວໃດແດ່?

ສິນຄ້າລາວ ລາວຊ່ວຍຊື້ ເສີມສ້າງສີມືລາວ
ເປັນຄົນລາວນິຍົມລາວ ເພື່ອລາວຈະເລີນກ້າວ
ດີກວ່າໄປຫຼິ້ງດ້ວຍ ນິຍົມນຳແນວນອກ
ລາວເຮັດລາວຮ່ວມໃຊ້ ລາວໄດ້ຮຸ່ງວິໄລ ແທ້ເນີ!

ວັນນະສິນ, ພະຈິກ, 1998.

2. ຈົ່ງຈັດບັນດາບົດທັງໝົດຂອງໜັງສືທີ່ໃຊ້ສະບັບໃດສະບັບໜຶ່ງໃສ່ໃນຈຸດພິເສດຕ່າງໆດ້ານສຳນວນທີ່ສະແດງອອກໃນຫົວຂໍ້ໜັງສືພິມຕາມຄວາມເໝາະສົມ. ຫຼັງຈາກນັ້ນຈົ່ງໃຫ້ເຫດຜົນສະເພາະໃນແຕ່ລະກໍລະນີທີ່ບົດໜຶ່ງຖືກຈັດໃສ່ຫຼາຍຈຸດພິເສດຕາມທັດສະນະຂອງຕົນເອງ.

3. ບົດໜຶ່ງໆມີໜ້າທີ່ດ້ານສຳນວນຊະນິດດຽວບໍ? ຍ້ອນຫຍັງ? ໃຫ້ຕົວຢ່າງ.

4. ຈົ່ງສັງເກດຕີລາຄາສຳນວນໂຄສະນາຂອງລາວໃນປັດຈຸບັນຈາກໂທລະພາບ ແລະ ວິທະຍຸກະຈາຍສຽງ.

7.4 ໜ້າທີ່ຂອງສຳນວນສິລະປະ

ໜ້າທີ່ຂອງສຳນວນສິລະປະກວມເອົາທັງໝົດຂອງບັນດາບົດພາສາ ທີ່ເນັ້ນໜັກເຖິງໜ້າທີ່ສະຫງວນຄວາມງາມທາງດ້ານພາສາ ແລະ ມີອິດທິພົນທາງດ້ານສິລະປະໃນການສື່ສານ, ເຖິງແມ່ນວ່າຢູ່ໃນຕົວຂອງບົດນັ້ນຈະແມ່ນສິ່ງປັດຈຸບັນທີ່ທຳມະດາ ແລະ ໜ້າທີ່ຕົວຈິງຂອງມັນແມ່ນການສື່ສານ ໂດຍກົງກໍຕາມ.

ຮູບແບບພື້ນຖານຂອງພາສາແຫ່ງຊາດແມ່ນພາສາທີ່ໄດ້ມາດຕະຖານ ຊຶ່ງໃນນັ້ນ ບັນດາບົດທີ່ມີໜ້າທີ່ດ້ານສຳນວນສິລະປະໄດ້ກຶກເຮັດໃຫ້ປາກົດເປັນຈິງຂຶ້ນມາ. ແຕ່ວ່າຢູ່ເບື້ອງຫຼັງຂອງພາສາທີ່ໄດ້ມາດຕະຖານນີ້, ຜັດສາມາດນຳໃຊ້ໄດ້ທັງບັນດາພາຫະນະຈາກຮູບແບບອື່ນທັງໝົດຂອງພາສາແຫ່ງຊາດ ແລະ ຈາກທຸກລະດັບຂອງສຳນວນ; ຊຶ່ງການນຳໃຊ້ນີ້ໂດຍສະເພາະແມ່ນສຳລັບສັງເກດຕິລາຄາ ແລະ ບອກລັກສະນະຂອງບຸກຄົນ ແລະ ສະພາບແວດລ້ອມ; ກຶກນຳໃຊ້ຫຼາຍທີ່ສຸດແມ່ນໃນຄຳເວົ້າຂອງຕົວລະຄອນ ກວ່າໃນຄຳເວົ້າຂອງນັກປະພັນ.

ສຳນວນຕ່າງໆດ້ານສິລະປະສາມາດຈັດແບ່ງ ແລະ ຈຳແນກຄວາມແຕກຕ່າງກັນໄດ້. ການຈັດແບ່ງນີ້ ເປັນໄປບົນພື້ນຖານຄວາມແຕກຕ່າງຂອງບັນດາປະເພດບົດປະພັນວັນນະຄະດີ; ຊຶ່ງໃນຕົວຈິງແລ້ວສຳນວນຂອງບົດກະວີ, ບົດປະພັນ ແລະ ບົດລະຄອນ ຍ່ອມມີຄວາມແຕກຕ່າງກັນ.

ຄວາມເປັນຕົວຂອງຕົວເອງ ແມ່ນຄວາມອາດສາມາດຂອງນັກປະພັນ ໃນການນຳໃຊ້ບັນດາພາຫະນະດ້ານການເວົ້າ, ດ້ານວິຊາການ ຫຼື ດ້ານການໂຄສະນາ ເຂົ້າໃສ່ໃນບົດຂອງເຂົາ. ທັງໝົດນີ້ ບໍ່ວ່າການນຳໃຊ້ ກໍຄືຜົນງານທາງດ້ານສິລະປະຂອງບັນດາພາຫະນະພາສາທີ່ກຶກສ້າງຂຶ້ນ ລ້ວນແລ້ວແຕ່ມີການປ່ຽນແປງໄປເລື້ອຍໆ.

ລັດທິການກອນກຶກຈັດເຂົ້າຢູ່ໃນບັນດາພາຫະນະພາສາທີ່ສະເພາະໃດໜຶ່ງ ຊຶ່ງໂດຍລວມແລ້ວມັນກຶກຕັ້ງເປົ້າໝາຍໄວ້ໃຫ້ຢູ່ໃນລະດັບສຳນວນຂອງບັນດາພາຫະນະດ້ານສິລະປະ. ໜ້າທີ່ຂອງບັນດາການກອນປາກົດໃຫ້ເຫັນເລື້ອຍໆທັງໃນລັດທິທີ່ບໍ່ປາກົດຕົວໃຫ້ເຫັນໄດ້ຢ່າງເດັ່ນຊັດ; ມັນນຳໃຊ້ທັງບັນດາພາຫະນະທີ່ຫຼ້າສະໄໝ ແລະ ບາງເທື່ອກໍມີທັງພາສາທ້ອງຖິ່ນ. ບາງແບບວິທີໃນໂຄງສ້າງຂອງບົດທີ່ສາມາດສະແດງໃຫ້ເຫັນເຖິງຜົນງານດ້ານສຳນວນສິລະປະ.

ຕົວຢ່າງ: ຄຳເວົ້າທາງກົງ ທີ່ບໍ່ແມ່ນປະໂຫຍກສ່ວນຕົວຂອງຜູ້ນຳໃຊ້ ຊຶ່ງຢູ່ໃນລັດທິການກອນທີ່ສະແດງອອກໃຫ້ເຫັນທ່າງດ້ານວັດຈະນາ:

- ຄວາມເຊື່ອ: ຊຶ່ງມັນແມ່ນບັນດາເວດມົນກົນຄາຖາ.
- ນາລິກສະຫວັນ: ຊຶ່ງມັນແມ່ນຍົນພິບານ.
- ຈັກກະວານ: ຊຶ່ງມັນແມ່ນອານາຈັກ.
- ຫ້ວຍຮ່ອງຄອງບຶງ: ຊຶ່ງມັນແມ່ນສາຍນ້ຳ.
- ສີກຸຫຼາບ: ຊຶ່ງມັນແມ່ນຄວາມສົດຊື່ນແຈ່ມໃສ.
- ໂທດກຳ: ຊຶ່ງມັນແມ່ນໜ້າຜາທີ່ສູງຊັນ ແລະ ຫວາດກົວ.

- ລັດທິທີ່ບໍ່ປາກົດຕົວແມ່ນບັນດາຄຳສັບ ແລະ ສຳນວນຂອງນັກກະວີ ຫຼື ນັກປະພັນ ທີ່ກຶກສ້າງຂຶ້ນໃໝ່ ແລະ ຍັງບໍ່ທັນໄດ້ຮັບການນຳໃຊ້ຢ່າງແຜ່ຫຼາຍເທື່ອ.
- ລັດທິທີ່ຫຼ້າສະໄໝແມ່ນບັນດາຄຳສັບ ແລະ ສຳນວນ ທີ່ຢູ່ໃນບັນດາບົດນິພົນປະຫວັດສາດ ແລະ ຢູ່ໃນນິທານຕ່າງໆ.

- ຄຳເວົ້າທາງກິງທີ່ບໍ່ແມ່ນປະໂຫຍກສ່ວນຕົວຂອງຜູ້ນຳໃຊ້: ລາວເວົ້າວ່າ: "ຂ້ອຍຈະໄປຫາແມ່ ຂອງຂ້ອຍໃນມື້ອື່ນ".

ການຈັດວາງບັນດາຄຳສັບ ແລະ ສ່ວນຕ່າງໆໃນປະໂຫຍກ ແມ່ນບາດກ້າວທຳອິດຂອງບັນ ດາວັດຈະນາ ທີ່ມີການພົວພັນເຊິ່ງກັນແລະກັນໃນລະດັບຂອງປະໂຫຍກ. ການແຍກພາກສ່ວນ ຕ່າງໆຂອງປະໂຫຍກແມ່ນຂຶ້ນກັບເນື້ອໃນທີ່ຜູ້ນຳໃຊ້ຢາກຈະບັນຈຸເຂົ້າໃສ່ໃນປະໂຫຍກຂອງເຂົາ.

<u>ຄຳຖາມ:</u>

1. ຈົ່ງນຳໃຊ້ບັນດາຄວາມຮູ້ທີ່ໄດ້ຮຽນມາ ເພື່ອທົດລອງໃຫ້ທັດສະນະກ່ຽວກັບລັກສະລວມດ້ານສຳ ນວນຂອງບົດຕໍ່ໄປນີ້: "ແດເຍົາໄວ"

+ ເງິນຄຳມີມັ່ງໄວ້ ໃຊ້ຈ່າຍກໍຍັງໜົດ
ເຂົ້າຂອງກອງເຕັມເຮືອນ ຈ່າຍ:ປກໍ່ໜົດກ້ຽງ
ມີຜະຫຍາຄວາມຮູ້ ປັນຍາໃສ່ສ່ອງ
ຍາມຊະລາແກ່ເຖົ້າ ກໍ່ຍັງໃຊ້ຢ່າງສະບາຍ
+ ອັນວ່າຮຽນຮໍ່າຮູ້ ດີຮ້ອຍຢ່າງອະສິງໄຂ
ແກ້ວຄ່າຄຸນຄາມສູງ ບໍ່ເທົ່າທຽມທັນໄດ້
ຊີ້ແນະແນວທາງໃຫ້ ເໜັນທາງເດີນດຸ່ງ
ຊູໃຫ້ຄົນຮອດບັ້ນ ເປັນຄົນກ້າວ-ສາດສະດາ
+ ຮຽນຢາກເວົ້າບ່ອນບັ້ນ ແນວແນະຂອງການຮຽນ
ເຊົ້າຄ່ຳແລງພຽນອົດ ໝັ່ນຫາເໜັນຮູ້
ຊອກເສີມແຊມຊວນໃຊ້ ເອກະສານຫາອ່ານ
ວາລະສານໜັງສືພິມສິ່ງອ້າງ ກະແຫຼງຂໍ້ໃຫ້ເລົ່າຫາ ດີນາ
+ ຄວາມຮູ້ເຈົ້າຊື່ໄດ້ ສະໜອງຕື່ງອຸດົມດີ
ທົດສະດີແນວຄິດ ສະຫຼາດປາວແປວເປື້ອງ
ເສຍເວລານຳຮຽນນີ້ ແສນດີແລະກຸ້ມຄ່າ
ແຮງເຈົ້າເຫນັ່ເມື່ອຍລ້າ ມາໄດ້ຄ່ານະຫັນ
+ ພຽງຢ່ານໄປກ່າວກົ້ວ ນຳທາດເບື່ອເມົາສຸລາ
ແນວອັບປີມາຍາ ໃຫ້ຮີບໄກໄລເວັ້ນ
ມັນຊິດອມດັບສິ້ນ ຊີວາໃສ້ນ້ອຍໜຸ່ມ
ຫຶນຮອນທັງຊາດເຊື້ອ
ຝາກໄວ້ນຳໜູ່ເຈົ້າ ຜູ້ຕາແຈ້ງສ່ອງໃສ ແທ້ນາ.

(ໂດຍ: ຈ. ກິດຕິຄຸນ, *ແດ່ຜູ້ເຍົາໄວ*, ວັນນະສິນ, ກຸມພາ, 1998, ໜ້າ 38)

24/VII
ຫ້ານຈຳໜ່າຍ

2. ຈົ່ງວິໃຈດ້ານສຳນວນຂອງບົດກາບກອນຕໍ່ໄປນີ້ໂດຍເອົາໃຈໃສ່ພິເສດດ້ານວັດຈະນາ.

ຍາມຍ່າງເຊົ້າ
ດິນດັ່ງມີພົມຜືນ
ລຸກຂຶ້ນໄປຢາມຕ້ອນ
ເຂົ້າດໍເປັນໜາກດົ້ວ
+ ເໜັນຜູ້ສາວຫາບປັ້ງ
ອ້າຍບ່າວຊຽງແນມເໜັນ
ອາສາລົງຕັກນ້ຳ
ຂຶ້ນທ່າຍ່າຫາບໃຫ້
+ ຍາມແລງກ່ຽວເຂົ້າເໝົ້າ
ກາງຄືນຍາມເດືອນຫງາຍ
ອ້າຍບ່າວຊຽງມາຢ້ຽມ
ນາງນາດນ້ອຍ
+ ລົມກັນດົນອີ່ນອ້ອຍ
ຈົນວ່າລືມເວລາ
ໜ້ອຍໜຶ່ງສຽງຄົນເກົ້າ
ອ້າຍບ່າວລາສັ່ງນ້ອງ
+ ມື້ໃໝ່ພໍ່ຕື່ນຂຶ້ນ
ເອົານ້ຳຕາບຊາຍຂາວ
ໜາກພ້າວຂໍ່ເຮືອນປ້າ
ບ່າວຊຽງຍ່ຍື່ນໃຫ້
+ ຕັ້ງແຕ່ເຊົ້າ
ອ້າຍບ່າວຊຽງອາສາ
ແລ້ວຈຶ່ງເອົາຍັບຂົ້ວ
ສາວຄ່ອຍຝັດຝາດນ້ອຍ
+ ຄືນຕໍ່ມາເຂົ້າເໝົ້າ
ໝົດຄອບຄົວກິນຊຸມ
ກິນໄປມາຄົນເກົ້າ
ເຂົ້າບ່ອນນອນຮຽບຮ້ອຍ
+ ສາວບ່າວລົມອີ່ນອ້ອຍ
ຕາຕໍ່ຕາແນມເໜັນ
ບ່າວຊຽງແປງຄຳເວົ້າ
ສາວບໍ່ຈາໄດ້ແຕ່ຍົ້ມ
+ ຊຽງວ່າ ອ້າຍຊຶມາກ່ຽວເຂົ້າ
ບໍ່ໜາຍວາງໃຫ້ອວນໜອງ

ພູມພາບຊົນນະບົດ
ແຜ່ປູແປງໄວ້
ຍ່ໄຊປາອັ່ງ
ຮວງກົ້ມກ່ອງງາມ
ກາຍຜ່ານທາງກຽງ
ແລ່ນທັນຣົມຫ້ວຍ
ຍ່ຄາບວາງບ່າ
ນາງນ້ອງຮັບເອົາ
ເອົາຫາບໍ່ມືອເຮືອນ
ຂູດມາຄົນຂົ້ວ
ອາສາຄົນຊ່ອຍ
ວາງໃຫ້ພໍ່ຄົນ
ລົ້ງແກ່ນແກມຮັກ
ນັ່ງນານຈວນແຈ້ງ
ໃນເຮືອນໄອ່ະແຮ່ມ
ວັນໜ້າຈຶ່ງຊຶມາ
ເໜັນບ່າວມາຫາ
ໃສ່ກົ່ງມາພ້ອມ
ພໍ່ມັນນ້ຳລັ່ນ
ສາວຟ້າວຮັບເອົາ
ສຽງຄົກລັ່ນສັກກະລັນ
ຊ່ອຍສາວຕຳເຂົ້າ
ກາງຄືນຕຳຕໍ່
ບຸງກວ້າງໂຕ່ງຣຳ
ກິນແຊບຊຶມສະອອນ
ບ່າວຊຽງກໍ່ມີໜ້າ
ກ່ອຍລາເລີກກ່ອນ
ຍັງແໜ້ບ່າວສາວ
ອອຍມ່ວນມີຜະຫຍາ
ຣອດໃຈຈຶ່ງແຈ້ງ
ໜາຍເອົາເມືອລ້ຽງຍ່າ
ຊຽງຮູ້ຈາກໜ່ວຍຕາ
ຊູຊ່ອຍເຮືອນນາງ
ເມື່ອຍຜູ້ດຽວຢູ່ນາກວ້າງ

ຂໍໃຫ້ວາງໃຈອ້າຍ
ເອົາເຂົ້າມາຂົ້ນເລົ້າ

ບໍ່ໝາຍໄລໃຫ້ຄົນຊຸ່າ
ສາແລ້ວຈຶ່ງຊິຂໍ ນ້ອງເອີຍ.

(ໂດຍ: ຮຸ່ງອະລຸນ ແດນວິໄລ, *ນິຍາຍຮັກແຫ່ງບ້ານນາ*, ວັນນະສິນ, ທັນວາ, 1997, ໜ້າ 36)

7. 5 ໜ້າທີ່ຂອງສຳນວນບໍລິຫານ: ແມ່ນ ການປະຊຸກ ສະ ກໍ ປະເພນ ທ່ຽງ ການ ໂຄ ຖ ການ.

ໜ້າທີ່ຂອງສຳນວນບໍລິຫານແມ່ນບັນດາສຳນວນທີ່ກ່ຽວກັບການດຳເນີນງານ ຫຼື ກ່ຽວກັບ ວຽກທາງການ; ບາງເທື່ອມັນກໍ່ແຍກອອກມາຈາກຂົງເຂດໜ້າທີ່ຂອງສຳນວນວິຊາການທາງດ້ານ ພາກປະຕິບັດຕົວຈິງ. ບາງບັນດາພາຫະນະສື່ສານສ່ວນໜຶ່ງ ທີ່ມີໜ້າທີ່ແຕກຕ່າງກັນກໍ່ເຂົ້າຮ່ວມ ໃນຂົງເຂດຂອງສຳນວນບໍລິຫານນີ້ເໝືອນກັນ, ເຊັ່ນ ດ້ວຍລະບົບທີ່ຊັດເຈນ ແລະ ສັ້ງເຂບຂອງພາສາ ຈຶ່ງສາມາດສ້າງຄວາມເປັນຈິງ ແລະ ຂໍ້ມູນຕ່າງໆດ້ານວັດທຸໄດ້; ຄວາມສຸນທະລີຂອງພາສາຊ່ວຍ ໃຫ້ຜູ້ຮັບສື່ສານຂອງບົດຮັບຮູ້, ເຂົ້າໃຈ ແລະ ປະຕິບັດຕາມໄດ້. ບັນດາພາຫະນະສື່ສານປະເພດນີ້ ແມ່ນບົດຄຳຮ້ອງ, ບົດພິພາກສາ, ບົດຊີວະປະຫວັດ, ບົດຮ້ອງຟ້ອງຕໍ່ສານ ແລະ ອື່ນໆ. ຈຸດປະສົງ ຂອງການສື່ສານທີ່ຂຶ້ນກັບຂົງເຂດຂອງສຳນວນນີ້ ສິ່ງຜົນສະທ້ອນ ແລະ ບັງຄັບບັນຊາການປະຕິບັດ ງານຂອງແຕ່ລະບຸກຄົນ ຫຼື ທາງດ້ານກົດໝາຍລວມຂອງໝູ່ຄະນະ, ບໍລິສັດ, ສຳນັກງານ, ສະຖາ ບັນຕ່າງໆ ແລະ ອື່ນໆ. ໜ້າທີ່ຂອງບົດປະເພດນີ້ມີຢູ່ໃນຈົດໝາຍວຽນຕ່າງໆ, ໜັງສືແຈ້ງການ ແລະອື່ນໆ. ສ່ວນບັນດາພາຫະນະສື່ສານແບບອື່ນໆອີກແມ່ນບັນດາສັນຍາຕົກລົງຕ່າງໆ, ດຳລັດ ແລະ ບົດບັນທຶກຈາກກອງປະຊຸມຕ່າງໆ ຊຶ່ງມັນມີໜ້າທີ່ດ້ານການອ້າງອີງຫຼັກຖານພະຍານ. ໜ້າທີ່ຂອງ ບົດລາຍງານ, ບົດແຈ້ງຂ່າວ, ບົດຂ່າວສານແມ່ນກະທັດຮັດ ແລະ ຮຽກຮ້ອງຂໍ້ມູນແບບສັ້ງເຂບ ເພື່ອເຮັດໃຫ້ການປະຕິບັດງານງ່າຍດາຍ ແລະ ວ່ອງໄວຂຶ້ນ. ບັນດາຂໍ້ມູນຕ່າງໆກຶ່ງຕັ້ງເປົ້າໝາຍ ໃສ່ຜູ້ຮັບສື່ສານໂດຍກົງ, ກຶ່ງຈຳກັດຂອບເຂດຂອງການສະແດງອອກ ແລະ ຮັບປະກັນຄວາມ ເປັນອັນໜຶ່ງອັນດຽວໃນການປະຕິບັດງານ; ຊຶ່ງສຳລັບການນຳສະເໜີຂອງມັນຕ້ອງກະກຽມໂຄງຮ່າງ ທີ່ມີການພິມໄວ້ກ່ອນແລ້ວ ຫຼື ມີໂຄງຮ່າງແບບຄຳກຳມໄວ້ພ້ອມ ຊຶ່ງຜູ້ຂຽນບົດທຳມະດາພຽງແຕ່ຕື່ມ ຂໍ້ຄວາມໃສ່ເທົ່ານັ້ນ. ໜ້າທີ່ຂອງບັນດາພາຫະນະສື່ສານອື່ນໆທີ່ກຶ່ງຈັດເຂົ້າໃນຂົງເຂດສຳນວນນີ້ແມ່ນ ການແລກປ່ຽນຂໍ້ມູນຂ່າວສານຊຶ່ງກັນແລະກັນລະຫວ່າງບໍລິສັດ, ສຳນັກງານ, ສະຖາບັນ ແລະ ອົງການຈັດຕັ້ງຕ່າງໆ. ການແລກປ່ຽນຂໍ້ມູນຂ່າວສານນີ້ເກີດຂຶ້ນໃນຮູບແບບຂອງຈົດໝາຍທາງລັດຖະ ການ.

ແບບລັກສະນະຂອງບັນດາພາຫະນະສື່ສານທີ່ໄດ້ນຳສະເໜີມາຂ້າງເທິງນີ້ ຕີລາຄາການຍືນຍົງ ຄົງຕົວ ແລະ ຂະຫຍາຍຕົວຂອງສຳນວນ; ຊຶ່ງໃນບາງກໍລະນີຈະປາກົດຕົວຢ່າງເປັນປະຈຳ; ສ່ວນຢູ່ໃນ ລະດັບຂອງພາສາແມ່ນການນຳໃຊ້ພາສາທີ່ໄດ້ມາດຕະຖານ. ບັນດາພາຫະນະຂອງພາສາຈະສະ ທ້ອນຄຸນຄ່າທາງດ້ານຄວາມຮູ້ສຶກແບບທົ່ວໄປ ແລະ ໃນນີ້ມັນກວມເອົາທັງໃນບົດຄຳຮ້ອງ, ບົດຮ້ອງ ຟ້ອງຕໍ່ສານ; ຫລາຍໆເທື່ອອາດແມ່ນທັງສັບວິຊາການ ແລະ ບັນດາແບບວິທີປະເພນີຕ່າງໆທີ່ເຄີຍ ປະຕິບັດສືບຕໍ່ກັນມາ.

<u>ຄຳຖາມ:</u>

1. ຈົ່ງສ້າງສຳນວນດ້ວຍຮູບແບບຂອງໜັງສືທາງການໃສ່ໃນໃບສັ່ງຈອງຫ້ອງນອນສຳລັບນັກສຶກສາ 5 ຄົນທີ່ຈະເດີນທາງໄປທ່ອງທ່ຽວທີ່ຫຼວງພະບາງເປັນເວລາ 3 ວັນ 2 ຄືນ. ຈົ່ງຊອກເອົາຂໍ້ມູນ ທີ່ຈຳເປັນກ່ຽວກັບດ້ານໃດດ້ານໜຶ່ງຈາກຂົງເຂດທ່ອງທ່ຽວທີ່ໄດ້ສະເໜີມາ ແລະ ຂຽນໃບສັ່ງຈອງໃຫ້ ເປັນຮູບປະທຳທີ່ສຸດ.

2. ຈົ່ງຂຽນໃບຄຳຮ້ອງເຖິງຫໍສະໝຸດກາງຂອງມະຫາວິທະຍາໄລແຫ່ງຊາດ ເພື່ອຂໍເຮັດບັດຫໍສະໝຸດ. ຈົ່ງສະເໜີຂໍ້ມູນທີ່ຈຳເປັນບາງຢ່າງກຽວກັບຕົນເອງ ເພື່ອອຳນວຍຄວາມສະດວກໃນການເຮັດບັດດັ່ງກ່າວ.

3. ຈົ່ງສັ້ງຄຳຖາມທີ່ສາມາດໃຊ້ຖາມເຖິງສ່ວນບຸກຄົນ ເພື່ອເກັບກຳບັນດາຂໍ້ມູນຕ່າງໆທີ່ສາມາດຕື່ມລົງໃສ່ໃນບັດເພື່ອໃຫ້ສາມາດມີສິດຢືມປຶ້ມຈາກຫໍສະໝຸດໄດ້.

ບ່ໍ່ກະບັ້ນ.

ຕ້ອງໃຊ້ສຳນວນ ສົມມະປະອັກໃນການພັນລະນາ.

8. ການຈັດວາງຄຳສັບ ແລະ ການອະທິບາຍລັກສະນະພິເສດໃນແຕ່ລະລະດັບຂອງສຳນວນ

ໃນການສ້າງສື່ສານຕົວຈິງ ຜູ້ສ້າງຈະເລືອກເອົາສຳນວນຈາກປະມວນວັດຈະນາໃນພາສາເປັນ ກິດຈະກຳຮຽກຊື່ສຳລັບອົງປະກອບດ້ານເນື້ອໃນຂອງສິ່ງຕົວຈິງໃດໜຶ່ງທີ່ກຳລັງສະແດງຫຼື, ພຽງແຕ່ໃນ ກໍລະນີທີ່ພິເສດໃດໜຶ່ງເທົ່ານັ້ນທີ່ຈະຕ້ອງໄດ້ສ້າງຄຳສັບໃໝ່ຂຶ້ນມາ. ການເລືອກເຟັ້ນເອົາບັນດາວັດຈະ ນາທີ່ເໝາະສົມ ແລະ ການສ້າງບັນດາສຳນວນໃໝ່ທີ່ອາດເປັນໄປໄດ້ຈະພາໃຫ້ມີຄວາມຊັດເຈນດ້ານ ຄວາມໝາຍ. ຊຶ່ງຈາກນັ້ນຈະຄົ້ນຄວ້າເຖິງຄວາມແຕກຕ່າງທີ່ລະອຽດລະຫວ່າງບັນດາຄຳສັບຕ່າງໆ.. ພ້ອມກັບນັ້ນ ຍັງໄດ້ເອົາໃຈໃສ່ທັງທາງດ້ານຄວາມຊຸ່ມເຄີຍ ແລະ ກິດເໜບດ້ານສຳນວນຕ່າງໆ ແລະ ເລືອກເຟັ້ນເອົາສຳນວນໂດຍມີການເບິ່ງບັນຫາອ້ອມຂ້າງອື່ນໆ, ຊຶ່ງດ້ານຈຸດລວມແລ້ວກໍຄືກັນກັບຜູ້ ສ້າງສຳນວນຜູ້ໜຶ່ງ. ໃນຂະນະການຕົກລົງກ່ຽວກັບຄວາມເໝາະສົມໃນການຄັດເລືອກເອົາສຳນວນ ຈະຊ່ວຍໃຫ້ຜູ້ໃຊ້ໄດ້ຮັບຄວາມຮ້ດ້ານປະມວນວັດຈະນາ ແລະ ໄດ້ຮັບຄວາມຮູ້ດ້ານມາດຕະເໜບທີ່ສາ ມາດຈັດສັນປະມວນວັດຈະນາ ແລ້ວນຳມາສະເໜີຢູ່ໃນລະບົບຈາກຈຸດຢືນດ້ານສຳນວນ. ບັນດາຈຸດ ຢືນນີ້ແມ່ນມີຫຼາຍ ແລະ ມີຜົນແຕກຕ່າງກັນສຳລັບການເລືອກເຟັ້ນສຳນວນຄຳເວົ້າ.

8. 1 ທິດທາງຂອບເຂດການນຳໃຊ້ບັນດາຄຳສັບຕ່າງໆໃນອົງເຂດພາສາແຫ່ງຊາດ.

8.1. 1 ບັນດາຄຳສັບທີ່ຖືກນຳໃຊ້ໃນທົ່ວທຸກອົງເຂດພາສາແຫ່ງຊາດ.

1. ສັບມາດຕະຖານ. ເພື່ອສັບສົນ ຫຼື ຜິດພາດ ແລະ ເປັນເອກະພາບ.

ບັນດາຄຳສັບມາດຕະຖານກວມເອົາຈຳນວນທີ່ຫຼາຍກວ່າໃນປະມວນຄຳສັບ ແລະ ກວມເອົາ ພາກສ່ວນໃຫຍ່ທີ່ແນ່ນອນຂອງບັນດາບົດພາສາ ໂດຍປາສະຈາກມຸມມອງທີ່ບໍ່ສາມາດຈັດພວກມັນເຂົ້າ ໃສ່ໃນອົງເຂດໃດອົງເຂດໜຶ່ງໄດ້. ບັນດາຄຳສັບທີ່ໄດ້ມາດຕະຖານທີ່ນຳໃຊ້ໃນຂອບເຂດທີ່ເໝາະສົມສ່ວນ ໃຫຍ່ແມ່ນປາສະຈາກລັກສະນະສະເພາະດ້ານສຳນວນ.

ຕົວຢ່າງ: ຊີວະປະຫວັດ, ເສດຖະກິດ, ສຸຂະພາບ, ໄວຍາກອນ, ສະຕະວັດ, ຍຸຕິທຳ, ...

2. ສັບບໍ່ມາດຕະຖານ.

ມັນແມ່ນບັນດາປະມວນຄຳສັບທົ່ວໄປ ແລະ ສ້າງຂຶ້ນມາຈາກສອງກຸ່ມຄື

1. ມັນແມ່ນບັນດາຄຳສັບທີ່ມີເຄົ້າກຳເນີດມາຈາກພາສາຕ່າງປະເທດຊຶ່ງເອີ້ນວ່າ: ຄຳຢືມ (ທັບສັບ). ຕົວຢ່າງ: ໂທຍ, ແຄ, ໂມດ, ໂຊ ...

2. ມັນແມ່ນສຳນວນທີ່ມີຕົ້ນກຳເນີດມາຈາກພາສາພື້ນບ້ານຂອງລາວເຮົາເອງ. ຕົວຢ່າງ: "ຫອມປ, ຫອມຫໍ້, ຫອມໄຫ, ຫອມໜາມ, ຫອມຈີນ, ຫອມເທດ", "ຕຸດ, ຢຸດ", "ເບີດ, ເໜີດ, ໜີດ", "ເອາະ = ແກງນ້ຳໜ້ອຍ", "ເຮ່ = ນິຍົມກັນ", ...

ບັນດາຄຳສັບທີ່ບໍ່ໄດ້ມາດຕະຖານສ່ວນໃຫຍ່ປາກົດຕົວຢູ່ໃນອົງເຂດສຳນວນຂອງການເວົ້າ. ສ່ວນ ຢູ່ໃນອົງເຂດຂອງສຳນວນສິລະປະ ພວກມັນກຶ່ງນຳໃຊ້ຫຼາຍໃນເວລາທີ່ນັກປະພັນສ້າງສຳນວນຂອງບົດ ຄືສຳນວນຂອງການເວົ້າ, ຂອງການວາດພາບຕົວລະຄອນ ຫຼື ສະພາບແວດລ້ອມອ້ອມຂ້າງຕ່າງໆ. ບັນດາຄຳສັບທີ່ບໍ່ໄດ້ມາດຕະຖານ ຍັງສາມາດປາກົດອອກໃຫ້ເຫັນຢູ່ໃນບົດເວົ້າທີ່ບໍ່ໄດ້ກະກຽມທາງດ້ານ ວິຊາການ ຫຼື ດ້ານການໂຄສະນາ.

ຕົວຢ່າງ: ບົດລາຍງານຂ່າວຈາກສະຖານທີ່ທຳງານຕ່າງໆ.

8. 1. 2 ບັນດາຄຳສັບທີ່ກຶມນຳໃຊ້ພຽງແຕ່ໃນພາກສ່ວນໃດໜຶ່ງຂອງອົງເຂດພາສາແຫ່ງຊາດ

ໃນທີ່ນີ້ ຕົ້ນຕໍແມ່ນພວກມັນຢູ່ໃນຂອບເຂດທີ່ຈຳກັດ ແລະ ກໍໄດ້ແບ່ງອອກເປັນຄຳສັບທີ່ໄດ້ມາດຕະຖານ ແລະ ຄຳສັບທີ່ບໍ່ໄດ້ມາດຕະຖານ.

1. ສັບມາດຕະຖານ: ມີພຽງກຸ່ມນ້ອຍໆເທົ່ານັ້ນ

ຕົວຢ່າງ: - ຫວະ (ກິນຫວະ?)

- ເກາະ (ອັນນີ້ກໍແມ່ນຄືກັນເກາະ)

2. ສັບບໍ່ມາດຕະຖານ: ສຳນວນນີ້ກຶມນຳໃຊ້ພຽງແຕ່ໃນພາກສ່ວນໃດໜຶ່ງຂອງອົງເຂດພາສາແຫ່ງຊາດ ແລະ ແບ່ງອອກເປັນ 2 ກຸ່ມຄື

1. ບັນດາຄຳສັບທີ່ກຶມນຳໃຊ້ປະຈຳທ້ອງຖິ່ນທີ່ແຄບໆ.

ຕົວຢ່າງ: - ຄຳ "ຫຍັງ" ແມ່ນນຳໃຊ້ທົ່ວໄປ, ບາງທ້ອງຖິ່ນຂອງແຂວງສະຫວັນນະເຂດ ຜັດນຳໃຊ້ຄຳ "ຜຽງ".

"ເຮັດຫຍັງ = ເຮັດຜຽງ", "ແມ່ນຫຍັງ = ແມ່ນຜຽງ", ...

- "ທ່ໍໄມ້ສີ້ມ" ໃຊ້ທົ່ວໄປ, "ຈານ" ໃຊ້ໃນບາງທ້ອງຖິ່ນຂອງເມືອງໂພນໂຮງ.

2. ບັນດາຄຳຢືມ (ທັບສັບ)

ຕົວຢ່າງ: "ໜາກສີດາ = ໜາກໂອຍ", "ຕະກຽງ = ກະແຕບ" ມາຈາກພາສາຫວຽດນາມ, ໃຊ້ກັນຫຼາຍໃນເຂດພາກໜືອ.

ຄຳຖາມ:

1. ຈົ່ງຊອກຫາ ແລະ ຮວບຮວມບັນດາຄຳສັບທີ່ໄດ້ມາດຕະຖານ ແລະ ບໍ່ໄດ້ມາດຕະຖານ.
2. ຈົ່ງໃຊ້ເທບອັດເອົາບົດເລົ່າເລື່ອງຂອງບັນດາໝູ່ເພື່ອນນັກສຶກສາດ້ວຍກັນ. ຫຼັງຈາກນັ້ນ, ຈົ່ງວິໄຈບັນດາປະມວນຄຳສັບຂອງພວກເຂົາ ໂດຍສັງເກດເບິ່ງວ່າ ສຳນວນໃດກຶ່ວ່າ ເປັນສຳນວນສ່ວນຕົວທີ່ບໍ່ໄດ້ມາດຕະຖານ?

ແພງຈາ = ແພງຫຍັ່ງສ່ຽ (ราคาแพง = แพงมาก)

ແພງສວຍ = ແພງເປ່ວ/ໜ້ຽເປ່ວ (ราคาแพง = แพงมาก)

8. 2 ທິດທາງການຜຸກພັນການນຳໃຊ້ບັນດາຄຳສັບດ້ານສະພາບແວດລ້ອມສັງຄົມ

8. 2.1 ສຳນວນພາສາຕະຫຼາດ

ແມ່ນພາກສ່ວນທີ່ບໍ່ໄດ້ມາດຕະຖານຂອງປະມວນຄຳສັບ ທີ່ຖືກຈຳກັດດ້ານສະພາບແວດລ້ອມສັງຄົມ. ດັ່ງນັ້ນສຳລັບການຮຽກຊື່ຂອງພວກມັນບາງເທື່ອຖືກນຳເອົາແບບທີ່ຄ້າຍຄືກັບ ຫຼື ກົງກັນຂ້າມກັນກັບສຳນວນວິຊາການດ້ານພູມສັນຖານທ້ອງຖິ່ນ ແລະ ຖືກເກົ່າມິດຄືສຳນວນສັງຄົມທ້ອງຖິ່ນ. ສຳນວນພາສາຕະຫຼາດນີ້ແບ່ງອອກເປັນ 2 ຢ່າງຄື

1. ສຳນວນພາສາຕະຫຼາດໃຊ້ສະເພາະອາຊີບໃດໜຶ່ງ: ບັນດາສະມາຊິກໃນອາຊີບສະເພາະ ໃດໜຶ່ງນຳໃຊ້ສຳນວນທີ່ບໍ່ໄດ້ມາດຕະຖານ ຫຼື ວະລີຄົງຕົວແທນໃຫ້ການໃສ່ຊື່ດ້ານວິຊາການໃດໜຶ່ງ ໂດຍສະເພາະໃນຂົງເຂດສຳນວນການເວົ້າ ແລະ ການສົນທະນາ ຊຶ່ງສຳນວນເຫຼົ່ານັ້ນໄດ້ກາຍເປັນສັບວິຊາການທີ່ມີຄຸນຄ່າໃຫ້ແກ່ອາຊີບໃດໜຶ່ງນັ້ນໆ.

ສຳນວນພາສານີ້ ຈະຊ່ວຍເພີ່ມເຕີມເງື່ອນໄຂໃຫ້ແກ່ທິດທາງການຂະຫຍາຍຕົວຂອງພາສາດ້ານສັບວິຊາການໃຫ້ໄດ້ມາດຕະຖານດ້ວຍວິທີການພັດທະນາຕົວເອງຂອງບັນດາສຳນວນເຫຼົ່ານັ້ນ; ເນື່ອງຈາກວິວັດທະນາການດ້ານເວລາ ບັນດາສຳນວນພາສາສະເພາະກຸ່ມຄົນໃດໜຶ່ງຈະກາຍມາເປັນສຳນວນພາສາທີ່ໄດ້ມາດຕະຖານໃນເວລາທີ່ແນ່ນອນໃດໜຶ່ງ. ໂດຍສະເພາະຢ່າງຍິ່ງມັນປາກົດຕົວຢູ່ໃນຂະແໜງການວຽກງານຕ່າງໆໃດໜຶ່ງ. ຊຶ່ງປະມວນຄຳສັບທີ່ກາຍມາເປັນສຳນວນວິຊາການທີ່ໄດ້ມາດຕະຖານໃນເບື້ອງຕົ້ນ ຈະຖືກເຮັດໃຫ້ຍືນຄົງຕົວ ແລະ ຂະຫຍາຍຕົວຕໍ່ໆໄປຢ່າງເປັນກ້າວໆ.

ຕົວຢ່າງ: - ຢູ່ໃນກຸ່ມແກວຄູອາຈານ ແລະ ນັກຮຽນຮູ້ນັກສຶກສາ ຮັບຮູ້ຄຳສັບ "ໜາກ = ຄະແນນ" ດີກວ່າໃນກຸ່ມແກວອື່ນໆ; ດັ່ງໃນປະໂຫຍກທີ່ວ່າ "ມື້ນີ້ຂ້ອຍໄດ້ໜາກ 5", ໝາຍຄວາມວ່າ "ມື້ນີ້ຂ້ອຍໄດ້ຄະແນນ 5".

- ມື້ນີ້ຫ້ອງຂອງພວກເຮົາຕ້ອງແບ່ງໄປອອກແຮງງານລວມ 2 ສະຫາຍ (2 ຄົນ).

2. ສຳນວນພາສາຕະຫຼາດທີ່ກ່ຽວຂ້ອງກັບບັນຫາໃດໜຶ່ງ: ມັນແມ່ນບັນດາສຳນວນທີ່ບໍ່ໄດ້ມາດຕະຖານ ຂອງບັນດາປະມວນຄຳສັບທີ່ນິຍົມໃຊ້ກັນສະເພາະໃນບັນດາສະມາຊິກຂອງກຸ່ມຄົນໃດໜຶ່ງ ເຊັ່ນ ກຸ່ມແກວຂອງນັກສຶກສາ, ກຸ່ມແກວຂອງທະຫານ ແລະ ກຸ່ມແກວອື່ນໆ. ຢູ່ໃນບາງກໍລະນີ ສຳນວນນີ້ຈະຖືກນຳໃຊ້ ເມື່ອຜູ້ໃຊ້ຕ້ອງການຢາກໃຫ້ສຳນວນຂອງກຸ່ມແກວຕົນເອງແຕກຕ່າງໄປຈາກກຸ່ມແກວອື່ນໆຢ່າງມີເຈດຕະນາ ແລະມີເປົ້າໝາຍ.ສຳນວນນີ້ສ່ວນຫຼາຍຈະແມ່ນສຳນວນທີ່ມີລັກສະນະເພີ່ມເຕີມດ້ານອາລົມຈິດ. ມັນແມ່ນສຳນວນທີ່ບໍ່ໄດ້ມາດຕະຖານທີ່ຖືກນຳໃຊ້ໃນຂົງເຂດສຳນວນພາສາປາກ, ໃນບົດປາໄສຕໍ່ສາທາລະນະທີ່ບໍ່ໄດ້ກະກຽມ ແລະຈະມີຢູ່ໃນບົດດ້ານສຳນວນ ສິລະປະໜ້ອຍທີ່ສຸດ. ໃນຕົວ ຂອງສຳນວນນີ້ ມີໜ້າທີ່ເປັນພາຫະນະສື່ສານທີ່ສາມາດຕີລາຄາສະພາບແວດລ້ອມຕົວຈິງ ແລະເຮັດໜ້າທີ່ສື່ສານເພື່ອນຳເອົາສຳນວນກ່ຽວກັບຄວາມຮູ້ສຶກສາທາງດ້ານອາລົມຈິດມາສະແດງອອກ.

ຕົວຢ່າງ: ຄຳສັບ "ດົ້ງ" ໃນປະໂຫຍກ "ລາວເປັນສ່ຳວດົ້ງ", ໝາຍຄວາມວ່າ "ລາວເປັນສາວບໍລິການ"

8. 2. 2 ຄຳລະຫັດ (ສຳນວນພາສາກົດລັບ)

ສຳນວນພາສາຄຳລະຫັດແມ່ນສຳນວນທີ່ກຸ່ມນຳໃຊ້ດ້ວຍບັນດາບຸກຄົນ ທີ່ກຸ່ມຈຳກັດທາງດ້ານສັງຄົມ.

ຕົວຢ່າງ: - "ຂີ້ຄວາຍ = ຢ່າຝື່ນ"

- "ເບຍສາມສາມ = ເບຍຈືນທີ່ລາຄາຖືກ, ສາວຂາຍຕົວທີ່ລາຄາຖືກ" (ໃນສະໄໝກ່ອນ)

ຄຳຖາມ:

1. ຈົ່ງອ່ານບົດເລື່ອງໃດໜຶ່ງຂອງລາວເຮົາ.
   - ຈົ່ງຊອກຫາບັນດາຄຳສັບທີ່ບໍ່ໄດ້ມາດຕະຖານໃນບົດເລື່ອງດັ່ງກ່າວ.
   - ຈົ່ງກຳນົດເບິ່ງວ່າບັນດາພາຫະນະພາສາໃດມີລັກສະນະສ່ວນຕົວຂອງຜູ້ຂຽນ.
   - ຈົ່ງກຳນົດເບິ່ງວ່າສຳນວນໃດແມ່ນສຳນວນພາສາຕະຫຼາດສະເພາະຂອງກຸ່ມຄົນໃດໜຶ່ງ ແລະ ສຳນວນໃດແມ່ນສຳນວນພາສາກົດລັບ.

8. 3 ທິດທາງດ້ານຄວາມເໝາະສົມຂອງປັນດາຄຳສັບກັບລະດັບສຳນວນມາດຕະຖານ

8. 3.1 ລະດັບສຳນວນທົ່ວໄປ

ລະດັບສຳນວນທົ່ວໄປ ສ່ວນໃຫຍ່ຊີ້ໃຫ້ເຫັນປັນດາໝວດວັດຈະນາດ້ານປະມວນຄຳສັບທີ່ແນ່ນອນ ຂອງພາສາແຫ່ງຊາດ. ມັນເຮັດໜ້າທີ່ຫ້ອນໂຮມເອົາປັນດາສຳນວນທີ່ເປັນພາຫະນະພື້ນຖານຈາກທຸກ ຂົງເຂດສຳນວນທີ່ບໍ່ມີລັກສະນະສະເພາະຂອງບົດໃດບົດໜຶ່ງ.

8. 3. 2 ລະດັບສຳນວນສົນທະນາ

ລະດັບສຳນວນນີ້ກວມເອົາປັນດາພາຫະນະດ້ານວັດຈະນາ ຊຶ່ງບໍ່ແມ່ນພຽງແຕ່ປັນດາຄຳສັບ ແຕ່ນັບທັງວະລີ ແລະ ທັ້ງໝົດຈຳພວກທີ່ຖືກນຳໃຊ້ໃນຂົງເຂດສຳນວນຂອງການສົນທະນາ. ກ້າຫາກວ່າ ສຳນວນໃດປາກົດຕົວຢູ່ໃນຂົງເຂດສຳນວນອື່ນໆໃດໜຶ່ງ, ຜູ້ຮັບສື່ສານຈາກບົດດັ່ງກ່າວຈະຕ້ອງໄດ້ສັງເກດ ແລະ ຕີລາຄາສຳນວນດັ່ງກ່າວຄືກັນກັບປັນດາພາຫະນະສຳນວນທີ່ມີລັກສະນະສະເພາະ.

ສຳນວນ ແລະ ວະລີທີ່ນອນຢູ່ໃນລະດັບສຳນວນສົນທະນາມີລັກສະນະເນັ້ນໜັກດ້ານອາລົມຈິດ. ດັ່ງນັ້ນ ຢູ່ໃນປັນດາບົດສື່ສານຕົວຈິງຂອງຂົງເຂດສົນທະນານີ້ ຄວນໃຫ້ຄວາມລະມັດລະວັງທັງທາງ ດ້ານອິດທິພົນດ້ານຄວາມໝາຍທີ່ເໝາະສົມ ກ່ຽວກັບອາຍຸກະສຽນຂອງຜູ້ນຳໃຊ້ສຳນວນ ແລະ ຜູ້ຮັບສື່ ສານຂອງບົດ ຢູ່ໃນການນຳໃຊ້ບາງຄຳສັບ ແລະ ສຳນວນ.

8. 3. 3 ລະດັບສຳນວນວິຊາການ

ລະດັບສຳນວນວິຊາການ ໂດຍພື້ນຖານແມ່ນຖືກສ້າງຂຶ້ນດ້ວຍລະດັບສຳນວນວິຊາການ (ສັບ ວິຊາການ). ຍ້ອນແນວນັ້ນໃນກໍລະນີນີ້ຈຶ່ງກ໊ໄດ້ວ່າ ແມ່ນການຕັ້ງຊື່ໂດຍເລັ່ງໃສ່ຄວາມໝາຍທີ່ແນ່ນອນ ໃດໜຶ່ງຊຶ່ງມີລັກສະນະສະເພາະ ແລະ ກ໊ເຄີຍປະຕິບັດກັນມາຢ່າງເປັນປົກກະຕິໃນໄລຍະທີ່ຜ່ານມາ. ລະ ດັບສຳນວນວິຊາການສາມາດແບ່ງອອກເປັນສຳນວນວິຊາການໃນຄວາມໝາຍແຄບ (ໝາຍຄວາມ ວ່າ ຢູ່ໃນຄວາມໝາຍທີ່ບໍ່ແມ່ນສຳນວນວິຊາການຈະບໍ່ຖືກນຳໃຊ້ຈັກຄ໊) ແລະ ເປັນສຳນວນວິຊາການ ແບບອັດຕະໂນມັດ (ໝາຍຄວາມວ່າ ປັນດາຄຳສັບເຫຼົ່ານີ້ແມ່ນມາຈາກລະດັບກາງທີ່ທົ່ວໄປ ແຕ່ຖືກ ນຳໃຊ້ໃນໜ້າທີ່ເປັນສຳນວນວິຊາການ).

ດ້ວຍການນຳໃຊ້ທີ່ກວ້າງຂວາງ ແລະ ດ້ວຍການຜ່ານຢ່າງເປັນປົກກະຕິຈາກຂົງເຂດວິ ທະຍາສາດເດີມ ເຂົ້າສູ່ຂົງເຂດທີ່ທັນສະໄໝ, ແລະ ຈາກນັ້ນຕໍ່ໄປຈະນຳໄປສູ່ຂົງເຂດໂຄສະນາ ຫຼື ບາງ ເທື່ອ ແມ່ນກະທັ້ງ ບາງສຳນວນວິຊາການຈະສູນເສຍເນື້ອໃນເດີມສະເພາະທີ່ຈຳກັດຄວາມໝາຍທີ່ແນ່ ນອນໃດໜຶ່ງຂອງພວກມັນ; ແລະ ຈາກນັ້ນ ພວກມັນຈະຖືກລະງັບການນຳໃຊ້ເປັນສັບວິຊາການ; ແລ້ວ ອາດຈະນຳໄປສູ່ການກຳນົດເປັນສັບວິຊາການໃໝ່ໃດໜຶ່ງຂຶ້ນມາ; ຫຼື ບັນດາຄຳສັບໃດທີ່ຖືກນຳໃຊ້ໜ້ອຍ ທີ່ສຸດ ຜ່ານເວລາອັນຍາວນານ ພວກມັນຈະຄົງຕົວຢູ່ໄດ້ຕາມຄວາມນິຍົມໃນການນຳໃຊ້ ຂອງສັງຄົມ ເທົ່ານັ້ນ.

ຢູ່ໃນບັນດາບົດຕົວຈິງ ຈະນຳໄປເຖິງການເກີດມີສັບຮ່ວມຄວາມໝາຍໃນບາງເວລາຂອງສຳ ນວນວິຊາການຂອງພາສາແຫ່ງຊາດໃດໜຶ່ງ, ພາສາຕ່າງປະເທດ ກ໊ຄືພາສານາໆຊາດ. ການໃຊ້ ສັບຮ່ວມຄວາມໝາຍ ໃນຂົງເຂດສຳນວນວິຊາການທີ່ຢູ່ໃນຂົງເຂດວິທະຍາສາດຕາມທຳມະດາແມ່ນ ນຳໃຊ້ສັບວິຊາການທີ່ມາຈາກພາສາປາລີ - ສັນສະກິດ, ພາສາຕ່າງປະເທດ ຫຼື ພາສານາໆຊາດ; ຢູ່ໃນຂົງເຂດໂຄສະນາ ຫຼື ຢູ່ໃນພາກປະຕິບັດຕົວຈິງກ໊ຖືກນຳໃຊ້ສັບວິຊາການພາຍໃນປະເທດຫຼາຍກວ່າ.

8. 3. 4 ລະດັບສຳນວນໂຄສະນາ

ຈຸດພິເສດລວມດ້ານສຳນວນຂອງບັນດາພາຫະນະພາສາດ້ານວັດຈະນາ ທີ່ນອນຢູ່ລະດັບສຳນວນໂຄສະນາສ່ວນຫຼາຍແມ່ນການນຳໃຊ້ຢູ່ໃນຂັ້ນຂອງສຳນວນ ແລະ ວະລີ. ດ້ວຍການຫຼຳຄືນ ທີ່ແນ່ນອນໃນເວລານຳໃຊ້ຈະນຳໄປເຖິງຄວາມຣີບດ່ວນ, ຊຶ່ງຢູ່ໃນນັ້ນພາກສ່ວນໃຫຍ່ຂອງບົດແມ່ນ ເກີດຂຶ້ນໃນຂົງເຂດສຳນວນໂຄສະນາ. ສຳນວນທີ່ໃຊ້ເລື້ອຍໆຈົນເໝືອນກັບວ່າເປັນສຳນວນອັດຕະໂນມັດ ຊຶ່ງແນ່ນອນໃນແງ່ທີ່ສອງຈະຊ່ວຍໃຫ້ຈັງຫວະໄວຂຶ້ນກວ່າເກົ່າ ແລະ ເພື່ອວ່າຢູ່ໃນກໍລະນີໃດຜູ້ອ່ານ ແລະ ຜູ້ຟັງຈະໄດ້ຮັບຂ່າວສານທີ່ເໝາະສົມ ຫຼື ສ້າງເສັ້ນທາງສູ່ການຮັບຮູ້ຂ່າວສານໃຫ້ເຂົ້າເຈົ້າ ງ່າຍຂຶ້ນ. ລະຫວ່າງຄຳສັບ ແລະ ສຳນວນທີ່ອັດຕະໂນມັດ ຂັ້ນທີໜຶ່ງແມ່ນສຳນວນທີ່ ຕ້ອງສະແດງຄວາມຮູ້ສຶກຊຶ່ງປະສົມປະສານຄວາມສຳນຶກດ້ານສັງຄົມປັດຈຸບັນໃນຂົງເຂດການເມືອງ, ເສດຖະກິດ, ວັດທະນາທຳ ແລະ ອື່ນໆ. ທີ່ຈິງແລ້ວ ຢູ່ໃນຂົງເຂດໂຄສະນາຈະມີການພັດທະນາສຳນວນ ຢ່າງບໍ່ຢຸດຢັ້ງ.

ຕົວຢ່າງ: ສຳນວນ ແລະ ວະລີ

- ໜ່ວຍອາສາສະໝັກຕະລຸມບອນອອກແຮງງານເພື່ອສັງຄົມນິຍົມ.
- ການເມືອງທີ່ມີການຢູ່ຮ່ວມກັນໂດຍສັນຕິ.
- ໂຮງຮຽນພັກ.
- ເສດຖະກິດຕະຫຼາດ.

8. 3. 5 ລະດັບສຳນວນສິລະປະ

ສິ່ງທີ່ເປັນສັນຍາລັກຂອງລະດັບສຳນວນສິລະປະແມ່ນການກອນນິຍົມ, ມັນແມ່ນບັນດາວັດຈະນາທີ່ກ່ຽວກັບການກອນຊຶ່ງຜູ້ຂຽນນຳໃຊ້ເຂົ້າໃນການສ້າງບົດຂອງເຂົາ. ເບື້ອງຕົ້ນພວກມັນກໍ່ກນຳໃຊ້ຢູ່ໃນບົດການກອນ ແລະ ຫຼັງຈາກນັ້ນຈະກໍ່ກນຳໃຊ້ຢູ່ໃນບົດເລື່ອງທົ່ວໄປ.

ສິ່ງສຳຄັນຂອງລະດັບສຳນວນສິລະປະແມ່ນສ້າງຊື່ເອີ້ນທີ່ເປັນຮູບປະທຳ. ພື້ນຖານຂອງມັນແມ່ນຊື່ສຳນວນປຽບທຽບ, ຊື່ຫົວຂໍ້ປຽບທຽບ ຫຼື ຂະນິດຂອງສຳນວນຫົວຂໍ້ປຽບທຽບ. ການເລືອກເຟັ້ນການກອນ ແລະ ຊື່ເອີ້ນທີ່ເປັນຮູບປະທຳມີອິດທິພົນອັນຍິ່ງໃຫຍ່ ຕໍ່ຄວາມເປັນຕົວຂອງຕົວເອງຂອງຜູ້ຂຽນ. ປະສິດທິຜົນຂອງບັນດາພາຫະນະພາສານີ້ ບໍ່ພຽງແຕ່ຂຶ້ນກັບການເລືອກເຟັ້ນບັນດາພາຫະນະພາສາຂອງຜູ້ຂຽນ, ແຕ່ຍັງຂຶ້ນກັບກົນເຫວີການນຳໃຊ້ໃນການສ້າງບົດແຕ່ລະບົດໃນຜົນງານ ຕົວຈິງອີກດ້ວຍ.

8. 3. 6 ລະດັບສຳນວນຫາງການ

ບັນດາຄຳສັບທີ່ຖືກຈັດຢູ່ໃນລະດັບສຳນວນຫາງການ ສາມາດມີຢູ່ໃນທຸກຂົງເຂດສຳນວນ ຊຶ່ງນັບທັງສຳນວນຂອງການສົນທະນາ; ແຕ່ສ່ວນໃຫຍ່ຈະມີຫຼາຍຢູ່ໃນບົດຂຽນ ແລະ ເປັນສຳນວນພາສາທີ່ໄດ້ມາດຕະຖານ.

ຄຳຖາມ:

1. ລະດັບສຳນວນມາດຕະຖານມີຈັກຢ່າງ? ຄືຢ່າງໃດແດ່?

ພາກທີ III: ທັກສະພາສາ

1. ຫຼັກການຟັງ

1. 1 ວິວັດທະນາການຂອງການຟັງ

ຂະບວນການຂອງການຟັງ ມີຄວາມສະຫຼັບສັບຊ້ອນພໍສົມຄວນ. ຄົນສ່ວນຫຼາຍມັກຄິດວ່າຂະບວນການຂອງການຟັງນັ້ນອາດໃຊ້ແຕ່ຄວາມຕັ້ງໃຈຢ່າງດຽວເທົ່ານັ້ນກໍພໍ. ແຕ່ໃນຄວາມເປັນຈິງແລ້ວ ການຟັງ ເປັນຂະບວນການທີ່ມີຄວາມສະຫຼັບສັບຊ້ອນໄປກວ່ານັ້ນ. ດັ່ງນັ້ນ ໃນການສຶກສາວາທະສາດ ສົນທະນາສາດຈຶ່ງຈຳເປັນຕ້ອງສຶກສາ ເຖິງຂະບວນການໃນການຟັງ. ເຖິງວ່າຂະບວນການຂອງການຟັງຢ່າງມີປະສິດທິພາບຈະເປັນຂະບວນການທີ່ລະອຽດອ່ອນ ແລະສະຫຼັບສັບຊ້ອນ ແຕ່ມັນກໍບໍ່ເປັນສິ່ງທີ່ເຫຼືອວິໄສເກີນຄວາມສາມາດຂອງມະນຸດເຮົາ ທີ່ຈະເຝິກຝົນໃຫ້ເກີດມີຄວາມຊຳນິຊຳນານໄດ້.

ຂະບວນການຂອງການຟັງປະກອບດ້ວຍ 5 ປະການດັ່ງນີ້

1. 1. 1 ການໄດ້ຍິນ

ໃນເບື້ອງຕົ້ນຜູ້ຟັງຈະຕ້ອງໄດ້ຍິນສຽງທີ່ສົ່ງຜ່ານມາສູ່ອະໄວຍະວະຮັບສຽງຂອງຄົນເຮົາ ເປັນອັນດັບທຳອິດ.

1. 1. 2 ການໃຫ້ຄວາມສົນໃຈ

ເມື່ອໄດ້ຍິນແລ້ວ ກໍໃຫ້ຈຸດສົນໃຈໄປສູ່ສິ່ງທີ່ໄດ້ຍິນນັ້ນ.

1. 1. 3 ການເຂົ້າໃຈ

ຈາກຂັ້ນຕອນທີ່ 1 ແລະ ທີ່ 2 ຜ່ານມາແລ້ວ ກໍເຂົ້າສູ່ຂັ້ນຕອນທີ່ 3 ຄື ການເຂົ້າໃຈໃນສິ່ງທີ່ໄດ້ຍິນນັ້ນ. ສົມມຸດວ່າ ເຮົາໄດ້ຍິນສຽງຄົນເວົ້າກ້າຫາກຜູ້ເວົ້າ ເວົ້າພາສາທີ່ເຮົາຄຸ້ນເຄີຍ ເຊັ່ນ ພາສາລາວ, ພາສາໄທ ເຮົາກໍສາມາດເຂົ້າໃຈໄດ້. ກົງກັນຂ້າມ ກ້າຫາກຜູ້ເວົ້າເວົ້າພາສາຕ່າງປະເທດທີ່ເຮົາບໍ່ຄຸ້ນເຄີຍ ເຊັ່ນ ພາສາອັງກິດ, ຝຣັ່ງ, ອິຕາລີ... ເຮົາກໍບໍ່ສາມາດເຂົ້າໃຈໄດ້. ສະນັ້ນ ໃນຂັ້ນຕອນເຂົ້າໃຈນີ້ ຜູ້ຟັງຈຳເປັນຕ້ອງຮູ້ ຫຼື ຄຸ້ນເຄີຍກັບພາສານັ້ນໆເສຍກ່ອນຈຶ່ງຈະເຂົ້າໃຈໄດ້.

1. 1. 4 ການຕີຄວາມໝາຍ

ເມື່ອຜ່ານຈາກຂັ້ນຕອນການເຂົ້າໃຈແລ້ວ ກໍເຂົ້າສູ່ຂັ້ນຕອນຕີຄວາມໝາຍ ເຊິ່ງຜູ້ຟັງຈະສາມາດຕີຄວາມໝາຍເນື້ອໃນໃຈຄວາມຂອງຜູ້ເວົ້າໄດ້. ໃນການຕີຄວາມໝາຍນີ້ ຍ່ອມອາໄສປະສົບການໃນຕົວຂອງຜູ້ຟັງປະກອບດ້ວຍ ຈຶ່ງຈະສາມາດຕີຄວາມໝາຍໄດ້. ພ້ອມກັນນັ້ນກ້າຜູ້ຟັງ ຟັງເນື້ອໃນໃຈຄວາມຂອງຜູ້ເວົ້າຢ່າງພິນິດພິຈາລະນາ ກໍຈະສາມາດຕີຄວາມໝາຍໃຈຄວາມນັ້ນໄດ້ດີຂຶ້ນ.

1. 1. 5 ການຕອບສະໜອງ

ເມື່ອຜູ້ຟັງຕີຄວາມໝາຍເນື້ອໃນໃຈຄວາມນັ້ນໄດ້, ຜູ້ຟັງກໍສາມາດຕອບສະໜອງຕໍ່ກັບການເວົ້າຂອງຜູ້ເວົ້າ ເຊັ່ນ ຍິ້ມຮັບ, ສະແດງຄວາມເຂົ້າໃຈ ຫຼືກົງກັນຂ້າມ ເຊັ່ນ ໜ້າຫຍຸ້ງ, ສະແດງຄວາມບໍ່ເຂົ້າໃຈ ຫຼືອາດເວົ້າຈາຕອບໂຕ້ກັບມາ ດັ່ງນີ້ເປັນຕົ້ນ.

1. 2 ຄວາມສຳຄັນຂອງການຟັງ

ການຟັງ ເປັນທັກສະທີ່ສຳຄັນຢ່າງຍິ່ງເປັນສື່ກາງຂອງການຮຽນຮູ້ວິຊາຕ່າງໆ. ເພາະວ່າໃນຊີວິດ ປະຈຳວັນຂອງຄົນເຮົາຈະເຫັນວ່າ ຕົນເອງໄດ້ຄຸນປະໂຫຍດຈາກການຟັງຢ່າງຫຼວງຫຼາຍ, ບໍ່ວ່າຈະເປັນການສົນທະນາ, ການສະແດງຄວາມຄິດເຫັນ, ການຄົບຄ້າສະມາຄົມຕ່າງ; ນັບທັງການໄດ້ ຮັບ

ຟັງຄຳສັ່ງສອນ, ຄຳອະທິບາຍຂອງພໍ່ແມ່ ແລະ ຄູບາອາຈານ ຫຼື ແມ່ນແຕ່ການໄດ້ຟັງບັນຍາຍຂອງຜູ້ມີຄວາມຮູ້ໃນດ້ານວິຊາການຕ່າງໆ ຈະແມ່ນຟັງຈາກວິທະຍຸ, ໂທລະພາບ ແລະອື່ນໆ ກໍ່ລ້ວນແຕ່ມີປະໂຫຍດໃຫຍ່ຫຼວງຕໍ່ຄົນເຮົາ ເຊິ່ງທັງໝົດເຫຼົ່ານີ້ ທຸກໆຄົນສາມາດຟັງໄດ້, ແຕ່ການທີ່ຈະຟັງເປັນ ຟັງເພື່ອໃຫ້ເກີດປະໂຫຍດນັ້ນ ມັນເປັນເລື່ອງທີ່ຫຍຸ້ງຍາກພໍສົມຄວນ. ດັ່ງນັ້ນ ມັນຈຶ່ງຮຽກຮ້ອງໃຫ້ຜູ້ຟັງຕ້ອງໄດ້ເຝິກຝົນທັກສະການຟັງ ເພື່ອໃຫ້ເກີດຄວາມຊຳນິຊຳນານ ແລະ ສາມາດນຳໄປໃຊ້ໃຫ້ເກີດປະໂຫຍດໃນທຸກວິຊາ ແລະ ໃນຊີວິດປະຈຳວັນ.

ການຟັງ ບໍ່ແມ່ນພຽງແຕ່ໄດ້ຍິນເທົ່ານັ້ນ, ຈະຕ້ອງປະກອບດ້ວຍຄວາມເຂົ້າໃຈ, ຄວາມຄິດ ແລະ ສະຕິປັນຍາ. ຜູ້ທີ່ "ຟັງເປັນ" ຈະຕ້ອງມີສະມາທິໃນການຟັງເພື່ອຮັບຮູ້, ໃຊ້ການຄົ້ນຄິດເພື່ອທຳຄວາມເຂົ້າໃຈກັບເນື້ອເລື່ອງທີ່ໄດ້ຍິນ ແລະໃຊ້ສະຕິປັນຍາຄົ້ນຄິດວິເຄາະວິຈານຂໍ້ຄວາມທີ່ໄດ້ຟັງນັ້ນວ່າ ເປັນໜ້າເຊື່ອຖືພຽງໃດ ແລະສາມາດນຳເອົາສິ່ງທີ່ໄດ້ຟັງນັ້ນ ໄປນຳໃຊ້ໃຫ້ເກີດປະໂຫຍດໄດ້ໜ້ອຍຫຼາຍພຽງໃດ.

ການຟັງ ເປັນທັກສະໜຶ່ງທີ່ນອນຢູ່ໃນ (4) ທັກສະໃນການນຳໃຊ້ພາສາ ນອກຈາກການເວົ້າ, ການອ່ານ ແລະການຂຽນ ຊຶ່ງເຫັນວ່າເປັນທັກສະທີ່ໃຊ້ຫຼາຍໃນຊີວິດປະຈຳວັນຂອງພວກເຮົາ. ໃນການຮຽນ-ການສອນຢູ່ໃນໂຮງຮຽນປະຖົມ ແລະ ມັດທະຍົມຂອງປະເທດເຮົາປະກົດວ່າ ສ່ວນຫຼາຍແລ້ວນັກຮຽນຍັງໃຊ້ການຟັງຫຼາຍກວ່າດ້ານອື່ນໆ. ຈາກການສຳຫຼວດການຮຽນພາສາຂອງນັກຮຽນໃນໂຮງຮຽນມັດທະຍົມປາຍແຫ່ງທີ່ມີຕົວເລກສະແດງວ່າ ນັກຮຽນໃຊ້ເວລາຟັງ 48%, ເວົ້າ 23%, ອ່ານ16% ແລະຂຽນ13%. ຕົວເລກດັ່ງກ່າວນີ້ສະແດງໃຫ້ເຫັນວ່າ ການຟັງມີຄວາມສຳຄັນຫຼາຍກວ່າທັກສະອື່ນໆຂອງນັກສຶກສາມັດທະຍົມປາຍ. ດັ່ງນັ້ນ ເຫັນວ່າການຟັງເປັນສິ່ງຈຳເປັນ ແລະກໍ່ນຳໃຊ້ຫຼາຍໃນຊີວິດປະຈຳວັນ ຈຶ່ງສົມຄວນມີການເຝິກຝົນທັກສະການຟັງ ເພື່ອໃຫ້ເກີດຄວາມຊຳນິຊຳນານ ແລະໄດ້ຮັບປະໂຫຍດຈາກການຟັງຢ່າງກຸ້ມຄ່າ

1. 3 ອົງປະກອບຂອງການຟັງຢ່າງມີປະສິດທິພາບ

1. 3. 1 ຈຸດໝາຍຂອງການຟັງ

1. ຟັງເພື່ອໃຫ້ເກີດຄວາມຮູ້

ເປັນການຟັງ ທີ່ໃຊ້ຫຼາຍທີ່ສຸດໃນຊີວິດປະຈຳວັນເຊັ່ນ ຟັງຄຳສັ່ງສອນຕັກເຕືອນຂອງພໍ່ແມ່, ຟັງຄຳອະທິບາຍຂອງຄູອາຈານ, ຟັງລາຍງານຂ່າວສານ ເປັນຕົ້ນ. ການຟັງເພື່ອຄວາມຮູ້ເປັນການຝຶກທັກສະທາງພາສາ ໃນດ້ານການຈັບເອົາໃຈຄວາມທີ່ສຳຄັນ ແລະ ໃຈຄວາມທີ່ລະອຽດຂອງເລື່ອງທີ່ໄດ້ຟັງ. ດັ່ງນັ້ນ ຈຶ່ງຄວນມີບັນທຶກຫຍໍ້ໃນເວລາຟັງ ເພື່ອຊ່ວຍຄວາມຈຳ ຫຼືສາມາດຕັ້ງຄຳຖາມໄດ້ໃນເມື່ອຕ້ອງການລາຍລະອຽດອື່ນໆເພີ່ມເຕີ່ມ.

2. ຟັງເພື່ອຄິດ

ເປັນການຟັງທີ່ຈະຕ້ອງໃຊ້ສະຕິປັນຍາ ແລະການຄົ້ນຄິດຕຶກຕອງເຊັ່ນ ຟັງບົດຄວາມ, ການອະທິບາຍບັນຫາ, ການວິຈານ, ການວິເຄາະຂ່າວ ແລະຟັງການໂຄສະນາເປັນຕົ້ນ. ການຟັງເພື່ອຄິດຄວນມີຫຼັກການໃນການພິຈາລະນາດັ່ງນີ້

ກ. ພິຈາລະນາເລື່ອງວ່າ ສ່ວນໃດແມ່ນຄວາມຈິງ ແລະສ່ວນໃດແມ່ນຄວາມຄິດເຫັນຂອງຜູ້ເວົ້າ.

ຂ. ພິຈາລະນາການໃຊ້ເຫດຜົນ ຫຼື ການອ້າງຫຼັກຖານເພື່ອເຫັນດີກັບຄວາມຄິດທີ່ເໝາະສົມ

ແລະບໍ່ເຫັນດີກັບຄວາມຄິດທີ່ບໍ່ເໝາະສົມ.

ຄ. ປະເມີນຄຸນຄ່າຂອງເລື່ອງທີ່ໄດ້ຟັງວ່າຜິດ - ກືກ ແລະ ໜ້າເຊື່ອກືໄດ້ພຽງໃດ.

3. ຟັງເພື່ອໃຫ້ເກີດຄວາມບັນເທີງຫາງໃຈ

ເປັນການຟັງທີ່ກໍ່ໃຫ້ເກີດຄວາມສະໜຸກສະໜານ ແລະ ມີອາລົມໄປຕາມສິ່ງທີ່ໄດ້ຟັງ ເຊັ່ນ ຟັງເພງ, ນະວະນິຍາຍ, ລະຄອນ, ບົດກາບກອນ ຫລືຟັງເລື່ອງຕ່າງໆທີ່ຜູ້ຟັງສົນໃຈເປັນຕົ້ນ. ການຟັງເພື່ອຄວາມມ່ວນຊື່ນເພີດເພີນຄວນມີພື້ນຖານຄວາມຮູ້ໃນສິ່ງທີ່ຟັງພໍສົມຄວນ.

1. 3. 2 ລັກສະນະນິດໄສຂອງຜູ້ຟັງ

✳ ລັກສະນະນິດໄສຂອງຜູ້ຟັງທີ່ບໍ່ດີ

1. ເວລາຟັງອັນໃດ ມັກຄິດສະເໜີວ່າສິ່ງທີ່ເຂົາເວົ້ານັ້ນບໍ່ເປັນໜ້າສົນໃຈ.
2. ມັກວິພາກວິຈານວິທີເວົ້າຂອງຜູ້ເວົ້າເຊັ່ນ ໂອ້ຍ ! ເວົ້າຈັບກົກຈັບປາຍບໍ່ໄດ້, ເວົ້າບໍ່ເປັນຕາຟັງ, ເວົ້າອືໆ ອາໆ ແລະອື່ນໆ.
3. ຟັງສະເພາະເລື່ອງທີ່ຕົນພໍໃຈເທົ່ານັ້ນ.
4. ພະຍາຍາມຈົດທຸກສິ່ງທຸກຢ່າງ, ເມື່ອຈົດບໍ່ໄດ້ກໍ່ຄິດຢາກຮ້າຍຜູ້ເວົ້າ.
5. ເຮັດເໝືອນຕັ້ງໃຈຟັງເຊັ່ນ ຟັງໜ້າຜູ້ເວົ້າຕະຫຼອດເວລາ ແຕ່ໃຈລອຍໜີໄປເລື່ອງອື່ນ.
6. ຫງຸດຫງິດ ຫຼື ສົນໃຈກັບສິ່ງຮອບຕົວທີ່ມາລົບຄວນເຊັ່ນ ສຽງດັງຈາກເກົ້າອີ້, ສຽງລົບກວນຈາກພາຍນອກ, ອາກາດຮ້ອນ ແລະອື່ນໆ.
7. ບໍ່ມັກຟັງເລື່ອງທີ່ຮູ້ສຶກວ່າຍາກ ແລະ ໜັກສະໜອງ.
8. ປ່ອຍໃຫ້ຄຳເວົ້າບາງຄຳຂອງຜູ້ເວົ້າຝັງໃຈຈົນເກີນໄປ ໂດຍສະເພາະ ເກີດຄວາມຮູ້ສຶກບໍ່ດີຕໍ່ຕົວຜູ້ເວົ້າ ທັງໆທີ່ຜູ້ເວົ້າບໍ່ໄດ້ເຈຕະນາ.

✳ ລັກສະນະຂອງຜູ້ຟັງທີ່ດີ

1. ຟັງຢ່າງຕັ້ງໃຈໂດຍໃຊ້ສະມາທິ, ບໍ່ສະເພາະແຕ່ຟັງເທົ່ານັ້ນ ຫາກຍັງຮູ້ຈັກສັງເກດ ແລະໃຊ້ສະຕິປັນຍາ ເພື່ອພິຈາລະນາເລື່ອງທີ່ຟັງ; ແຕ່ບໍ່ໝາຍຄວາມວ່າຈະໃຫ້ຄາດຄະເນວ່າ ຜູ້ເວົ້າຈະເວົ້າອັນໃດຕໍ່ ໄປ ເພາະວ່າການກະທຳເຊັ່ນນັ້ນຈະພາໃຫ້ເສຍສະມາທິໃນການຟັງ ຫຼື ອາດຈະເຂົ້າໃຈຄວາມໝາຍ ຂອງການເວົ້າຜິດໄປ.
2. ຟັງແລ້ວຈັບໃຈຄວາມບັນຫາໃຫ້ກົງກັບຈຸດປະສົງທີ່ຕ້ອງການຄື:
   ກ. ກ້າຟັງພຽງແຕ່ຈັບໃຈຄວາມ ຄວນສະຫຼຸບຄວາມຄິດລວມຍອດຂອງເລື່ອງທີ່ຟັງນັ້ນໃຫ້ໄດ້.
   ຂ. ກ້າຟັງເພື່ອໃຫ້ລາຍລະອຽດ ຄວນໃຊ້ຄວາມຄິດພິຈາລະນາເລື່ອງທີ່ຟັງນັ້ນວ່າ ມີສາລະດ້ານ ໃດ, ພຽງແຕ່ຮູ້ຈັກໃຊ້ຄຳຖາມເພື່ອໃຫ້ໄດ້ລາຍລະອຽດຕາມທີ່ຕ້ອງການ.
   ຄ. ກ້າຟັງເພື່ອຫາເຫດຜົນໂຕ້ແຍ້ງ ຄວນວາງຕົວເປັນກາງ ບໍ່ຄວນມີອະຄະຕິຕໍ່ຕົວຜູ້ເວົ້າ. ສັງເກດຜູ້ເວົ້າວ່າໃຊ້ເຫດຜົນ ຫຼື ໃຊ້ອາລົມພິຈາລະນາຫຼືບໍ່, ມີໃຈກວ້າງພໍເພື່ອຍອມຮັບຟັງ ແລະວິເຄາະບັນຫາຂອງຜູ້ໂຕ້ແຍ້ງ.
3. ສົນໃຈຜູ້ເວົ້າ, ບໍ່ເວົ້າຄຸຍໂອ້ອວດ, ຊຸບຊິບ, ເອະອະ ຫຼືສະແດງກິລິຍາບໍ່ສົນໃຈ ຫຼືບໍ່ໃຫ້ກຽດຜູ້ເວົ້າ ເຖິງວ່າຜູ້ເວົ້າຈະມີລັກສະນະທີ່ບໍ່ດຶງດູດຈິດໃຈກໍ່ບໍ່ຄວນເອົາກ້າທາງຂອງຜູ້ເວົ້າມາເປັນອາລົມ.

4. ຫາກມີຕອນໃດບໍ່ເຂົ້າໃຈຄວນຫາໂອກາດຖາມ ໃນເວລາທີ່ເໝາະສົມ ແຕ່ບໍ່ຄວນເວົ້າຕັດບົດ ໃນເວລາທີ່ຜູ້ເວົ້າກຳລັງເວົ້າ, ກຳລັງພັກຫາຍໃຈ ຫຼືດື່ມນ້ຳ.
5. ຫຼັງການຟັງຄວນມີການຄິດທົບທວນ ຫຼືບັນທຶກສາລະປະໂຫຍດທີ່ໄດ້ຮັບຈາກການຟັງ ແລະ ຮູ້ຈັກນຳຄວາມຮູ້ ແລະຂໍ້ຄິດໄປໃຊ້ໃຫ້ເກີດປະໂຫຍດ.

1. 3. 3 ສະພາບແວດລ້ອມ

ສະພາບແວດລ້ອມ ກໍ່ມີສ່ວນສຳຄັນຊຸ່ນດຽວກັນ ເພື່ອຈະເຮັດໃຫ້ເກີດປະສິດທິພາບ ໃນການຟັງ. ສະພາບແວດລ້ອມທີ່ບໍ່ອຳນວຍໃຫ້ແກ່ການຟັງມີ ຄື:

1. ມີສຽງລົບກວນຈາກພາຍນອກໃນຂະນະທີ່ຟັງ
2. ສະພາບຫ້ອງຄັບແຄບແອອັດ, ອາກາດໃນຫ້ອງໜາວ ຫຼືຮ້ອນເກີນໄປ.
3. ສຽງເວົ້າດັງ ຫຼື ຄ່ອຍເກີນໄປ.

1. 4 ປະໝດຂອງການຟັງ

1. 4. 1 ການຟັງເພື່ອອະທິບາຍຄຳສັ່ງ

ໃນຂະບວນການຟັງທັງໝົດນັບທັງເດັກນ້ອຍ ແລະຜູ້ໃຫ່ຍຕ້ອງໃຊ້ເວລາ ໃນການຟັງເປັນສ່ວນໃຫ່ຍໄປໃນດ້ານການຟັງຄຳອະທິບາຍ ແລະ ຄຳສັ່ງ; ນັກຮຽນຕ້ອງຟັງຄຳອະທິບາຍກ່ຽວກັບການເຮັດບົດຝຶກຫັດຈາກຄູ, ຄຳອະທິບາຍກ່ອນການປະຕິບັດງານ ໃນຫ້ອງທົດລອງທາງວິທະຍາສາດ, ວິທີການຫຼີ້ນເກມກຳນົດການທ່ອງທ່ຽວ, ວິທີຮຽນ, ວິທີທີ່ຈະໄປບ້ານພີ່ນ້ອງຄົນນັ້ນຄົນນີ້ເປັນຕົ້ນ ແມ່ນແຕ່ຜູ້ໃຫ່ຍເຮົາກໍ່ບໍ່ສາມາດຫຼີກລຽງການຟັງຄຳອະທິບາຍຄຳສັ່ງນີ້ໄດ້. ເວັ້ນແຕ່ວ່າ ຄຳສັ່ງນັ້ນອາດຈະເປັນເລື່ອງທີ່ແຕກຕ່າງກັນອອກໄປ ເຊັ່ນ ວິທີການຝຶກກາຍຍະບໍລິຫານທາງວິທະຍຸ, ວິທີປຸງແຕ່ງອາຫານຊະນິດຕ່າງໆ, ວິທີທີ່ຈະໄປເຖິງຈຸດນັດໝາຍ ຫຼືການຮັບຟັງຄຳສັ່ງຈາກຜູ້ບັງຄັບບັນຊາເປັນຕົ້ນ.

ຕົວຢ່າງ: ວິທີປ້ອງກັນອາຫານບໍ່ໃຫ້ບູດ

ການປະຢັດມັດທະຍັດເປັນສິ່ງຈຳເປັນຂອງຄົນເຮົາ ສະນັ້ນ ຖ້າທ່ານໃດກິນອາຫານບໍ່ຫມົດ, ແຕ່ທ່ານຕ້ອງການເອົາໄວ້ກິນມື້ອື່ນ ຫລືມື້ຕໍ່ໄປໃຫ້ນຳເອົາອາຫານທີ່ເຫລືອນັ້ນຖອກໃສ່ໜ້ໄປອຸ່ນຄືນ ໃຫ້ອາຫານຟົດແລ້ວປົງປະໄວ້ໃຫ້ເຢັນ, ອັດໃຫ້ແຈບ ແລະເອົາໄວ້ກົນໃນມື້ຕໍ່ໄປ.

✳ ໃນດ້ານການຟັງຄຳອະທິບາຍວິທີການໄປສະຖານທີ່ຕ່າງໆອາດປະຕິບັດດັ່ງນີ້:

1. ຜູ້ຟັງຈະຕ້ອງຮູ້ກ່ອນວ່າໃນຂະນະທີ່ຟັງນັ້ນຕົນເອງກຳລັງຢູ່ທີ່ໃດເຊັ່ນ ຢູ່ມຸມໜຶ່ງຂອງຕົວເມືອງ.
2. ຜູ້ຟັງຈະຕ້ອງຮູ້ວ່າ ສະຖານທີ່ນັ້ນຢ່າງໄປທາງໃດ, ແລ້ວໃຫ້ຫັນໜ້າໄປທາງນັ້ນ.
3. ຜູ້ແນະນຳຄວນໃຊ້ຄຳວ່າ ຂວາ ຫຼືຊ້າຍແທນຄຳວ່າ ທິດເໜືອ, ໃຕ້, ຕາເວັນຕົກ, ຕາເວັນອອກ ຫຼືທິດອື່ນໆ.
4. ຜູ້ຟັງຄວນຂໍໃຫ້ຜູ້ແນະນຳກະໄລຍະທາງນັ້ນວ່າ ຈະຕ້ອງໄປອີກປະມານຈັກກິໂລແມັດ, ຈັກແມັດ, ກ້າສາມາດບອກຊື່ທະໜົນ ຫຼືໜາຍເລກທາງຫຼວງທີ່ຈະຕ້ອງລ້ວກ່ຍິ່ງດີ.
5. ຂໍໃຫ້ຜູ້ແນະນຳແຈ້ງສະຖານທີ່ເດັ່ນໆ ທີ່ຢູ່ໃກ້.
6. ຜູ້ຟັງຄວນທວນຄຳອະທິບາຍຢ່າງລະມັດລະວັງ ບາງຄັ້ງອາດຈຳເປັນຕ້ອງໄດ້ຈົດຄຳອະທິບາຍ

ນັ້ນຢ່າງຫຍໍ້ໆ ເພື່ອການຊ່ວຍຄວາມຈຳ ໂດຍສະເພາະຢ່າງຍິ່ງກ້າຫາກຄຳອະທິບາຍນັ້ນ ມີລັກສະນະສະຫຼັບສັບຊ້ອນ.

7. ກ້າມີແຜນທີ່ຂອງສະຖານທີ່ນັ້ນໆ ຊຶ່ງຜູ້ເວົ້າໃຊ້ເປັນສິ່ງປະກອບການອະທິບາຍ, ຜູ້ຟັງຄວນຈະໄດ້ສັງເກດ ແລະ ຈົດຈຳຄວາມເປັນເອກະພາບລະຫວ່າງການອະທິບາຍ ແລະ ແຜນທີ່ດັ່ງນັ້ນດ້ວຍ.

1. 4. 2 ການຟັງເພື່ອລາຍງານຕໍ່ຜູ້ອື່ນ

ຜູ້ຟັງທີ່ມີຄວາມສາມາດຈະຕ້ອງມີທັກສະໃນການຟັງເຫດການ ຫຼືເລື່ອງຕ່າງໆ ທີ່ມີຜູ້ເລົ່າໃຫ້ຟັງເພື່ອນຳໄປເລົ່າໃຫ້ຜູ້ອື່ນຟັງອີກຕໍ່ໜຶ່ງ. ວິທີ່ເຝິກການຟັງແບບນີ້ອາດຈະເຮັດໄດ້ດັ່ງນີ້.

1. ຫຼິ້ນເກມຊຸ່ມ ໂດຍໃຫ້ມີຜູ້ຫຼິ້ນປະມານ 7-10ຄົນ ດ້ວຍການຍືນເປັນແຖວຕໍ່ໜ້າກະດານ ເພື່ອເລີ່ມຕົ້ນ. ຄົນທີ່ຢືນຢູ່ຫົວແຖວຈະຕ້ອງເປັນຜູ້ຊຸ່ມຂໍ້ຄວາມກ່ອນປະມານ1ປະໂຫຍກ ເຊັ່ນ "ມື້ອື່ນ ຝົນຊິຕົກ". ຫຼັງຈາກນັ້ນ ໃຫ້ຜູ້ຢືນຕໍ່ໄປເຊິ່ງເປັນຜູ້ທີ່ໄດ້ຟັງຂໍ້ຄວາມທີ່ມີຜູ້ມາຊຸ່ມໃຫ້ຟັງແລ້ວນັ້ນ ຊຸ່ມຂໍ້ ຄວາມທີ່ຟັງ ແລະ ຈື່ຈຳໄດ້ກືກຕ້ອງທີ່ສຸດແກ່ຜູ້ຕໍ່ໄປ ແລະ ເຮັດດັ່ງນີ້ຕໍ່ໆໄປຈົນເຖິງຜູ້ສຸດທ້າຍ. ເມື່ອຜູ້ສຸດທ້າຍໄດ້ຮັບຟັງຂໍ້ຄວາມແລ້ວ ກ່ຈະຊຸ່ມຕໍ່ຜູ້ທຳອິດເພື່ອໃຫ້ຕັດສິນວ່າ ຂໍ້ຄວາມທີ່ກັບມາຍັງເຈົ້າຂອງຂໍ້ຄວາມນັ້ນ ກືກຕ້ອງ ຫຼືຜິດຜ້ຽນຈາກເດີມ ຫຼືບໍ່.

2. ໃຫ້ມີຜູ້ອ່ານ ຫຼື ເລົ່າລາຍລະອຽດກ່ຽວກັບເລື່ອງອຸບັດເຫດໃດໜຶ່ງໃຫ້ຟັງຈົບຈົບແລ້ວ ໃຫ້ຜູ້ຟັງເລົ່າ ຫຼືຂຽນລາຍລະອຽດຂອງອຸບັດເຫດດັ່ງກ່າວອີກ ໂດຍສົມມຸດວ່າ ຜູ້ຟັງເປັນຜູ້ເຫັນເຫດການຕົວຈິ່ງ.

3. ຈາກການຟັງ ຫຼືເບິ່ງລາຍການວິທະຍຸ ຫຼື ໂທລະພາບ ລາຍການໃດລາຍການໜຶ່ງ. ຫຼັງຈາກນັ້ນ ໃຫ້ຜູ້ທີ່ໄດ້ຟັງ ຫຼື ໄດ້ເບິ່ງລາຍການດັ່ງກ່າວ ປະມານ 3 - 4 ຄົນ ເລົ່າເລື່ອງລາຍລະອຽດຂອງ ລາຍການນັ້ນໆ ໃຫ້ຜູ້ຟັງຈຳນວນໜຶ່ງໄດ້ຮັບຟັງ ໂດຍໃຫ້ປ່ຽນກັນເລົ່າເທື່ອລະຄົນ ໂດຍຜູ້ເລົ່າຄົນແຕ່ລະຄົນ ບໍ່ມີໂອກາດໄດ້ຟັງຜູ້ທີ່ເລົ່າກ່ອນ. ປະຕິບັດແນວນີ້ຈົນຈົບໝົດທັງ3-4ຄົນດັ່ງກ່າວ; ຫລັງຈາກນັ້ນຈຶ່ງສັງເກດຕີລາຄາ ແລະຕັດສິນວ່າ ການເລົ່າຂອງບຸກຄົນໃດກືກຕ້ອງຕາມລາຍລະອຽດຂອງລາຍການດັ່ງກ່າວທີ່ສຸດ. ຫລາຍຄັ້ງພວກເຮົາຈະພົບເຫັນວ່າ ຜູ້ຟັງມັກຈະກ່າຍທອດຂໍ້ຄວາມເລື່ອງທີ່ໄດ້ຟັງ ຫຼືເຫັນມານັ້ນຜິດແປກ ຫລື ຜິດຜ້ຽນໄປຈາກເລື່ອງເດີມ. ທັກສະການຟັງເພື່ອເລົ່າຕໍ່ນັ້ນຈຳເປັນຫລາຍ ໃນການສົນທະນາ, ການເລົ່ານິທານ, ການລາຍງານຂ່າວ, ລາຍງານອຸບັດເຫດ, ການ ໃຫ້ການໃນສານ ແລະໃນການເລົ່າເລື່ອງທີ່ເກີດຂຶ້ນຕາມຄວາມເປັນຈິງຕ່າງໆ

1. 4. 3 ການຟັງເພື່ອການຮຽນຮູ້

ການຟັງເພື່ອການຮຽນຮູ້ນີ້ ສ່ວນໃຫຍ່ຂຶ້ນຢູ່ກັບຄວາມສາມາດຂອງຜູ້ຟັງ ໃນການທີ່ຈະຈັບໃຈຄວາມສຳຄັນ ແລະ ຕັດສ່ວນທີ່ບໍ່ສຳຄັນນັ້ນອອກໄປ. ເລື່ອງທີ່ຜູ້ຟັງຕ້ອງການເກັບກຳເອົາໃຈຄວາມສຳຄັນ ອາດເປັນຂ່າວທີ່ມີເນື້ອໃນໃຈຄວາມກ່ຽວກັບອຸບັດເຫດ ແລະ ບຸກຄົນ, ບົດບັນຍາຍທາງວິຊາການ ແລະອື່ນໆ. ການຟັງນັ້ນ ຜູ້ຟັງອາດຮ່ວມກັນຟັງເລື່ອງທີ່ໜ້າສົນໃຈ, ບັນທຶກໃຈຄວາມທີ່ຕົນເອງເຫັນວ່າສຳຄັນມາປຽບທຽບເພື່ອອະທິບາຍ. ນອກຈາກນີ້ ຍັງມີສິ່ງທີ່ຜູ້ຟັງຄວນປະຕິບັດເພື່ອຊ່ວຍໃຫ້ການຟັງໄດ້ຮັບຜົນດີຂຶ້ນຕື່ມ ຄື

1. ສຶກສາຄວາມຮູ້ພື້ນຖານກ່ຽວກັບເລື່ອງນັ້ນ:ເຊັ່ນ: ອ່ານໜັງສືພິມ, ເບິ່ງແຜນທີ່ເປັນຕົ້ນ.

2. ຕັ້ງຄຳຖາມຊ່ວຍຄວາມຈຳດ້ວຍຫົວຂໍ້ທີ່ວ່າ ໃຜ, ແມ່ນຫຍັງ, ເຮັດຫຍັງ, ຢູ່ໃສ, ແນວໃດ, ຫຼື ຫົວຂໍ້ອື່ນໆທີ່ສາມາດຊ່ວຍໃຫ້ຮູ້ເນື້ອໃນໃຈຄວາມສຳຄັນຂອງສິ່ງທີ່ຟັງ.
3. ໃນການຟັງຄຳບັນຍາຍ ສິ່ງທຳອິດທີ່ຈະຕ້ອງຟັງຄື ຫົວຂໍ້ເລື່ອງ, ຕໍ່ໄປຈຶ່ງຟັງໃຈຄວາມສຳຄັນ ເຊິ່ງເປັນຫົວໃຈຂອງເລື່ອງ/ ນອກຈາກນັ້ນ ຍັງຕ້ອງຟັງບັນດາຄຳສັບທີ່ສຳຄັນທີ່ຈະຊ່ວຍ ຂະຫຍາຍ ຂໍ້ຄວາມຂອງຕອນຕໍ່ໄປອີກດ້ວຍ ເຊັ່ນ "ຂ້າພະເຈົ້າກ່າວເຖິງເຫດຜົນ ທີ່ວ່າ..."; "ໂດຍສະຫຼຸບແລ້ວ..."; ຫຼື " ຂໍສະຫຼຸບວ່າ..." ດັ່ງນີ້ເປັນຕົ້ນ.
4. ຄວນມີການຈົດບັນທຶກເພື່ອຊ່ວຍຄວາມຈຳ. ການຟັງເພື່ອການຮຽນຮູ້ນີ້ ເປັນທັກສະທີ່ມີ ປະໂຫຍດຫຼາຍ. ເພາະສະນັ້ນ ໃນຂະນະທີ່ວິທະຍາສາດວິທະຍາການຕ່າງໆກຳລັງກ້າວໜ້າ ແລະຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ຈຶ່ງຈຳເປັນຄວນມີການຝຶກຝົນທັກສະການຟັງເພື່ອການ ຮຽນຮູ້ນີ້ເລື້ອຍໆ./

1. 4. 4 ການຟັງເພື່ອວິເຄາະ

ປັດຈຸບັນຄວາມຈະເລີນກ້າວໜ້າທາງດ້ານສື່ມວນຊົນ, ຂ່າວສານຄວາມຮູ້, ບົດຄວາມເຊິ່ງ ມີການຊັກຈູງຈິດໃຈຢ່າງຫຼວງຫຼາຍ. ຜູ້ທີ່ໃຫ້ຂ່າວສານຄວາມຮູ້ຂໍ້ຄວາມບັນທຶກເປັນຜູ້ທີ່ຜູ້ຟັງຮູ້ຈັກ ຫຼືຜູ້ ຟັງບໍ່ຮູ້ຈັກ. ການຟັງເພື່ອວິເຄາະຈຶ່ງເປັນສິ່ງຈຳເປັນທີ່ຕ້ອງປະຕິບັດຢູ່ສະໝີ. ສິ່ງທີ່ຜູ້ຟັງຈະຕ້ອງໃຊ ວິຈາລະນະຍານໃນການຟັງເພື່ອວິເຄາະ ມີດັ່ງນີ້

- ຂໍ້ຄວາມໂຄສະນາໃນໜັງສືພິມ, ວິທະຍຸ,ໂທລະພາບ...
- ຂໍ້ຄວາມທີ່ແນະນຳ ຫຼືເຊີນຊວນໃຫ້ທຳສິ່ງໃດສິ່ງໜຶ່ງ
- ການວິເຄາະວິຈານຂ່າວພາຍໃນປະເທດ ແລະນອກປະເທດ
- ບົດວິຈານເຫດການ ຫຼືເລື່ອງຕ່າງໆ.
- ການອະທິບາຍ, ປະກະກະກາ ຫຼືໂຕ້ວາທີຕ່າງໆ

ໃນການວິເຄາະເລື່ອງໃດໜຶ່ງຜູ້ຟັງຈະຕ້ອງມີຄວາມຮູ້ສຶກເປັນກາງ ບໍ່ອະຄະຕິຕໍ່ຜູ້ເວົ້າ, ບໍ່ວ່າຈະ ເປັນໃນດ້ານທີ່ມັກ ຫຼືບໍ່ມັກກໍ່ຕາມ. ກ້າຜູ້ຟັງເກີດອະຄະຕິຂຶ້ນຈະຕ້ອງວິເຄາະສາເຫດຂອງການອະຄະຕິ ດັ່ງກ່າວວ່າ ເປັນເພາະສຽງ, ອາການກິລິຍາທ່າທາງ, ບຸກຄະລິກລັກສະນະຂອງຜູ້ເວົ້າ ຫຼືເນື້ອ ຫາຂອງສິ່ງທີ່ຜູ້ເວົ້າ ເວົ້າອອກມາ ຫຼືເພາະເຫດຜົນອື່ນໆ.

ຄວາມສາມາດໃນການວິເຄາະຂຶ້ນຢູ່ກັບໄວ, ຄວາມຮູ້, ວຸດທິພາວະ, ປະສົບການຂອງຜູ້ວິເຄາະ. ໃນໄວເດັກອາດມີຄວາມສາມາດວິເຄາະບາງເລື່ອງ ເຊັ່ນ ໂຈດເລກທີ່ເປັນບັນຫາ/ ຮູ້ຈັກພິຈາລະນາວ່າ ສິ່ງທີ່ໄດ້ຟັງນັ້ນມີລັກສະນະແນວໃດ, ຄຳບອກເລົ່າເປັນຂໍ້ແທ້ຈິ່ງ ຫຼືເປັນຄວາມເຫັນຂອງຜູ້ເວົ້າ./ ເມື່ອ ມີວຸດທິພາວະສູງຂຶ້ນຜູ້ຟັງ ອາດຈະຮູ້ວິເຄາະວ່າ ການໂຄສະນາເລື່ອງ ຫຼື ຄວາມເຫັນຂອງຜູ້ເວົ້າເປັນ ເລື່ອງທີ່ມີເຫດຜົນຫຼືບໍ່, ເປັນເລື່ອງທີ່ເຊື່ອຖືໄດ້ຫຼືບໍ່ ແລະ ຜູ້ເວົ້າມີເຈດຕະນາແນວໃດ. ບາງຄັ້ງການວິ ເຄາະ ຕ້ອງອາໄສຫຼັກການຫຼາຍໆຢ່າງ ເຊັ່ນ ການທີ່ຈະຮູ້ວ່າ ຜູ້ເວົ້ານັ້ນມີອະຄະຕິ ຫຼືບໍ່ອາດຈະຕ້ອງການຟັງການເວົ້າຂອງເຂົາໃນຫຼາຍໆເລື່ອງດັ່ງນີ້ເປັນຕົ້ນ.

ຕົວຢ່າງ: ຟັງບົດໂຄສະນາ: NKC ເອັນເຄຊີກຳຈັດປວກ

ບໍລິການທັນທີດ້ວຍນ້ຳຢາພິເສດ ປອດໄພຮັບປະກັນ 6ເດືອນ ເຖິງ 2ປີ (ຖ້າບໍ່ໄດ້ຮັບຜົນຈະບໍ່ເກັບເງິນ) ຜູ້ຊ່ຽວຊານອົບຮົມຈາກຕ່າງປະເທດ. ຫ້ອງການຕັ້ງຢູ່ສາມແຍກດົງປ່າລານ (ສຸບເປີຄັບເກົ່າ) ໂທ:217333, ມືຖື 020 511702

1. 4. 5 ການຟັງການສົນທະນາ

ທັກສະການຟັງການສົນທະນາ ເປັນທັກສະໜຶ່ງທີ່ຈຳເປັນຍິ່ງທີ່ຈະຕ້ອງໃຊ້ໃນການຄົບຄ້າສະມາຄົມ. ບາງຄັ້ງຜູ້ເວົ້າທີ່ດີທີ່ສຸດກໍ່ຄືຜູ້ຟັງທີ່ດີທີ່ສຸດນັ້ນເອງ. ການຟັງ ເປັນການສະແດງຄວາມນັບຖືໃນຕົວຜູ້ເວົ້າ ແລະ ຜູ້ເວົ້າຢ່າງໃຊ້ສະຕິປັນຍາຈະເຮັດໃຫ້ຜູ້ຟັງສາມາດດຳເນີນການສົນທະນາຕໍ່ໄປໄດ້ຢ່າງສະຫງາດສະຫຼຽວ. ການຟັງການສົນທະນາຜູ້ຟັງຄວນຈະລະວັງໃນສິ່ງຕໍ່ໄປນີ້:

1. ໃຫ້ຄວາມສົນໃຈຜູ້ເວົ້າຢ່າງຈິງຈັງ, ບ່ວອກແວກ, ເບິ່ງຜູ້ເວົ້າສະໝ່ຳວ່າກຳລັງສົນໃຈຄຳເວົ້າທຸກຄຳຂອງເຂົາ. ອັນທີ່ຈິ່ງແລ້ວ ທຸກຄົນຄວນຮຽນຮູ້ຕັ້ງແຕ່ນ້ອຍວ່າ ບາງຄັ້ງຄົນເຮົາບໍ່ສາມາດສະແດງສີໜ້າ ຫຼືອາການຢ່າງທີ່ເຮົາຮູ້ສຶກໄດ້ ເພາະຖ້າເຮັດແນວນັ້ນຈະເປັນການບໍ່ສຸພາບ ແລະບໍ່ເປັນທີ່ຍອມຮັບຂອງສັງຄົມ
2. ຢ່າເປັນຜູ້ຟັງທີ່ມັກແຊກແຊງຄຳ ຫຼືເວົ້າສອຍຄຳຂອງຜູ້ອື່ນ ຫຼືຄອຍແຕ່ຈະເວົ້າແຊກແຊງຄຳເວົ້າຂອງຜູ້ເວົ້າ. ຖ້າຜູ້ເວົ້າເປັນປະເພດເວົ້າທີ່ບໍ່ຍອມຢຸດ ຜູ້ຟັງອາດໃຊ້ວິທີນີ້ມນວນເພື່ອໃຫ້ເຂົາຊ້ຳເວົ້າ.
3. ພະຍາຍາມຊັກຊວນໃຫ້ຄົນທີ່ບໍ່ຍອມເວົ້າໄດ້ເວົ້າໂດຍການຕັ້ງຄຳຖາມນຳ ເຊັ່ນ ຖາມວ່າເຂົາມີຄວາມເຫັນແນວໃດໃນເລື່ອງນັ້ນ, ຂໍໃຫ້ເຂົາເລົ່າເຖິງສະຖານະການທີ່ເຂົາຫາກໍ່ຜົບເຫັນມາ ແລະໃຫ້ເຂົາເລົ່າເຖິງຕອນທີ່ເຂົາມັກທີ່ສຸດ ຫຼືຂໍໃຫ້ເຂົາເລົ່າເຖິງການພະຈົນໄພທີ່ເຂົາເຄີຍເລົ່າໃຫ້ເຮົາຟັງ ແລ້ວໃຫ້ຜູ້ອື່ນຟັງ./ ສິ່ງຄວນເອົາໃຈໃສ່ໃນການເປັນຜູ້ຟັງທີ່ດີນັ້ນທີ່ເຫັນອົກເຫັນໃຈຜູ້ອື່ນ, ຄິດເຫັນໃຈເອົາໃຈເຮົາ ແລະກະຕືລືລົ້ນທີ່ຈະຮຽນຮູ້ກວ່າທີ່ຈະເວົ້າເລື້ອຍໆໄປ. ໃນການສົນທະນາ ຈົ່ງພະຍາຍາມໃຫ້ຜູ້ອື່ນມີໂອກາດເວົ້າ, ພະຍາຍາມເປັນຜູ້ຟັງໃຫ້ຫຼາຍທີ່ສຸດ ແລະຄວນຮູ້ວ່າຕົນຮ່ວມສົນທະນາໃນເລື່ອງໃດເພື່ອທີ່ຈະໄດ້ເລີ່ມຕົ້ນການສົນທະນາດ້ວຍເລື່ອງທີ່ຄູ່ສົນທະນາສົນໃຈ.
4. ເມື່ອການສົນທະນາ ເລີ່ມປ່ຽນໄປໃນທາງທີ່ຮ້າຍແຮງ ຜູ້ຟັງຄວນດຶງການສົນທະນາໃຫ້ເປັນໄປໃນທາງທີ່ຈະຢຸດຢັ້ງຄວາມຮ້າຍແຮງນັ້ນ ດ້ວຍການຊອກຫົວຂໍ້ເລື່ອງໃໝ່ມາສົນທະນາຢ່າງແນບນຽນໂດຍໃຊ້ປະໂຫຍກ ທີ່ສະແດງອາລົມຕະຫຼົກເຣຣ່າ ເພື່ອໃຫ້ທຸກຄົນໄດ້ຍິ້ມຫົວດັ່ງນີ້ເປັນຕົ້ນ.
5. ບໍ່ຟັງເພື່ອຈັບຜິດແຕ່ໃຫ້ຟັງເພື່ອຫາຄວາມຮູ້ແລະຄຸນຄ່າຈາກຄຳເວົ້າຂອງຜູ້ເວົ້າ

1. 5 ຈຸດປະສົງບາງຢ່າງຂອງການຟັງ

1. 5. 1 ການຟັງເພື່ອຈັບໃຈຄວາມສຳຄັນ

ສິ່ງທີ່ເປັນໃຈຄວາມສຳຄັນນັ້ນໝາຍຄວາມວ່າ ເນື້ອໃນໃຈຄວາມສຳຄັນລວມຍອດຂອງທຸກໆຕອນທີ່ປະກົດຂຶ້ນເປັນເລື່ອງນັ້ນໆ ຊຶ່ງຜູ້ຟັງຈະຕ້ອງຮູ້ຈັກແກນສຳຄັນຂອງເລື່ອງວ່າແມ່ນອັນໃດ ແລະສາມາດຈຳແນກໄດ້ວ່າອັນໃດແມ່ນສ່ວນສຳຄັນຂອງເລື່ອງ ແລະ ອັນໃດແມ່ນສ່ວນສຳຮອງ. ດັ່ງນັ້ນ ການຟັງເພື່ອຈັບໃຈຄວາມສຳຄັນຜູ້ຟັງຈະຕ້ອງໄດ້ຟັງຢ່າງຕັ້ງໃຈ, ສົນໃຈ ແລະທຳຄວາມເຂົ້າໃຈຕະຫຼອດທັງເລື່ອງຈຶ່ງຈະສາມາດສະຫຼຸບໃຈຄວາມສຳຄັນໄດ້. ວິທີການໃນການຟັງເພື່ອຈັບໃຈຄວາມສຳຄັນອາດຈະປະຕິບັດດັ່ງນີ້

- ຟັງເລື່ອງລາວທັງໝົດໃຫ້ເຂົ້າໃຈເສຍກ່ອນ.

- ຈັບໃຈຄວາມສຳຄັນຂອງເລື່ອງໃຫ້ເປັນຕອນໆແລ້ວ ພະຍາຍາມຕອບຄຳຖາມທີ່ວ່າ ເລື່ອງ ຫຍັງ, ໃສ, ເຮັດຫຍັງ, ຢູ່ໃສ, ເວລາໃດ, ເປັນແນວໃດ, ເພາະເຫດໃດດັ່ງນີ້ເປັນຕົ້ນ.

ການຟັງເພື່ອຈັບໃຈຄວມສຳຄັນ ເປັນການຟັງເລື່ອງປະເພດທີ່ໃຫ້ຄວາມຮູ້ເຊັ່ນ ຟັງບົດຄວາມ, ຂ່າວ, ການບັນລະຍາຍ, ນິທານ, ບົດເພງແລະອື່ນໆ.

1. 5. 2 ການຟັງເພື່ອຈັບໃຈຄວາມລະອຽດ

ແມ່ນການຟັງເພື່ອຕ້ອງການລາຍລະອຽດຕ່າງໆຂອງເລື່ອງ ທີ່ມີລັກສະນະຈຳເປັນ ແລະສຳ ຄັນຢູ່ໃນແຕ່ລະຕອນ. ວິທີການໃນການຟັງເພື່ອຈັບໃຈຄວາມລະອຽດກໍ່ຄ້າຍຄືກັບກັບ ການຟັງເພື່ອຈັບ ໃຈຄວາມສຳຄັນພຽງແຕ່ຈະຕ້ອງມີລາຍລະອຽດຕ່າງໆ ໃນແຕ່ລະຂັ້ນຕອນຕື່ມອີກ. ການຟັງປະເພດນີ້ ໄດ້ແກ່ການຟັງສາລະຄະດີ, ຟັງການແນະນຳໃຫ້ເຮັດ ແລະປະຕິບັດກ້ຳມະກິຕ່າງໆເຊັ່ນ ການທົດ ລອງ, ການແນະນຳການປູກຕົ້ນໄມ້, ວິທີປຸງແຕ່ງອາຫານ ແລະອື່ນໆ.

1. 5. 3 ການຟັງເພື່ອຫາເຫດຜົນ

ການຟັງປະເພດນີ້ ຜູ້ຟັງຕ້ອງໃຫ້ຄວາມສົນໃຈເປັນພິເສດໃນເລື່ອງຕ່າງໆທີ່ໄດ້ຟັງ. ຜູ້ຟັງຕ້ອງຮູ້ ຈັກຈຳແນກວ່າສິ່ງທີ່ຜູ້ເວົ້າ ເວົ້ານັ້ນຕອນໃດເປັນຄວາມຈິງ ແລະ ຕອນໃດເປັນຄວາມຄິດເຫັນສ່ວນຕົວ ຂອງຜູ້ເວົ້າ. ຖ້າຕອນໃດເປັນຂໍ້ຄິດເຫັນສ່ວນຕົວຂອງຜູ້ເວົ້າ, ຜູ້ຟັງຈະຕ້ອງພິຈາລະນາໃຫ້ລະອຽດວ່າ ຄວາມຄິດເຫັນນັ້ນຖືກຕ້ອງຫຼືບໍ່, ເຊື່ອຖືໄດ້ຫຼືບໍ່ ແລະຜູ້ເວົ້າມີເຈດຕະນາແນວໃດ. ດັ່ງນັ້ນຄົນເຮົາຄວນມີ ການຝຶກການຟັງປະເພດນີ້ເພື່ອຊຸກຍູ້ໃຫ້ເຮົາມີວິຈາລະນະຍານໃນການຟັງ ແລະສາມາດຊອກຫາເຫດ ຜົນໄດ້ຢ່າງຖືກຕ້ອງຊຶ່ງອາດຈະຝຶກຈາກການຟັງປາກະກະຖາ, ຟັງການໂຕ້ວາທີ, ຟັງການພິພາກສາ ແລະອື່ນໆ

1. 5. 4 ການຟັງເພື່ອໃຫ້ເກີດຄວາມຊາບຊຶ້ງໃນອັດຖະລົດ

ການຟັງປະເພດນີ້ ຜູ້ຟັງຈະເກີດມີຄວາມສຸນທະລີຍະພາບ, ເກີດຄວາມຊື່ນຊົມໃນລົດຊາດທາງດ້ານສິ ລະປະ,ຊາບຊຶ້ງໃນຄຸນຄ່າ ແລະຄວາມງາມທີ່ຜູ້ເວົ້າ ຫຼືນັກແຕ່ງໄດ້ແຕ່ງຂຶ້ນ. ການຟັງປະເພດນີ້ຜູ້ຟັງຈະ ຕ້ອງມີຄວາມຮູ້ພໍສົມຄວນຈຶ່ງສາມາດຟັງ ແລະເຂົ້າໃຈຈຸດປະສົງຂອງຜູ້ເວົ້າ ຫຼື ຜູ້ແຕ່ງໂດຍສະເພາະ ແມ່ນເຂົ້າໃຈເນື້ອໃນ. ຂັ້ນຕອນ ຫຼືບາດກ້າວຂອງເລື່ອງ, ຄຳສັບ ແລະສຳນວນດັ່ງນີ້ເປັນຕົ້ນ.

1. 5. 5 ການຟັງເພື່ອສົ່ງເສີມຈິນຕະນາການ ແລະຄວາມຄິດສ້າງສັນ

ການຟັງປະເພດນີ້ ຜູ້ຟັງຈະຕ້ອງໄດ້ຮູ້ຈັກໃຊ້ຄວາມຄິດຂອງຕົວເອງເພື່ອກໍ່ໃຫ້ເກີດສິ່ງໃດສິ່ງໜຶ່ງຂຶ້ນມາ ຫຼັງຈາກການຟັງ ຊຶ່ງອາດປາກົດອອກມາໃນຮູບແບບຂອງການປະພັນ ຫຼືການເວົ້າ. ການຝຶກຟັງປະ ເພດນີ້ຂ້ອນຂ້າງຍາກ ແຕ່ກໍ່ສາມາດຝຶກໄດ້ເຊັ່ນກັນ.

1. 6 ຄຸນປະໂຫຍດຂອງການຟັງຢ່າງມີປະສິດທິພາບ

1. 6. 1 ຜູ້ຟັງຈະຕ້ອງໄດ້ຮັບຄວາມຮູ້, ຄວາມຄິດ, ຄວາມເຂົ້າໃຈ ແລະ ເຮັດໃຫ້ເກີດຄຸນຄ່າທາງດ້ານ ສະຕິປັນຍາ ໂດຍສະເພາະຢ່າງຍິ່ງ ໃນການຟັງການສອນຂອງຄູອາຈານຊຶ່ງຜູ້ຟັງ ຈະບໍ່

ເສຍເວລາໃນ ການອ່ານ ແລະທຳຄວາມເຂົ້າໃຈຕໍ່ເອກະສານໃນວິຊາຕ່າງໆ.

1. 6. 2 ຜູ້ຟັງຈະເປັນຜູ້ທີ່ມີວິຈາລະນະຍານ, ຮູ້ຈັກປະເມີນຄຸນຄ່າ, ສາມາດຕັດສິນໃຈໃນເລື່ອງຕ່າງໆ ໄດ້ດີ, ບໍ່ຕົກເປັນເຄື່ອງມື, ບໍ່ກືກເປ່າຫູ ຫຼືຍຸຍົງຈາກສິ່ງທີ່ໄດ້ຮັບຟັງ.

1. 6. 3 ຜູ້ຟັງມີໂອກາດຮຽນຮູ້ລັກສະນະນິດໄສຂອງຄົນ, ເຂົ້າໃຈຄວາມຮູ້ສຶກຂອງຜູ້ເວົ້າຈາກການຟັງ ຊຶ່ງອາດຈະແມ່ນຄວາມຮູ້ສຶກທີ່ແຝງຢູ່ໃນຄຳເວົ້າ ຫຼືສຳນວນທີ່ໄດ້ເວົ້າ.

1. 6. 4 ເປັນປະໂຫຍດໃນການຕິດຕໍ່ສື່ສານ(ຄົບຄ້າ), ເຮັດໃຫ້ເກີດຄວາມເຂົ້າໃຈທີ່ດີຕໍ່ກັນ.

1. 6. 5 ການຕັ້ງໃຈຟັງຊ່ວຍໃນການສ້າງມະດສຳພັນກັບຜູ້ອື່ນ.

1. 6. 6 ຫາກຈຳເປັນຕ້ອງເວົ້າ ຜູ້ຟັງທີ່ມີປະສິດທິພາບຈະມີຄວາມພ້ອມໃນການເວົ້າໃຫ້ໄດ້ສາລະ ແລະ ສາມາດເລືອກໃຊ້ຄຳສັບ, ສຳນວນທີ່ເໝາະສົມໄດ້.

1. 7 ມາລະຍາດທາງສັງຄົມທີ່ຜູ້ຟັງຄວນປະຕິບັດ

1.7.1 ໃຫ້ກຽດຜູ້ເວົ້າ, ໂດຍການມາເຖິງສະຖານທີ່ຕາມເວລາ ຫຼືກ່ອນຜູ້ເວົ້າ.

1.7. 2 ໃນເວລາດຳເນີນການຄວນສະຫງົບ, ວາງຕົວຮຽບຮ້ອຍ, ບໍ່ເຮັດໃຫ້ເກີດມີສຽງລົບກວນ.

1.7. 3 ສະຫງວນທ່າທີ ແລະເກັບຄວາມຮູ້ສຶກ, ບໍ່ສະແດງປະຕິກິລິຍາທີ່ຮຸນແຮງຫາກໄດ້ຍິນ ສຽງທີ່ບໍ່ປະສົບອາລົມ.

1.7. 4 ເມື່ອມີຄວາມສົງໄສ ຫຼືຄຳຖາມກໍ່ຄວນຖາມຢ່າງມີມາລະຍາດໂດຍປະຕິບັດ ດັ່ງນີ້

- ຍົກມືຂຶ້ນຂໍອະນຸຍາດກ່ອນຈຶ່ງຖາມ.
- ຄວນຖາມດ້ວຍຄຳທີ່ສຸພາບ ແລະສັງຄວມກິລິຍາທ່າທີ.
- ຕັ້ງຄຳຖາມທີ່ສັ້ນໆກົງໄປກົງມາ ແລະ ບໍ່ຄວນຖາມນອກເລື່ອງ.
- ກ້າບໍ່ເຫັນດີກັບຜູ້ເວົ້າກໍ່ຄວນຂັດຄ້ານຢ່າງສຸພາບ.

1.7.5 ມີຄວາມອົດທົນໃນການຟັງ.

1. 8 ຫຼັກການທົ່ວໄປໃນການຝຶກທັກສະການຟັງ

ການຟັງເປັນເສັ້ນທາງ ທີ່ສະແດງໃຫ້ເຫັນຄວາມສົນໃຈ ແລະ ການຍອມຮັບນັບຖືຜູ້ອື່ນ. ການຝຶກທັກສະໃນການຟັງມີຄວາມຈຳເປັນ ແລະ ເປັນສິ່ງທີ່ຄວນຝຶກກ່ອນທັກສະອື່ນໆ. ເມື່ອມີການຝຶກທັກສະໃນການຟັງໃຫ້ດີແລ້ວ ທັກສະອື່ນໆ ເຊັ່ນການເວົ້າ, ການອ່ານ ແລະການຂຽນກໍ່ຍ່ອມຈະດີໄປນຳ. ການຝຶກທັກສະໃນການຟັງສາມາດຝຶກຕາມລຳດັບດັ່ງນີ້

1. 8.1 ກ່ອນການຟັງຄວນມີການກະກຽມ ຄື

- ພ້ອມທີ່ຈະຮັບຟັງຄວາມຄິດເຫັນຂອງຜູ້ອື່ນ ແລະບໍ່ຢ້ານຕໍ່ການແກ້ໄຂ ຫຼືປ່ຽນແປງຕົວເອງ.
- ຝຶກຝົນຢ່າງຈິງຈັງ ໂດຍບໍ່ເລືອກຟັງແຕ່ສິ່ງທີ່ຢາກຟັງເທົ່ານັ້ນ ຫຼືຟັງເພື່ອເສີມຄວາມຄິດຂອງຕົນວ່າ ຜູ້ເວົ້າ ເວົ້າກົງກັບຄວາມຄິດຂອງຕົນເພາະຈະເຮັດໃຫ້ເກີດຄວາມເຂົ້າໃຈຜິດ

1. 8. 2 ຂະນະທີ່ຟັງ ເປັນຊ່ວງເວລາທີ່ມີຄວາມສຳຄັນທີ່ສຸດ ແລະຄວນປະຕິບັດດັ່ງນີ້

- ຕັ້ງໃຈຟັງຢ່າງຈິ່ງຈັ່ງໂດຍຕະຫຼອດ, ບໍ່ຄວນຕັດສິນໃຈເມື່ອຟັງບໍ່ທັນຈົບລວມທັງຢ່າເອົາແຕ່ໃຈຕົນເອງ ຫຼືຕີຄວາມໝາຍຄຳເວົ້າຕາມທີ່ຕົນເຂົ້າໃຈເທົ່ານັ້ນ.
- ປະຕິບັດຕົນຕາມມາລະຍາດໃນການຟັງ.

- ເລືອກເລື່ອງຟັງໃຫ້ເໝາະສົມກັບປະສົບການໃນການຟັງ. ໝາຍຄວາມວ່າ ຄວນເລີ່ມຝຶກຟັງ ເພື່ອຈັບໃຈຄວາມສຳຄັນກ່ອນ. ການຝຶກຟັງທີ່ຕ້ອງໃຊ້ວິຈາລະນະຍານຄວນເລືອກຟັງເລື່ອງ ທີ່ມີເນື້ອ ຫາດ້ານວິຊາການ, ດ້ານຄວາມຮູ້ຕ່າງໆກ່ອນການຟັງບົດຄວາມວິພາກວິຈານ.

1. 8. 3 ຫຼັງການຟັງ

ເມື່ອການຟັງສິ້ນສຸດລົງຈະເປັນສິ່ງພິສູດວ່າ ການຟັງມີປະສິດທິພາບ ຫຼືບໍ່. ຫຼັງການຟັງ ຄວນປະຕິ ບັດດັ່ງນີ້

- ທົບທວນສິ່ງທີ່ໄດ້ຟັງເພື່ອເອົາໄປນຳໃຊ້ໃຫ້ເກີດປະໂຫຍດຊັ່ນ ເກັບເອົາຂໍ້ຄິດຈາກການຟັງໄປ ໃຊ້ໃນຊີວິດປະຈຳວັນ.
- ໃຊ້ຄຳຖາມເມື່ອສົງໄສ ຫຼືຕ້ອງການລາຍລະອຽດເພີ່ມເຕີ່ມ.
- ຈົດບັນທຶກຂໍ້ຄິດ ຫຼືເຫດການຕ່າງໆໃນການຟັງ.

ຄຳຖາມ:

1. ຂະບວນການຂອງການຟັງປະກອບດ້ວຍຈັກປະການ? ຄືປະການໃດແດ່?
2. ການຟັງມີຄວາມສຳຄັນແນວໃດ?
3. ຈຸດມຸ່ງໝາຍຂອງການຟັງມີຈັກຢ່າງ? ຄືຢ່າງໃດແດ່? ຈົ່ງອະທິບາຍແຕ່ລະຢ່າງ.
4. ລັກສະນະນິໄສຜູ້ຟັງມີຈັກລັກສະນະ? ຄືລັກສະນະໃດແດ່?
5. ປະເພດຂອງການຟັງມີຈັກປະເພດ? ຄືປະເພດໃດແດ່? ແຕ່ລະປະເພດຕ່າງກັນແນວໃດ?
6. ຈຸດປະສົງໃນການຟັງມີຈັກຢ່າງ? ຄືຢ່າງໃດແດ່?
7. ຫຼັກການທົ່ວໄປໃນການຝຶກທັກສະການຟັງມີຫຍັງແດ່?

24 / VII

ຫ້າມຈຳໜ່າຍ

2. ຫລັກການເວົ້າ

2.1 ຄວາມຮູ້ທົ່ວໄປກ່ຽວກັບການເວົ້າ

ນອກຈາກທັກສະໃນການຟັງ, ການອ່ານ ແລະການຂຽນ ການເວົ້າກໍ່ແມ່ນທັກສະໜຶ່ງໃນການນຳໃຊ້ພາສາ. ໃນບັນດາທັກສະທັງ 4 ຢ່າງນີ້ ການເວົ້ານັບວ່າມີຄວາມສຳຄັນຫລາຍເພາະມັນແມ່ນຂະບວນການສື່ສານທີ່ວ່ອງໄວ ແລະສ້າງສື່ຄວາມເຂົ້າໃຈສິ່ງທີ່ມີຄວາມສຳຄັນ ເພາະນັກພາສາສາດກ່ຶວ່າ "ພາສາທີ່ແທ້ຈິງຄືສຽງເວົ້າທີ່ມີຄວາມໝາຍຂອງມະນຸດ"

ມະນຸດສາມາດໃຊ້ການເວົ້າ ເປັນເຄື່ອງມືໃນການຄົບຄ້າແນວຄິດ ແລະ ຈຸດປະສົງຫລາຍຢ່າງແຕກຕ່າງກັນອອກໄປຊຸ່ນ

2.1. 1 ໃຊ້ການເວົ້າເພື່ອສະແດງຄວາມຮູ້ສຶກນຶກຄິດຂອງຕົນເອງຕໍ່ຜູ້ອື່ນ.

2.1. 2 ໃຊ້ການເວົ້າເພື່ອຊອກຫາຄວາມຮູ້, ຄວາມເຂົ້າໃຈໃນເລື່ອງຕ່າງໆ ໂດຍສະເພາະໃນຮູບຄຳຖາມ ຫລືຂໍຄຳອະທິບາຍກ່ຽວກັບເລື່ອງໃດໜຶ່ງ.

2.1. 3 ໃຊ້ການເວົ້າເພື່ອຈູງໃຈໃຫ້ຜູ້ອື່ນເຊື່ອກ ຫລືຄິດໂນ້ມນ້າວໄປຕາມຄວາມຄິດ ແລະ ການກະທຳຂອງຕົນ.

2.1. 4 ໃຊ້ການເວົ້າເພື່ອສ້າງສື່ສຳພັນທີ່ດີ

ນອກຈາກການເວົ້າເພື່ອບັນລຸຈຸດປະສົງ ຫລືບັນຫາຕ່າງໆຂ້າງເທິງນີ້ແລ້ວ, ການໃຊ້ການເວົ້າໃນລະດັບຕໍ່ໆໄປຈະເປັນສິ່ງທີ່ຍາກຂຶ້ນເລື້ອຍໆ ໂດຍສະເພາະແມ່ນກໍລະນີການເວົ້າຕໍ່ທີ່ປະຊຸມ ເພາະການເວົ້າໃນສະຖານທີ່ດັ່ງກ່າວ ບໍ່ພຽງແຕ່ອາໄສຄວາມຮູ້ຄວາມສາມາດ, ເຫດຜົນ ແລະ ສຳນວນດ້ານຄວາມເວົ້າເທົ່ານັ້ນ; ແຕ່ຫາກຍັງອາໄສສິລະປະໃນການເວົ້າ ເພື່ອສ້າງຄວາມຈູງໃຈໃຫ້ມີສັດທາ ແລະ ຕິດຕາມຟັງບົດເວົ້ານັ້ນໆຈົນຈົບ.

ໃນສ່ວນຂອງຜູ້ຟັງນັ້ນ ຜູ້ຟັງຫລາຍຄົນອາດຮູ້ສຶກເສຍດາຍ ທີ່ຕ້ອງທົນຟັງບາງຄົນເວົ້າໃນລັກສະນະທີ່ໜ້າເບື່ອ, ບໍ່ມີເນື້ອຫາສາລະທີ່ໜ້າສົນໃຈ ແລະບໍ່ມີຄຸນຄ່າໃດໆທັງສິ້ນ, ບໍ່ວ່າຈະເປັນດ້ານສະຕິປັນຍາ ຫລືດ້ານອື່ນໆກ່ຕາມ. ບັນຫາເຫລົ່ານີ້ເກີດຂຶ້ນໄດ້ສະເໝີ ໂດຍສະເພາະຢ່າງຍິ່ງ ໃນກໍລະນີທີ່ຜູ້ເວົ້າມີປະສົບປະການໜ້ອຍໃນດ້ານການເວົ້າຕໍ່ກອງປະຊຸມ ຫລືໃນກໍລະນີທີ່ຜູ້ເວົ້າມີຄວາມປະໝາດ, ຄິດວ່າຕົນເອງເປັນນັກເວົ້າຜູ້ຊຳນິຊຳນານ, ສາມາດເວົ້າໄດ້ຢ່າງດີໃນທຸກສາກຸນະການ ຫລືອາດປະເມີນຄຸນຄ່າຜູ້ຟັງຕ່ຳເກີນໄປ ຄິດວ່າຜູ້ຟັງບໍ່ມີຄວາມສຳຄັນ, ບໍ່ມີຄວາມຄິດໃນການວິຈານບັນຫາຊຶ່ງຜູ້ເວົ້າຄິດຢາກເວົ້າເລື່ອງໃດໆໃຫ້ຟັງກໍ່ຟັງໄດ້ທັງນັ້ນ.

ບັນຫາທີ່ກ່າວມານີ້ ສາມາດແກ້ໄຂໄດ້ຫາກຜູ້ເວົ້າສົນໃຈສຶກສາວິທີການເວົ້າທີ່ຖືກຕ້ອງ ແລະມີການກຽມຕົວເປັນຢ່າງດີ ເພື່ອຈະປະກົດຕົວບົນເວທີຂອງການເວົ້າໄດ້ຢ່າງມີຄວາມພ້ອມ ແລະຄວາມໝັ້ນໃຈ.

2. 2 ປະເພດຂອງການເວົ້າ

2. 2. 1 ການເວົ້າລະຫວ່າງບຸກຄົນ

ແມ່ນການເວົ້າລະຫວ່າງບຸກຄົນຕໍ່ບຸກຄົນ, ເປັນການເວົ້າແບບທຳມະດາ, ເຂົ້າໃຈງ່າຍແລະເປັນພື້ນຖານໃນການພົວພັນຊຶ່ງກັນແລະກັນຂອງມະນຸດ ທີ່ໃຊ້ເຂົ້າໃນການຄົບຄ້າສາມະຄົມ, ໃຊ້ເພື່ອທັກທາຍ, ສອບຖາມ, ສົນທະນາ, ກິກຖຽງ ແລະປຶກສາລືຕ່າງໆ.

2. 2. 2 ການເວົ້າພາຍໃນກຸ່ມ

ແມ່ນການເວົ້າທີ່ມີຜູ້ເວົ້ານຳກັນນັບແຕ່ 3 ຄົນຂຶ້ນໄປ. ການເວົ້າສ່ວນຫລາຍອາດຈະເປັນການໂຕ້ກຽງກັນ ເພື່ອສະຫລຸບຫາຈຸດທີ່ເປັນເອກະພາບ ແລະຄວາມເຂົ້າອົກເຂົ້າໃຈກັນໄດ້ໃນບັນຫາໃດໜຶ່ງ ຫລືເພື່ອສົນທະນາ ແລກປ່ຽນຄວາມຄິດເຫັນເຊິ່ງກັນແລະກັນ.

2. 2. 3 ການເວົ້າໃນທີ່ປະຊຸມ

ການເວົ້າໃນທີ່ປະຊຸມ ຫລືໃນທີ່ສາທາລະນະ ໝາຍເຖິງການຕິດຕໍ່ສື່ສານທີ່ເປັນໄປຕາມລະບຽບ ເພາະຢູ່ບ່ອນນັ້ນມີຜູ້ເຂົ້າຮ່ວມເປັນຈຳນວນຫລວງຫລາຍ. ຜູ້ເວົ້າອາດມີຜູ້ດຽວ ຫລືເປັນໝູ່ຄະນະ ເຊິ່ງມີຈຸດໝາຍທີ່ເດັ່ນຊັດວ່າ ຈະເວົ້າເພື່ອຫຍັງ. ອາດມີການກຳນົດເວລາ. ຫົວຂໍ້ທີ່ຈະເວົ້າຂ້ອນຂ້າງແນ່ນອນ. ການເວົ້າໃນທີ່ປະຊຸມເຄີຍພົບເລື້ອຍໆເຊັ່ນ ການປະກະກາ, ການອະທິບາຍວິຊາການ, ການເວົ້າເນື່ອງໃນໂອກາດພິເສດຕ່າງໆ ແລະອື່ນໆ.

2. 2. 4 ການເວົ້າທາງສື່ມວນຊົນ

ເປັນການເວົ້າທີ່ຜູ້ເວົ້າບໍ່ສາມາດເຫັນການຕອບໂຕ້ ຫລືປະຕິກິລິຍາຂອງຜູ້ຟັງໄດ້ ເຊັ່ນ ການເວົ້າທາງໂທລະພາບ, ທາງວິທະຍຸກະຈາຍສຽງ ... ການເວົ້າແບບນີ້ສາມາດເວົ້າໃຫ້ຄົນຟັງເປັນຈຳນວນຫລວງຫລາຍໄດ້ຮັບຟັງພ້ອມໆກັນ.

2. 3 ຫລັກການທົ່ວໄປຂອງການເວົ້າໃນທີ່ປະຊຸມ

* ຂໍ້ຄວນປະຕິບັດກ່ອນການເວົ້າ

1. ຈຸດປະສົງຂອງການເວົ້າ

ຈັດເປັນການຕອນທຳອິດຂອງການເວົ້າໃນທີ່ປະຊຸມ ຊຶ່ງຜູ້ເວົ້າຈະຕ້ອງຮູ້ວ່າ ການເວົ້າຄັ້ງນີ້ເປັນການເວົ້າເພື່ອຈຸດປະສົງໃດ; ເປັນການເວົ້າເພື່ອໃຫ້ຄວາມຮູ້, ເປັນການເວົ້າເພື່ອຊີ້ແຈງໃຫ້ເຂົ້າໃຈໃນເລື່ອງທີ່ຍັງເຂົ້າໃຈກັນຜິດພາດ ແລະ ເພື່ອແຮ່ດຶງຈິດໃຈໃຫ້ຜູ້ຟັງໂນ້ມອ່ຽງຕາມ ຫລືເປັນການເວົ້າເພື່ອສ້າງຄວາມມ່ວນຊື່ນລື່ນເລີງແກ່ຜູ້ຟັງ. ນອກຈາກນີ້ຍັງຕ້ອງກຳນົດຈຸດປະສົງສະເພາະຂອງການເວົ້າເທື່ອນັ້ນເຊັ່ນ ຕ້ອງການໃຫ້ເກີດຄວາມເຂົ້າໃຈທີ່ຖືກຕ້ອງໃນເລື່ອງນັ້ນ ຫລືເປັນການເວົ້າເພື່ອດຶງດູດຈິດໃຈຂອງຜູ້ຟັງໃຫ້ອ່ຽງຕາມໃນເລື່ອງໃດໜຶ່ງ.

2. ຜູ້ຟັງ

ກ່ອນການເວົ້າແຕ່ລະຄັ້ງ ຜູ້ເວົ້າຄວນຄຳນຶງເຖິງຜູ້ຟັງ ເພື່ອມັນຈະເປັນປະໂຫຍດໃນການກະກຽມໃຫ້ດີທີ່ສຸດ. ສິ່ງທີ່ສຳຄັນທີ່ຜູ້ເວົ້າຄວນຄຳນຶງເຖິງຄື

- ໄວຂອງຜູ້ຟັງເປັນເດັກ ຫລືຜູ້ໃຫຍ່, ເປັນຜູ້ສູງອາຍຸ ຫລືຜູ້ໜຸ່ມ, ເປັນນັກຮຽນ ຫລືພະນັກງານ ລະດັບໃດ
- ເພດຂອງຜູ້ຟັງເປັນຍິງ ຫລືຊາຍ ຫລືມີທັງຍິງແລະຊາຍ
- ອາຊີບ, ລະດັບການສຶກສາ, ສາສະໜາ, ຄວາມເຊື່ອຖືຕ່າງໆຕະຫລອດເຖິງຄວາມສົນໃຈຂອງຜູ້ ຟັງ.
- ຈຳນວນຜູ້ຟັງ (ຫລາຍ ຫລືໜ້ອຍ)

ການສຶກສາເຖິງຜູ້ຟັງຕາມຂໍ້ຕ່າງໆຂ້າງເທິງນີ້ ເພື່ອໃຫ້ຜູ້ເວົ້າກຽມຕົວໄດ້ຢ່າງເໝາະສົມທາງດ້ານເນື້ອໃນ, ການໃຊ້ພາສາຕະຫລອດຈົນເຖິງວິທີເວົ້າ. ຖ້າຜູ້ເວົ້າບໍ່ສຶກສາເຖິງຜູ້ຟັງກ່ອນ, ການເວົ້າ

ອາດຈະປະສົບຄວາມຜິດພາດ. ບໍ່ບັນລຸຈຸດປະສົງທີ່ຕັ້ງໄວ້ກໍ່ອາດເປັນໄປໄດ້. ໃນທີ່ນີ້ຜູ້ເວົ້າຄວນເລືອກໃຊ້ພາສາທີ່ເໝາະສົມກັບລະດັບປະເພດຂອງຜູ້ຟັງ, ໂດຍດຶງເອົາຄຳເວົ້າຂອງຕົນເຂົ້າຢູ່ໃນຈຸດສົນໃຈຂອງຜູ້ຟັງ ແລະບໍ່ຄວນຍົກຍ້ອງສິ່ງທີ່ຕົນນັບຖືເຊັ່ນ ຍົກຍ້ອງສາສະໜາຂອງຕົນຂະນະທີ່ເວົ້າ ກັບຜູ້ຟັງຊຶ່ງສ່ວນໃຫຍ່ນັບຖືສາສະໜາອື່ນ.

3. ສະຖານທີ່ ແລະເວລາ

ການຮັບຮູ້ຂໍ້ມູນວ່າຈະໄປເວົ້າໃນສະຖານທີ່ໃດ ແລະ ໃຊ້ເວລາໃນການເວົ້າດົນປານໃດຈະເປັນປະໂຫຍດແກ່ຜູ້ເວົ້າໃນດ້ານການກຽມຕົວ, ການແຕ່ງຕົວ ແລະການກຽມເນື້ອໃນເພື່ອຄວາມເໝາະສົມ ຫລື ບໍ່ເໝາະສົມທີ່ຈະໃຊ້ວັດສະດຸອຸປະກອນປະກອບການເວົ້າ. ຖ້າບໍ່ສຶກສາໃນເລື່ອງນີ້ລ່ວງໜ້າຜູ້ເວົ້າອາດຈະປະສົບບັນຫາໃນເວລາເວົ້າ. ຖ້າກຽມເຄື່ອງສາຍພາບ ຫລື ອຸປະກອນປະເພດຕ່າງໆໃຊ້ ຜູ້ເວົ້າກໍ່ຕ້ອງຮູ້ວ່າສະຖານທີ່ ທີ່ເວົ້ານັ້ນອຳນວຍຄວາມສະດວກໃນການໃຊ້ອຸປະກອນດັ່ງກ່າວ ຫລືບໍ່.

ນອກຈາກນີ້ ຜູ້ເວົ້າກໍ່ຕ້ອງສຶກສາເລື່ອງໄລຍະເວລາທີ່ຈະຕ້ອງໃຊ້ໃນການເວົ້າ. ຜູ້ເວົ້າບາງຄົນອາດຈະເວົ້າເນື້ອຫາສາລະບໍ່ທັນຈົບ ກົງກັບເວລາທີ່ໄດ້ກຽມໄວ້ເມື່ອງຈາກວ່າ ກຽມເນື້ອເລື່ອງໄວ້ຍາວເກີນໄປ ຫລືເວົ້າຈົບກ່ອນເວລາຫລາຍເກີນໄປເມື່ອງຈາກວ່າກຽມເນື້ອເລື່ອງໄວ້ໜ້ອຍ ແຕ່ຕ້ອງເວົ້າໃນເວລາທີ່ດົນ.

4. ເລື່ອງທີ່ຈະເວົ້າ

ຫົວຂໍ້ເລື່ອງທີ່ຈະເວົ້າຕໍ່ທີ່ປະຊຸມນັ້ນອາດແບ່ງອອກເປັນ 2 ປະເພດຄື

4. 1 ຫົວຂໍ້ເລື່ອງທີ່ຜູ້ເວົ້າເປັນຜູ້ກຳນົດເອງ

ການກຳນົດຫົວຂໍ້ເລື່ອງ ແລະການກຽມເລື່ອງໃນລັກສະນະນີ້ ຈະຕ້ອງສອດຄ່ອງກັບຈຸດປະສົງໃນການເວົ້າ. ຈະຕ້ອງເລືອກເອົາເລື່ອງທີ່ຜູ້ເວົ້າເອງສົນໃຈ, ມີຄວາມຮູ້, ມີຄວາມເຂົ້າໃຈ ແລະມີປະສົບການໃນເລື່ອງນັ້ນເປັນຢ່າງດີ ຊຶ່ງຈະເປັນປະໂຫຍດຕໍ່ຜູ້ຟັງ ແລະສັງຄົມອີກດ້ວຍ.

4. 2 ຫົວຂໍ້ເລື່ອງທີ່ຜູ້ອື່ນກຳນົດໃຫ້ເວົ້າ

ຈະມີການກຳນົດໂດຍເຈາະຈົງຢູ່ແລ້ວວ່າ ຈະຕ້ອງເວົ້າເລື່ອງໃດເລື່ອງໜຶ່ງ ໂດຍພິຈາລະນາວ່າຜູ້ເວົ້າເປັນຜູ້ກ່ຽວຂ້ອງ ຫລືເໝາະສົມທີ່ຈະເວົ້າເລື່ອງນັ້ນ. ການກຽມເວົ້າເລື່ອງຕາມຫົວຂໍ້ນີ້ ຜູ້ເວົ້າຈະຕ້ອງຂົນຂວາຍຫາຄວາມຮູ້ກ່ຽວກັບເລື່ອງທີ່ຈະເວົ້າເປັນພິເສດ ຊຶ່ງອາດຈະເຮັດໄດ້ໂດຍການຄົ້ນຄ້ວາຈາກເອກະສານ, ໜັງສືຕ່າງໆ ຫລືສອບຖາມຈາກຜູ້ທີ່ຮູ້, ຕິດຕໍ່ຂໍ້ມູນຈາກໝວ່ຍງານ ຫລືຜູ້ທີ່ກ່ຽວຂ້ອງກັບເລື່ອງດັ່ງກ່າວໂດຍກົງ. ການກຽມຕົວໃນລັກສະນະດັ່ງກ່າວນີ້ ກໍນັບວ່າເປັນສິ່ງທີ່ຄວນປະຕິບັດເປັນຢ່າງຍິ່ງ ເພື່ອຜົນສຳເລັດຂອງຜູ້ເວົ້າ ແລະເພື່ອຜົນປະໂຫຍດຂອງຜູ້ຟັງ.

5. ວິທີການເວົ້າ

ຫລັງຈາກທີ່ກຳນົດຈຸດປະສົງຂອງການເວົ້າ, ວິເຄາະຜູ້ຟັງ, ຫາຂໍ້ມູນກ່ຽວກັບສະຖານທີ່ ແລະເວລາທີ່ຈະໃຊ້ໃນການເວົ້າຕະຫລອດຮອດການກະກຽມເນື້ອໃນໃສ່ຫົວຂໍ້ທີ່ຈະຕ້ອງເວົ້າແລ້ວ ຂັ້ນຕອນຕໍ່ໄປໃນການກຽມການເວົ້າຕໍ່ທີ່ປະຊຸມ ກໍ່ຄືການກະກຽມກ່ຽວກັບວິທີການເວົ້າຄື ຈະຕ້ອງມີການວາງແຜນ

ວ່າຈະໃຊ້ວິທີການເວົ້າຢ່າງໃດຈຶ່ງຈະເຮັດໃຫ້ຜູ້ຟັງສົນໃຈ ແລະ ໄດ້ຮັບ "ສາລະ" ຖືກຕາມທີ່ຜູ້ເວົ້າຕ້ອງການຊຶ່ງຜູ້ເວົ້າອາດຈະຕ້ອງກຽມໃຫ້ຄົບທຸກຂັ້ນຕອນດັ່ງນີ້

5. 1 ການກ່າວປະຕິສັນຖານ

ຄືການກ່າວທັກທາຍຜູ້ຟັງ ຊຶ່ງນັບວ່າເປັນສ່ວນສຳຄັນຈຸດໜຶ່ງໃນການເວົ້າຕໍ່ທີ່ປະຊຸມເພາະເປັນຂັ້ນຕອນໃນການສ້າງຄວາມເປັນມິດໄມຕີຕໍ່ກັນລະຫວ່າງຜູ້ເວົ້າ ກັບຜູ້ຟັງທັງຍັງເປັນການເຮັດໃຫ້ຜູ້ຟັງສົນໃຈຕໍ່ຜູ້ເວົ້າອີກດ້ວຍ. ການກ່າວປະຕິສັນຖານມີທັງແບບເປັນພິທີການ ແລະແບບລັກສະນະເປັນກັນເອງ.

5. 1. 1 ການກ່າວປະຕິສັນຖານທີ່ເປັນທາງການ

ເປັນການກ່າວປະຕິສັນຖານທີ່ໃຊ້ໃນການສະແດງສູນທອນພົດ ຫລືໃນການເວົ້າເນື້ອງໃນໂອກາດກ່ຽວກັບພິທີການ ຫລື ລັດຖະພິທີຕ່າງໆເຊັ່ນ ການກ່າວເປີດງານຕ່າງທາງລັດຖະການ, ການກ່າວຄຳໂອວາດ, ການສະແດງປະຖະກະຖາ ແລະອື່ນໆ. ການກ່າວປະຕິສັນຖານທີ່ໃຊ້ໃນໂອກາດເຊັ່ນ ນີ້ຈະເລີ່ມຕົ້ນດ້ວຍຜູ້ທີ່ມີສະຖານະພາບທາງສັງຄົມ ຫລື ອາວຸໂສທີ່ສຸດໃນທີ່ນັ້ນກ່ອນຜູ້ຟັງຜູ້ອື່ນໆ. ການກ່າວປະຕິສັນຖານປະເພດນີ້ເຄີຍໃຊ້ຄຳວ່າ "ຣຽນ, ຂໍຣຽນ, ກ່ອນອື່ນໝົດຂໍຣຽນ" ຕໍ່ຕຳແໜ່ງຂອງຜູ້ທີ່ມີສະຖານະພາບທາງສັງຄົມທີ່ສູງກ່ວາໝູ່ໃນທີ່ປະຊຸມນັ້ນ ແລະ ຈະບໍ່ໃຊ້ຄຳທີ່ສະແດງຄວາມຮູ້ສຶກຕໍ່ທ້າຍເຊັ່ນ "ທີ່ຮັກແພງ, ທີ່ນັບຖື, ທີ່ເຄົາລົບ" ດັ່ງນີ້ເປັນຕົ້ນ.

ຕົວຢ່າງ: - ຣຽນ ທ່ານລັດຖະມົນຕີກະຊວງການຕ່າງປະເທດ.

- ຂໍຣຽນ ທ່ານອະທິການບໍດີມະຫາວິທະຍາໄລແຫ່ງຊາດ.

5. 1. 2 ການກ່າວປະຕິສັນຖານທີ່ບໍ່ເປັນທາງການ

ການກ່າວປະຕິສັນຖານທີ່ບໍ່ເປັນທາງການ ເພິ່ນໃຊ້ກ່າວໃນໂອກາດກອງປະຊຸມທີ່ສະແດງຄວາມເປັນກັນເອງເຊັ່ນ ກອງປະຊຸມປະຖະກະຖາດ້ານວິຊາການ, ຄະນະພາກວິຊາເວົ້າກັບນັກສຶກສາ, ອະທິການບໍດີເວົ້າ ກັບພະນັກງານຄູອາຈານ ແລະນັກສຶກສາດັ່ງນີ້ເປັນຕົ້ນ. ການກ່າວແບບນີ້ຈະມີຄຳທີ່ສະແດງຄວາມຮູ້ສຶກເຊັ່ນ ທີ່ຮັກແພງ, ທີ່ນັບຖື, ທີ່ເຄົາລົບຕໍ່ທ້າຍກໍ່ໄດ້ ຫລືອາດຈະໃຊ້ຄຳ "ສະບາຍດີ" ນຳໜ້າກໍ່ໄດ້

ຕົວຢ່າງ: - ພໍ່ແມ່ພີ່ນ້ອງທີ່ຮັກແພງທັງຫລາຍ.

- ບັນດາຄູອາຈານທີ່ນັບຖືແລະຮັກແພງ.
- ສະບາຍດີເພື່ອນນັກສຶກສາທີ່ຮັກແພງທັງຫລາຍ.
- ທ່ານຜູ້ຟັງແລະທ່ານຜູ້ຊົມທີ່ເຄົາລົບ.

ຖ້າຫາກມີພະສົງຮ່ວມຢູ່ນຳຈະຕ້ອງກ່າວເຖິງພະສົງສາກ່ອນ ຊຶ່ງໃຊ້ຄຳວ່າ:

"ນະມັດສະການພະເຖລານຸເຖລະ"

"ນ້ອມນະມັດສະການພະເຖລານຸເຖລະ"

"ນະມັດສະການພະອາຈານ. . . "

5. 2 ການກ່າວຄຳນຳ

ແມ່ນການກ່າວນຳຄວາມເຂົ້າສູ່ເລື່ອງທີ່ຕົນຈະເວົ້າ. ຜູ້ເວົ້າທີ່ດີຄວນກະກຽມການໃຊ້ຄຳນຳໃຫ້ດີໄປດ້ວຍ ເພາະວ່າ ຄຳນຳເປັນສ່ວນສຳຄັນຂອງການເວົ້າອີກສ່ວນໜຶ່ງ ເພື່ອເປັນການນຳຄວາມເຂົ້າສູ່

ເລື່ອງທີ່ຕົນຕ້ອງການເວົ້າ. ໂດຍທົ່ວໄປແລ້ວ ກ້າເປັນການເວົ້າໃນບາງໂອກາດເຊັ່ນ ການກ່າວໃຫ້ຄຳ ໂອວາດ, ກ່າວເປີດກອງປະຊຸມ, ສຳມະນາ, ກ່າວເປີດພິທີສະຫລຸບຕ່າງໆ ຜູ້ເວົ້າຈະນຳຄວາມດ້ວຍການ ດ້ວຍການສະແດງຄວາມຮູ້ສຶກຂອງຕົນກ່ຽວກັບໂອກາດທີ່ເວົ້າ ຫລັງຈາກການກ່າວປະຕິສັນຖານຊຶ່ງ ອາດຈະໃຊ້ຄຳດັ່ງນີ້

" ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງຍິ່ງ ຫລື(ຮູ້ສຶກຍິ່ນດີຢ່າງຍິ່ງ)ທີ່ໄດ້ມີໂອກາດມາຮ່ວມ...ແລະໄດ້ ຮັບກຽດຂຶ້ນກ່າວ...ໃນງານຄັ້ງນີ້."

- "ຂ້າພະເຈົ້າຮູ້ສຶກດີໃຈເປັນຢ່າງຍິ່ງ..."
- "ຂ້າພະເຈົ້າຮູ້ສຶກປາບປື້ມໃຈເປັນຢ່າງຍິ່ງ..."

ກ້າເປັນການກ່າວໃນໂອກາດອື່ນໆເຊັ່ນ ການສະແດງຄຳຄິດຄຳເຫັນ, ປະກະກະກາ, ເວົ້າເພື່ອ ໃຫ້ຄວາມຮູ້ຕ່າງໆບໍ່ຈຳເປັນຈະກ່າວເຖິງໂອກາດກໍ່ໄດ້. ການກ່າວຄຳນຳຄວນເອົາໃຈໃສ່ດັ່ງນີ້

1. ຕ້ອງລະວັງຢ່າໃຫ້ຍາວເກີນໄປ.
2. ຢ່າກຽມຄຳນຳໃຫ້ມີລັກສະນະກ່ອມຕົວ ເຊັ່ນ ຂໍອະໄພຕົນເອງ, ເວົ້າບໍ່ເກັ່ງ, ບໍ່ຄ່ອຍມີຄວາມຮູ້ ເລື່ອງນັ້ນ, ບໍ່ໝັ້ນໃຈວ່າຈະເວົ້າຖືກໃຈຜູ້ຟັງ ຫລືບໍ່ ແລະອື່ນໆ.
3. ຄວນລະມັດລະວັງ ເພື່ອໃຫ້ຄຳນຳຕ້ອງສຳພັນກັບເລື່ອງທີ່ຈະເວົ້າ. ການນຳຄວາມມີບໍ່ຂໍ້ຈຳ ກັດວ່າຈະນຳຄວາມດ້ວຍວິທີໃດ, ອາດນຳດ້ວຍການຕັ້ງຄຳຖາມ, ຄຳເວົ້າຂອງບຸກຄົນສຳຄັນ, ບົດກາວີ, ສຸພາສິດ, ຄຳຝັງເຜີຍ, ຄຳຄົມ, ບົດກອນ, ນິຍາມ ຫລືອື່ນໆ ສຸດແລ້ວແຕ່ຜູ້ຈະເວົ້າເພື່ອຈະເຮັດໃຫ້ຜູ້ຟັງ ເກີດຄວາມສົນໃຈ, ປະທັບໃຈເຮັດໃຫ້ເກີດຄວາມຮູ້ສຶກວ່າ ຢາກຟັງເນື້ອເລື່ອງຕໍ່ໄປ, ແຕ່ສິ່ງສຳຄັນການ ນຳຄວາມນັ້ນມັນຈະຕ້ອງມີການພົວພັນກັບເນື້ອເລື່ອງ.

ຕົວຢ່າງ

- ການນຳຄວາມດ້ວຍຄຳເວົ້າຂອງບຸກຄົນສຳຄັນ

  "ຮຽນແລ້ວ, ຮຽນອີກ, ຮຽນເລື້ອຍໆໄປ." ໃນຫົວຂໍ້ທີ່ເວົ້າເຖິງການສຶກສາ.

- ການນຳຄວາມດ້ວຍຄຳສຸພາສິດ

  "ພາສາບອກຊາດມາລະຍາດບອກຕະກຸນ" ໃນຫົວຂໍ້ທີ່ເວົ້າເຖິງພາສາ ແລະວັດທະນະທຳ.

- ການນຳຄວາມດ້ວຍຄຳນິຍາມ

  "ຄູແມ່ນບຸກຄົນຜູ້ທີ່ເຮັດວຽກສິດສອນ, ກ່າຍທອດວິຊາຄວາມຮູ້ຕ່າງໆ ແກ່ຜູ້ທີ່ໃຫ້ຊື່ວ່າເປັນສິດ, ເປັນນັກຮຽນຫລືເປັນນັກສຶກສາ" ໃນຫົວຂໍ້ທີ່ເວົ້າເຖິງ "ຄູຄືຜູ້ໃຫ້".

5. 3 ການກ່າວເນື້ອເລື່ອງ

ເນື້ອເລື່ອງ ເປັນຂັ້ນຕອນໜຶ່ງທີ່ສຳຄັນທີ່ສຸດເພາະເປັນຫົວໃຈຂອງເລື່ອງ. ຜູ້ດຳເນີນການເວົ້າ ຕ້ອງຮູ້ຈັກລຳດັບຫົວຂໍ້ຍ່ອມໃຫ້ເໝາະສົມ ເພື່ອຈະບໍ່ເຮັດໃຫ້ຜູ້ຟັງເກີດຄວາມສັບສົນ. ດັ່ງນັ້ນ ຜູ້ເວົ້າຈະ ຕ້ອງໄດ້ມີການກະກຽມຄົ້ນຄວ້າຫາຄວາມຮູ້ ແລະຮວບຮວມຂໍ້ມູນພ້ອມດ້ວຍຕົວຢ່າງຕ່າງໆ. ເພື່ອໃຫ້ ປະກອບກັບເນື້ອເລື່ອງໃນເວລາເວົ້າ.

ຕົວຢ່າງ: ການເວົ້າເລື່ອງ" ຄວາມສາມັກຄີ" ຄວນລຳດັບຂັ້ນຕອນດັ່ງນີ້

1. ຄວາມສາມັກຄີແມ່ນຫຍັງ ?
2. ຄຸນປະໂຫຍດຂອງຄວາມສາມັກຄີມີຄືແນວໃດ ?

3. ຄວາມສາມັກຄີມີຄວາມສຳຄັນຕໍ່ສັງຄົມແນວໃດ ?
4. ຜົນປະໂຫຍດຕ່າງໆຈາກຄວາມສາມັກຄີ ແລະຜົນທີ່ໄດ້ຮັບຈາກຄວາມແຕກແຍກ.

ຕົວຢ່າງ: ການເວົ້າເລື່ອງ "ວັດທະນະທຳ"

1. ວັດທະນະທຳແມ່ນຫຍັງ ?
2. ຄວາມສຳຄັນຂອງວັດທະນະທຳ
   - ຕໍ່ຕົວບຸກຄົນ - ຕໍ່ສະຖາບັນ
   - ຕໍ່ປະເທດຊາດ - ຕໍ່ສັງຄົມມະນຸດ
3. ເມື່ອເຫັນຄວາມສຳຄັນຂອງວັດທະນະທຳແລ້ວ ພວກເຮົາຈະເຮັດແນວໃດ ເພື່ອເປັນການອະນຸລັກຮັກສາ ແລະພັດທະນາວັດທະນະທຳ.

5. 4 ການສະຫລຸບ

ຜູ້ເວົ້າ ຄວນມີການກະກຽມກ່ອນການເວົ້າວ່າ ຈະມີການສະຫລຸບເລື່ອງແນວໃດ ໃນການເວົ້າແຕ່ລະຄັ້ງເພື່ອເຮັດໃຫ້ຜູ້ຟັງປະທັບໃຈ, ຊຶ່ງອາດຈະຈົບດ້ວຍການຍ້ຳຄວາມຄິດສຳຄັນຂອງຜູ້ເວົ້າ, ຈົບດ້ວຍຄຳຄົມ, ຄຳສຸພາສິດ, ບົດກະວີ ແລະແຝງດ້ວຍນ້ຳສຽງທີ່ສະກິດໃຈໃຫ້ຄິດ, ໃຫ້ເຫັນດີເຫັນພ້ອມ ຫລື ປ່ຽນທັດສະນະຄະຕິຕ່າງໆ ຕາມຈຸດປະສົງຂອງການເວົ້າໃນຄັ້ງນັ້ນໆ.

ຕົວຢ່າງ ການຈົບການເວົ້າເລື່ອງ "ຄວາມສາມັກຄີ"

- ບັນດາທ່ານທີ່ນັບຖື ! ຄວາມສາມັກຄີນັ້ນມີພະລັງເໜືອກ່າວສິ່ງໃດໆໃນໂລກ. ສາມັກຄີກັນໄວ້ເທີດ ! "ຮວມກັນເຮົາຢູ່ແຕກໝູ່ເຮົາຕາຍ" "ຮັກກັນດີກວ່າຊັງກັນ" "ຮັກກັນມີແຕ່ກຳໄລ ຊັງກັນເທົ່ານັ້ນທີ່ຈະຂາດທຶນ".

ເຜີ່ນວ່າ ສາຍຝົນຢົດຢາດນ້ອຍ ເທື່ອລະຢາດຍັງເຕັມໄຫ
ຫລາຍເມັດໄຫຼລົງໂຮມ ຈຶ່ງປ່ອງເປັນສະໜຸດກວ້າງ
ມືຕໍ່ມືປະສານແໜ້ນ ຫລາຍພະລັງເປັນກຸ່ມ
ເຈົ້າມືໜຶ່ງຂ້ອຍມືໜຶ່ງ ຈັບຊ່ວຍຊ້ວນຊ່ວຍເສີມເພີ້ມພະລັງ ແທ້ແລ້ວ
ຂອບໃຈ

*** ຂໍ້ຄວນປະຕິບັດຂະນະດຳເນີນການເວົ້າ**

1. ຜູ້ເວົ້າຕ້ອງປະກົດຕົວຢູ່ເທິງເວທີ ຫລືຕໍ່ທີ່ປະຊຸມດ້ວຍຄວາມໝັ້ນໃຈ ແລະພະຍາຍາມຄວບຄຸມອາລົມ, ບໍ່ສະແດງທ່າທີເກີ້ເຂີນ ຫລືຕື່ນເຕັ້ນໃຫ້ຜູ້ຟັງເຫັນ,
2. ພະຍາຍາມເວົ້າໃຫ້ກົງກັບຂັ້ນຕອນຂອງການເວົ້າ.
3. ຢືນເວົ້າ ຫລື ນັ່ງເວົ້າ ໃນກໍລະນີຈັດຕັ້ງໃຫ້ນັ່ງເວົ້າຢ່າງສະຫງ່າຜ່າເຜີຍ, ບໍ່ໃຊ້ທ່າທີເຄັ່ງຂຶມເກີນໄປ. ໃນເວລາເວົ້າລະວັງຢ່າສະແດງສິ່ງທີ່ບໍ່ເໝາະສົມເຊັ່ນ ແກະເກົາຮ່າງກາຍ, ປິດແວ່ນຕາ - ໃສ່ແວ່ນຕາສະຫລັບກັບຢູ່ຕະຫລອດເວລາ, ປິດກະດຸມເສື້ອ, ດຶງສາຍແອວ, ເສີຍຜົມ ແລະອື່ນໆ. ການກະທຳເຫລົ່ານີ້ກໍ່ໃຫ້ເກີດຄວາມລຳຄານ ແລະເຮັດໃຫ້ເສຍບຸກຂະລິກະພາບຂອງຜູ້ເວົ້າ. ໃນບາງໂອກາດ ຜູ້ເວົ້າບາງຄົນອາດຈະຍ່າງໄປຍ່າງມາກໍ່ໄດ້ ແຕ່ຕ້ອງລະມັດລະວັງບໍ່ຄວນກັບໄປກັບມາຢູ່ຕະຫຼອດເວລາ.

4. ຜູ້ເວົ້າຈະຕ້ອງປະສານສາຍຕາກັບຜູ້ຟັງ. ສາຍຕາທີ່ເບິ່ງຜູ້ຟັງ ຈະຕ້ອງເປັນສາຍຕາທີ່ສະແດງ ຄວາມເປັນມິດ ແລະຈະຕ້ອງກວາດສາຍຕາໃຫ້ທົ່ວເຖິງ ບໍ່ແມ່ນເບິ່ງສະເພາະຜູ້ຟັງກຸ່ມໃດກຸ່ມໜຶ່ງ ເທົ່ານັ້ນ.
5. ເວົ້າດ້ວຍສຽງດັງຊັດເຈນ ພໍທີ່ຜູ້ຟັງທັງໝົດຈະໄດ້ຍິນຢ່າງທົ່ວເຖິງກັນ. ຖ້າເວົ້າໃສ່ໄມໂຄໂຟນ ກໍ່ຕ້ອງລະມັດລະວັງກຽ່ວກັບການໃຊ້ໄມອີກດ້ວຍ ຄື ຄວນຈັບໄມໃຫ້ຫ່າງຈາກປາກພໍປະມານ, ຕ້ອງເວົ້າໃຫ້ເຄິ່ງໄມ, ບໍ່ຄວນເຄາະ ຫລືເປົ່າ.
6. ຜູ້ເວົ້າຕ້ອງເວົ້າດ້ວຍນ້ຳສຽງທີ່ຊວນໃຫ້ສົນໃຈ, ຮູ້ຈັກເນັ້ນສຽງໜັກເບົາ ແລະເວັ້ນໄລຍະການ ເວົ້າຕາມຄວາມເໝາະສົມຂອງເນື້ອເລື່ອງ, ຢ່າເວົ້າໂດຍໃຊ້ສຽງເມື່ອຍໆ ຫລືໃຊ້ສຽງລະດັບດຽວກັນ ແຕ່ຕົ້ນຈົນຈົບ.
7. ຢ່າເວົ້າໄວ ຫລືຊ້ຳເກີນໄປ.
8. ຕ້ອງລະມັດລະວັງພະຍັນຊະນະບາງຕົວ.
9. ຮູ້ສະແດງສີໜ້າ, ທ່າທີປະກອບເລື່ອງ ເພື່ອຮຽກຮ້ອງຄວາມສົນໃຈ ແລະ ໃຫ້ຜູ້ຟັງເຂົ້າໃຈຊັດເຈນ ແຕ່ບໍ່ຕ້ອງສະແດງທ່າທີ ທີ່ບໍ່ເປັນປະໂຫຍດໃນການສື່ຄວາມໝາຍ.
10. ຕ້ອງລະມັດລະວັງໃນການໃຊ້ສຳນວນພາສາ ແລະ ຖ້ອຍຄຳໃຫ້ເໝາະສົມກັບກາລະ - ເທສະ ແລະ ລະດັບຂອງຜູ້ຟັງ.
11. ຮູ້ແຊກອາລົມຕະຫລົກເລັກນ້ອຍຕາມຄວາມເໝາະສົມຂອງເລື່ອງ ເພື່ອບໍ່ໃຫ້ຜູ້ຟັງເຄັ່ງຕຶງ.
12. ຢ່າລືມເວົ້າຄືນຄວາມສຳຄັນຂອງເລື່ອງທີ່ຕົນໄດ້ເວົ້າ ຊຶ່ງສ່ວນຫລາຍແມ່ນຢູ່ຕອນສະຫລຸບ.
13. ການໃຊ້ຄຳແທນນາມບອກບຸລຸດທີ່ໃຊ້ແທນຕົວຂອງຜູ້ເວົ້າ ໃນການເວົ້າທີ່ເປັນພິທີການອາດຈະໃຊ້ " ຂ້າພະເຈົ້າ " ; ແຕ່ຖ້າເປັນການເວົ້າທີ່ບໍ່ເປັນພິທີການອາດຈະໃຊ້ " ເຮົາ, ຂ້ອຍ " ຫລືຄຳອື່ນໆ ທີ່ສະແດງຄວາມສຳພັນກັບຜູ້ຟັງຕາມກາລະ - ເທສະທີ່ເໝາະສົມ.
14. ກ່ອນສິ້ນສຸດການເວົ້າຄວນລົງທ້າຍດ້ວຍຄວາມຄິດທີ່ສຳຄັນ ຫລືຍ້ຳຄິດທີ່ສຳຄັນຕ່າງໆ. ສຳ ນວນທີ່ຜູ້ເວົ້າອາດໃຊ້ເພື່ອໃຫ້ຜູ້ຟັງຮູ້ວ່າຈະຈົບການເວົ້າມີຫລາຍສຳນວນ ຄື
   - ໃນທ້າຍສຸດນີ້ ຫລືໃນໂອກາດສຸດທ້າຍນີ້. . .
   - ກ່ອນຈົບການເວົ້າໃນຄັ້ງນີ້. . . ຂໍຍ້ຳອີກຄັ້ງໜຶ່ງວ່າ. . .
   - ຂ້າພະເຈົ້າຂໍຈົບການປະກະກະຖານີ້ດ້ວຍພຸດທະສຸພາສິດທີ່ວ່າ. . . ແລະອື່ນໆ.

*** ຍ້ຄວນປະຕິບັດຫລັງການເວົ້າ**

ຜູ້ເວົ້າທີ່ຫວັງຜົນສຳເລັດໃນດ້ານການເວົ້າ ຈະບໍ່ຢຸດຕິກິດຈະກຳທີ່ກ່ຽວຂ້ອງກັບການເວົ້າໃນທັນ ທີທີ່ຕົນລົງຈາກການເວທີ ຫລືໃນທັນທີທີ່ຕົນເວົ້າຈົບ; ແຕ່ຈະມີການປະເມີນຜົນການເວົ້າຂອງຕົນວ່າດີ ຫລືບໍ່ ແລະໄດ້ຮັບຜົນກົງກັບຈຸດປະສົງ ຫລືບໍ່. ການປະເມີນຜົນຂອງການເວົ້ານັ້ນຄວນມີທັງການປະ ເມີນຜົນດ້ວຍຕົນເອງ ແລະປະເມີນຜົນຈາກຜູ້ອື່ນໆ.

- ການປະເມີນຜົນດ້ວຍຕົນເອງ ຜູ້ເວົ້າສາມາດເຮັດໄດ້ໂດຍແມ່ນຜູ້ເວົ້າພິຈາລະນາວ່າ ຕົນພໍໃຈໃນ ການເວົ້າຄັ້ງນີ້ ຫລືບໍ່, ສາມາດເວົ້າໃນສິ່ງທີ່ຕົນຕ້ອງການເວົ້າຄົບຖ້ວນ ຫລືບໍ່, ວິທີການເວົ້າ ແລະ ການສະໜີຄວາມຄິດເປັນໄປຕາມແຜນການທີ່ວາງໄວ້ລ່ວງໜ້າ ຫລືບໍ່ ແລະຮູ້ສຶກວ່າຕົນເອງ ຍັງມີຄວາມບົກຜ່ອງບັນຫາໃດ.

- ສັງເກດຈາກປະຕິກິລິຍາຂອງຜູ້ຟັງເຊັ່ນ ສີໜ້າ, ທ່າທີ ແລະຄວາມສົນໃຈອື່ນໆຂອງຜູ້ຟັງ.
- ປະເມີນຜົນຈາກຄົນອື່ນຄື ໃຫ້ຜູ້ອື່ນຊ່ວຍວິຈານການເວົ້າຂອງຕົນເອງວ່າ ມີສ່ວນດີ ຫລືບໍ່ດີ ບ່ອນໃດ; ສຶກສາວິທີການເວົ້າຂອງນັກເວົ້າຜູ້ອື່ນໆ ເພື່ອປັບປຸງວິທີການເວົ້າຂອງຕົນໃຫ້ດີຂຶ້ນໃນຄັ້ງຕໍ່ໆໄປ.

<u>ຄຳຖາມ:</u>

1. ຈຸດປະສົງຂອງການເວົ້າມີຫຍັງແດ່?
2. ການເວົ້າມີຈັກປະເພດ? ຄືປະເພດໃດແດ່? ແຕ່ລະປະເພດຕ່າງກັນແນວໃດ?
3. ຂໍ້ຄວນປະຕິບັດກ່ອນການເວົ້າໃນທີ່ປະຊຸມມີແນວໃດແດ່?
4. ຂະນະດຳເນີນການເວົ້າໃນທີ່ປະຊຸມ ຜູ້ເວົ້າຄວນປະຕິບັດແນວໃດ?
5. ຫຼັງການເວົ້າ ຜູ້ເວົ້າຄວນປະຕິບັດແນວໃດ?

3. ຫລັກການອ່ານ

3.1 ຄວາມເຂົ້າໃຈກ່ຽວກັບການອ່ານ

ການອ່ານຄືການເຂົ້າໃຈເອກະສານດ້ວຍການສັງເກດພິຈາລະນານັ້ນເອງ. ບໍ່ວ່າການອ່ານນັ້ນຈະເປັນການອ່ານອອກສຽງ ຫລື ການອ່ານໃນໃຈກໍ່ຕາມລ້ວນແຕ່ມີຈຸດປະສົງດຽວກັນ ຄື ຜູ້ອ່ານຕ້ອງການເກັບກຳສາລະສຳຄັນ ຫລືຮວບຮວມແນວຄິດສຳຄັນທີ່ຢູ່ໃນເອກະສານນັ້ນໆ. ການອ່ານຕ້ອງອ່ານຢ່າງມີສຳມະທິ, ບໍ່ແມ່ນອ່ານແບບຜ່ານໆ, ອ່ານແບບລວບໆ ຫລືອ່ານແບບໃຈລອຍ. ດັ່ງນັ້ນການອ່ານເພື່ອໃຫ້ໄດ້ຄວາມຮູ້ ແລະ ຄວາມເຂົ້າໃຈແຈ່ມແຈ້ງ, ຊັດເຈນ, ໃຫ້ເກີດປັນຍາໄດ້ນັ້ນ ຕ້ອງໃຊ້ຄວາມຄິດພິນິດວິເຄາະຂໍ້ຄວາມຕ່າງໆໃຫ້ໄດ້ຕາມທີ່ຜູ້ຂຽນຕ້ອງການ.

3. 2 ຄວາມສຳຄັນຂອງການອ່ານ

ການອ່ານມີຄວາມສຳຄັນຢ່າງຍິ່ງ ໃນການສຶກສາຫາຂໍ້ຄວາມຮູ້ໃນວິຊາການຕ່າງໆ. ການອ່ານສາມາດໃຫ້ພວກເຮົາຮູ້ຄວາມຮູ້ສຶກນຶກຄິດຂອງຄົນໃນທັງອາດີດ ແລະປັດຈຸບັນ, ຊ່ວຍເພີ່ມສະຕິປັນຍາ, ຄວາມຮູ້ ແລະ ຄວາມເຂົ້າໃຈບັນຫາຕ່າງໆ; ຕະຫລອດເຖິງການທີ່ຈະເຂົ້າເຖິງປຶ້ມ ຫລືເອກະສານປະເພດຕ່າງໆໃຫ້ເລິກເຊິ່ງ. ດັ່ງນັ້ນ ເຮົາຈຶ່ງຈຳເປັນຢ່າງຍິ່ງທີ່ຈະຕ້ອງເຝິກຝົນທັກສະນີ້. ການອ່ານມີຄວາມສຳຄັນຫລາຍຕໍ່ຊີວິດປະຈຳວັນຂອງຄົນເຮົາ ເພາະການອ່ານປຶ້ມ ຫລືໜັງສືເລື່ອງຕ່າງໆ ທີ່ໄດ້ຮວບຮວມເອົາຄວາມຮູ້ຈາກທຸກສາຂາວິຊາ ແລະຄວາມບັນເທີງຕ່າງໆນັ້ນເປັນເສັ້ນທາງທີ່ພັດທະນາຄົນໃຫ້ມີຄຸນະພາບໃນທຸກສາຂາອາຊີບ.

ນອກຈາກດ້ານການພັດທະນາການປະກອບອາຊີບແລ້ວ ການອ່ານຍັງເຮັດໃຫ້ຄົນເຮົາມີອິດສະຫຼະທາງດ້ານຄວາມຄິດ ບໍ່ກືກເປົ່າຫູ ຫລືກືກຄອບງຳທາງດ້ານຄວາມຄິດ, ມີສາຍຕາເບິ່ງກ້ວາງໄກ, ມີໂລກະທັດ ແລະ ຊີວະທັດທີ່ກືກຕ້ອງ, ໄດ້ປະສົບການຂໍ້ຄິດ ແລະ ຄວາມຮູ້ຕ່າງໆ ຈາກການອ່ານ.

3. 3 ສ່ວນປະກອບສຳຄັນຂອງການອ່ານ

ສ່ວນປະກອບຂອງການອ່ານແມ່ນປັດໄຈທີ່ຂາດບໍ່ໄດ້ໃນການອ່ານໜັງສືຕ່າງໆນັ້ນເອງ. ບໍ່ວ່າຈະເປັນການອ່ານອອກສຽງ ຫຼືອ່ານໃນໃຈກໍ່ຕາມ, ຜູ້ອ່ານຈະຕ້ອງໄດ້ຈັບໃຈຄວາມ, ເກັບກຳຄວາມຄິດເພື່ອເຮັດໃຫ້ເກີດຄວາມຮູ້ ແລະຄວາມເຂົ້າໃຈ. ການອ່ານເປັນວິທີການທີ່ຕໍ່ເນື່ອງ ເຊິ່ງສາມາດນຳໄປສູ່ການຮຽນຮູ້ວິຊາການດ້ານຕ່າງໆໄດ້ດີ. ການອ່ານມີສ່ວນປະກອບ 5 ສ່ວນ ຄື

3. 3. 1 ຜູ້ອ່ານ ເປັນອົງປະກອບທີ່ສຳຄັນສ່ວນທີ່ໜຶ່ງທີ່ເຮັດໃຫ້ເກີດການອ່ານ ເພາະຖ້າບໍ່ມີຜູ້ອ່ານ ການອ່ານກໍ່ຈະບໍ່ເກີດຂຶ້ນ.

3. 3. 2 ເນື້ອໃນຂອງໜັງສື, ຕິວອັກສອນ, ເນື້ອໜາ, ເລື່ອງລາວ ແລະ ສາລະຈາກການອ່ານໜັງສືເຫລົ່ານັ້ນຈະໃຫ້ຄວາມຄິດແກ່ຜູ້ອ່ານ; ຖ້າອ່ານບໍ່ອອກ ຫລື ອ່ານບໍ່ເຂົ້າໃຈ ກໍໝາຍຄວາມວ່າ ການອ່ານບໍ່ປະສົບຄວາມສຳເລັດ.

3. 3. 3 ຄວາມໝາຍຂອງແຕ່ລະຄຳສັບ ຊຶ່ງຜູ້ອ່ານຈະຕ້ອງເຂົ້າໃຈ ຈຶ່ງຈະສາມາດອ່ານຕໍ່ໄປໄດ້.

3. 3. 4 ການເລືອກຄວາມໝາຍຂອງສັບ ເຊິ່ງຄວາມໝາຍຂອງສັບໃນພາສາລາວມີຫລາຍຄຳສັບທີ່ມີຄວາມໝາຍຊ້ຳກັນ ຫລືສັບດຽວມີຫລາຍຄວາມໝາຍ. ຜູ້ອ່ານຈະຕ້ອງສາມາດພິຈາລະນາ

ເລືອກໃຫ້ຖືກຕ້ອງວ່າ ຜູ້ແຕ່ງມີຈຸດປະສົງຢາກໃຫ້ຄຳນັ້ນໝາຍຄວາມວ່າແນວໃດ. ຖ້າຜູ້ແຕ່ງ ແລະ ຜູ້ອ່ານມີຄວາມເຂົ້າໃຈກົງກັນກໍ່ສາມາດອ່ານໄດ້ຄວາມໝາຍທີ່ຖືກຕ້ອງ; ແຕ່ກົງກັນຂ້າມ ຖ້າບໍ່ເຂົ້າໃຈກົງກັນກໍ່ອາດເຮັດໃຫ້ເກີດຄວາມເຂົ້າໃຈຜິດໄດ້ເຊັ່ນກັນ.

3. 3. 5 ການນຳໄປໃຊ້: ການອ່ານທີ່ຈະໄດ້ຮັບຜົນສຳເລັດຫລາຍ-ໜ້ອຍພຽງໃດ ແມ່ນຢູ່ທີ່ຕົວຂອງຜູ້ອ່ານວ່າ ສາມາດເຂົ້າໃຈຄວາມໝາຍເລື່ອງລາວຖືກຕ້ອງຕາມຈຸດປະສົງຂອງຜູ້ແຕ່ງ ແລະ ສາມາດເລືອກເຟັ້ນສິ່ງທີ່ດີ ແລະເໝາະສົມເພື່ອນຳໄປໃຊ້ໃນຊີວິດປະຈຳວັນ ຫຼືຕາມໂອກາດຕ່າງໆໄດ້ ຫລື ສ້າງປະໂຫຍດໃຫ້ແກ່ຕົນເອງ ແລະ ສັງຄົມໄດ້ ຫຼືບໍ່.

3. 4 ຄຸນລັກສະນະຂອງນັກອ່ານທີ່ດີ

ນອກຈາກພື້ນຖານການອ່ານແລ້ວ ຜູ້ທີ່ຈະເປັນນັກອ່ານທີ່ດີໄດ້ຄວນມີລັກສະນະດັ່ງນີ້:

3.1 ມີສະມາທິໃນການອ່ານ ຫລືຕັ້ງໃຈອ່ານຢ່າງຈິງຈັງ ແລະສຸມຄວາມສົນໃຈໃສ່ສະເພາະເລື່ອງທີ່ອ່ານເທົ່ານັ້ນ.

3. 2 ມີສະມັດຖະພາບໃນການອ່ານສູງ, ໝາຍຄວາມວ່າມີຄວາມອົດທົນ, ສາມາດອ່ານໜັງສືໄດ້ດົນໂດຍບໍ່ຮູ້ເບື່ອ.

3. 3 ອ່ານໄດ້ໄວ ແລະ ເຂົ້າໃຈຄວາມໝາຍໄດ້ທັນທີ, ສາມາດຈັບໃຈຄວາມຂອງເລື່ອງໄດ້ຢ່າງຖືກຕ້ອງ.

3. 4 ມີພື້ນຖານດ້ານຄວາມຮູ້ພໍສົມຄວນທັງໃນດ້ານຄວາມຮູ້ທົ່ວໄປ, ຖ້ອຍຄຳ, ສຳນວນໂວຫານ, ຄຳສັບສະເພາະ ແລະລັກສະນະຄຳປະພັນຕ່າງໆ.

3. 5 ມີນິດໄສມັກການຈົດບັນທຶກ ແລະຄົ້ນຄວ້າ ເພື່ອທີ່ຈະຮວບຮວມຄວາມຄິດຈາກການອ່ານ ແລະ ສຶກສາຄົ້ນຄວ້າເພີ່ມເຕີມພາຍຫລັງ.

3. 6 ມີຄວາມຈື່ຈຳດ້ອນຂ້າງດີ ພໍທີ່ຈະຈົດຈຳໄດ້ວ່າ ເລື່ອງຫຍັງ, ໃຜແຕ່ງ, ມາຈາກໃສ, ພ້ອມທັງຂໍ້ມູນອື່ນໆ. ຖ້າຈື່ບໍ່ໄດ້ກໍ່ອາດຈະຈົດບັນທຶກຊ່ວຍຄວາມຈື່ຈຳ.

3. 7 ມີຄວາມຮູ້ທາງດ້ານຫໍສະໝຸດພໍສົມຄວນ ຫລືສາມາດໃຊ້ຫ້ອງສະໝຸດເປັນ.

3. 8 ມີວິຈາລະນະຍານໃນການອ່ານ, ຮູ້ຈັກເກັບກຳເນື້ອຫາ ຫຼືຂໍ້ແທ້ຈິງທີ່ສຳຄັນຕ່າງໆ, ພ້ອມທັງຮູ້ນຳເອົາໄປໃຊ້ໃຫ້ເກີດປະໂຫຍດໃນສະຖານະການອື່ນໆໃນໂອກາດຕໍ່ໆໄປ.

3. 5 ວິທີອ່ານ

3. 5. 1 ອ່ານຢ່າງສຶກສາ

ການອ່ານແບບນີ້ ຜູ້ອ່ານຕ້ອງໄດ້ອ່ານໃຫ້ລະອຽດກີ່ກ້ວນ, ຜູ້ອ່ານຕ້ອງໃຊ້ພິນິດວິເຄາະຫລາຍ, ຕ້ອງພະຍາຍາມເຂົ້າໃຈເລື່ອງໃຫ້ໄດ້ທຸກບົດທຸກຕອນ ແລະຮູ້ຈັກທົບທວນຄວາມຄິດໃຫ້ຮອບຮູ້ຊຳນິຊຳນານ. ວິທີນີ້ໃຊ້ສຳລັບອ່ານຕຳລາວິຊາການທີ່ຕ້ອງການສຶກສາຢ່າງລະອຽດເລິກເຊິ່ງ.

3. 5. 2 ອ່ານຢ່າງກີ້ກ້ວນ

ໃຊ້ເມື່ອເຮົາອ່ານເລື່ອງ ທີ່ຕ້ອງການຢາກໄດ້ຄວາມຮູ້ຄວາມຊຳນິຊຳນານໜ້ອຍກວ່າອ່ານແບບສຶກສາເຊັ່ນ ອ່ານເພື່ອສ້າງຄວາມນິຍົມ. ຜູ້ອ່ານຈະຕ້ອງອ່ານຢ່າງລະມັດລະວັງກີ່ກ້ວນ ເພື່ອຫາແງ່ຕິຊົມວິຈານ ຫລືສະໜັບສະໜຸນໜັງສືເລື່ອງນັ້ນ. ການອ່ານຂໍ້ຄວາມໃນສັນຍາກໍ່ຕ້ອງອ່ານຢ່າງກີ່ກ້ວນເຊັ່ນ

ດຽວກັນ, ບາງຄຳສັບ ເຊັ່ນ "ແຕ່, ແລະ, ກ້າ . . . "ເຮົາຈະອ່ານຂ້າມໄປບໍ່ໄດ້, ເພາະວ່າ ແຕ່ລະຄຳສັບມີຄວາມໝາຍ ກ້າເຮົາຫາກອ່ານຂ້າມໄປຈະເຮັດໃຫ້ຄວາມໝາຍຜິດພ້ຽນໄປທາງອື່ນ.

3. 5. 3 ການອ່ານຢ່າງວ່ອງໄວ

ການອ່ານປະເພດນີ້ ເໝາະສົມໃນການອ່ານນະວະນິຍາຍ, ໜັງສືພິມ, ນິດລາຍງານ ຫລືໜັງສືອື່ນໆທີ່ບໍ່ຕ້ອງການສຶກສາໃຫ້ລະອຽດກໍ່ງ່ວນ. ນອກຈາກນີ້ ຍັງໃຊ້ອ່ານເພື່ອທົບທວນຄວາມຈື່ຈຳເລື່ອງທີ່ເຄີຍຜ່ານສາຍຕາມາແລ້ວ ຫລືເລື່ອງທີ່ຜູ້ອ່ານມີພື້ນການຄວາມຮູ້, ມີປະສົບການແລ້ວ ຈຶ່ງຈະສາມາດໃຊ້ວິທີອ່ານຢ່າງວ່ອງໄວນີ້ໄດ້.

3. 5. 4 ອ່ານຢ່າງຜິວເຜີນ

ຜູ້ອ່ານທີ່ມີຈຸດປະສົງຢາກຄົ້ນຫາຄຳຕອບສະເພາະຈຸດໃດຈຸດໜຶ່ງ ໂດຍສະເພາະຄົ້ນຫາຊື່, ສະຖານທີ່, ຂໍ້ອ້າງອີງ ຫລືຕ້ອງການກວດກາເບິ່ງສ່ວນລະບາບວ່າ ມີເລື່ອງໃດ, ມີສຳນວນໂວຫານໃດ, ມີວິທີແຕ່ງແນວໃດ, ມີເຄົ້າໂຄງເລື່ອງມາຈາກໃສ ເພື່ອໃຫ້ຮູ້ວ່າໜັງສືເຫລັ້ມນັ້ນຄວນຈະອ່ານ ຫລືບໍ່. ການໃຊ້ການອ່ານແນວນີ້ຜູ້ອ່ານອ່ານເບິ່ງຜ່ານໆ ກໍ່ຈະໄດ້ແນວທາງຄວາມປະສົງຂອງຕົນໂດຍບໍ່ໄດ້ອ່ານລະອຽດ. ການອ່ານແນວນີ້ກິນເວລາໜ້ອຍທີ່ສຸດສຳລັບຜູ້ອ່ານໜັງສືເປັນ ແລະຮູ້ຈັກເລືອກວິທີອ່ານ. ໃນທາງກົງກັນຂ້າມ ການອ່ານຜ່ານໆເປັນອັນຕະລາຍຫລາຍສຳລັບຜູ້ອ່ານໜັງສືບໍ່ເປັນ ແລະບໍ່ຮູ້ຈັກວິທີທີ່ຖືກຕ້ອງ ແລະນຳວິທີນີ້ໄປໃຊ້ຜິດກັບຈຸດປະສົງເຊັ່ນ ຜູ້ອ່ານຕ້ອງການອ່ານຢ່າງສຶກສາຜັດໄປອ່ານຢ່າງຜິວເຜີນເໝືອນອ່ານໜັງສືຫລິ້ນ ຫລືອ່ານໄປຢ່າງຟ້າວຟັ່ງ ໂດຍເປີດອ່ານຜ່ານໆໄປຊຶ່ງຈະເຮັດໃຫ້ເກີດຜົນເສຍຫາຍແກ່ຜູ້ອ່ານ. ຈົ່ງຈຳເອົາໄວ້ວ່າ ການອ່ານໜັງສືແນວນີ້ບໍ່ແມ່ນການອ່ານທີ່ແທ້ຈິງ. ເມື່ອອ່ານຜ່ານໆຈົບລົງຄັ້ງໜຶ່ງແລ້ວຄວນເກັບມາອ່ານອີກຄັ້ງໜຶ່ງ. ສຳລັບໜັງສືທີ່ຕ້ອງການອ່ານຢ່າງສຶກສາເລື່ອງໂດຍລະອຽດ ບໍ່ຄວນອ່ານແນວຜິວເຜີນ, ບໍ່ດັ່ງນັ້ນ ຈະເຮັດໃຫ້ຕິດນິໄສອ່ານອັນໃດກໍ່ພຽງແຕ່ອ່ານແນວຜ່ານໆລວບໆ ແລະບໍ່ໄດ້ເນື້ອຫາສາລະແນວໃດເລີຍ.

3. 6 ການອ່ານເພື່ອຕີຄວາມໝາຍແລະການອ່ານເພື່ອວິເຄາະ

3. 6. 1 ການອ່ານເພື່ອຕີຄວາມໝາຍ

ຈຸດປະສົງຂອງການອ່ານຕີຄວາມໝາຍ ກໍ່ເພື່ອພິຈາລະນາວ່າຂໍ້ຄວາມ ຫລືເລື່ອງທີ່ອ່ານນັ້ນມີຄວາມໝາຍແທ້ຈິງແນວໃດ ຈຶ່ງຈະສາມາດອະທິບາຍເຖິງເຈຕະນາ ແລະ ຄວາມຄິດຂອງຜູ້ຂຽນໄດ້ຢ່າງຊັດເຈນ. ການຕີຄວາມໝາຍຈາກການອ່ານແຕກຕ່າງກັນໄປດ້ວຍຫລາຍສາເຫດ ຄື

1. ຄວາມສາມາດ: ແຕ່ລະບຸກຄົນມີຄວາມສາມາດໃນການອ່ານ ແລະຕີຄວາມໝາຍບໍ່ເທົ່າທຽມກັນ.
2. ອາຍຸກະສຽນ: ຄວາມຮູ້ສຶກນຶກຄິດ, ຄວາມຊາບຊຶ້ງ, ຄວາມສົນໃຈ ຕະຫລອດຮອດຄວາມຮູ້ຂອງຜູ້ອ່ານແຕ່ລະຄົນຍ່ອມແຕກຕ່າງກັນໄປ ຕາມໄວອາຍຸກະສຽນທີ່ແຕກຕ່າງກັນ ທັງໆທີ່ອ່ານເລື່ອງດຽວກັນ.
3. ປະສົບການ: ຄວາມເຂົ້າໃຈ ແລະຄວາມຊາບຊຶ້ງຕໍ່ເຫດການຕ່າງໆບໍ່ຄືກັນ ເພາະຄົນທີ່ບໍ່ເຄີຍປະສົບເຫດການໃດໆກໍ່ຈະບໍ່ເຂົ້າໃຈ ແລະຊາບຊຶ້ງໜ້ອຍກວ່າຄົນທີ່ມີປະສົບການໃນເລື່ອງນັ້ນມາແລ້ວ

ເຊັ່ນ ຜູ້ເຄີຍຕົກຢູ່ໃນຄວາມຮັກຍ່ອມເຂົ້າໃຈກ່ຽວກັບເລື່ອງຄວາມຮັກໄດ້ດີກວ່າຜູ້ທີ່ບໍ່ເຄີຍມີຄວາມຮັກ ດັ່ງນີ້ເປັນຕົ້ນ.

4. ຄວາມເຂົ້າໃຈກ້ອຍຄຳ: ໝາຍເຖິງຄວາມເຂົ້າໃຈຄວາມໝາຍຂອງສັບຊຶ່ງເປັນສ່ວນສຳຄັນຂອງ ການຕີຄວາມໝາຍ, ຫາກບໍ່ເຂົ້າໃຈກ້ອຍຄຳ ກໍ່ຈະຕີຄວາມໝາຍບໍ່ຖືກຕ້ອງ, ບໍ່ຊັດເຈນ ຫຼື ບໍ່ເລິກເຊິ່ງ ເຖິງກ່ອງໄດ້.

5. ຄວາມສາມາດໃນການປຽບທຽບເລື່ອງທີ່ອ່ານກັບເລື່ອງອື່ນໆ: ໝາຍເຖິງຄວາມເຂົ້າໃຈ ແລະ ຄວາມສາມາດນຳເອົາເລື່ອງທີ່ອ່ານໄປກ່ຽວຂ້ອງກັບຂໍ້ຄວາມອື່ນທີ່ມີຄວາມໝາຍສຳພັນກັນ; ບໍ່ວ່າ ຈະເປັນການຕີຄວາມໝາຍຕາມອັກສອນ, ຕາມເນື້ອໃນ ຫລືຕາມນ້ຳສຽງກໍ່ຕາມ.

6. ຄວາມສາມາດໃນການໃຊ້ກ້ອຍຄຳເພື່ອບັນບາຍຂໍ້ຄວາມຂອງການຕີຄວາມໝາຍ ຊຶ່ງບາງຄົນ ເຂົ້າໃຈເລື່ອງໄດ້ດີ ແຕ່ອະທິບາຍບໍ່ໄດ້ດີ; ເພາະບໍ່ສາມາດໃຊ້ກ້ອຍຄຳມາບັນບາຍໄດ້ດີດັ່ງທີ່ຕົນຮູ້ ແລະ ເຂົ້າໃຈໄດ້. ການອ່ານເພື່ອຕີຄວາມໝາຍນັ້ນ ຜູ້ອ່ານຕ້ອງໃຊ້ສະຕິປັນຍາເພື່ອໃຫ້ເຂົ້າໃຈວັດຖຸປະສົງ ຂອງ(ຜູ້ຂຽນພ້ອມທັງມີຄວາມສາມາດສະຫລຸບຄວາມຄິດ, ສະຫລຸບໃຈຄວາມສຳຄັນ, ຕະຫລອດເຖິງ ສາມາດອະທິບາຍຂະຫຍາຍຄວາມໄດ້.

3. 6. 2 ຫລັກການຕີຄວາມໝາຍ

ການອ່ານເພື່ອຕີຄວາມໝາຍນັ້ນອາດປະຕິບັດໄດ້ດັ່ງນີ້

1. ອ່ານເລື່ອງໃຫ້ເຂົ້າໃຈຢ່າງແທ້ຈິງ, ຊັດເຈນ ແລະຈັບປະເດັນສຳຄັນໃຫ້ໄດ້.
2. ຂະນະທີ່ອ່ານ ພະຍາຍາມພິຈາລະນາເຫດຜົນຢ່າງຮອບຄອບແລ້ວນຳມາປະມວນກັບຄວາມຄິດ ຂອງຕົນວ່າ ຂໍ້ຄວາມນັ້ນໝາຍເຖິງອັນໃດ.
3. ສ້າງຄວາມເຂົ້າໃຈກັບກ້ອຍຄຳທີ່ມີຄວາມສຳຄັນ ຕະຫລອດເຖິງບັນດາກ້ອຍຄຳອື່ນໆ ຫລືທຸກ ສິ່ງຢ່າງທີ່ເກີດຂຶ້ນໃນຄວາມຄິດປະກອບເຂົ້າກັນ ເພື່ອໃຫ້ສາມາດເຂົ້າໃຈຄວາມໝາຍໃຫ້ຊັດເຈນຂຶ້ນ.
4. ຮຽບຮຽງກ້ອຍຄຳ ທີ່ໃຊ້ບັນຍາຍໃຫ້ມີຄວາມໝາຍຊັດເຈນ.
5. ຈັບໃຈຄວາມສຳຄັນຂອງເລື່ອງ ທີ່ອ່ານນັ້ນດ້ວຍຄວາມຄິດທີ່ມີເຫດຜົນ.

ໜຶ່ງໃນການຕີຄວາມໝາຍນັ້ນຄື ການຕີຄວາມໝາຍບໍ່ແມ່ນການກອດຄຳປະພັນ ຊຶ່ງຈະຕ້ອງ ເຂົ້າໃຈໃຫ້ຖືກຕ້ອງວ່າ ການກອດຄຳປະພັນນັ້ນເປັນການຮຽບຮຽງຈາກຄຳປະພັນ ທີ່ເປັນຮ້ອຍກອງໃຫ້ ເປັນການຮຽງຄຳແບບຮ້ອຍແກ້ວ ຊຶ່ງຈະຕ້ອງຄົບທັງຄຳ ແລະຄວາມໝາຍ.

ການຕີຄວາມໝາຍໃດໆກໍ່ຕາມຄວນຕີຄວາມໝາຍໃນສອງດ້ານຄື

- ການຕີຄວາມໝາຍດ້ານເນື້ອໃນ.
- ການຕີຄວາມໝາຍດ້ານນ້ຳສຽງ.

ຂໍ້ສຳຄັນໃນການຕີຄວາມໝາຍທັງສອງດ້ານນີ້ເປັນການຕີຄວາມໝາຍຕາມຄວາມຮູ້ສຶກ ແລະ ຄວາມຄິດຂອງຕົນເອງ, ຄົນອື່ນບໍ່ຈຳເປັນຕ້ອງເຫັນດີກັບຄວາມຄິດຂອງເຮົາກໍ່ໄດ້ ຊຶ່ງເຮົາຈະເບິ່ງຈາກ ເຫດຜົນຂອງການຕີຄວາມໝາຍເປັນສິ່ງສຳຄັນ.

3. 6. 3 ການອ່ານເພື່ອວິເຄາະ

"ວິເຄາະ" ໝາຍເຖິງການໄຈ້ແຍກໜັງສືອອກເປັນສ່ວນໆຕາມປະເພດ ແລະລັກສະນະຂອງໜັງສື ໂດຍໃຊ້ເຫດຜົນປະກອບ. ດັ່ງນັ້ນ ຈຶ່ງພໍສະຫລຸບໄດ້ວ່າ ການວິເຄາະໝາຍເຖິງການແຍກເນື້ອໃນອອກເປັນສ່ວນໆ ໂດຍອາໄສການຄົ້ນຄິດຕຶກຕອງ ແລະຫາເຫດຜົນມາປະກອບຢ່າງຮອບຄອບ; ເພາະສະນັ້ນ ການອ່ານເພື່ອວິເຄາະຈຶ່ງເປັນການອ່ານຢ່າງລະອຽດ ໂດຍຈະຕ້ອງເຂົ້າໃຈເນື້ອໃນເປັນຢ່າງດີ; ອ່ານແລ້ວສາມາດໄຈ້ແຍກໄດ້ວ່າ ທີ່ມາຂອງເລື່ອງນັ້ນໆເປັນຢ່າງໃດ ມະໂນທັດຂອງຜູ້ຂຽນ ແລະຂອງເລື່ອງນັ້ນມີຄືແນວໃດ. ໂດຍອາໄສການພິຈາລະນາເຫດຜົນປະກອບ ແລະຮູ້ຈັກປຽບທຽບຈຶ່ງຈະຊ່ວຍໃຫ້ຜູ້ອ່ານສາມາດສະຫລຸບເລື່ອງ ແລະແນວຄິດຂອງຜູ້ຂຽນໄດ້. ສິ່ງສຳຄັນຂອງການອ່ານເພື່ອວິເຄາະກໍ່ຄື ປະເມີນຄ່າຂອງເລື່ອງທີ່ອ່ານວ່າດີ ຫລືບໍ່ດີແນ່ວໃດ, ຍ້ອນຫຍັງ, ມີຄຸນຄ່າຫຍ້ງໃດ, ເປັນເລື່ອງປົກະຕິ ຫລືບໍ່, ມີຄວາມຍຸຕິທຳ ຫລືບໍ່. ເພາະສະນັ້ນ ຜູ້ອ່ານຈະຕ້ອງໄດ້ໃຊ້ຄວາມຮູ້, ປະສົບການ ແລະວິຈາລະນະຍານຂອງຕົນໃນການຕັດສິນບັນຫາຕ່າງໆທີ່ຕົນອ່ານ ເຊັ່ນ ການອ່ານໂຄສະນາ, ຂ່າວໜັງສືພິມ, ທິດສະດີຕ່າງໆ, ບົດຄວາມ ຕະຫລອດຮອດຕຳລາຮຽນດັ່ງນີ້ເປັນຕົ້ນ.

3. 6. 4 ວິທີການອ່ານເພື່ອວິເຄາະ

1. ຜູ້ອ່ານຄວນອ່ານເລື່ອງໃດເລື່ອງໜຶ່ງເປັນປະຈຳໃຫ້ຕໍ່ເນື່ອງກັນ ແລະຕີຄວນໝາຍເລື່ອງນັ້ນໆ ຢ່າງສະໜ່ຳສະເໝີ.
2. ຜູ້ອ່ານຄວນອ່ານເລື່ອງທີ່ຕົນສົນໃຈຢ່າງສະໜ່ຳສະເໝີ.
3. ຄວນອ່ານບົດຄວາມທີ່ມີການວິເຄາະວິຈານ ເພາະຈະຊ່ວຍໃຫ້ຜູ້ອ່ານໄດ້ຄວາມຮູ້, ຮູ້ຈັກຄວາມຄິດຂອງຜູ້ອື່ນໆ ແລະຍັງເປັນການເພີ່ມພູນຄວາມຮູ້ໃໝ່ໆໃຫ້ແກ່ຕົນເອງອີກດ້ວຍ.
4. ກ້າຜູ້ອ່ານມີໂອກາດສະແດງຄວາມຄິດເຫັນຕໍ່ການວິເຄາະວິຈານໃນບົດຂຽນຂອງຜູ້ອື່ນໆ ຈະຊ່ວຍເຮັດໃຫ້ຜູ້ຂຽນນັ້ນໆໄດ້ຮູ້ວ່າ ເຂົາຄິດແນວນັ້ນກືກ ຫລືຜິດຢ່າງໃດ.
5. ກ້າຜູ້ອ່ານມີໂອກາດແລກປ່ຽນຄວາມຄິດຄວາມເຫັນກັບຜູ້ອ່ານຄົນອື່ນໆ ຈະເຮັດໃຫ້ຮູ້ຈັກ ແລະເຂົ້າໃຈຄວາມຄິດຂອງຜູ້ອ່ານຄົນອື່ນໆ ຊຶ່ງຈະຊ່ວຍກະຕຸ້ນໃຫ້ເກີດຄວາມຄິດໃໝ່ໆ ຫລືເກີດຄວາມຄິດໃນສິ່ງທີ່ເຮົາຄິດບໍ່ເຖິງມາກ່ອນ.

3. 6. 5 ຂໍ້ສະເໜີແນະໃນການອ່ານເພື່ອວິເຄາະ

1. ອ່ານໜັງສືເລື່ອງນັ້ນໆລະອຽດຕັ້ງແຕ່ຕົ້ນຈົນຈົບ ແລະພິນິດພິຈາລະນາຫາເຫດຜົນມາປະກອບ.
2. ອ່ານໜັງສືອື່ນໆປະກອບເພື່ອເສີມສ້າງຄວາມເຂົ້າໃຈທີ່ກືກຕ້ອງກ່ອນທີ່ຈະປະເມີນຄ່າ.
3. ໃຊ້ຄວາມຮູ້, ປະສົບການ ແລະ ວິຈາລະນະຍານໃນການໄຈ້ແຍກສ່ວນທີ່ດີ ແລະ ສ່ວນທີ່ບົກຜ່ອງຢ່າງມີເຫດຜົນ.
4. ເມື່ອອ່ານເລື່ອງນັ້ນໆຈົບ ສາມາດຕອບຕົນເອງໄດ້ວ່າ ໄດ້ຮັບອັນໃດຈາກການອ່ານນັ້ນໆ ເຊັ່ນ ໄດ້ຮັບຄວາມຮູ້, ຄວາມບັນເທີງ, ຂໍ້ຄິດເຫັນທີ່ເປັນປະໂຫຍດ ຫຼືເລື່ອງນັ້ນມີຄຸນຄ່າຢ່າງໃດເປັນຕົ້ນ.

3. 6. 6 ປະໂຫຍດຂອງການອ່ານເພື່ອວິເຄາະ

1. ໄດ້ຮູ້ວ່າຂໍ້ມູນສ່ວນໃດເປັນຄວາມຈິງ ແລະບໍ່ຈິງ
2. ເຮັດໃຫ້ຜູ້ອ່ານ ມີຄວາມປະສົງຢາກຮູ້ຢາກອ່ານຫນັງສືຢູ່ສະເຫມີ
3. ເປັນການກະຕຸ້ນໃຫ້ຜູ້ອ່ານເກີດຄວາມຄິດ ແລະຫັດສະນະທີ່ກວ້າງໄກ ເມື່ອໄດ້ຕັ້ງຄຳຖາມ ຖາມຕົວເອງຢູ່ສະເຫມີ
4. ຜູ້ອ່ານຈະບໍ່ຍຶດຫມັ້ນໃນຕຳລາພຽງເຫລັ້ມໃດເຫລັ້ມຫນຶ່ງອີກຕໍ່ໄປ.
5. ຜູ້ອ່ານຈະບໍ່ຕົກເປັນເຫຍື່ອຂອງຄຳໂຄສະນາຊວນເຊື່ອໃດໆ. ແຕ່ຈະຮູ້ຈັກຕັດສິນໃຈດ້ວຍຕົນເອງຢ່າງຖືກຕ້ອງ
6. ຈະຮູ້ຈັກປະເມີນເລື່ອງທີ່ອ່ານດ້ວຍຄວາມຮອບຄອບ ແລະມີເຫດຜົນ ຊຶ່ງສາມາດນຳໄປໃຊ້ໃຫ້ເກີດປະໂຫຍດໃນຊີວິດປະຈຳວັນ ໃນສັງຄົມ ຫລືແມ່ນແຕ່ໃນການສຶກສາວິຊາການອື່ນໆກໍ່ໄດ້.

ຄຳຖາມ:

1. ການອ່ານໝາຍເຖິງຫຍັງ?
2. ການອ່ານມີຄວາມສຳຄັນແນວໃດ?
3. ສ່ວນປະກອບສຳຄັນຂອງການອ່ານມີຫຍັງແດ່?
4. ວິທີການອ່ານມີຈັກວິທີ? ຄືວິທີໃດແດ່?
5. ການອ່ານຕີຄວາມໝາຍ ແລະການອ່ານດ້ວຍການວິເຄາະຕ່າງກັນແນວໃດ?

4. ຫລັກການຂຽນ

4.1 ຄວາມໝາຍຂອງການຂຽນ

ການຂຽນ ແມ່ນທັກສະໜຶ່ງໃນ 4 ທັກສະພາສາ. ໃນຊີວິດປະຈຳວັນຂອງຄົນເຮົາຈະສັງເກດໄດ້ວ່າ ທັກສະໃນການຂຽນເປັກທັກສະທີ່ເຮົາໃຊ້ໜ້ອຍທີ່ສຸດ. ດັ່ງນັ້ນ ທັກສະການຂຽນຈຶ່ງເປັນທັກສະທີ່ຍ້ອນຍ້ວງຍາກກວ່າທັກສະອື່ນໆ. ເນື່ອງຈາກພວກເຮົາບໍ່ຄ່ອຍໄດ້ຝຶກກັນຢ່າງເຕັມເມັດເຕັມໜ່ວຍຈຶ່ງເຮັດໃຫ້ຫລາຍຄົນພຽງແຕ່ຂຽນໄດ້ແຕ່ບໍ່ແມ່ນຂຽນເປັນ.

ສະຫລຸບແລ້ວ ການຂຽນກໍ່ຄືການສື່ຄວາມໝາຍຢ່າງໜຶ່ງ ໄປຍັງຜູ້ອ່ານໂດຍການໃຊ້ຕົວອັກສອນເປັນພາຫະນະໃນການສື່ສານ ເພື່ອເຮັດໃຫ້ຜູ້ອ່ານຮັບຮູ້ເຖິງຄວາມຮູ້, ຄວາມຄິດ ແລະຄວາມຮູ້ສຶກຂອງຜູ້ຂຽນ.

4. 2 ລັກສະນະຂອງຜູ້ຂຽນທີ່ດີ

4. 2. 1 ເປັນຜູ້ທີ່ສົນໃຈໃນການອ່ານໜັງສືທຸກປະເພດ, ບໍ່ວ່າຈະເປັນໜັງສືປະເພດເອກະສານການຮຽນດ້ານວິຊາການຕ່າງໆ, ວາລະສານ, ບົດຄວາມ, ນະວະນິຍາຍ, ເລື່ອງສັ້ນ, ເລື່ອງທີ່ແປຈາກພາສາອື່ນໆ. ບົດກາບກອນ ຫລືບົດອື່ນໆ; ພ້ອມທັງເປັນນັກອ່ານທີ່ອ່ານເປັນດ້ວຍ.

4. 2. 2 ເປັນຜູ້ທີ່ມີຄວາມສາມາດໃນການໃຊ້ພາສາຢ່າງຖືກຕ້ອງ, ຮູ້ຈັກໃຊ້ພາສາແບບງ່າຍ, ບໍ່ສັບສົນ ແລະ ເປັນພາສາທີ່ສວຍງາມ.

4. 2. 3 ເປັນຜູ້ທີ່ມີປະສົບການໃນເລື່ອງຕ່າງໆເປັນຢ່າງດີ ແລະ ສາມາດນຳເອົາເຫດການ ຫລືເລື່ອງທີ່ເຄີຍພົບເຫັນມາປະກອບການຂຽນໄດ້.

4. 2. 4 ເປັນຜູ້ທີ່ຍອມຮັບຄວາມຄິດເຫັນຂອງຄົນອື່ນ, ບໍ່ມີອະຄະຕິຕໍ່ສິ່ງໃດໆ ແລະສາມາດສະແດງຄວາມຄິດເຫັນໄດ້ຢ່າງມີເຫດຜົນ.

4. 2. 5 ເປັນຜູ້ທີ່ຮູ້ຈັກໃຊ້ວິທີການເລີ່ມຕົ້ນເລື່ອງ, ການດຳເນີນເລື່ອງ ແລະ ການຈົບເລື່ອງຢ່າງໜ້າປະທັບໃຈເພື່ອເຮັດໃຫ້ຜູ້ອ່ານຢາກຕິດຕາມຜົນງານການຂຽນຂອງຕົນເອງຕໍ່ໄປ.

4. 2. 6 ເປັນຜູ້ທີ່ມີມາລະຍາດໃນການຂຽນ, ບໍ່ລອກແບບຜູ້ອື່ນ, ບໍ່ເຮັດໃຫ້ຜູ້ອື່ນໄດ້ຮັບຄວາມເສຍຫາຍ ແລະເດືອດຮ້ອນຈາກບົດຂຽນຂອງຕົນ.

4. 2. 7 ເປັນຜູ້ທີ່ມີນິດໄສ ມັກສຶກສາຫາຄວາມຮູ້ຢູ່ສະເໜີ.

4. 2. 8 ເປັນຜູ້ທີ່ມີຄວາມອົດທົນພະຍາຍາມ, ບໍ່ທໍ້ຖອຍຕໍ່ອຸປະສັກ ຫລືຄຳວິພາກວິຈານຕ່າງໆ ໂດຍມີການຝຶກການຂຽນຢ່າງສະໜ່ຳສະເໜີ.

4. 3 ປະເພດຂອງບົດຂຽນ

ການຂຽນແບ່ງອອກເປັນສອງປະເພດໃຫຍ່ຄື

4. 3. 1 ການຂຽນປະເພດບົດຮ້ອຍກອງ

ເປັນການຂຽນທີ່ມີຮູບແບບບັງຄັບ ຄື ການສຳພັດເອກ, ໂທ ດັ່ງນີ້ເປັນຕົ້ນ. ຊະນິດຂອງການຂຽນ ຮ້ອຍກອງໄດ້ແກ່ກາບ, ກອນ, ໂຄງ, ສານຕ່າງໆ.

4. 3. 2 ການຂຽນປະເພດປຶດຮ້ອຍແກ້ວ

ເປັນການຂຽນ ທີ່ບໍ່ມີການບັງຄັບຈຳນວນຄຳສຳພັດ ແຕ່ເປັນການເລືອກສັນກ້ອຍຄຳມາຜູກໃຫ້ເປັນປະໂຫຍກ, ເປັນຂໍ້ຄວາມ ແລະ ເປັນເລື່ອງລາວຢ່າງກົມກືນ. ຊະນິດຂອງການຂຽນຮ້ອຍແກ້ວໄດ້ແກ່ ການຂຽນຮຽງຄວາມ, ປົດຄວາມ, ສາລະຄະດີ, ນະວະນິຍາຍ, ເລື່ອງສັ້ນ, ເລື່ອງແປ, ຈົດໝາຍ, ລາຍງາຍ, ປົດລະຄອນ ເຫລົ່ານີ້ເປັນຕົ້ນ.

4. 4 ຊະນິດຂອງການຂຽນທີ່ຄວນຮູ້

4. 4. 1 ກະວີນິພົນ ໝາຍເຖິງປົດກອນທີ່ສູນທອນທາງພາສາ ແລະ ຄວາມຄິດ, ມີທັງການສ້າງສັນຄວາມງາມດ້ວຍຕົວໜັງສື, ສຽງ, ຈັງຫວະ ແລະ ກ້ອຍຄຳສີ່ສາບ ຫລື ເປັນສັນຍາລັກແທນບາງສິ່ງບາງຢ່າງອັນກໍ່ໃຫ້ເກີດມີຄວາມສະເທືອນໃຈທີ່ເຂັ້ມຂຸ້ນ ແລະເລິກເຊິ່ງ.

4. 4. 2 ບັນເທີງຄະດີ ໝາຍເຖິງການຂຽນ ທີ່ຜູ້ແຕ່ງມີເຈຕະນາໃຫ້ຄວາມເພີດເພີນແກ່ຜູ້ອ່ານ ເປັນຕົ້ນຕໍ; ແຕ່ກໍ່ອາດຈະມີສາລະຄວາມຮູ້ທີ່ມີຄຸນຄ່າຢ່າງຍິ່ງ ຢູ່ເບື້ອງຫລັງຂອງຄວາມເພີດເພີນດັ່ງກ່າວ.

4. 4. 3 ນະວະນິຍາຍ ເປັນວັນນະຄະດີທີ່ມີຮູບແບບການແຕ່ງປະເພດໜຶ່ງ ຊຶ່ງມີວິທີການດຳເນີນເລື່ອງຫລາຍແບບ; ຜູ້ແຕ່ງສາມາດສ້າງສັນວາດຂຽນໄດ້ຕາມຄວາມສາມາດ ແລະຄວາມພໍໃຈຂອງຕົນ, ມີແຕ່ການແຍກລະຫວ່າງການບັນຍາຍ, ການພັນລະນາ ແລະ ການສົນທະນາເຊິ່ງເໝືອນກັບຊີວິດຈິງໃນສັງຄົມຂະນະນັ້ນໆ.

4. 4. 4 ເລື່ອງສັ້ນ ເປັນຮູບແບບການຂຽນຊະນິດໜຶ່ງຂອງບັນເທີງຄະດີ ປະເພດຮ້ອຍແກ້ວທີ່ມີຂະໜາດສັ້ນ, ການບັນລະຍາຍສາກໂດຍບໍ່ມີຕົວລະຄອນສຳຄັນຫລາຍຕົວ ແລະ ມັກຈະຍົກໃຫ້ເຫັນຕົວລະຄອນໂດຍໄວເພື່ອໃຫ້ຜູ້ອ່ານສາມາດອ່ານຈົບໄດ້ໃນເວລາສັ້ນໆ.

4. 4. 5 ສາລະຄະດີ ໝາຍເຖິງການຂຽນທີ່ມີເນື້ອຫາສາລະ ແລະ ຈຸດປະສົງເພື່ອໃຫ້ຄວາມຮູ້ ແລະ ຄວາມຄິດແກ່ຜູ້ອ່ານ, ແຕ່ຂະນະດຽວກັນກໍ່ໃຫ້ຄວາມບັນເທີງແກ່ຜູ້ອ່ານອີກດ້ວຍ.

4. 4. 6 ປົດຄວາມ ເປັນປະເພດຂຽນຊະນິດໜຶ່ງ ທີ່ມີສ່ວນພາກສ່ວນຕົ້ນຕໍຄືຕັ້ງບັນຫາ, ເນື້ອເລື່ອງ ແລະສະຫລຸບ; ມີຫລັກການຂໍ້ແທ້ຈິງ ມີການສະເໜີຂໍ້ຄິດເຫັນກ່ຽວກັບເລື່ອງ ຫລືເຫດການຕ່າງໆທີ່ເກີດຂຶ້ນ. ເລື່ອງທີ່ຂຽນເປັນປົດຄວາມຈະຕ້ອງເປັນເລື່ອງທີ່ຄົນກຳລັງສົນໃຈ, ທັນເຫດການ, ມີສາລະ ແລະ ແຊກທັດສະນະທີ່ຊວນຄິດຊວນອ່ານ.

4. 5 ຫລັກການໃນການຂຽນ

4. 5. 1 ການເລືອກເລື່ອງທີ່ຈະຂຽນ

ຜູ້ຂຽນຄວນເລືອກເລື່ອງທີ່ຕົນມີຄວາມຮູ້, ຄວາມຄິດ ແລະ ມີປະສົບການມາຂຽນ.

4. 5. 2 ການຕັ້ງຈຸດປະສົງໃນການຂຽນ

ຕັ້ງຈຸດປະສົງໃນການຂຽນວ່າ ຕ້ອງການໃຫ້ຜູ້ອ່ານໄດ້ຮັບຮູ້ອັນໃດ ຫລືຂຽນເພື່ອຫຍັງເຊັ່ນ

- ເພື່ອໃຫ້ເກີດຄວາມຮູ້.
- ເພື່ອໃຫ້ເກີດຄວາມບັນເທີງ.

- ເພື່ອໃຫ້ໄດ້ຮັບຮູ້ເຫດຜົນທີ່ກືກຕ້ອງ
- ເພື່ອໃຫ້ໄດ້ຮັບຮູ້ຂໍ້ປະຕິບັດທີ່ແທ້ຈິງ
- ເພື່ອໃຫ້ໄດ້ຮັບຮູ້ວິທີແກ້ໄຂບັນຫາຕ່າງໆ.
- ເພື່ອໃຫ້ໄດ້ຮັບຮູ້ຂໍ້ສະເໜີແນະຕ່າງໆ.
- ເພື່ອໃຫ້ໄດ້ຂໍ້ຄິດກ່ຽວກັບເລື່ອງໃດເລື່ອງໜຶ່ງ.
- ເພື່ອອະທິບາຍຄວາມໝາຍ, ຫລັກການ ຫລືທິດສະດີຕ່າງ.
- ເພື່ອເລົ່າເລື່ອງໃຫ້ຮູ.
- ເພື່ອໂຄສະນາຊວນເຊື່ອ.
- ເພື່ອປຸກລະດົມຈິດໃຈ.
- ເພື່ອປະກາດເຊີນຊວນ.
- ເພື່ອແນະນຳ, ສັ່ງສອນ, ອົບຮົມ.
- ເພື່ອໃຫ້ເກີດຈິນຕະນາການ.
- ເພື່ອສະແດງຄວາມຄິດເຫັນ.
- ເພື່ອວິເຄາະວິຈານ.
- ເພື່ອຮ້ອງຂໍຄວາມເຫັນໃຈ ແລະອື່ນໆ.

4. 5. 3 ການຮວບຮວມຄວາມຄິດໂດຍການວາງໂຄງເລື່ອງ

ໂຄງເລື່ອງຄື ໃຈຄວາມສຳຄັນໃນແຕ່ລະຫຍ້ຫນ້າຂອງເລື່ອງນັ້ນ. ບົດຂຽນທີ່ດີຈະຕ້ອງມີການລຳດັບຄວາມ, ມີຂອບເຂດ ແລະມີຄວາມສຳພັນກັບຊື່ເລື່ອງໂດຍຈະຕ້ອງເລີ່ມຈາກຕັ້ງບັນຫາ, ເນື້ອເລື່ອງ ແລະສະຫລຸບເລື່ອງ.

ກ. ການຂຽນຕັ້ງບັນຫາ

ການຂຽນຕັ້ງບັນຫາເປັນການຂຽນເລີ່ມຕົ້ນເລື່ອງ ເພື່ອໃຫ້ຜູ້ອ່ານເຂົ້າສູ່ເລື່ອງທີ່ຕົນຂຽນ ຊຶ່ງມີລັກສະນະດັ່ງນີ້

- ຊີ້ໃຫ້ເຫັນແນວທ່າງຂອງເລື່ອງວ່າ ສາລະສຳຄັນຂອງເລື່ອງຈະດຳເນີນໄປໃນທຳນອງໃດ.
- ຈູງໃຈໃຫ້ຕິດຕາມອ່ານເລື່ອງຕໍ່ໄປ.
- ຈະຕ້ອງກ່າວເຖິງສິ່ງທີ່ກ່ຽວຂ້ອງກັບເນື້ອເລື່ອງເທົ່ານັ້ນ.
- ໂດຍທົ່ວໄປ ຕັ້ງບັນຫາຈະມີຄວາມຍາວໜຶ່ງຫຍ້ຫນ້າ.

ການຫຍ້ຫນ້າຕັ້ງບັນຫາຈະໃຫ້ໜ້າສົນໃຈອາດຈະຂຽນດັ່ງນີ້

ກ.1 ເລີ່ມດ້ວຍຄຳປະພັນ, ສຸພາສິດ ຫລືຄຳຄົມ.

ກ. 2 ເລີ່ມດ້ວຍການກ່າວຄຳເວົ້າຂອງບຸກຄົນສຳຄັນ.

ກ. 3 ເລີ່ມດ້ວຍຄຳຈຳກັດຄວາມ (ນິຍາມ)

ກ. 4 ເລີ່ມດ້ວຍຄຳຖາມ ເພື່ອໃຫ້ຜູ້ອ່ານຮູ້ສຶກຢາກຕິດຕາມ.

ກ. 5 ເລີ່ມດ້ວຍບົດສົນທະນາ.

ຕົວຢ່າງ ເລີ່ມດ້ວຍສຸພາສິດ

" ຄົບຄົນພາບ ພາບພາໄປຫາຜິດ, ຄົບບັນດິດ ບັນດິດພາໄປຫາຜົນ "

ສຸພາສິດນີ້ ໃຊ້ໄດ້ກັບທຸກເພດໄວ ໂດຍສະເພາະເຍົາວະຊົນ; ເພາະໃນໄວນີ້ໝູ່ເພື່ອນມີອິດທິພົນຢ່າງຫລວງຫລາຍຕໍ່ຄວາມຄິດເຫັນ ແລະການສະແດງຜຶດຕິກຳຕ່າງໆອອກຂອງພວກເຂົາ. ຈາກການປະຊຸມລະດັບຊາດກ່ຽວກັບເລື່ອງເດັກ ແລະເຍົາວະຊົນໃນດ້ານການພັດທະນາເສດຖະກິດ ແລະສັງຄົມພົບວ່າ ຮ້ອຍລະແປດສິບຫ້າ ຫັງຍິງ ແລະຊາຍຍອມຮັບ ແລະເຮັດຕາມກຸ່ມຂອງໝູ່ເພື່ອນ.

ຂ. ການຂຽນເນື້ອເລື່ອງ

ເນື້ອເລື່ອງທີ່ດີ ຈະຕ້ອງມີຄວາມຍາວຫລາຍກວ່າຫນຶ່ງຫຍ້ຫນ້າຂຶ້ນໄປ ແລະແຕ່ລະຫຍ້ຫນ້າຈະຕ້ອງສຳພັນກັນເປັນເລື່ອງດຽວກັນ, ມີການລຳດັບຂັ້ນຕອນຂອງເລື່ອງດີ, ບໍ່ວົກວົນໄປມາຈົນເຮັດໃຫ້ຜູ້ອ່ານເກີດຄວາມສັບສົນ. ຜູ້ຂຽນຄວນຄຳນຶງເຖິງບັນຫາຕໍ່ໄປນີ້

- ການໃຊ້ຄຳໃຫ້ຖືກຕ້ອງຕາມຄວາມຫມາຍ.
- ການໃຊ້ສຳນວນໂວຫານໃຫ້ກົງກັບເລື່ອງ.
- ຄວນສະແດງຄວາມຮູ້, ຄວາມຄິດທີ່ຖືກຕ້ອງ.
- ມີເນື້ອຫາສາລະ, ຂໍ້ມູນ, ເຫດຜົນ, ສະຖິຕິ ແລະການອ້າງອີງປະກອບເລື່ອງ.

ຄ. ການຂຽນສະຫລຸບ

ການຂຽນສະຫລຸບ ເປັນການປິດເລື່ອງເພື່ອໃຫ້ຜູ້ອ່ານຄິດວ່າ ເລື່ອງນັ້ນຈົບລົງໂດຍສົມບູນ ແລະຮູ້ສຶກປະທັບໃຈໃນບົດຂຽນນັ້ນໆ. ການສະຫລຸບບໍ່ແມ່ນການຫຍໍ້ເລື່ອງທັງໝົດ ແລະໂດຍທົ່ວໄປການສະຫລຸບຈະມີຄວາມຍາວເທົ່າໆກັບຕັ້ງບັນຫາ ຊຶ່ງການຂຽນສະຫລຸບໃຫ້ໜ້າສົນໃຈ ແລະໃຫ້ໜ້າອ່ານອາດຈະຂຽນໄດ້ດັ່ງນີ້

- ໃຊ້ຄຳປະພັນ.
- ໃຊ້ຄຳສຸພາສິດ ຫລືຄຳຄົມຕ່າງໆ.
- ໃຊ້ວິທີເຊີນຊວນແນະນຳ.
- ໃຫ້ຂໍ້ຄິດ ຫລືແງ່ຄິດບາງປະການແກ່ຜູ້ອ່ານ.
- ກ່າວສັນລະເສີນກຽດຕິຄຸນຂອງບຸກຄົນສຳຄັນທີ່ກ່ຽວຂ້ອງໃນເລື່ອງ.
- ຂຽນເລື່ອງໃຫ້ເປັນລຳດັບຕາມຂັ້ນຕອນຂອງໂຄງເລື່ອງທີ່ວາງໄວ້ ແລະເລືອກໃຊ້ກ້ອຍຄຳ ແລະສຳນວນທີ່ເດັ່ນ.
- ທົບທວນດ້ວຍການຂຽນເລື່ອງທີ່ຂຽນນັ້ນອີກຄັ້ງຫນຶ່ງ ເພື່ອບໍ່ໃຫ້ເກີດຄວາມຜິດພາດ.

4. 5. 4 ການຂະຫຍາຍປະໂຫຍກທີ່ມີໃຈຄວາມສຳຄັນ

ການຂະຫຍາຍປະໂຫຍກທີ່ມີໃຈຄວາມສຳຄັນຄວນປະຕິບັດດັ່ງນີ້

- ໄດ້ຄຳຈຳກັດຄວາມ ຫລືອະທິບາຍຄວາມຫມາຍຂອງເລື່ອງນັ້ນຄືຮັນໃດ.
- ໃຫ້ລາຍລະອຽດກ່ຽວກັບເລື່ອງນັ້ນວ່າເປັນແນວໃດ.

- ໃຫ້ຕົວຢ່າງເພື່ອທຳຄວາມເຂົ້າໃຈເລື່ອງນັ້ນໃຫ້ໄດ້ດີຍິ່ງຂຶ້ນ.
- ໃຊ້ການປຽບທຽບເພື່ອໃຫ້ເຫັນຮູບພາບຢ່າງຄັ່ນຊັດ.
- ໃຫ້ເຫດຜົນກ່ຽວກັບເລື່ອງນັ້ນວ່າເປັນເພາະອັນໃດ.

4. 5. 5 ການໃຊ້ຄຳໃນການຂຽນ

- ໃຊ້ຄຳງ່າຍໆ ເຂົ້າໃຈກັນໄດ້ໂດຍທົ່ວໄປ ແຕ່ບໍ່ໃຊ້ພາສາເວົ້າ.
- ໃຊ້ຄຳສຸພາບ ບໍ່ໃຊ້ຄຳຫຍາບຄາຍ.
- ໃຊ້ຄຳລາວ ບໍ່ໃຊ້ພາສາຕ່າງປະເທດ ຖ້າມີຄຳລາວຮອງຮັບຢູ່; ໃນກໍລະນີທີ່ບໍ່ມີຄຳລາວໃຊ້ ກໍ່ໃຫ້ຂຽນທັບສັບເປັນຕົວອັກສອນລາວໂດຍໃຫ້ຖືກຕ້ອງຕາມຫຼັກການສະກົດຄຳ
- ບໍ່ຄວນໃຊ້ຄຳເຊື່ອມ ຫລືຄຳຕໍ່ແບບຟຸມເຟືອຍ ຫລືຊ້ຳຊາກ.
- ບໍ່ຄວນໃຊ້ຄຳບູຮານ.
- ບໍ່ຄວນໃຊ້ສັບພາສາທ້ອງຖິ່ນ,
- ບໍ່ຄວນໃຊ້ຄຳອຸທານທີ່ຫຍາບຄາຍ.
- ບໍ່ຄວນໃຊ້ຄຳຫຍໍ້ ແລະບໍ່ຄວນໃຊ້ສັບສະເພາະຂອງກຸ່ມຄົນໃດໜຶ່ງ.
- ໃຊ້ຄຳໃຫ້ກົງກັບຄວາມໝາຍ.
- ໃຊ້ຄຳປຽບທຽບໃຫ້ເໝາະສົມ

4. 5. 6 ການໃຊ້ໂວຫານໃນການຂຽນ

ການຂຽນຈະມີຄຸນຄ່າຢ່າງຍິ່ງ ຫາກຜູ້ຂຽນໃຊ້ໂວຫານປະກອບການຂຽນນັ້ນໃຫ້ເໝາະສົມກັບເລື່ອງທີ່ຂຽນ. ໂວຫານທີ່ໃຊ້ໃນການຂຽນມີ 5 ໂວຫານຄື

1. ບັນລະຍາຍໂວຫານ

ໝາຍເຖິງການເລົ່າເລື່ອງ, ອະທິບາຍລາຍລະອຽດຕ່າງໆ. ໂດຍບໍ່ໄດ້ສອດແຊກຄວາມຮູ້ສຶກຂອງຜູ້ຂຽນລົງໄປ. ການຂຽນທີ່ໃຊ້ໂວຫານປະເພດນີ້ໄດ້ແກ່ ປະຫວັດສາດ, ຈົດໝາຍເຫດ, ຣຽງຄວາມ, ນິທານ, ນິຍາຍ, ຕຳນານ, ບົດຄວາມເປັນຕົ້ນ.

2. ຟັນລະນາໂວຫານ

ໝາຍເຖິງການຂຽນທີ່ເຮັດໃຫ້ຜູ້ອ່ານເກີດອາລົມ ແລະຄວາມຮູ້ສຶກໄປກັບຜູ້ຂຽນ. ການໃຊ້ໂວຫານປະເພດນີ້ຜູ້ຂຽນຈະຕ້ອງສອດແຊກຄວາມຮູ້ສຶກລົງໄປໃນບົດຂຽນອີກດ້ວຍ. ການໃຊ້ໂວຫານປະເພດນີ້ໄດ້ແກ່ການຂຽນກ່ຽວກັບຄວາມສວຍງາມຂອງສະຖານທີ່ຕ່າງໆ. ການຍົກຍ້ອງບຸກຄົນ, ການລຳພັນຄວາມໃຈໃນ, ການພັດພາກຈາກຄົນຮັກດັ່ງນີ້ເປັນຕົ້ນ.

3. ເຫສະໜາໂວຫານ

ໝາຍເຖິງການຂຽນເພື່ອໃຫ້ຜູ້ອ່ານເຫັນຄຸນ ແລະໂທດ; ເພື່ອແນະນຳສັ່ງສອນ ແລະປະຕິບັດຕາມ. ການຂຽນທີ່ໃຊ້ໂວຫານປະເພດນີ້ໄດ້ແກ່ເລື່ອງທີ່ກ່ຽວກັບຄຸນະທຳຕ່າງໆ ເຊັ່ນ ຄວາມກະຕັນຍູ

ກະຕະເວທີ, ຄວາມຊື່ສັດສຸດຈະລິດ, ຄວາມພາກພຽນ, ຄວາມປະຢັດມັດທະຍັດ, ຄວາມເມດຕາກະລຸນາ ແລະເລື່ອງທີ່ກ່ຽວກັບຄຳສັ່ງສອນທາງພຸດທະສາສະໜາເຊັ່ນ " ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ" ດັ່ງນີ້ເປັນຕົ້ນ.

4. ອຸປະມາໂວຫານ

ໝາຍເຖິງການຂຽນປຽບທຽບ ໂດຍສາມາດປຽບທຽບເລື່ອງທີ່ເປັນທັງຮູປະທຳ ແລະນາມ ທຳເພື່ອໃຫ້ຜູ້ອ່ານເຂົ້າໃຈເລື່ອງນັ້ນໃຫ້ດີຂຶ້ນ. ໂວຫານຊະນິດນີ້ມັກແຊກຢູ່ໃນພັນລະນາໂວຫານ ເຊັ່ນ ງາມເໜືອນນາງຟ້າ, ອ້າຍໜຸ່ມຕີນຜີ ເຫລົ່ານີ້ເປັນຕົ້ນ.

5. ສາທິກໂວຫານ

ໝາຍເຖິງການຂຽນ ເພື່ອຍົກຍ້ອງສະໜັບສະໜຸນເລື່ອງທີ່ກ່າວມາແລ້ວ ເພື່ອໃຫ້ເຂົ້າໃຈດີຍິ່ງ ຂຶ້ນ. ເລື່ອງທີ່ນຳມາຍົກຕົວຢ່າງໄດ້ແກ່ນິທານຊາດົກ, ເລື່ອງຈາກວັນນະຄະດີ ແລະເລື່ອງທາງ ປະຫວັດສາດເປັນຕົ້ນ. ໂວຫານປະເພດນີ້ຍັງມັກແຊກຢູ່ໃນເທສະໜາໂວຫານອີກດ້ວຍ.

ຄຳຖາມ:

1. ການຂຽນໝາຍເຖິງຫຍັງ?
2. ປະເພດຂອງບົດຂຽນມີຈັກປະເພດ? ຄືປະເພດໃດແດ່? ແຕ່ລະປະເພດຕ່າງກັນແນວໃດ?
3. ຊະນິດຂອງການຂຽນທີ່ຄວນຮູ້ມີຈັກຊະນິດ? ຄືຊະນິດໃດແດ່?
4. ຫຼັກການທົ່ວໄປຂອງການຂຽນມີຈັກຫຼັກການ? ຄືຫຼັກການໃດແດ່?

24/VII
ชาวจำหน่าย

60/4562

ເອກະສານປະກອບ

1. ໜ່ວຍວິຊາສັນທະສິນສາດ, *ຕຳລາສອນວິຊາສັນທະສິນສາດ* ເຫຼັ້ມ 1 ສຳລັບວິທະຍາໄລ ສ້າງຄູວຽງຈັນ, ລາວ, 1991

2. ໜ່ວຍວິຊາສັນທະສິນສາດ, *ປຶ້ມແບບຮຽນວິຊາສັນທະສິນສາດ* ເຫຼັ້ມ 2 ສຳລັບວິທະຍາໄລ ສ້າງຄູວຽງຈັນ, ລາວ, 1996

3. ອາລິນ ພາວະນະວິຊຽນ, ເອກະສານປະກອບການບັນຍາຍ ວິຊາ *ການໃຊ້ພາສາໄທ 1* ມະຫາວິທະຍາໄລ ສຣີປະທຸມ, ໄທ, (ບໍ່ພິມ ບໍ່ມີ)

4. ອາລິນ ພາວະນະວິຊຽນ, ເອກະສານປະກອບການບັນຍາຍ ວິຊາ *ການໃຊ້ພາສາໄທ 2* ມະຫາວິທະຍາໄລ ສຣີປະທຸມ, ໄທ, ພ. ສ. 2534

5. Josef Hubacek, *Ucebnice Stylistiky*, Prague, Czechoslovakia, 1987

* ຄັນເວົ້າປິ ເຮົາແລ້ວ ປ່ຽນເປັນ ເຮົາມ້ ໃຫ່
ຄັນເວົ້າ ມີ ໃຫ່ແລ້ວ ປ່ຽນ ມ ເປັນ ມ ປຸ ກ ປ
* ຊິຄວາຍຍາວນາ ຊິພ້ຳຍາວເປ. = ຜ. ປ່ວຍ ຕ້ອງ ມີ ການ ການ ກຸ ມ ວ ຫ ຫ ເພື່ອ
ຈະ ບ ຫ ປ້ຳ ຍາວ.
* ມ ຕ້ ມ ປ ການ ຫ ເຈ ຍ ມ ປ ການ ຫ ເຈ ຍ
ປ ການ ເ ມ ຕ ປ ການ ຫ ເຈ ຍ
* ແ ເ ປ ປ ການ ຕ ຕ ຕ ຕ ຕ ຕ
ແ ແ ຕ ຕ ອ ຫ ຫ ຕ ຕ ຕ ຕ
* ຕ ຫ ການ ຕ ອ ຫ ຫ ຕ ຕ ລ ຕ ຕ ຕ ຕ
ຄ ບ ປ ແ ປ ນ ການ ຊ ຊ ຊ
ຄ ບ ປ ແ ປ ນ ການ ເ ຮ ຮ ຮ
ຄ ບ ປ ແ ປ ນ ມ ຕ ຕ ແ ແ ແ
ຄ ບ ປ ຫ ຫ ຫ ຫ ຫ ຫ ຫ
ຄ ບ ປ ຫ ຫ ຫ ຫ ຫ ຫ ຫ

* ແ ສ ມ ປ ປ ວ ພ ຫ ແ ວ ລ ຫ ງ ມ ມ ມ
- ປ ລ ະ ຫ ຍ 30 ປ ີ
- ອ ຳ ນ ວ ນ ປ ະ ຊ າ ກ ອ ນ ອ ຳ ນ ວ ຍ ກ ານ ສ ຳ ນ ວ ນ ປ ະ ຊ າ ກ ອ ນ ສ ຳ ນ ວ ນ ສ ຳ ມ ະ ນ ະ